ສາຍຄູ ຊີວະສາດ

# ວິທີສອນ

# ຊີວະສາດ ສຳລັບນັກສຶກສາຄູມັດທະຍົມ

ສິງຫາ 2022

CamScanner

CamScanner

CamScanner
CamScanner

# ວິທີສອນ

# ຊີວະສາດ ສຳລັບນັກສຶກສາຄູມັດທະຍົມ

ສາຍຊີວະສາດ ລະບົບ12+4 ປີທີ3

ວິທະຍາໄລຄູສາລະວັນ

2022

CamScanner

CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ...46...ສພ.ສວ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມພາກວິຊາເຄມີ

- ອີງຕາມ: ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- ອີງຕາມ: ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10
- ວັນ ສະບັບເລກທີ 0640/ອຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າປຶດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| ທ່ານ ປທ ລາຫຸນ ເພັດສົມພອນ | .................................................... |
| ທ່ານ ປທ ອຸດຕະມະ ແສງອາລຸນ | .................................................... |

ທີ່, ສາລະວັນ, ວັນທີ 10 MAR 2023

ປະທານສະພາວິທະຍາສາດ

ອ.ຈ ນ. ລົມປອງ ແສນທະວິສຸກ

CamScanner

CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ຫ້ອງການວິທະຍາສາດ ທຳມະຊາດ

ເລກທີ..09....ຫກ.ທຊ

# ໃບຮັບຮອງການກວດແກ້ບົດຮຽນຮຽງປື້ມວິຊາ:ວິທີສິດສອນຊີວະສາດ

ຫ້ອງການ: ວິທະຍາສາດທຳມະຊາດ

**ຜູ້ຮຽບຮຽງປື້ມ**

ທ່ານ ອຈ ປອ ນາງ ສຸລິພອນ ສີວິໄຊ

| ຄະນະກຳມະການກວດແກ້ບົດ | ລາຍເຊັນ |
| --- | --- |
| ທ່ານ ຊອ ປທ ສຸລິສິດ ແກ້ວເກັ່ງສະໄໝ | ........................................ |
| ທ່ານ ປທ ເພັດສະໝອນ ດວງສີລີ | ........................................ |
| ທ່ານ ປທ ບົວຂານ ແດງສີລີ | ........................................ |

ທີ່, ສາລະວັນ, ວັນທີ ..17..2...2023..

ຫ້ອງການວິທະຍາສາດທຳມະຊາດ

Lahoun PHETSOMPHONE

CamScanner

CamScanner

# ຄຳນຳ

ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ແຜນພັດທະນາການສຶກ ສາ ແລະ ກິລາ 5 ປີ (2020-2025) ແລະ ແຜນດຳເນີນງານການສ້າງຄູແຕ່ປີ 2020-2025 ໃຫ້ປາກົດຜົນເປັນຈິງ, ກົມສ້າງຄູໄດ້ຮັບການມອບໝາຍໃຫ້ດຳເນີນການພັດທະນາຫຼັກ ສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ ລະບົບ 12+4 ທີ່ສອນໄດ້ທັງເຄມີ ແລະ ຊີວະສາດເປັນຕົ້ນ. ໂດຍການປະສານສົມທົບກັບຄູສອນໃນສາຍວິຊາຊີວະ-ເຄມີ ທີ່ວິທະຍາໄລຄູສາລະວັນ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຈຶ່ງເຮັດໃຫ້ການພັດທະນາ ປຶ້ມເອກະສານປະກອບການສອນ ໂດຍອີງໃສ່ຫຼັກສູດດັ່ງກ່າວ ສຳເລັດຜົນຕາມຄາດໝາຍທີ່ວາງໄວ້ ຊຶ່ງຖືກຮັບຮອງ ແລະ ອະນຸມັດຈາກຜູ້ກວດແກ້ ແລະ ຫ້ອງການສາຍ ຕາມການຕົກລົງຂອງສະພາວິທະຍາສາດ ວ່າດ້ວຍການຮັບຮອງ ແລະ ອະນຸມັດນຳໃຊ້.

ປຶ້ມເອກະສານປະກອບການສອນ ຂອງຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ ໃນສາຍວິຊາ ວິທີສອນຊີວະສາດ ໄດ້ຖືກສ້າງຂຶ້ນເພື່ອປະກອບເຂົ້າໃນການສອນ ໂດຍອີງໃສ່ຫຼັກສູດຫຼັກສູດສ້າງຄູ ໃນວິຊານີ້ແມ່ນກ່ຽວກັບຄວາມຮູ້ທົ່ວໄປກ່ຽວກັບການວິເຄາະຫຼັກສູດ, ທິດສະດີວິທີສອນ, ທັກສະການສອນ, ວິທີການປະເມີນການສອນ, ການແຕ່ງບົດສອນໃນວິຊາຊີວະສາດສຳລັບມັດທະຍົມ. ເພື່ອສ້າງຄວາມພ້ອມໃຫ້ ແກ່ນັກສຶກສາຄູໃນດ້ານການຮຽນ. ນະໂອກາດນີ້ ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໃຫ້ຄຳເຫັນ ແລະ ຂໍ້ສະເໜີຕ່າງໆ ທີ່ເປັນປະໂຫຍດໃນການພັດທະນາເອກະສານປະກອບການສອນດັ່ງກ່າວ.

ການພັດທະນາປຶ້ມປະກອບການສອນສະບັບນີ້ ບໍ່ອາດຈະຫຼີກລ່ຽງຈາກຂໍ້ຂາດຕົກບົກພ່ອງໄດ້, ສະນັ້ນ ຈຶ່ງຂໍຮຽກຮ້ອງມາຍັງ ຜູ້ນຳໃຊ້ທັງຫຼາຍ ຈົ່ງຕຳນິຕິຊົມມາດ້ວຍ ເພື່ອຈະໄດ້ຄົ້ນຄວ້າປັບປຸງໃຫ້ສົມບູນຂຶ້ນໃນຕໍ່ໜ້າ.

# ສາລະບານ


ບົດທີ1: ພາກສະເໜີ............................................................5

ບົດທີ2: ຮູບແບບການສອນ....................................................12

ບົດທີ3: ທັກສະການສອນ......................................................49

ບົດທີ4: ວິທີສອນ...............................................................36

ບົດທີ5: ການຂຽນແຜນການສອນຊັ້ນມັດທະຍົມ......... ...................... 79

ພາກເພີ່ມເຕີມ ..................................................................88




CamScanner

CamScanner

# ບົດທີ1
# ພາກສະເໜີ

**1. ຄວາມໝາຍຂອງຫຼັກສູດ**

**1. ຄວາມໝາຍຂອງຫຼັກສູດ**

ຄຳວ່າຫຼັກສູດ ແມ່ນມີຫຼາຍທັດສະນະ ຫຼາຍຄວາມຄິດ ແລະ ຫຼາຍປັດສະຍາທີ່ແຕກຕ່າງກັນ ຕາມທັດສະນະຂອງແຕ່ລະຄົນໃຫ້ຄວາມໝາຍເຊັ່ນວ່າ:

- ຫຼັກສູດຄືກຸ່ມຂອງວິຊາ ແລະ ປະສົບການທີ່ໂຮງຮຽນກຳນົດໃຫ້ຜູ້ຮຽນໄດ້ຮຽນ
- ຫຼັກສູດຄືໂຄງການສຶກສາ ທີ່ທາງໂຮງຮຽນໄດ້ວາງກວ້າງ ເພື່ອຈັດສະພາບການສອນໃຫ້ເດັກແຕ່ລະຊັ້ນຮຽນ.
- ຫຼັກສູດຄືແຜນການສອນທີ່ຈັດຂຶ້ນ ເພື່ອໃຫ້ເດັກນັກຮຽນໄດ້ເກີດການຮຽນຮູ້
- ຫຼັກສູດຄືມວນປະສົບການທີ່ໂຮງຮຽນຈັດໃຫ້ແກ່ຜູ້ຮຽນ ລວມທັງກິດຈະກຳການຮຽນ, ກິດຈະກຳນອກຫຼັກສູດ ໃນສິ່ງທີ່ສັງຄົມຄາດຫ້ວງ ໃຫ້ເດັກໄດ້ຮັບຮູ້ວິທີທາງຕ່າງໆ ເພື່ອນຳເດັກນັກຮຽນໄປສູ່ເປົ້າໝາຍຂອງການສຶກສາ

ຈາກສະພາບການໃຫ້ທັດສະນະຕ່າງໆຂ້າງເທິງ ແລະ ການສຶກສາແນວຄິດຂອງນັກຮຽນກ່ຽວກັບຫຼັກສູດ ພວກເຮົາພໍສະຫຼຸບເປັນຄວາມໝາຍລວມໆໄດ້ວ່າ: *ຫຼັກສູດໝາຍເຖິງມວນປະສົບການທັງໝົດທີ່ທາງໂຮງຮຽນຈັດສອນ ເພື່ອເຮັດໃຫ້ຜູ້ຮຽນໄດ້ປະສົບການ ແລະ ປັບແປງນິດຕິກຳຢ່າງມີວິທະຍາສາດໃນດ້ານສະຕິປັນຍາ, ແນວຄວາມຄິດ ແລະ ຄວາມຊຳນິຊຳນານດ້ານການປະຕິບັດຕ່າງໆ ໃຫ້ໄປຕາມແນວທາງຍຸດທະສາດການສຶກສາ ແລະ ນະໂຍບາຍຢ່າງຄ່ອງແຄ້ວ.*

ຫຼັກສູດມີອົງປະກອບພື້ນຖານດັ່ງລຸ່ມນີ້:

1. ຈຸດປະສົງ
2. ເນື້ອໃນຂອງຫຼັກສູດ
3. ການນຳຫຼັກສູດໄປໃຊ້ (ຂະບວນການຮຽນ-ການສອນ)
4. ການປະເມີນຜົນ

**1. ຄວາມສຳຄັນຂອງການວິເຄາະຫຼັກສູດ**

ຫຼັກສູດເປັນປັດໃຈໜຶ່ງຂອງການສຶກສາ. ການສຶກສາທີ່ໄດ້ຈັດຂຶ້ນແມ່ນເປັນເຄື່ອງມື ເພື່ອພັດທະນາສັງຄົມ ມັນຈະມີປະໂຫຍດຫຼາຍ ຫຼື ນ້ອຍພຽງໃດນັ້ນຂຶ້ນຢູ່ກັບຫຼັກສູດການສອນ ການຮຽນເປັນຕົ້ນຕໍ, ເພາະຫຼັກສູດຈະຊີ້ໃຫ້ເຫັນວ່າ: ຈະວາງຈຸດປະສົງໃນການໃຫ້ການສຶກສາດ້ານເນື້ອໃນ ແລະ ອັດຕາເວລາຮຽນ, ຂະບວນການຮຽນ-ການສອນ ແລະ ການປະເມີນການຮຽນ-ການສອນນັ້ນໄປເປັນແນວໃດ.

ນອກຈາກນີ້ແລ້ວຫຼັກສູດຍັງເປັນຫຼັກການ ແລະ ແນວທາງປະຕິບັດການສອນຂອງຄູ ເພາະຫຼັກສູດຈະກຳນົດຈຸດປະສົງຂອງການສຶກສາ, ດ້ານເນື້ອໃນເປັນການສະເໜີແນະນຳການຈັດກິດຈະກຳ



CamScanner
CamScanner

ການຮຽນ-ການສອນ ແລະ ການປະເມີນຄູ. ເຊິ່ງຄູຄວນຍຶດເປັນແນວທາງ ໃນການໃຫ້ການສຶກສາແກ່ນັກຮຽນ. ຖ້າຄູຢາກຈັດການສອນ-ການຮຽນໃຫ້ບັນລຸຕາມຈຸດປະສົງຂອງຫຼັກສູດໄດ້ ກໍ່ຕໍ່ເມື່ອຄູໄດ້ສຶກສາຫຼັກສູດໃຫ້ເຂົ້າໃຈເສຍກ່ອນ.

- ຫຼັກສູດເປັນເຄື່ອງມືທີ່ບົ່ງບອກຄວາມຈະເລີນຂອງສັງຄົມ, ດ້ວຍເຫດນັ້ນຜູ້ທີ່ໄດ້ຮັບການສຶກສາ ເປັນຕົວຫຼັກສຳຄັນ ຈຶ່ງຈະຮັດໃຫ້ເກີດການປ່ຽນແປງດີຂຶ້ນ ແລະ ວ່ອງໄວ.
- ໃຫ້ນັກຮຽນທົບທວນຈຸດ ແລະ ຈຸດອ່ອນຂອງຫຼັກສູດຜ່ານມາດ້ວຍການຄົ້ນຄົວາຕອບຄຳຖາມເປັນຄູ່ ແລະ ສຶກສາເນື້ອໃນຫຼັກສູດໃນຕໍ່ໜ້າ ໃຫ້ນຳໃຊ້ເຂົ້າໃນການສອນທີ່ດີຂຶ້ນຕໍ່ໄປ.

**2. ວິເຄາະຫຼັກສູດມ1-ມ4 (ຄວາມຮູ້-ຄວາມຈຳ-ຄວາມເຂົ້າໃຈ-ການນຳໄປໃຊ້, ຄວາມສອດຄ່ອງ ແລະ ຄວາມຕໍ່ເນື່ອງ)**

**3.1 ການວິເຄາະຫຼັກສູດ**

ການວິເຄາະຫຼັກສູດແມ່ນການແຍກຫົວຂໍ້ຂອງລາຍວິຊາຂອງຫຼັກສູດອອກໃຫ້ເປັນອົງປະກອບຍ່ອຍໆໃນດ້ານເນື້ອໃນ ແລະ ຈຸດປະສົງ ເພື່ອໃຫ້ເກີດພຶດຕິກຳທີ່ສື່ໃຫ້ເຫັນຄວາມສຳພັນລະຫວ່າງເນື້ອໃນ ກັບພຶດຕິກຳທີ່ຕ້ອງການຈຳແນກ ຫຼື ແຍກເນື້ອໃນ ແລະ ດ້ານພຶດຕິກຳດັ່ງກ່າວຢ່າງມີຜົນຕໍ່ຜູ້ສອນຄື:

- ການສອນຂອງຄູໃນຫົວເລື່ອງນີ້ຈະເນັ້ນເນື້ອໃນ ແລະ ພຶດຕິກຳໃດ?
- ຈະສອນພຶດຕິກຳ ແລະ ດ້ານຕ່າງໆຫຼາຍ ຫຼື ໜ້ອຍສ່ຳໃດ?
- ຈະປະເມີນພຶດຕິກຳເຫຼົ່ານັ້ນໄດ້ແນວໃດ?

ໂດຍທົ່ວໄປແລ້ວ ການວິເຄາະຫຼັກສູດໄດ້ປະຕິບັດຕາມຂັ້ນຕອນຕໍ່ໄປນີ້.

ກ. ຈັດຕັ້ງຄະນະດຳເນີນການວິເຄາະຫຼັກສູດເປັນກຸ່ມປະມານ 4-5 ຄົນຂຶ້ນໄປ ທັງນີ້ກໍ່ເພື່ອໃຫ້ການໃຊ້ຫຼັກສູດຢ່າງມີປະສິດທິພາບ.

**3.2 ການວິເຄາະຈຸດປະສົງ**

- ແມ່ນແຍກເນື້ອໃນລາຍວິຊາອອກເປັນສ່ວນໆ ໂດຍການລຽງລຳດັບຄວາມສຳຄັນຂອງເລື່ອງທີ່ຈະສອນໄປຕາມລຳດັບ.

ຄ. ການວິເຄາະເນື້ອໃນແມ່ນການແປຄວາມໝາຍ ແລະ ການແຍກຈຸດປະສົງຂອງການສອນອອກມາເປັນພຶດຕິກຳ ທີ່ຄາດຫວັງໄວ້ວ່າໃນການສອນແຕ່ລະບົດ ຫຼື ແຕ່ລະຫົວຂໍ້ນັ້ນຕ້ອງການໃຫ້ນັກຮຽນເກີດພຶດຕິກຳໃນດ້ານໃດແດ່.

ງ. ກຳນົດນ້ຳໜັກຂອງແຕ່ລະເນື້ອໃນ ແລະ ພຶດຕິກຳໃນຕາຕະລາງວິເຄາະຫຼັກສູດ.

ຄວາມໝາຍວ່າ ນຳເອົາເນື້ອໃນ ແລະ ພຶດຕິກຳມາບັນທຶກລົງໃນຕາຕະລາງ ແລະ ແລະ ກຳນົດນ້ຳໜັກລົງໃນແຕ່ລະເນື້ອໃນ ແລະ ພຶດຕິກຳ.

**3.3 ເນື້ອໃນຫຼັກສູດຊີວະສາດ ຊັ້ນມັດທະຍົມຕອນຕົ້ນ**

**ຫ້ອງມ1 (2 ຊົ່ວໂມງ/ອາທິດ x 33 ອາທິດ = 66 ຊົ່ວໂມງ)**



CamScanner

CamScanner

ຊັ້ນ ມ 1 ມີ 9 ບົດ ລວມມີ 20 ຊົ່ວໂມງ

| ພາກທີ | ບົດທີ | ຫົວຂໍ້ຍ່ອຍ |
|---|---|---|
| **ພາກທີ I ພືດ (20h)** | ບົດທີ 1 ຈຸລັງພືດ (2h) | - ກ້ອງຈຸລະທັດ<br>- ອົງປະກອບຂອງຈຸລັງພືດ |
| | ບົດທີ 2 ການສ້າງອາຫານຂອງພືດ (2h) | - ການສ້າງທາດແປ້ງຂອງພືດ ແລະ ບົດບາດສຳຄັນຂອງທາດສີຂຽວ<br>- ປັດໃຈໃນການສ້າງອາຫານຂອງພືດ |
| | ບົດທີ 3 ການລຳລຽງນ້ຳ ເກືອແຮ່ ຈານ ແລະ ອາຫານຂອງພືດ (6h) | - ການດູດນ້ຳ ແລະ ເກືອແຮ່ຈານ<br>- ການລຳລຽງອາຫານຂອງພືດ |
| | ບົດທີ 4 ການເຕີບໃຫຍ່ຂອງພືດ (2h) | - ການອອກຈາວຂອງພືດ<br>- ການເຕີບໃຫຍ່ຂະຫຍາຍຕົວຂອງພືດ<br>- ປັດໃຈທີ່ມີຜົນຕໍ່ການຈະເລີນເຕີບໂຕຂອງພືດ |
| | ບົດທີ 5 ການສືບພັນຂອງພືດ (2h) | - ການສືບພັນແບບອາໄສເພດ<br>- ສ່ວນປະກອບຂອງເກສອນພູ້ ແລະ ເກສອນແມ່<br>- ການສືບພັນແບບບໍ່ອາໄສເພດ |
| | ບົດທີ 6 ວິທີການຂະຫຍາຍ ແລະ ປັບປຸງແນວພັນພືດ (2h) | - ການຂະຫຍາຍແນວພັນພືດ<br>- ການປັບປຸງແນວພັນພືດ |
| | ບົດທີ7 ການຈັດແບ່ງພືດ (1 h) | - ເກນໃນການຈັດແບ່ງສິ່ງທີ່ມີຊີວິດ<br>- ພືດໃບລ້ຽງຄູ່ ຫຼື ພືດແກ່ນສອງກີບ<br>- ພືດໃບລ້ຽງດຽວ ຫຼື ພືດແກ່ນກີບດຽວ |
| | ບົດທີ 8 ພະຍາດທີ່ມັກເກີດຂຶ້ນກັບພືດ ແລະ ການປ້ອງກັນ (2h) | - ພະຍາດຕ່າງໆທີ່ມັກເກີດຂຶ້ນກັບພືດ<br>- ການປ້ອງກັນ ແລະ ກຳຈັດສັດຕູພືດ |
| | ບົດທີ 9 ການອານຸລັກປ່າ (1h) | - ປະໂຫຍດ ແລະ ຄວາມສຳຄັນຂອງປ່າ<br>- ການອະນຸລັກປ່າ |

ຊັ້ນ ມ 2 ມີ 17 ບົດ ລວມມີ 44 ຊົ່ວໂມງ

| ພາກທີ | ບົດທີ | ຫົວຂໍ້ຍ່ອຍ |
|---|---|---|
| **ພາກທີ I ສັດ (19h)** | ບົດທີ1 ຈຸລັງສັດ (2h) | - ໂຄງປະກອບສ້າງຂອງຈຸລັງສັດ<br>- ຈຸລັງຊະນິດຕ່າງໆ<br>- ຄວາມແຕກຕ່າງລະຫວ່າງຈຸລັງພືດ ແລະ ຈຸລັງສັດ |
| | ບົດທີ 2 ການສືບພັນຂອງສັດ (3h) | - ການສືບພັນແບບບໍ່ອາໄສເພດ<br>- ການສືບພັນແບບອາໄສເພດ |
| | ບົດທີ 3 ການເຕີບໃຫຍ່ຂອງ (3h) | - ການຈະເລີນເຕີບໃຫຍ່ ແລະ ການຂະຫຍາຍຕົວຂອງສັດ<br>- ພັດທະນາການໄລຍະຕ່າງໆຂອງແມງໄມ້<br>- ວິວັດທະນາການຂອງສັດມີກະດູກສັນຫຼັງ |
| | ບົດທີ4 ການຈັດແບ່ງຈຳພວກຂອງສັດ (2h) | - ສັດບໍ່ມີກະດູກສັນຫຼັງ<br>- ສັດມີກະດູກສັນຫຼັງ |



CamScanner

CamScanner

| | | |
|---|---|---|
| | ບົດທີ 5 ການຂະຫຍາຍພັນຂອງສັດ (1h) | - ການເລືອກພັນສັດ<br>- ຄວາມໝາຍຂອງພັນສັດ |
| | ບົດທີ 6 ການປັບພັນສັດ (2h) | - ຄວາມໝາຍຂອງການປັບປຸງພັນສັດ<br>- ຈຸດປະສົງຂອງການປັບປຸງພັນສັດ<br>- ວິທີປັບປຸງພັນສັດ<br>- ການຖ່າຍຝາກຕົວອ່ອນ |
| | ບົດທີ7 ພະຍາດທີ່ມັກເກີດກັບສັດ, ສາເຫດ ແລະ ການປ້ອງກັນ (3h) | - ພະຍາດທີ່ມັກເກີດກັບສັດ<br>- ສາເຫດທີ່ພາໃຫ້ສັດຕິດເຊື້ອພະຍາ<br>- ການປ້ອງກັນ |
| | ບົດທີ 8 ການອະນຸລັກສັດ (3h) | - ຄວາມໝາຍຂອງການອະນຸລັກ<br>- ຈຸດປະສົງ ແລະ ເປົ້າໝາຍຂອງການອະນຸລັກສັດປ່າ<br>- ສາເຫດການສູນເສຍສັດໃນປ່າ ສ.ປ.ປ.ລາວ<br>- ມາດຕະການໃນການຮັກສາສັດຫາຍາກໃນ ສ.ປ.ປລາວ |
| **ພາກທີ VI ລະບົບນິເວດ (25h)** | ບົດທີ 28 ຄວາມຮູ້ພື້ນຖານກ່ຽວກັບລະບົບນິເວດ (3h) | - ຄວາມໝາຍຂອງລະບົບນິເວດ<br>- ອົງປະກອບຂອງລະບົບນິເວດ<br>- ປະເພດຂອງລະບົບນິເວດ |
| | ບົດທີ 29 ບົດບາດຂອງສິ່ງທີ່ມີຊີວິດໃນລະບົບນິເວດ (3h) | - ຜູ້ຜະລິດ<br>- ຜູ້ບໍລິໂພກ<br>- ຜູ້ຍ່ອຍສະຫຼາຍ |
| | ບົດທີ 30 ການພົວພັນລະຫວ່າງສິ່ງທີ່ມີຊີວິດທີ່ຢູ່ຮ່ວມກັນ (2h) | - ການພົວພັນລະຫວ່າງສິ່ງມີຊີວິດຊະນິດດຽວກັນ<br>- ການພົວພັນລະຫວ່າງສິ່ງມີຊີວິດຊະນິດຕ່າງກັນ |
| | ບົດທີ 31 ປັດໃຈນິເວດມີຜົນສະທ້ອນຕໍ່ສິ່ງທີ່ມີຊີວິດ (3h) | - ນ້ຳ<br>- ແສງສະຫວ່າງ<br>- ອຸນຫະພູມ |
| | ບົດທີ 32 ການພົວພັນລະຫວ່າງສິ່ງທີ່ມີຊີວິດກັບສິ່ງແວດລ້ອມທີ່ບໍ່ມີຊີວິດ (3h) | - ການພົວພັນລະຫວ່າງພືດກັບສິ່ງແວດລ້ອມທີ່ບໍ່ມີຊີວິດ<br>- ການພົວພັນລະຫວ່າງຄົນກັບສິ່ງແວດລ້ອມທີ່ບໍ່ມີຊີວິດ |
| | ບົດທີ 33 ປະຊາກອນໃນລະບົບນິເວດ (2h) | - ຄວາມໝາຍ ແລະ ຂະໜາດຂອງປະຊາກອນ<br>- ປັດໃຈທີ່ເຮັດໃຫ້ເກີດການປ່ຽນແປງຂະໜາດຂອງປະຊາກອນ<br>- ຄວາມໜາແໜ້ນຂອງປະຊາ ກອນ<br>- ຜົນກະທົບຈາກການ |
| | ບົດທີ 34 ປ່າໄມ້ ແລະ ນ້ຳ (3h) | - ປ່າໄມ້<br>- ນ້ຳ |
| | ບົດທີ 35 ຂີ້ເຫຍື້ອກັບຄຸນນະພາບຊີວິດ (2h) | - ຄວາມໝາຍຂອງຂີ້ເຫຍື້ອ<br>- ປະເພດຂອງຂີ້ເຫຍື້ອ<br>- ຂີ້ເຫຍື້ອທີ່ເປັນອັນຕະລາຍ ແລະ ເປັນພິດ<br>- ຜົນສະທ້ອນຂອງຂີ້ເຫຍື້ອຕໍ່ການດຳລົງຊີວິດ |
| | ບົດທີ 36 ການເອົາຂີ້ເຫຍື້ອໃຊ້ຄືນໃ | - ວິທີຈັດການຂີ້ເຫຍື້ອ ແລະ ການເກັບມ້ຽນ |



CamScanner

CamScanner

| | | |
|---|---|---|
| | ໝ່ (4h) | - ວິທີຈັດການຂີ້ເຫຍື້ອທີ່ຖືກຕາມຫຼັກການອະນາໄມ<br>- ການຜະລິດຂີ້ເຫຍື້ອເພື່ອໃຊ້ຄືນ ໃໝ່ |

**ຊັ້ນ ມ 3 ມີ 15 ບົດ ລວມມີ 37 ຊົ່ວໂມງ**

| ພາກທີ | ບົດທີ | ຫົວຂໍ້ຍ່ອຍ |
|---|---|---|
| **ພາກທີ I ລະບົບຕ່າງໆໃນຮ່າງກາຍ (24h)** | ບົດທີ 1 ລະບົບຫຸ້ມຫໍ່ຮ່າງກາຍ (3h) | - ໂຄງປະກອບສ້າງຂອງໜັງ<br>- ຂົນ ແລະ ເລັບ<br>ພະຍາດຜິວໜັງ ແລະ ການຮັກສາຜິວໜັງ |
| | ບົດທີ 2 ລະບົບກະດູກ (3h) | - ໂຄງກະດູກຂອງຄົນເຮົາ<br>- ສ່ວນປະກອບເຄມີຂອງກະດູກ<br>- ກະດູກອ່ອນ<br>- ຂໍ້ຕໍ່ກະດູກ<br>- ພະຍາດທີ່ເກີດຂຶ້ນກັບກະດູກ<br>- ການຮັກສາກະດູກ |
| | ບົດທີ 3 ລະບົບກ້າມ (2h) | - ກ້າມລາຍ ແລະ ລັກສະນະຂອງມັນ<br>- ກ້າມກ້ຽງ ແລະ ລັກສະນະຂອງມັນ<br>- ກ້າມຫົວໃຈ<br>- ການເຮັດວຽກ ແລະ ການອິດເໝື່ອຍຂອງກ້າມ<br>ພະຍາດທີ່ມັກເກີດຂຶ້ນກັບກ້າມ |
| | ບົດທີ 4 ລະບົບລະລາຍອາຫານ (3h) | - ລະບົບລະລາຍອາຫານ<br>- ການຍ່ອຍອາຫານ<br>- ລຳໄສ້ແກ່ ແລະ ລຳໄສ້ຊື່ |
| | ບົດທີ 5 ເລືອດ ແລະ ນ້ຳຢາງເຫຼືອງ (2h) | - ເລືອດ ແລະ ລັກສະນະຂອງເລືອດ<br>- ສ່ວນປະກອບຂອງເລືອດ<br>- ນ້ຳຢາງເຫຼືອງ |
| | ບົດທີ 6 ລະບົບຈະລາຈອນເລືອດ (3h) | - ໂຄງປະກອບສ້າງຂອງລະບົບຈະລາຈອນເລືອດ<br>- ຮອບຈະລາຈອນຂອງເລືອດ |
| | ບົດທີ 7 ລະບົບຫາຍໃຈ (3h) | - ອົງປະກອບຂອງລະບົບຫາຍໃຈ<br>- ການຫາຍໃຈ<br>- ສ່ວນປະກອບຂອງອາກາດທີ່ເຮົາຫາຍໃຈ<br>- ພະຍາດທີ່ມັກເກີດກັບລະບົບຫາຍໃຈ ແລະ ວິທີປ້ອງກັນ |
| | ບົດທີ 8 ລະບົບຖ່າຍເທ (2h) | - ຄວາມຈຳເປັນຂອງການຖ່າຍເທ<br>- ອະໄວຍະວະຖ່າຍເທ<br>- ລະບົບຖ່າຍເທປົກສະວະ<br>- ເສັ້ນທາງຖ່າຍເທ<br>- ການຖ່າຍເທມີບົດບາດສຳຄັນຕໍ່ຄົນເຮົາ |
| | ບົດທີ 9 ລະບົບຕ່ອມປ່ອຍໃນ (3h) | -ລັກສະນະ ແລະ ໜ້າທີ່ຂອງຕ່ອມປ່ອຍໃນ |
| **ພາກທີ V ລະບົບປະສາດ ແລະ ລະບົບອະໄວຍະວະ** | ບົດທີ 29 ລະບົບປະສາດ (3h) | - ລະບົບປະສາດ<br>- ຈຸລັງປະສາດ<br>- ການສະທ້ອນຄືນ |



CamScanner

CamScanner

| | | |
|---|---|---|
| ຮູ້ສຶກ (13h) | | - ບາງປັດໃຈທີ່ມີຜົນລົບຕໍ່ການເຮັດວຽກຂອງລະບົບປະສາດ<br>- ສິ່ງເສບຕິດເປັນອັນຕະລາຍຕໍ່ຊີວິດ |
| | ບົດທີ 30 ໜັງ (2h) | - ຄວາມສາມາດຮັບຮູ້ຄວາມສຶກຂອງໜັງ |
| | ບົດທີ 31 ອະໄວຍະວະຮັບສຽງ (2h) | - ໂຄງປະກອບສ້າງຂອງອະໄວຍະວະຮັບສຽງ<br>- ລັກສະນະຂອງສຽງ<br>- ສາເຫດທີ່ພາໃຫ້ຫູພິການ ແລະ ບາງວິທີປ້ອງກັນ |
| | ບົດທີ 32 ອະໄວຍະວະຮັບພາບ (2h)<br>ບົດທີ 33 ອະໄວຍະວະຮັບຮູ້ກິ່ນ (2h) | - ໂຄງປະກອບສ້າງຂອງໜ່ວຍຕາ<br>- ອະໄວຍະວະຊ່ວຍ<br>- ພະຍາດທີ່ມັກເກີດກັບຕາ ແລະ ວິທີປ້ອງກັນ<br>- ດັງ<br>- ການຮັບຮູ້ກິ່ນ<br>- ຜົນສະທ້ອນຂອງກິ່ນ |
| | | ບົດທີ 34 ອະໄວຍະວະຮັບຮູ້ລົດຊາດ (2h)<br>- ໂຄງປະກອບສ້າງຂອງລີ້ນ<br>- ການຮູ້ລົດຊາດ |

**ຊັ້ນ ມ 4 ມີ 10 ບົດ ລວມມີ 33 ຊົ່ວໂມງ.**

| ພາກທີ | ບົດທີ | ຫົວຂໍ້ຍ່ອຍ |
|---|---|---|
| **ພາກທີ I ການສືບພັນ ແລະ ພັດທະນາການຂອງຮ່າງກາຍມະນຸດ ( 18h )** | ບົດທີ 1 ການເຕີບໃຫຍ່ ແລະ ການປ່ຽນແປງຂອງຮ່າງກາຍໄວໜຸ່ມ ( 4h) | - ການເຕີບໃຫຍ່ຂອງຮ່າງກາຍຍິງ ແລະ ຊາຍ<br>- ການປ່ຽນແປງ ແລະ ການປັບຕົວຂອງຮ່າງກາຍຍິງ ແລະ ຊາຍ |
| | ບົດທີ 2 ລະບົບສືບພັນ ( 4h ) | - ລະບົບສືບພັນເພດຊາຍ<br>- ລະບົບສືບພັນເພດຍິງ<br>- ການມີປະຈຳເດືອນຂອງເພດຍິງ<br>- ການຮັກສາອະນາໄມລະບົບສືບພັນ<br>- ພະຍາດທີ່ເກີດຂຶ້ນໃນລະບົບສືບພັນ<br>- ການສືບພັນຂອງມະນຸດ |
| | ບົດທີ 3 ການເກີດລູກ ແລະ ການວາງແຜນຄອບຄົວ (4h) | - ການຖືພາ ຫຼື ການປະຕິສົນທິ<br>- ການຄອດ<br>- ຄວາມຜິດປົກກະຕິໃນເວລາຖືພາ<br>- ການວາງແຜນຄອບຄົວ ແລະ ການຄຸມກຳເນີດ |
| | ບົດທີ 4 ພະຍາດຕິດຕໍ່ທາງເພດສຳພັນ(ພ ຕ ພ)(3h) | - ໂລກເອດ ແລະ ລະບົບພູມຕ້ານທານ<br>- ສາເຫດການເກີດໂລກເອດ<br>- ເສັ້ນທາງຕິດຕໍ່ ແລະ ບໍ່ຕິດຕໍ່ຂອງເຊື້ອເອຈໄອວີ<br>- ການປ້ອງກັນ |



CamScanner

CamScanner

| | | |
|---|---|---|
| | | - ການໃຫ້ການຊ່ວຍເຫຼືອແກ່ຜູ້ຕິດເຊື້ອເອດໄອວີ ແລະ ໂລກເອດ |
| | ບົດທີ 5 ການສົ່ງເສີມສຸຂະພາບ ແລະ ທັກສະຊີວິດ (3h) | - ການສົ່ງເສີມສຸຂະພາບກາຍ<br>- ການສົ່ງເສີມສຸຂະພາບຈິດ<br>- ທັກສະຊີວິດເພື່ອເສີມສ້າງສຸຂະພາບ |
| **ພາກທີ IX ການຖ່າຍທອດລັກສະນະທາງກຳມະພັນ (15h)** | ບົດທີ 43 ໂຄຣໂມໂຊມ (3h) | - ໂຄຣໂມໂຊມ<br>- ອົງປະກອບຂອງໂຄຣໂມໂຊມ<br>- ຊຸດໂຄຣໂມໂຊມ<br>- ໜ້າທີ່ຂອງໂຄຣໂມໂຊມ |
| | ບົດທີ 44 ການແບ່ງຈຸລັງແບບຮັກສາ (2h) | -ໄລຍະຕ່າງໆຂອງການແບ່ງຈຸລັງແບບຮັກສາ |
| | ບົດທີ45 ການແບ່ງຈຸລັງໂດຍທາງກົງ (3h) | -ການແບ່ງຈຸລັງໂດຍທາງກົງ<br>ການຂະຫຍາຍຕົວຂອງຈຸລັງສືບພັນຄົບ |
| | ບົດທີ 46 ຄວາມຜິດປົກກະຕິຂອງໂຄຣໂມໂຊມ(1h) | |
| | ບົດທີ 47 ກົດເກນການສືບເຊື້ອຂອງທ່ານມັງແດລ (4h) | - ປະຫວັດການຄົ້ນຄ້ວາທາງກຳມະພັນຂອງທ່ານມັງແດລ<br>- ການປະສົມຊອດ 1 ຄູ່ລັກສະນະ |
| | ບົດທີ 48 ແຊນ ແລະ ການຄວບຄຸມການສະແດງອອກຂອງແຊນ ( 2h ) | - ອາຊິດນູຍເຄອິກ<br>- ແຊນ<br>- ການຄວບຄຸມການສະແດງອອກຂອງແຊນ<br>- ການພົວພັນລະຫວ່າງແຊນກັບສິ່ງແວດລ້ອມ<br>- ການປ່ຽນແປງການປະກອບສ້າງຂອງແຊນ |

**ໃຈຄວາມ**

ວິທີສອນຊີວະສາດເປັນວິຊາໜຶ່ງທີ່ມີຄວາມໝາຍ-ຄວາມສຳຄັນ ໃນການຈັດການຮຽນ-ການສອນ ເຊິ່ງມັນໄດ້ກວມເອົາຄວາມຮູ້ທາງວິທະຍາສາດ ແລະ ໄດ້ສຶກສາຮຽນຮູ້ກ່ຽວກັບສິ່ງທີ່ມີຊີວິດເຊັ່ນ: ພືດ, ສັດ, ຄົນ ລວມໄປເຖິງການສືບພັນ ແລະ ການຂະຫຍາຍຕົວຂອງສັດດັ່ງກ່າວ. ວິທີສອນຕ່າງໆ ແລະ ທັກສະ ເພື່ອນຳໃຊ້ເຂົ້າໃນການຮຽນ-ການສອນ.

**ຄຳຖາມທ້າຍບົດ**

1. ການວິເຄາະຫຼັກສູດມີຄວາມໝາຍ ແລະ ຄວາມສຳຄັນຄືແນວໃດ?
2. ຈຸດປະສົງຂອງການວິເຄາະຫຼັກສູດສະແດງອອກແນວໃດ?
3. ຖ້າບໍ່ມີໂຄງຮ່າງຫຼັກສູດການຮຽນ-ການສອນຈະເປັນແນວໃດ?

ວຽກມອບໝາຍ

ໃຫ້ນັກສຶກສາສຶກສາເບິ່ງເນື້ອໃນຂອງວິຊາຊີວະສາດໃນປຶ້ມແບບຮຽນວິທະຍາສາດທຳມະຊາດໃນແຕ່ລະຊັ້ນຮຽນ.



CamScanner
CamScanner

# ບົດທີ2

## ຮູບແບບການສອນ

### I. ຄວາມໝາຍຂອງຮູບແບບການສອນ

ຮູບແບບການຮຽນ-ການສອນມີຄວາມໝາຍໃນລັກສະນະດຽວກັບລະບົບການຮຽນ-ການສອນ ໂດຍທົ່ວໄປນິຍົມໃຊ້ຄຳວ່າ "ລະບົບ" ໃນຄວາມໝາຍທີ່ເປັນລະບົບໃຫຍ່ ຄອບຄຸມອົງປະກອບສຳຄັນ ຂອງການສຶກສາ ຫລືການຮຽນ-ການສອນໃນພາບລວມ ແລະ ນິຍົມໃຊ້ຄຳວ່າ "ຮູບແບບ" ກັບລະບົບທີ່ຍ່ອຍກວ່າ ໂດຍສະເພາະກັບ "ວິທີການສອນ" ໃນດ້ານຄວາມໝາຍຂອງຮູບແບບການສອນ ມີຜູ້ໃຫ້ຄວາມໝາຍໄວ້ຫລາຍແງ່ມູມດັ່ງນີ້:

Saylor and others (1981: 271) ກ່າວວ່າ ຮູບແບບການສອນ (teaching model) ໝາຍເຖິງ ແບບ (pattern) ຂອງການສອນທີ່ມີການຈັດກິດຈະກຳຂຶ້ນຈຳນວນໜຶ່ງທີ່ມີຄວາມແຕກຕ່າງກັນ ເພື່ອຈຸດໝາຍຫລືຈຸດເນັ້ນທີ່ສະເພາະເຈາະຈົງຢ່າງໃດຢ່າງໜຶ່ງ

Keeves J. (1997: 386-387) ກ່າວວ່າ ຮູບແບບໂດຍທົ່ວໄປຈະຕ້ອງມີອົງປະກອບທີ່ສຳຄັນ ດັ່ງນີ້:

1. ຮູບແບບຈະຕ້ອງນຳໄປສູ່ການທຳນາຍ (prediction) ຜົນທີ່ຕາມມາເຊິ່ງສາມາດພິສູດທົດສອບໄດ້ຄື: ສາມາດນຳໄປສ້າງເຄື່ອງມືເພື່ອໄປພິສູດທົດສອບໄດ້.
2. ໂຄງສ້າງຂອງຮູບແບບຈະຕ້ອງປະກອບດ້ວຍຄວາມສຳພັນດ້ານສາເຫດ (causal relationship) ເຊິ່ງສາມາດໃຊ້ອະທິບາຍປາກົດການເລື່ອງນັ້ນໄດ້
3. ຮູບແບບຈະຕ້ອງສາມາດຊ່ວຍສ້າງຈິນຕະນາການ (imagination) ຄວາມຄິດລວບຍອດ (concept) ແລະ ຄວາມສຳພັນ (interrelations) ລວມທັງຊ່ວຍຂະຫຍາຍຂອບເຂດຂອງການສືບເສາະຫາຄວາມຮູ້
4. ຮູບແບບຄວນຈະປະກອບດ້ວຍຄວາມສຳພັນດ້ານໂຄງສ້າງ(structural relationships) ຫລາຍກວ່າ ຄວາມສຳພັນດ້ານການເຊື່ອມໂຍງ(associative relationships)

ຮູບແບບ (model) ທີ່ໃຊ້ກັນຢູ່ໂດຍທົ່ວໄປມີ 5 ແບບ ຫລື 5 ລັກສະນະ ຄື (Kaplan, 1964 ອ້າງເຖິງໃນ Keeves, 1997: 386-387)

1) ຮູບແບບດ້ານການປຽບທຽບ (Analogue Model) ໄດ້ແກ່ ຄວາມຄິດທີ່ສະແດງອອກໃນລັກສະນະຂອງການປຽບທຽບສິ່ງຕ່າງໆ ຢ່າງນ້ອຍ 2 ສິ່ງຂຶ້ນໄປ ຮູບແບບລັກສະນະນີ້ໃຊ້ກັນຫລາຍທາງດ້ານວິທະຍາສາດກາຍະພາບ, ສັງຄົມສາດ ແລະ ພຶດຕິກຳສາດ



CS CamScanner

CS CamScanner

2) ຮູບແບບດ້ານພາສາ (Semantic Model) ໄດ້ແກ່: ຄວາມຄິດທີ່ສະແດງອອກຜ່ານທາງການໃຊ້ພາສາ (ເວົ້າ ແລະ ຂຽນ) ຮູບແບບລັກສະນະນີ້ໃຊ້ກັບຫລາຍທາງດ້ານສຶກສາສາດ

3) ຮູບແບບດ້ານຄະນິດສາດ (Mathematic Model) ໄດ້ແກ່ ຄວາມຄິດທີ່ສະແດງອອກຜ່ານທາງສູດຄະນິດສາດ ເຊິ່ງສ່ວນຫລາຍຈະເກີດຂຶ້ນຫລັງຈາກໄດ້ຮູບແບບດ້ານພາສາແລ້ວ.

4) ຮູບແບບດ້ານແຜນຜັງ (Schematic Model) ໄດ້ແກ່ ຄວາມຄິດທີ່ສະແດງອອກຜ່ານທາງແຜນຜັງ, ແຜນພາບ, ໄດອະແກມ, ກາຟ, ເປັນຕົ້ນ

5) ຮູບແບບດ້ານສາເຫດ (Causal Model) ໄດ້ແກ່ ຄວາມຄິດທີ່ສະແດງໃຫ້ເຫັນເຖິງຄວາມສຳພັນດ້ານສາເຫດລະຫວ່າງຕົວແປຕ່າງໆ ຂອງສະພາບການ, ບັນຫາໃດໜຶ່ງ. ຮູບແບບດ້ານສຶກສາສາດມັກຈະເປັນແບບນີ້ເປັນສ່ວນໃຫຍ່.

ທິດນາ ແຂມມະນີ (2550: 3-4) ກ່າວວ່າ ຮູບແບບການສອນ ໝາຍເຖິງ ສະພາບຫລືລັກສະນະຂອງການຈັດການຮຽນ-ການສອນທີ່ຈັດຂຶ້ນຢ່າງມີລະບົບລະບຽບ ມີແບບແຜນຕາມຫລັກປັດຊະຍາ ທິດສະດີ ຫລັກການ, ແນວຄິດ ຫລືຄວາມເຊື່ອຕ່າງໆ ໂດຍອາໄສວິທີສອນ ແລະ ເຕັກນິກການສອນຕ່າງໆ ເຂົ້າມາຊ່ວຍໃຫ້ສະພາບການຮຽນການສອນນັ້ນເປັນໄປຕາມຫລັກການທີ່ຍຶດຖື. ດັ່ງນັ້ນ ອົງປະກອບສຳຄັນຂອງຮູບແບບການສອນຈຶ່ງຕ້ອງປະກອບດ້ວຍສິ່ງຕ່າງໆ ດັ່ງນີ້:

1) ມີປັດຊະຍາ ຫລືທິດສະດີ ຫລືຫລັກການ ຫລືແນວຄິດ ຫລືຄວາມເຊື່ອ ທີ່ເປັນພື້ນຖານຫລືເປັນຫລັກການຂອງຮູບແບບການສອນນັ້ນ ໆ

2) ມີການບັນລະຍາຍ ຫລືອະທິບາຍສະພາບ ຫລືລັກສະນະຂອງການຈັດການຮຽນ-ການສອນ.

3) ມີການຈັດລະບົບ ຄື: ມີການຈັດອົງປະກອບ ແລະ ຄວາມສຳພັນ ຂອງອົງປະກອບຂອງລະບົບໃຫ້ສາມາດນຳຜູ້ຮຽນໄປສູ່ເປົ້າ ໝາຍຢ່າງມີປະສິດທິພາບ ໂດຍມີການພິສູດ ທົດລອງເຖິງປະສິດທິພາບຂອງລະບົບນັ້ນ.

ດັ່ງນັ້ນ ຮູບແບບການຮຽນການສອນຈຶ່ງໝາຍເຖິງ ສະພາບຫລືລັກສະນະຂອງການຈັດການຮຽນ-ການສອນ ທີ່ຈັດໄວ້ຢ່າງເປັນລະບຽບຕາມຫລັກປັດຊະຍາ ທິດສະດີ ຫລັກການ ແນວຄິດຫລືຄວາມເຊື່ອຕ່າງໆ ໂດຍມີການຈັດຂະບວນການຫລືຂັ້ນຕອນໃນການຮຽນ-ການສອນ ໂດຍອາໄສວິທີສອນ ແລະ ເຕັກນິກການສອນຕ່າງໆ ເຂົ້າມາຊ່ວຍເຮັດໃຫ້ສະພາບການຮຽນການສອນນັ້ນເປັນໄປຕາມຫລັກການທີ່ຍຶດຖື ເຊິ່ງໄດ້ຮັບການພິສູດ ທົດສອບຫລືຍອມຮັບວ່າມີປະສິດທິພາບ ສາມາດໃຊ້ເປັນແບບແຜນໃນການຮຽນ-ການສອນໃຫ້ບັນລຸວັດຖຸປະສົງສະເພາະຂອງຮູບແບບ ນັ້ນໆ ຊຶ່ງແຕ່ລະຮູບແບບມີວັດຖຸປະສົງທີ່ແຕກຕ່າງກັນ ຄື: ເປັນຮູບແບບການຮຽນການສອນທີ່ເນັ້ນການພັດທະນາດ້ານພຸດທິພິໄສ (cognitive domain) ການພັດທະນາດ້ານຈິດພິໄສ (affective domain) ການພັດທະນາດ້ານທັກສະພິໄສ (psychomotor domain) ການພັດທະນາດ້ານທັກສະຂະບວນ



CamScanner

CamScanner

ການ (process skills) ຫລື ການບູລະນາການ (integration) ທັງນີ້ຮູບແບບດັ່ງກ່າວລ້ວນເປັນຮູບແບບການຮຽນການສອນທີ່ມີລັກສະນະເນັ້ນຜູ້ຮຽນເປັນສຳຄັນ.

*<u>ຫລັກການສອນທີ່ມີປະສິດທິພາບໂດຍຍຶດນັກຮຽນເປັນສູນກາງ</u>*

ມີຮູບແບບການສອນທີ່ຫລາກຫລາຍໃນການພັດທະນາການສອນຄິດໃຫ້ກັບຜູ້ຮຽນ ເຊັ່ນ: ການສອນແບບໂຄງງານ, ການສອນແບບ CIPPA Model, ການສອນໂດຍໃຊ້ຮູບແບບວິທະຍາສາດໃນການສອນຄິດນຳສະເໜີຮູບແບບທີ່ນິຍົມໃຊ້ກັນແຜ່ຫລາຍໃນປັດຈຸບັນ. ສາສະດາຈານ ທິດສະນາ ແຂມມະນີ ໄດ້ນຳສະເໜີໃນເອກະສານວິຊາການຕ່າງ ໆ ຫລາຍຢ່າງ ເຊິ່ງມີຮູບແບບ ແລະ ຂັ້ນຕອນ ດັ່ງຕົວຢ່າງຕໍ່ໄປນີ້ :

<u>**ຕົວຢ່າງ:**</u>

- **ການສອນຕາມຮູບແບບCIPPA**

  **C (Construction)** ຄື: ຄູຈັດກິດຈະກຳທີ່ໃຫ້ຜູ້ຮຽນມີໂອກາດສ້າງຄວາມຮູ້ດ້ວຍຕົນເອງ

  **I (interaction)** ຄື: ໃຫ້ນັກຮຽນເຮັດກິດຈະກຳທີ່ເປີດໂອກາດໃຫ້ນັກຮຽນໄດ້ມີ ປະຕິສຳພັນທາງສັງຄົມກັບບຸກຄົນ ແລະ ແຫລ່ງຄວາມຮູ້ທີ່ຫລາກຫລາຍ.

  **P (Physical Participation)** ຄື: ຈັດກິດຈະກຳທີ່ໃຫ້ຜູ້ຮຽນໄດ້ເຄື່ອນໄຫວຮ່າງກາຍ.

  **P (Process Learning)** ຄື: ຈັດກິດຈະກຳທີ່ໃຫ້ນັກຮຽນໄດ້ຮຽນຮູ້ຂະບວນການຕ່າງໆ ເຊັ່ນ: ຂະບວນການຄິດ, ຂະບວນການແກ້ບັນຫາ, ຂະບວນການເຮັດວຽກງານໃຫ້ສຳເລັດ.

  **A (Application)** ຄື: ການຈັດກິດຈະກຳທີ່ໃຫ້ນັກຮຽນໄດ້ນຳຄວາມຮູ້ໄປປະຍຸກໃຊ້ໃນຊີວິດປະຈຳວັນ.

- **ຂັ້ນຕອນການສອນຕາມ CIPPA model**

1. ຂັ້ນການທົບທວນຄວາມຮູ້ເກົ່າ ເປັນການສົນທະນາຖາມຕອບເຖິງກິດຈະກຳທີ່ເຄີຍຮຽນຮູ້ຫລືພື້ນຖານຄວາມຮູ້ຂອງນັກຮຽນໃນເລື່ອງທີ່ຈະດຳເນີນການສອນ.
2. ຂັ້ນການສະແຫວງຫາຄວາມຮູ້ໃໝ່ ໝາຍເຖິງ ໃຫ້ນັກຮຽນໄດ້ຮູ້ຈັກແຫລ່ງທີ່ຈະຄົ້ນຫາຄວາມຮູ້ ເຊັ່ນ: ແຫລ່ງຮຽນຮູ້ໃນໂຮງຮຽນບໍ່ວ່າຈະເປັນຫໍສະໝຸດ, ສື່ເອກະສານ, ມູມປະສົບການຕ່າງໆ ຫລືແຫລ່ງຮຽນຮູ້ໃນທ້ອງຖິ່ນ ເຊັ່ນ: ພູມປັນຍາ, ສະຖານທີ່ສຳຄັນໃນຊຸມຊົນເປັນຕົ້ນ.
3. ຂັ້ນການສຶກສາເຮັດຄວາມເຂົ້າໃຈຂໍ້ມູນ/ຄວາມຮູ້ໃໝ່ ແລະ ເຊື່ອມໂຍງຄວາມຮູ້ໃຫມ່ກັບຄວາມຮູ້ເກົ່າ ເປັນກິດຈະກຳທີ່ຈັດໃຫ້ຜູ້ຮຽນໄດ້ນຳຄວາມຮູ້ທີ່ໄດ້ຈາກການສຶກສາຄົ້ນຄວ້າທຳຄວາມເຂົ້າໃຈແລ້ວໃຊ້ຂະບວນການຄິດໃນການປະມວນຂໍ້ມູນທີ່ຮັບເຂົ້າມາໃໝ່ກັບຂໍ້ມູນເກົ່າ ເຮັດໃຫ້ເກີດຄວາມຮູ້ໃໝ່ ຫລືສິ່ງໃຫມ່.



CS CamScanner

CS CamScanner

4. ຂັ້ນການແລກປ່ຽນຄວາມຮູ້ຄວາມເຂົ້າໃຈກັບກຸ່ມ ເປັນກິດຈະກຳທີ່ຜູ້ຮຽນເມື່ອໄດ້ຮຽນຮູ້ແລ້ວ ນຳຄວາມຮູ້ນັ້ນມາແລກປ່ຽນ ຮຽນຮູ້ ເພື່ອສະທ້ອນຄວາມຄິດຂອງກັນ.
5. ຂັ້ນການສະຫຼຸບ ແລະ ການຈັດລະບຽບຄວາມຮູ້ ເພື່ອໃຫ້ຜູ້ຮຽນຈົດຈຳສິ່ງທີ່ຮຽນໄດ້ງ່າຍ ເປັນກິດຈະກຳສະຫຼຸບຮ່ວມກັນ ໂດຍສັງເຄາະສິ່ງທີ່ໄດ້ຮຽນຮູ້.
6. ຂັ້ນການສະແດງຜົນງານ ເປັນກິດຈະກຳສະເໜີສິ່ງທີ່ຮຽນຮູ້ໃນຮູບຂອງການຈັດກິດງ່າ.
7. ຂັ້ນການປະຍຸກໃຊ້ຄວາມຮູ້ ນຳຄວາມຮູ້ໄປໃຊ້ໃຫ້ເກີດປະໂຫຍດ ຫລືເພື່ອແກ້ບັນຫາໃນສິ່ງທີ່ຕ້ອງການສຳຫລັບຕໍ່ໄປ.



CamScanner
CamScanner

# ບົດທີ3

## ທັກສະການສອນ

### I. ນິຍາມ, ຄວາມໝາຍ ແລະ ຄວາມສຳຄັນຂອງທັກສະ

#### 1. ນິຍາມທັກສະການສອນ

✍ ທັກສະການສອນ ຄວາມໝາຍຄືຄວາມສາມາດໃນການສອນຢ່າງມີປະສິດທິພາບໂດຍການຖ່າຍທອດຄວາມຮູ້ຕ່າງໆໃຫ້ກັບຜູ້ຮຽນໄດ້ດີ.

✍ ທັກສະການສອນ ຄື: ຄວາມສາມາດໃນການປະຕິບັດການສອນດ້ານຕ່າງໆ ຢ່າງຊຳນານຊຶ່ງຄອບຄຸມການວາງແຜນການຮຽນ-ການສອນ ການອອກແບບການຮຽນການສອນ ການຈັດການຮຽນ-ການສອນ, ການໃຊ້ວິທີສອນ, ເຕັກນິກການສອນ, ຮູບແບບການຮຽນການສອນ, ລະບົບການສອນ, ສື່ການສອນການປະເມີນຜົນການຮຽນການສອນ ລວມທັງການໃຊ້ທິດສະດີ ແລະ ຫລັກການຮຽນຮູ້ ແລະ ການສອນຕ່າງໆ.

#### 2. ຄວາມສຳຄັນຂອງທັກສະການສອນ

1.ທັກສະນັບເປັນຈຸດມຸ້ງໝາຍໝວດໜຶ່ງຂອງການສຶກສາ ຊຶ່ງຈະຕ້ອງຄວບຄູ່ກັບຄວາມຮູ້.

2.ເປັນການສົ່ງເສີມຄວາມສຳນານຄ່ອງແຄ້ວ

3.ຊ່ວຍໃຫ້ເກີດຄວາມໝັ້ນໃຈກັບຕົນເອງຫຼາຍຂຶ້ນ

4.ຊ່ວຍບໍ່ໃຫ້ເກີດຄວາມຜິດພາດໃນການສອນ

5.ຊ່ວຍໃຫ້ການສອນບັນລຸຕາມຈຸດປະສົງທີ່ຕັ້ງໄວ້

1. ຊ່ວຍໃຫ້ການເຮັດວຽກມີປະສິດທິພາບ ແລະ ສາມາດຊ່ວຍພັດທະນາວຽກສອນໃຫ້ດີຂຶ້ນໄປ
2. ຊ່ວຍເຮັດໃຫ້ເກີດຄວາມຊື່ນຊົມ ສັດທາຈາກຜູ້ຮຽນ.

✍ ທັກສະການສອນຂັ້ນພື້ນຖານໝາຍເຖິງ ຄວາມສາມາດໃນການສອນຊຶ່ງທັກສະຈະບໍ່ສາມາດເກີດຂຶ້ນໄດ້ເອງ ຕ້ອງຝຶກຝົນ ຜູ້ທີ່ເປັນຄູຈະມີຄວາມສາມາດໃນການໃຊ້ທັກສະໃຫ້ໄດ້ຜົນນັ້ນ.

✍ ທັກສະການນຳເຂົ້າສູ່ບົດຮຽນ

✍ ການນຳເຂົ້າສູ່ບົດຮຽນ ເປັນຂັ້ນການສອນ ຫຼື ກິດຈະກຳທີ່ສ້າງຂຶ້ນ ເພື່ອເລີ່ມຕົ້ນເຂົ້າການສອນ ເພື່ອດຶງຄວາມສົນໃຈໃຫ້ຜູ້ຮຽນພ້ອມທີ່ຈະຕິດຕາມບົດຮຽນຕໍ່ໄປ.

**ຈຸດໝາຍ**

1.ເພື່ອໃຫ້ຜູ້ຮຽນເກີດຄວາມພ້ອມໃນການທີ່ຈະຮຽນ

2.ເພື່ອໂຍງປະສົບການເດີມຂອງຜູ້ຮຽນເຂົ້າກັບປະສົບການທີ່ຈະສອນ

3. ເພື່ອຈັດບັນຍາກາດຂອງການຮຽນໃຫ້ເປັນທີ່ໜ້າສົນໃຈຢາກຮຽນຮູ້



CS CamScanner

CS CamScanner

4. ເພື່ອກຳນົດຂອບເຂດຂອງບົດຮຽນວ່າຈະຮຽນຫຍັງ/ອັນໃດ

5. ຜູ້ໃຫ້ຜູ້ຮຽນຮູ້ຄວາມໝາຍ ຮູ້ຄວາມຄິດລວມຍອດ

**ການໃຊ້ທັກສະການນຳເຂົ້າສູ່ບົດຮຽນ**

- ກ່ອນເລີ່ມບົດຮຽນທີ່ຈະສອນ
- ກ່ອນເລີ່ມອະທິບາຍ
- ກ່ອນເລີ່ມຕັ້ງຄຳຖາມ
- ໃຫ້ນັກຮຽນອະທິບາຍ

**ii. ທັກສະການສອນ**

ທັກສະການສອນຂອງຄູສາມາດອະທິບາຍໃຫ້ກ້ວາງໄດ້ ແລະ ມີຄວາມໝາຍໃນແງ່ຕ່າງໆ ດັ່ງນີ້:

- ເຮັດໃຫ້ສາມາດຍົກສູງຜົນການຮຽນດີ, ຄວາມສາມາດໄດ້ຮັບຜົນສູງ ແລະ ນຳໃຊ້ ຄວາມຮູ້ໄປປະຕິບັດໄດ້
- ສາມາດວັດແທກວິທີການໂອນຖ່າຍ ແລະ ອະທິບາຍຄວາມຮູ້-ຄວາມສາມາດວິຊາຮຽນ ຢ່າງມີປະສິດທິຜົນ
- ການສອນທີ່ມີຜົນສຳເລັດດ້ານການວິເຄາະໃນລະດັບສູງເຊັ່ນການປະເມີນ, ການແກ້ໄຂ ບັນຫາ ແລະ ດ້ານທັກສະການສື່ສານ
- ໃຊ້ເຫດຜົນທາງຍຸດທະສາດ ເຂົ້າໃນການສອນ ແລະ ການຮຽນ ຢ່າງມີຫຼັກການ
- ສ້າງ ແລະ ດຳເນີນການປະເມີນການຮຽນຂອງນັກຮຽນຢ່າງເປັນທຳ, ມີຮູບແບບການ ປະເມີນທີ່ເປັນຫຼັກການ, ໂຄງການ ຫຼື ເປັນແຟ້ມສະສົມຜົນງານ, ມີແບບປະເມີນທັກ ສະການຮຽນໃນລະດັບສູງ(ລວມທັງການນຳໃຊ້, ການວິເຄາະ, ການສັງເຄາະ ແລະ ການປະເມີນຄ່າ)
- ມີທັກສະດ້ານການຈັດການໃນຫ້ອງຮຽນ ລວມທັງຄວາມສາມາດ ແລະ ການປະຕິບັດ ຕົວຈິງ ກ້າວໄປເຖິງການໃຊ້ຍຸດຍຸດທະສາດທາງບວກເພື່ອແຊກແຊງ ແລະ ສະໜັບສະ ໜູນການຮຽນຮູ້.
- ສາມາດປະສານງານກັບຜູ້ປົກຄອງເຂົ້າມີສ່ວນຮ່ວມສຶກສາອົບຮົມລູກຫຼານເຂົາເຈົ້າ
- ມີສ່ວນຮ່ວມສຶກສາເດັກແກ່ຍິງຂີໃທາງດ້ານທ້າທາຍ, ການພັດທະນາໃນເດັກຮຽນຮູ້ ແລະ ຄວາມເປັນໄປໄດ້ໃນການພັດທະນາຍຸດທະວິທີ, ເຝິກປະຕິບັດ ແລະ ໂຄງການສຶກ ສຶກສາດ້ານຄວາມສຳພັນໃຫ້ແກ່ເດັກ.



CamScanner
CamScanner

**2.1 . ທັກສະການສອນທີ່ຄູໃໝ່ຕ້ອງການ**

1) ການວາງແຜນ

ແຜນການສອນມີບົດບາດສຳຄັນຕໍ່ກັບການຖ່າຍທອດຄວາມຮູ້ທາງດ້ານວິທະຍາສາດໃຫ້ແກ່ນັກຮຽນ, ເຮັດໃຫ້ການສອນມີຄວາມຕໍ່ເນື່ອງ, ເປັນລະບົບຕາມແຕ່ລະຂັ້ນຕອນຂອງການສອນ ແລະ ສອດຄ່ອງຕາມຈຸດປະສົງຂອງຫຼັກສູດ. ການສ້າງແຜນການສອນຄູໃໝ່ຕ້ອງໄດ້ມີການຄົ້ນຄວ້າ, ປຶກສາສາຫາລື ແລະ ແລກປ່ຽນຄວາມຄິດເຫັນກັບຄູຜູ້ມີປະສົບການເພື່ອໃຫ້ບົດສອນຄິດພົນກັບວິທີ, ຫຼັກການ, ຂັ້ນຕອນ, ອົງປະກອບການສອນຕ່າງໆ ເຮັດໃຫ້ການສອນມີປະສິດທິພາບ.

ໂດຍທົ່ວໄປແລ້ວການສ້າງແຜນການສອນມີ 7 ອົງປະກອບຄື ຈຸດປະສົງ, ເນື້ອໃນ, ກິດຈະກຳການຮຽນ - ການສອນ, ເວລາ, ສື່ການຮຽນ - ການສອນ, ການວັດແລະ ປະເມີນຜົນ, ເອກະສານອ້າງອີງ ເຊິ່ງໃນນັ້ນ ການຈັດກິດຈະກຳການຮຽນ - ການສອນມີ 5 ຂັ້ນຕອນຄື ຂັ້ນນຳ, ຂັ້ນສອນ, ຂັ້ນສະຫຼຸບ, ຂັ້ນວັດປະເມີນຜົນ ແລະ ຂັ້ນມອບວຽກບ້ານ - ຕັກເຕືອນ.

2) ການຈັດການໃນຫ້ອງຮຽນ

ການຈັດການໃນຫ້ອງຮຽນຢ່າງແຂງແຮງ ແມ່ນຄວາມລະອຽດອ່ອນໃນການປະຕິບັດໜ້າທີ່ທຸກດ້ານຕົ້ນຕໍຂອງຄູ. ອີກດ້ານໜຶ່ງກໍ່ແມ່ນຄວາມສາມາດຂອງຄູໃໝ່ກ້າວເຖິງຄວາມຊຳນານງານຂອງຕົນ. ສິ່ງທີ່ເລີ່ມຕົ້ນຂອງຄູໃໝ່ກໍ່ຄືການພັດທະນາດ້ານທັກສະການຈັດການໃນຫ້ອງຮຽນ ກັບການຊ່ວຍເຫຼືອການສຶກສາຈາກຄົນອື່ນ.

3) ການເຮັດໃຫ້ມີການປ່ຽນແປງ

ຄູໃໝ່ທຸກຄົນໄດ້ຮຽນຮູ້ພື້ນຖານວິຊາຊີບຄູ ແລະ ເຝິກຫັດການສອນຕາມບັນດາໜ້າວຽກເຊັ່ນ ສິດສອນ, ປະຈຳຫ້ອງຜ່ານໄປແມ່ນບາດກ້າວຂອງການປັບຕົວກ້າວເຂົ້າສູ່ອາຊີບຄູແຕ່ສິ່ງທີ່ຈະເຮັດໃຫ້ຄູປ່ຽນແປງໃໝ່ມີແມ່ນ ຄວາມໝັ້ນໃຈຂອງຕົນຕໍ່ອາຊີບຄູ ແລະ ການປັບຕົວເຂົ້າສູ່ສະພາບວຽກງານກໍຄືໜ້າທີ່ຄວາມຮັບຜິດຊອບຂອງຄູເຊັ່ນ ການສອນ, ການເປັນຜູ້ນຳໃນຫ້ອງຮຽນ, ການຂໍຄຳເຫັນກັບຄູຜູ້ມີປະສົບການ ແລະ ການສື່ສານ ວາຈາອື່ນໆ.

4) ການເປັນຜູ້ໃຫ້ຄຳປຶກສາ

ການສອນສາມາດປະເສີນໜ້າກັບຫຼາຍຢ່າງທີ່ທ້າທາຍ ໂດຍສະເພາະແມ່ນການໂອນຖ່າຍຄວາມຮູ້ຈາກຄູໄປສູ່ຜູ້ຮຽນຮູ້ດ້ວຍຮູບແບບການແນະນຳ, ການສັ່ງການ, ການບອກເລົ່າ, ການກະຈາຍແຈ້ງ, ການໃຫ້ກະຖຸອາຄົມ ທາງຄວາມຮູ້ວິທະຍາສາດໃຫ້ແກ່ຜູ້ຮຽນດ້ວຍການອ່ອນນ້ອມຂອງຄູດ້ວຍການເປັນຜູ້ໃຫ້ຄຳປຶກສາທີ່ດີ.

5) ດ້ານເທັກໂນໂລຢີ

ສາມາດມີຫຼາຍເສັ້ນທາງເລືອກທາງດ້ານເທັກໂນໂລຢີເຂົ້າໃນບົດສອນນັ້ນຄື ຄວາມຮູ້ສຶກໃຫ້ໂອກາດອັນໃຫຍ່ຫຼວງ ກັບຮັບຮອງສິ່ງໃໝ່ທາງໂຄດຂອງເທັກໂນໂລຢີ, ແນະແນວທາງເທັກໂນໂລຢີແກ່ນັກຮຽນ ແລະ ເຄືອຂ່າຍສະລະສິນໃຈທາງຂໍ້ມູນຂ່າວສານໜ້າສົນໃຈ ທາງການສຶກສາ.



CamScanner

CamScanner

6) ການເປັນຜູ້ດູແລ

ຄູເປັນຜູ້ດູແລ ແມ່ນຜູ້ທີ່ເປັນຫ່ວງເປັນໃຍຄືກັບພໍ່ ແລະ ແມ່ຄືນໂດຍມີທັກສະລະພາະໃນການດູແລລູກສິດທີ່ເໜືອກວ່າການສອນ, ໂດຍການຮຽນຮູ້ສິ່ງທີ່ສ້າງການພົວພັນກັນທີ່ມີຜົນກະທົບທາງດ້ານທັກສະ ການ ການສື່ສານທີ່ດີດ້ວຍການເບິ່ງແຍງຄືກັບຄູທີ່ໄດ້ໃຫ້ຄຳປຶກສາຈາກການຮ່ວມມືຂອງຜູ້ປົກຄອງ.

7) ການເປັນຜູ້ສັງເກດການ

ການສັງເກດກາຍເປັນສິ່ງທີ່ບໍ່ຄືກຄ້າງໂດຍສະເພາະການກາຍເປັນຄູເຝິກຜູ້ໜຶ່ງບໍ່ເຄີຍເຫັນຈາກວີດີໂອ ແລະ ຈາກທັດສະນະສຶກສາຕໍ່ຂະບວນການສັງເກດເປັນຕົ້ນແມ່ນການກຽມການສັງເກດ, ປະຕິບັດການສັງເກດ ແລະ ການສະ
ເໜີການສັງເກດ.

8) ການເປັນຜູ້ຊ່ວຍທີ່ດີ

ເມື່ອເບິ່ງຜ່ານວີດີໂອແລ້ວ ສາມາດໃຫ້ເຫດຜົນຂ້າງໃນດ້ານປະສົບການຂອງຄູໃໝ່ໄດ້, ແຕ່ການກະທຳດັ່ງກ່າວຄືມີໃນກຳຢ່າງໜຶ່ງທີ່ເປັນກຳລັງແຮງຂອງການໃຫ້ຄຳປຶກສາ. ຈາກການພົວພັນລະຫວ່າງ ທີ່ປຶກສາ ແລະ ຄູເຝິກ ຄູໃໝ່ ແມ່ນຜູ້ສະໜັບສະໜູນໃນຊ່ວງໄລຍະພວກເຂົາເຈົ້າເຝິກປະຕິບັດ.

**ການເຝິກການທົດລອງເປັນວິທີການໜຶ່ງທີ່ເຮັດໃຫ້ເກີດທັກສະໃນການແກ້ບັນຫາທາງວິທະຍາສາດເຊິ່ງທັກສະທີ່ຈຳເປັນເຫຼົ່ານີ້ນສາມາດຈັດລຽງ ດັ່ງລຸ່ມນີ້:**

1. **ທັກສະໃນການຕັ້ງບັນຫາ (Problem initiating skills)**
   - ຕັ້ງຄຳຖາມ/ ການຊີ້ແຈ້ງບັນຫາ.
   - ຕ້ອງທຳຄວາມເຂົ້າໃຈກ່ຽວກັບຄວາມແຕກຕ່າງ ຫຼື ແນວທາງອື່ນທີ່ເປັນໄປໄດ້.
   - ຕ້ອງທຳຄວາມເຂົ້າໃຈວ່າບັນຫານັ້ນເປັນບັນຫາທີ່ກ່ຽວຂ້ອງກັບວິທະຍາສາດແທ້ບໍ.
   - ການພິສູດ/ຊອກໃຫ້ເຫັນສິ່ງທີ່ຮູ້ແລ້ວ.
   - ການຊີ້ແຈ້ງ, ຄົ້ນຄວ້າ ແລະ ຊອກຂໍ້ມູນກ່ຽວຂ້ອງທີ່ຈຳເປັນເພື່ອມາສັງລວມ.
2. **ທັກສະການວາງແຜນ (Planning Skills)**
   - ສ້າງ ຫຼື ຕັ້ງຄວາມອາດສາມາດທີ່ມີເຫດມີຜົນ (ການຕັ້ງສົມມຸດຖານ).
   - ພິຈາລະນາຂໍ້ມູນທີ່ໄດ້ມາໃຫ້ສົມເຫດສົມຜົນ.
   - ພິຈາລະນາການສ້າງບົດທົດລອງວິທະຍາສາດທີ່ເໝາະສົມ.
   - ວາງແຜນເພື່ອຄວບຄຸມຄວາມຫຼາກຫຼາຍຂອງຂໍ້ມູນ, ການທົດລອງ ແລະ ເນື້ອໃນຕ່າງໆທີ່ອາດຈະມີການປ່ຽນແປງໃນແນວທາງທີ່ແຕກຕ່າງ ເຊິ່ງຕ້ອງອາໄສທັກສະໃນການສະສົມຂໍ້ມູນເຂົ້າຊ່ວຍ.



CS CamScanner
CS CamScanner

- ການລວບລວມ ແລະ ການສ້າງເຄື່ອງມື.
- ການນຳໃຊ້ເຄື່ອງມືຢ່າງມີປະສິດທິພາບ ແລະ ປອດໄພ.
- ການວັດແທກດ້ວຍເຄື່ອງມືທີ່ມີຄຸນນະພາບ.
- ສ້າງແບບປະເມີນ ຫຼື ຮ່າງການປະເມີນການສຶກສາທີ່ເໝາະສົມ.
- ການຕິດຕາມດ້ານສະເພາະຂອງຈຸດປະສົງທີ່ຕັ້ງໄວ້.
- ການສັງເກດ ແລະ ພິຈາລາສິ່ງທີ່ປ່ຽນແປງ.
- ການຊອກຫາຂໍ້ມູນທີ່ກ່ຽວຂ້ອງຈາກເອກະສານຕ່າງໆ.
- ການສັງລວມຂໍ້ມູນທີ່ໄດ້ຈາກຄວາມຮູ້ສ່ວນບຸກຄົນ.

3. **ທັກສະການສັງລວມ ແລະ ຈັດລຽງຂໍ້ມູນ (Recording and information processing skills)**

- ການເລືອກວິທີການທີ່ເໝາະສົມເພື່ອສັງລວມຂໍ້ມູນທີ່ໄດ້ມາ.
- ການບັນທຶກຂໍ້ມູນຢ່າງຖືກຕ້ອງ.
- ການຈັດລຽງຂໍ້ມູນໃນຮູບແບບທີ່ແຕກຕ່າງ ຫຼື ໃນທາງທີ່ຫຼາກຫຼາຍ.
- ການນຳໃຊ້ແຜນວາດ, ເສັ້ນສະແດງ, ສະຖິຕິ ແລະ ອື່ນໆ ຢ່າງສົມເຫດສົມຜົນ.
- ການນຳໃຊ້ຂະບວນການທາງຄະນິດສາດເຂົ້າໃນການຄຳນວນຂໍ້ມູນ.

4. **ທັກສະການແປຄວາມໝາຍ (Interpreting Skills)**

- ການສະຫຼຸບຈາກຫຼັກຖານທີ່ມີຢູ່.
- ການຈັດລຽງຂໍ້ຄິດເຫັນຕ່າງໆ.
- ການຊີ້ແຈ້ງທ່າອ່ຽງຂອງຂໍ້ມູນທັງໝົດ.
- ການຫຼີກລ່ຽງຂໍ້ມູນ ຫຼື ຄວາມຮູ້ທີ່ບໍ່ເປັນປະໂຫຍດ.
- ການທຳຄວາມເຂົ້າໃຈເຖິງຂອບເຂດຂອງຂໍ້ມູນທີ່ຈຳເປັນ.
- ການຈັດລຽງຂໍ້ມູນທີ່ມາຈາກຫຼາຍແຫຼ່ງໃຫ້ເປັນອັນດຽວກັນ.

5. **ທັກສະການສື່ສານ (Communication Skills)**

- ການລາຍງານຜົນການຄົ້ນຄວ້າຕາມແຕ່ລະຂັ້ນຕອນຢ່າງເຄັ່ງຄັດ ເຊິ່ງຈະເປັນການລາຍງານດ້ວຍປາກເປົ່າ ຫຼື ດ້ວຍການຂຽນ.
- ການນຳສະເໜີຜົນການຄົ້ນຄວ້າຕໍ່ຜູ້ເຂົ້າຮ່ວມໃນຮູບແບບທີ່ເໝາະສົມ
- ການຈຳແນກຄວາມສຳພັນກັນລະຫວ່າງຫຼັກຖານ ແລະ ການຄົ້ນຄວ້າ
- ການສະເໜີ ຫຼື ຍົກຕົວຢ່າງສິ່ງທີ່ຄົ້ນພົບດ້ວຍການແຕ້ມຮູບ, ແຜນທີ່, ຮູບພາບເຄື່ອນໄຫວ, ແຜນວາດຊ່ວຍຈຳ ແລະ ອື່ນໆ.
- ການສະແດງຄວາມກ່ຽວຂ້ອງກັນຂອງການຄົ້ນພົບກັບຄຳຖາມເບື້ອງຕົ້ນ



CS CamScanner
CS CamScanner

ການຝຶກທັກສະການຄົ້ນຄວ້າທາງວິທະຍາສາດຈຳເປັນຕ້ອງໃຊ້ເວລາ ແລະ ການແນະນຳທັກສະທີ່ຈຳເປັນແມ່ນມີຄວາມສຳຄັນຕໍ່ການສ້າງກິດຈະກຳການທົດລອງທາງວິທະຍາສາດທີ່ມີລັກສະນະສະເພາະ.

## III. ບົນດາທິດສະດີທັກສະຕ່າງໆ

### 1. ທັກສະການໃຊ້ຄຳຖາມ

#### 1.1 ຄວາມໝາຍການໃຊ້ຄຳຖາມ

ສະເຖີນເສີ ໄຊຍະສຄນ (2539 ໜ້າ 48) ກ່າວເຖິງເຕັກນິກການໃຊ້ຄຳຖາມວ່າ ການຈັດກິດຈະກຳການຮຽນ-ການສອນໂດຍໃຊ້ຄຳຖາມເປັນຕົວນຳທາງ ໃຫ້ນັກຮຽນຄິດໃນສິ່ງທີ່ຄູຕ້ອງການ ແຕ່ຄູຕ້ອງມີຄວາມຊຳນານແລະມີຄວາມຄ່ອງແຄ່ວໃນການໃຊ້ຄຳຖາມ

ກິດຕິໄຊ ສຸທາສິໂນບົນ (2541 ໜ້າ 33) ກ່າວວ່າ ເຕັກນິກການໃຊ້ຄຳຖາມ ໝາຍເຖິງເທັກນິກການໃຊ້ຄຳເວົ້າຂອງຄູໃນການກະຕຸ້ນໃຫ້ນັກຮຽນໄດ້ໃຊ້ຄວາມຄິດຄົ້ນຄວ້າຫາຄຳຕອບ ເພື່ອແກ້ບັນຫາແລະຕອບຄຳຖາມຂອງຜູ້ສອນ ຈາກນັ້ນຈຶ່ງສະຫລຸບເປັນແນວຄິດຂອງຕົນເອງ ເປັນການພັດທະນານັກຮຽນໃຫ້ມີຄວາມຄິດໃນລະດັບສູງ

ວັດທະນາພອນ ລະງັບທຸກ (2545 ໜ້າ 87-88) ກ່າວເຖິງເຕັກນິກການໃຊ້ຄຳຖາມວ່າ ເປັນສ່ວນໜຶ່ງຂອງກະບວນການຮຽນຮູ້ ຊ່ວຍໃຫ້ນັກຮຽນສ້າງຄວາມຮູ້ ຄວາມເຂົ້າໃຈ ແລະ ພັດທະນາຄວາມຄິດໃໝ່ ໆ ການໃຊ້ຄຳຖາມຈະຊ່ວຍຂະຫຍາຍທັກສະການຄິດ

ສຸວິດຍ໌ ມູນຄຳ ແລະອໍລະໄທ ມູນຄຳ (2553 ໜ້າ 74) ກ່າວວ່າ ການຈັດກິດຈະກຳການຮຽນຮູ້ແບບການໃຊ້ຄຳຖາມ ເປັນກະບວນການຮຽນຮູ້ທີ່ມຸ່ງພັດທະນາຂະບວນການທາງຄວາມຄິດຂອງຜູ້ຮຽນໂດຍຜູ້ສອນຈະປ້ອນຄຳຖາມໃນລັກສະນະຕ່າງ ໆ ທີ່ເປັນຄຳຖາມທີ່ດີ ສາມາດພັດທະນາຄວາມຄິດຜູ້ຮຽນ ຖາມເພື່ອໃຫ້ຜູ້ຮຽນໃຊ້ຄວາມຄິດເຊີງເຫດຜົນ ວິເຄາະ ວິຈານ ສັງເຄາະ ຫລືການປະເມີນຄ່າເພື່ອຈະຕອບຄຳຖາມເຫລົ່ານັ້ນ

ສະຫລຸບໄດ້ວ່າ ການໃຊ້ຄຳຖາມ ໝາຍເຖິງ ການຈັດກິດຈະກຳການຮຽນຮູ້ໂດຍການປ້ອນຄຳຖາມ ເພື່ອກະຕຸ້ນໃຫ້ນັກຮຽນຄິດຫາຄຳຕອບ ອາດຕອບເປັນລາຍບຸກຄົນຫລືຕອບເປັນກຸ່ມ ຫລືຕອບພ້ອມທັງຫ້ອງໂດຍຈະຮັດໃຫ້ຜູ້ຮຽນເກີດຄວາມຮູ້ຄວາມເຂົ້າໃຈໃນເລື່ອງຕ່າງ ໆໄດ້ຢ່າງຊັດເຈນແລະຍັງເປັນເຕັກນິກການສອນທີ່ຄູໃຊ້ໃນການກະຕຸ້ນໃຫ້ຜູ້ຮຽນໄດ້ໃຊ້ຄວາມຄິດໃນການສຶກສາຄົ້ນຄວ້າຫາຄຳຕອບເພື່ອນຳມາໃຊ້ແກ້ບັນຫາ ແລະສະຫລຸບເປັນແນວຄິດຂອງຕົນເອງ

#### 1.2 ປະເພດຂອງຄຳຖາມ

ຄຳຖາມມີຫລາຍປະເພດ ໄດ້ມີຜູ້ແບ່ງປະເພດຂອງຄຳຖາມໄວ້ຕ່າງ ໆ ກັນ ດັ່ງນີ້

ພິມພັນ ເດຊະຄຸບ (2543 ໜ້າ 1-3) ກ່າວໄວ້ໂດຍສະຫລຸບວ່າ ຖ້າແບ່ງປະເພດຄຳຖາມຕາມລະດັບຂັ້ນຂອງການໃຊ້ຄວາມຄິດໃນພຸດທິພິໄສ (Cognitive domain) ຂອງ Bloom ແບ່ງໄດ້ດັ່ງນີ້:

CamScanner
CamScanner

| ປະເພດຄຳຖາມ | ຄຳຖາມ | ຕົວຢ່າງຄຳຖາມ |
|---|---|---|
| 1. ຖາມຄວາມຮູ້ | ຄຳຖາມທີ່ມີຄຳຕອບແນ່ນອນ ຖາມເນື້ອໃນ<br>ທີ່ກ່ຽວກັບຂໍ້ແທ້ຈິງ ຄຳຈຳກັດຄວາມ ຄຳນິຍາມ ຄຳສັບ ກົດເກນ ທິດສະດີ<br>ຖາມກ່ຽວກັບ ໃຜ (Who) ເຮັດຫຍັງ (What) ເມື່ອໃດ (When)<br>ທີ່ໃດ (Where) ລວມທັງແມ່ນຫລືບໍ່ແມ່ນ | 1. ການຄຸມກຳເນີດໝາຍເຖິງຫຍັງ<br>2. ມະນຸດສຳພັນໝາຍເຖິງຫຍັງ<br>3. ຜູ້ຄົ້ນພົບທິດສະດີສຳພັນທະພາບແມ່ນໃຜ<br>4. ໄມເຄີນ ຟາລາເດ ເປັນນັກວິທະຍາສາດປະເທດໃດ<br>5. ບໍລິເວນໃດຂອງລາວພົບບໍ່ທອງຄຳຫລາຍທີ່ສຸດ<br>6. ການແຂ່ງຂັນເຕະບານໂລກເທື່ອທີ 5 ຈັດຂຶ້ນຢູ່ທີ່ປະເທດໃດ |
| 2. ຖາມຄວາມເຂົ້າໃຈ | ຄຳຖາມທີ່ຕ້ອງໃຊ້ຄວາມຮູ້ຄວາມຈຳມາປະກອບ ເພື່ອອະທິບາຍດ້ວຍຄຳເວົ້າຂອງຕົນເອງ ເປັນຄຳຖາມທີ່ສູງກວ່າຄວາມຮູ້ | 1. ຈົ່ງອະທິບາຍລັກສະນະຂອງຜູ້ມີສຸຂະພາບຈິດດີ<br>3. ຈົ່ງແບ່ງປະເພດພືດທີ່ກຳນົດໃຫ້ຕາມເກນຂອງນັກຮຽນເອງ<br>4. ຈົ່ງຍົກຕົວຢ່າງຄຳສັບພາສາອັງກິດທີ່ໃຊ້ໃນຊີວິດປະຈຳວັນບໍ່ໃຫ້ຫຼຸດ 10 ຄຳ |
| 3. ຖາມການນຳໄປໃຊ້ | ຄຳຖາມທີ່ນຳຄວາມຮູ້ແລະຄວາມເຂົ້າໃຈໄປໃຊ້ແກ້ບັນຫາໃນສະຖານະການໃໝ່ | 1.ທ່ານຈະມີວິທີການປະຫຍັດການໃຊ້ນ້ຳໃນຄອບຄົວຂອງທ່ານໄດ້ຫລືບໍ່ຢ່າງໃດ<br>2. ເມື່ອເຂົ້າຊົມພິພິດພັນທ໌ສັດນ້ຳ ທ່ານຄວນຈະປະຕິບັດຕົນຢ່າງໃດບ້າ<br>3.ນັກຮຽນຈະທົດສອບວ່ານ້ຳມຶກລາຍຊູໃນມືຂອງຜູ້ຮຽນເປັນຂອງແທ້ຫລືຂອງປອມໄດ້ແນວໃດ |
| 4. ຖາມການວິເຄາະ | ຄຳຖາມທີ່ໃຫ້ຈຳແນກແຍກແຍະເລື່ອງລາວ<br>ຕ່າງ ໆ ວ່າປະກອບດ້ວຍສ່ວນຍ່ອຍຫຍັງແດ່ ໂດຍອາໄສຫລັກການທິດສະດີທີ່ມາຂອງເລື່ອງລາວ ຫລືເຫດການນັ້ນ | 1.ອາຫານໃນຈານນີ້ປະກອບດ້ວຍສານອາຫານໝູ່ໃດແດ່<br>2.ມູນເຫດສຳຄັນທີ່ເຮັດໃຫ້ສະຖິຕິການມີສຸຂະພາບຈິດບໍ່ດີຂອງຄົນໃນ ນະຄອນຫຼວງ. ສູງຂຶ້ນແມ່ນຫຍັງ<br>3. ມີສາເຫດສຳຄັນໃດບ້າງ-ທີ່ເຮັດໃຫ້ເຍົາວະຊົນເສບຢາເສບຕິດ<br>4.ປະຊາຊົນໃນແຕ່ລະພາກຂອງປະເທດໄທມີຄວາມເປັນຢູ່ແຕກຕ່າງກັນນັ້ນມີປັດໃຈສຳຄັນໃດແດ່ທີ່ເປັນສາເຫດ |
| 5. ຖາມການສັງເຄາະ | ຄຳຖາມທີ່ໃຊ້ຂະບວນການຄິດ ເພື່ອສະຫລຸບຄວາມສຳພັນລະຫວ່າງຂໍ້ມູນຍ່ອຍໆ<br>ຂຶ້ນເປັນຫລັກການຫລືແນວຄິດໃໝ່ | 1. ຈົ່ງສະຫລຸບຫລັກການຖະນອມອາຫານ<br>2.ຈາກການສຶກສາ ຈົ່ງສະຫລຸບຜົນກ່ຽວກັບສາເຫດການເກີດມະເຮັງ |
| 6. ຖາມການປະເມີນຄ່າ | ຄຳຖາມທີ່ໃຫ້ນັກຮຽນຕີຄຸນຄ່າ ໂດຍໃຊ້ຄວາມຮູ້ ຄວາມຮູ້ສຶກ ຄວາມຄິດເຫັນ ໃນການກຳນົດເກນເພື່ອປະເມີນຄ່າສິ່ງເຫລົ່ານັ້ນ | 1. ນັກຮຽນມີວິທີການໃດທີ່ຈະບອກໄດ້ວ່າບຸກຄົນນີ້ດີບຸກຄົນນັ້ນບໍ່ດີ<br>2. ຜົນການເຮັດໂຄງງານວິທະຍາສາດຂອງກຸ່ມໃດດີທີ່ສຸດ<br>3. ຄວາມຄິດເຫັນຂອງເພື່ອນຄົນໃດເໝາະສົມທີ່ສຸດ<br>4. ນັກຮຽນຄົນໃດມີຄວາມສາມາດໃນການນຳສະເໜີຜົນການທົດລອງໄດ້ດີທີ່ສຸດ |



CS CamScanner

CS CamScanner

ທິລະພັດ ລິດທອງ (2545ໜ້າ75-82) ໄດ້ກ່າວເຖິງ ປະເພດຂອງຄຳຖາມທີ່ພັດທະນາໂດຍ ກະຊວງສຶກສາທິການ ລັດວິກຕໍເລຍ ປະເທດອອດເຕເລຍ ຊຶ່ງແບ່ງຄຳຖາມອອກເປັນ 7 ປະເພດມີ ລາຍລະອຽດຂອງຄຳຖາມດັ່ງຕໍ່ໄປນີ້

1. ຄຳຖາມປະລິມານ ເປັນການຕັ້ງຄຳຖາມ ເພື່ອໃຫ້ນັກຮຽນໄດ້ຄິດເຖິງປະລິມານຂອງຄົນ ສັດ ແລະສິ່ງຂອງ ທີ່ປາກົດໃນບົດຮຽນນັ້ນ ໆ
2. ຄຳຖາມການປ່ຽນແປງ ເປັນການຕັ້ງຄຳຖາມ ເພື່ອໃຫ້ນັກຮຽນໄດ້ຄິດເຖິງການປ່ຽນແປງທີ່ຈະເກີດຂຶ້ນ ຫາກຂໍ້ມູນຫລືຂໍ້ເທັດຈິງໃນບົດຮຽນມີການປ່ຽນແປງ
3. ຄຳຖາມການທຳນາຍ ເປັນການຕັ້ງຄຳຖາມທີ່ມີການສົມມຸດວ່າ ຖ້າເກີດເຫດການເຊັ່ນນີ້ ແລ້ວຈະເກີດຫຍັງຂຶ້ນນຳ ເພື່ອໃຫ້ນັກຮຽນໄດ້ຄິດແລະທຳນາຍໃນສິ່ງທີ່ໜ້າຈະເກີດຂຶ້ນ ແລະເປັນໄປໄດ້
4. ຄຳຖາມຄວາມຄິດເຫັນ ເປັນການຕັ້ງຄຳຖາມ ເພື່ອໃຫ້ນັກຮຽນໄດ້ຄິດ ແລະສະແດງຄວາມຄິດເຫັນ ໂດຍອາໄສຂໍ້ມູນ ຄວາມຈິງ ທີ່ມີຫລັກການ ແລະ ເຫດຜົນ
5. ຄຳຖາມກ່ຽວກັບສ່ວນຕົວ ເປັນຄຳຖາມທີ່ຖາມຄວາມຮູ້ສຶກສ່ວນຕົວຂອງນັກຮຽນຖ້ານັກຮຽນເປັນສ່ວນໃດສ່ວນໜຶ່ງຂອງບົດຮຽນນັ້ນ ຫລືຢູ່ໃນເຫດການໃດເຫດການໜຶ່ງໃນບົດຮຽນນັ້ນ ນັກຮຽນຈະຮູ້ສຶກຢ່າງໃດ
6. ຄຳຖາມຄວາມສຳພັນປຽບທຽບ ເປັນການຕັ້ງຄຳຖາມ ເພື່ອໃຫ້ນັກຮຽນໄດ້ຄິດປຽບທຽບລະຫວ່າງສິ່ງໃດສິ່ງໜຶ່ງ ຫລືເຫດການໃດເຫດການໜຶ່ງ ທີ່ເກີດຂຶ້ນໃນບົດຮຽນນັ້ນ
7. ຄຳຖາມກ່ຽວກັບຄ່ານິຍົມ ເປັນການຕັ້ງຄຳຖາມ ເພື່ອໃຫ້ນັກຮຽນໄດ້ຄິດຢ່າງມີເຫດຜົນຄິດໃນທາງທີ່ຖືກຕ້ອງ ຄິດຢ່າງມີວິຈາລະນະຍານ ແລະສາມາດຕັດສິນໃຈ ວິເຄາະວິຈານໄດ້ວ່າ ຄ່ານິຍົມໃດດີຫລືບໍ່ດີ ຄ່ານິຍົມໃດຄວນປະຕິບັດຕາມຫລືບໍ່ຄວນປະຕິບັດຕາມ

| ປະເພດຄຳຖາມ | ຕົວຢ່າງຄຳຖາມ |
|---|---|
| 1. ຄຳຖາມປະລິມານ | ນັກຮຽນຄິດວ່າໃນເລື່ອງຂຸນຊ້າງຂຸນແຜນນັ້ນ ມີຕົວລະຄອນ ທີ່ເດັ່ນ ໆ ຈັກເປັນຕົວເອກຂອງເລື່ອງ ຈັກຄົນ ໃຜບ້າ |
| 2. ຄຳຖາມການປ່ຽນແປງ | ຖ້າໃນເລື່ອງຂຸນຊ້າງຂຸນແຜນບໍ່ມີນາງມີທອງ ແລ້ວຈະມີໃຜມາດຳເນີນເລື່ອງແທນນາງວັນທອງໄດ້ |
| 3. ຄຳຖາມການທຳນາຍ | ຖ້າກຸມານທອງມີຈິງ ຈະມີຫຍັງເກີດຂຶ້ນ |
| 4. ຄຳຖາມຄວາມຄິດເຫັນ | ຖ້ານັກຮຽນຢືນຢູ່ໃນເຫດການທີ່ນາງວັນທອງກຳລັງຈະຖືກຂ້າ ນັກຮຽນຈະເລົ່າເຫດ ການນັ້ນໃຫ້ເພື່ອນ ໆ ຟັງຢ່າງໃດ |
| 5. ຄຳຖາມກ່ຽວກັບສ່ວນຕົວ | ຖ້ານັກຮຽນເປັນຂຸນແຜນ ຈະມີຄວາມຮູ້ສຶກຢ່າງໃດຕໍ່ ນາງວັນທອງ ທີ່ນາງຖືກຂ້າຕາຍ |
| 6. ຄຳຖາມຄວາມສຳພັນປຽບທຽບ | ໃຫ້ນັກຮຽນປຽບທຽບ ຄຸນສົມບັດຂອງຂຸນຊ້າງກັບຂຸນແຜນ |
| 7. ຄຳຖາມກ່ຽວກັບຄ່ານິຍົມ | ການກະທຳຂອງຂຸນຊ້າງ ໃນການກ່າວໂທດຂຸນແຜນໂດຍນຳຄວາມຂຶ້ນກາບທູນສົມເດັດພະພັນວະສາເປັນການກະທຳທີ່ຖືກຕ້ອງຫລືບໍ່ ເພາະເຫດໃດ |



CamScanner

CamScanner

## 2 ວິທີການໃຊ້ຄຳຖາມໃນການຮຽນ-ການສອນ

ວິທີການໃຊ້ຄຳຖາມໃນການຮຽນການສອນ ເປັນການວາງແຜນການໃຊ້ຄຳຖາມແລະວິທີການທີ່ຄູນຳຄຳຖາມໄປໃຊ້ຖາມນັກຮຽນເພື່ອໃຫ້ນັກຮຽນຄິດຫາຄຳຕອບໃນການຮຽນການສອນ ເຊິ່ງມີແນວທາງດັ່ງຕໍ່ໄປນີ້:

ບຸນຊົມ ສີສະອາດ (2537, ໜ້າ 74-75) ກ່າວເຖິງວິທີການໃຊ້ຄຳຖາມໃນການຮຽນ-ການສອນໄວ້ດັ່ງນີ້

1. ຖາມໃຫ້ຕອບຢ່າງທົ່ວເຖິງ ພະຍາຍາມໃຫ້ທຸກຄົນມີສ່ວນຮ່ວມໃນການຕອບໃຫ້ຫລາຍທີ່ສຸດ
2. ກະຕຸ້ນໃຫ້ຜູ້ຮຽນຄິດຄົ້ນຫາຄຳຕອບດ້ວຍຕົນເອງ
3. ຕຽມຄຳຖາມໄວ້ລ່ວງໜ້າ ໂດຍໃຊ້ຄຳຖາມຫລາຍປະເພດ ອາດໃຊ້ແນວຄິດຂອງ ບລູມທີ່ຈຳແນກພຶດຕິກຳດ້ານພຸດທິພິໄສເປັນ 6 ປະເພດ ຫລືອາດໃຊ້ແນວຄິດຂອງຄົນອື່ນ
4. ໃຫ້ເວລາໃນການຄິດ ບໍ່ເລັ່ງລັດຫລືບີບຄັ້ນເອົາຄຳຕອບຫລາຍເກີນໄປ
5. ຖ້າຜູ້ຮຽນບໍ່ເຂົ້າໃຈຄຳຖາມຫລືເປັນເລື່ອງທີ່ຄິດຊັບຊ້ອນຄວນຕັ້ງຄຳຖາມໃໝ່ທີ່ຈະເຮັດໃຫ້ເຂົ້າໃຈໄດ້ດີຂຶ້ນ ຫລືຊ່ວຍໃຫ້ແນວທາງທີ່ສາມາດຕອບຄຳຖາມເຕັມໄດ້

ກົມວິຊາການ (2538, ໜ້າ 80) ກ່າວເຖິງວິທີການໃຊ້ຄຳຖາມໃນການຮຽນການສອນໄວ້ດັ່ງນີ້:

1. ຕັ້ງຄຳຖາມກ່ອນແລ້ວຈຶ່ງຮຽກຊື່ນັກຮຽນທີ່ຈະຖາມ (ກໍລະນີຖາມເປັນລາຍລາຍບຸກຄົນ) ແລະຕັ້ງຄຳຖາມດ້ວຍຄວາມຍິ້ມແຍ້ມເປັນກັນເອງ ບໍ່ເຄັ່ງ
2. ວາງແຜນໃນການຕັ້ງຄຳຖາມກ່ອນ
3. ຕັ້ງຄຳຖາມຫລາກຫລາຍ ຄອບຄຸມວັດຖຸປະສົງເນື້ອຫາ ຖາມຄຳຖາມລະດັບຕໍ່າເຖິງສູງ
4. ຖາມຄຳຖາມເທື່ອລະຂໍ້ ຢ່າຖາມເທື່ອລະຫລາຍຄຳຖາມພ້ອມກັນ
5. ຖາມຄຳຖາມຈາກງ່າຍໄປຫາຍາກ ເຊິ່ງຈະເຮັດໃຫ້ເກີດຄວາມໝັ້ນໃຈໃນການຕອບຄຳຖາມທີ່ຍາກຂຶ້ນ
6. ພະຍາຍາມຖາມນັກຮຽນໃຫ້ທົ່ວເຖິງທຸກຄົນ ຢ່າຖາມສະເພາະເຈາະຈົງຄົນໃດຄົນໜຶ່ງ
7. ຖ້ານັກຮຽນຕອບຄຳຖາມບໍ່ສົມບູນ ຄູຄວນໃຫ້ຂໍ້ມູນເພີ່ມເຕີມແລະໃຫ້ແຮງຈູງໃຈແລະກຳລັງໃຈ
8. ຖາມຄຳຕອບຊ້ຳໃນກໍລະນີທີ່ນັກຮຽນບໍ່ເຂົ້າໃຈຄຳຖາມຫລືຟັງບໍ່ທັນ
9. ກໍລະນີນັກຮຽນບໍ່ເຂົ້າໃຈຄຳຖາມ ເຊິ່ງເປັນຄຳຖາມທີ່ຍາກ ຄວນປັບຄຳຖາມ
10. ກໍລະນີນັກຮຽນບໍ່ຕອບຄຳຖາມຄູຄວນຊີ້ແນະແລະບອກຂໍ້ມູນເພີ່ມເຕີມ



CamScanner

CamScanner

ສະຫລຸບໄດ້ວ່າ ວິທີການໃຊ້ຄຳຖາມໃນການຮຽນການສອນ ໝາຍເຖິງ ການວາງແຜນການໃຊ້ຄຳຖາມຂອງຄູກ່ອນທີ່ຈະນຳໄປຖາມຜູ້ຮຽນເພື່ອໃຫ້ຜູ້ຮຽນໄດ້ຮັບການເຝິກທັກສະໃນດ້ານຕ່າງ ໆ ກະຕຸ້ນໃຫ້ຜູ້ຮຽນຄິດຄົ້ນຫາຄຳຕອບດ້ວຍຕົນເອງໂດຍຖາມຄຳຖາມຈາກງ່າຍໄປຫາຍາກ ໃຊ້ພາສາເວົ້າງ່າຍ ໆ ໃນການຖາມ ແລະຄວນໃຫ້ກຳລັງໃຈກັບຜູ້ຮຽນເມື່ອຕອບຄຳຖາມ ຄູຜູ້ສອນຄວນປັບວິທີການໃຊ້ຄຳຖາມໃຫ້ເໝາະສົມກັບຜູ້ຮຽນແລະເນື້ອຫາໃຫ້ສາມາດພັດທະນາທັກສະການຄິດຂອງຜູ້ຮຽນໄດ້

**2.1** ຂັ້ນຕອນການຈັດກິດຈະກຳການຮຽນຮູ້ໂດຍໃຊ້ຄຳຖາມ

ທິລະພັດນ໌ ລົດທອງ (2545 ໜ້າ76-77) ໄດ້ກ່າວເຖິງຂັ້ນຕອນການຈັດກິດຈະກຳການຮຽນຮູ້ໂດຍໃຊ້ຄຳຖາມທັງ 7 ປະເພດ ທີ່ພັດທະນາຂຶ້ນໂດຍກະຊວງສຶກສາທິການ ລັດວິກຕໍເລຍ ປະທດອອສເຕເລຍ ໄວ້ດັ່ງນີ້:

1. ນຳຮູບພາບຫລືເຫດການໃດເຫດການໜຶ່ງມາໃຫ້ນັກຮຽນເບິ່ງ / ສຶກສາ
2. ຕັ້ງຄຳຖາມໃຫ້ນັກຮຽນໄດ້ຄິດເຖິງປະລິມານຂອງສິ່ງທີ່ປາກົດໃນຮູບພາບຫລືເຫດການນັ້ນ ເຊັ່ນ ຈາກຮູບພາບຫລືເຫດການນັ້ນ ມີໃຜແດ່ ຈຳນວນຈັກຄົນ
3. ຕັ້ງຄຳຖາມໃຫ້ນັກຮຽນຄິດເຖິງການປ່ຽນແປງຂອງສິ່ງທີ່ປາກົດໃນພາບຫລືເຫດການນັ້ນ ເຊັ່ນ ຈາກຮູບພາບຫລືເຫດການນັ້ນ ຖ້າບໍ່ມີ.......... ຈະໃຊ້ໃຜ ຫລືສິ່ງໃດແທນໄດ້
4. ຕັ້ງຄຳຖາມໃຫ້ນັກຮຽນຄິດທຳນວາຍ ເຊັ່ນ ຖ້າ................ ແມ່ນຫຍັງຈະເກີດຂຶ້ນ
5. ຕັ້ງຄຳຖາມໃຫ້ນັກຮຽນສະແດງຄວາມຄິດເຫັນ ເຊັ່ນ ຖ້ານັກຮຽນເປັນ................. ນັກຮຽນຈະເຮັດຢ່າງໃດ
6. ຕັ້ງຄຳຖາມໃຫ້ນັກຮຽນຄິດກ່ຽວກັບເລື່ອງສ່ວນຕົວ ເຊັ່ນ ນັກຮຽນຈະມີຄວາມຮູ້ສຶກຢ່າງໃດຖ້ານັກຮຽນເປັນ......................
7. ຕັ້ງຄຳຖາມໃຫ້ນັກຮຽນຄິດເຖິງຄວາມສຳພັນປຽບທຽບ ໂດຍປຽບທຽບຮູບພາບຫລືເຫດການນັ້ນ ກັບຮູບພາບຫລືເຫດການອື່ນທີ່ສົມມຸດຂຶ້ນ
8. ຕັ້ງຄຳຖາມໃຫ້ນັກຮຽນຄິດເຖິງຄ່ານິຍົມ ເປັນຄ່ານິຍົມດ້ານໃດກໍໄດ້ທີ່ກ່ຽວກັບຮູບພາບຫລືເຫດການນັ້ນ ໆ ເຊັ່ນ ການກະທຳຂອງ.................. ຖືກຕ້ອງຫລືບໍ່ ເພາະເຫດໃດ

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ (2553 ໜ້າ 85) ໄດ້ສະຫລຸບຂັ້ນຕອນການຈັດການຮຽນຮູ້ແບບໃຊ້ຄຳຖາມທົ່ວ ໆ ໄປ ໄວ້ດັ່ງຕໍ່ໄປນີ້

1: ຂັ້ນວາງແຜນການໃຊ້ຄຳຖາມ ຜູ້ສອນຄວນຈະມີການວາງແຜນໄວ້ລ່ວງໜ້າວ່າຈະໃຊ້ຄຳຖາມເພື່ອວັດຖຸປະສົງໃດ ຮູບແບບຫລືປະເພດໃດ ທີ່ຈະສອດຄ່ອງກັບເນື້ອໃນ ແລະ ວັດຖຸປະສົງຂອງບົດຮຽນ

2. ຂັ້ນກຽມຄຳຖາມ ຜູ້ສອນຄວນຈະກຽມຄຳຖາມທີ່ຈະໃຊ້ໃນການຈັດກິດຈະກຳການຮຽນຮູ້ໂດຍການສ້າງຄຳຖາມຢ່າງມີຫລັກເກນ



CS CamScanner

CS CamScanner

ສະຫຼຸບໄດ້ວ່າ ວິທີການໃຊ້ຄຳຖາມໃນການຮຽນການສອນ ໝາຍເຖິງ ການວາງແຜນການໃຊ້ຄຳຖາມຂອງຄູກ່ອນທີ່ຈະນຳໄປຖາມຜູ້ຮຽນເພື່ອໃຫ້ຜູ້ຮຽນໄດ້ຮັບການເຝິກທັກສະໃນດ້ານຕ່າງ ໆ ກະຕຸ້ນໃຫ້ຜູ້ຮຽນຄິດຄົ້ນຫາຄຳຕອບດ້ວຍຕົນເອງໂດຍຖາມຄຳຖາມຈາກງ່າຍໄປຫາຍາກ ໃຊ້ພາສາເວົ້າງ່າຍ ໆ ໃນການຖາມ ແລະຄວນໃຫ້ກຳລັງໃຈກັບຜູ້ຮຽນເມື່ອຕອບຄຳຖາມ ຄູຜູ້ສອນຄວນປັບວິທີການໃຊ້ຄຳຖາມໃຫ້ເໝາະສົມກັບຜູ້ຮຽນແລະເນື້ອຫາໃຫ້ສາມາດພັດທະນາທັກສະການຄິດຂອງຜູ້ຮຽນໄດ້

**2.1** ຂັ້ນຕອນການຈັດກິດຈະກຳການຮຽນຮູ້ໂດຍໃຊ້ຄຳຖາມ

ທິດສະນີດນ໌ ລິດທອງ (2545 ໜ້າ76-77) ໄດ້ກ່າວເຖິງຂັ້ນຕອນການຈັດກິດຈະກຳການຮຽນຮູ້ໂດຍໃຊ້ຄຳຖາມທັງ 7 ປະເພດ ທີ່ພັດທະນາຂຶ້ນໂດຍກະຊວງສຶກສາທິການ ລັດວິກຕໍເລຍ ປະທດອອສເຕເລຍ ໄວ້ດັ່ງນີ້:

1. ນຳຮູບພາບຫລືເຫດການໃດເຫດການໜຶ່ງມາໃຫ້ນັກຮຽນເບິ່ງ / ສຶກສາ
2. ຕັ້ງຄຳຖາມໃຫ້ນັກຮຽນໄດ້ຄິດເຖິງປະລິມານຂອງສິ່ງທີ່ປາກົດໃນຮູບພາບຫລືເຫດການນັ້ນ ເຊັ່ນ ຈາກຮູບພາບຫລືເຫດການນັ້ນ ມີໃຜແດ່ ຈຳນວນຈັກຄົນ
3. ຕັ້ງຄຳຖາມໃຫ້ນັກຮຽນຄິດເຖິງການປ່ຽນແປງຂອງສິ່ງທີ່ປາກົດໃນພາບຫລືເຫດການນັ້ນ ເຊັ່ນ ຈາກຮູບພາບຫລືເຫດການນັ້ນ ຖ້າບໍ່ມີ.......... ຈະໃຊ້ໃຜ ຫລືສິ່ງໃດແທນໄດ້
4. ຕັ້ງຄຳຖາມໃຫ້ນັກຮຽນຄິດທຳນວາຍ ເຊັ່ນ ຖ້າ................ ແມ່ນຫຍັງຈະເກີດຂຶ້ນ
5. ຕັ້ງຄຳຖາມໃຫ້ນັກຮຽນສະແດງຄວາມຄິດເຫັນ ເຊັ່ນ ຖ້ານັກຮຽນເປັນ................. ນັກຮຽນຈະເຮັດຢ່າງໃດ
6. ຕັ້ງຄຳຖາມໃຫ້ນັກຮຽນຄິດກ່ຽວກັບເລື່ອງສ່ວນຕົວ ເຊັ່ນ ນັກຮຽນຈະມີຄວາມຮູ້ສຶກຢ່າງໃດ ຖ້ານັກຮຽນເປັນ......................
7. ຕັ້ງຄຳຖາມໃຫ້ນັກຮຽນຄິດເຖິງຄວາມສຳພັນປຽບທຽບ ໂດຍປຽບທຽບຮູບພາບຫລືເຫດການນັ້ນ ກັບຮູບພາບຫລືເຫດການອື່ນທີ່ສົມມຸດຂຶ້ນ
8. ຕັ້ງຄຳຖາມໃຫ້ນັກຮຽນຄິດເຖິງຄ່ານິຍົມ ເປັນຄ່ານິຍົມດ້ານໃດກໍໄດ້ທີ່ກ່ຽວກັບຮູບພາບຫລືເຫດການນັ້ນ ໆ ເຊັ່ນ ການກະທຳຂອງ.................. ຖືກຕ້ອງຫລືບໍ່ ເພາະຫດໃດ

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ (2553 ໜ້າ 85) ໄດ້ສະຫຼຸບຂັ້ນຕອນການຈັດການຮຽນຮູ້ແບບໃຊ້ຄຳຖາມທົ່ວ ໆ ໄປ ໄວ້ດັ່ງຕໍ່ໄປນີ້

1. ຂັ້ນວາງແຜນການໃຊ້ຄຳຖາມ ຜູ້ສອນຄວນຈະມີການວາງແຜນໄວ້ລ່ວງໜ້າວ່າຈະໃຊ້ຄຳຖາມເພື່ອວັດຖຸປະສົງໃດ ຮູບແບບຫລືປະເພດໃດ ທີ່ຈະສອດຄ່ອງກັບເນື້ອໃນ ແລະ ວັດຖຸປະສົງຂອງບົດຮຽນ
2. ຂັ້ນຕຽມຄຳຖາມ ຜູ້ສອນຄວນຈະຕຽມຄຳຖາມທີ່ຈະໃຊ້ໃນການຈັດກິດຈະກຳການຮຽນຮູ້ໂດຍການສ້າງຄຳຖາມຢ່າງມີຫລັກເກນ



CS CamScanner

CS CamScanner

3. ຂັ້ນການໃຊ້ຄຳຖາມ ຜູ້ສອນສາມາດຈະໃຊ້ຄຳຖາມໃນທຸກຂັ້ນຕອນຂອງການຈັດກິດຈະກຳການຮຽນຮູ້ ແລະອາດຈະສ້າງຄຳຖາມໃໝ່ ທີ່ນອກເໜືອຈາກຄຳຖາມທີ່ຕຽມໄວ້ກໍໄດ້ ທັງນີ້ຕ້ອງເໝາະສົມກັບເນື້ອຫາສາລະແລະສະຖານະການນັ້ນ ໆ

4. ຂັ້ນສະຫລຸບແລະປະເມີນຜົນ

1.1 ການສະຫລຸບບົດຮຽນ ຜູ້ສອນອາດຈະໃຊ້ຄຳຖາມເພື່ອການສະຫລຸບບົດຮຽນກໍໄດ້

1.2 ການປະເມີນຜົນ ຜູ້ສອນແລະນັກຮຽນຮ່ວມກັນປະເມີນຜົນການຮຽນຮູ້ ໂດຍໃຊ້ວິທີການປະເມີນຜົນຕາມສະພາບຈິງ

ສະຫລຸບໄດ້ວ່າ ຂັ້ນຕອນໃນການຈັດການຮຽນການສອນແບບໃຊ້ຄຳຖາມນັ້ນຜູ້ສອນຄວນຕຽມຄຳຖາມຢ່າງມີຫລັກເກນ ແລະໃຫ້ເໝາະສົມກັບເນື້ອໃນໂດຍມີການວາງແຜນການໃຊ້ຄຳຖາມ ຕຽມຄຳຖາມ ໃຊ້ຄຳຖາມ ສະຫລຸບແລະປະເມີນຜົນ

**ກິດຈະກຳ 1**

ຄຳຊີ້ແຈງ: ໃຫ້ຂຽນຕົວຢ່າງຄຳຖາມທີ່ສະແດງເຖິງລະດັບພຶດຕິກຳການຮຽນຮູ້ຂອງຜູ້ຮຽນຕາມແນວໃດຂອງບລູມໂດຍໃຫ້ກ່ຽວກັບວິຊາທີ່ຕົນເອງສອນ

| ລະດັບພຶດຕິກຳ | ຕົວຢ່າງຄຳຖາມ |
|---|---|
| ຄວາມຮູ້ຄວາມຈຳ | 1.<br>2.<br>3.<br>4. |
| ຄວາມເຂົ້າໃຈ | 1.<br>2.<br>3.<br>4. |
| ການນຳໄປໃຊ້ | 1.<br>2.<br>3.<br>4. |
| ການວິເຄາະ | 1.<br>2.<br>3.<br>4. |
| ການສັງເຄາະ | 1.<br>2.<br>3.<br>4. |
| ການປະເມີນຄ່າ | 1.<br>2.<br>3.<br>4. |



CamScanner

CamScanner

## 2. ເທັກນິກການໃຊ້ຜັງກາບຟິກ

### 1. ຄວາມໝາຍຂອງຜັງກຣາຟິກ

ພິມພັນ ເດຊະຄຸບ (2543 ໜ້າ 149) ໃຫ້ຄວາມໝາຍວ່າ ຜັງກາຟິກ ຄືແບບຂອງການສື່ສານ ເພື່ອໃຊ້ນຳສະເໜີຂໍ້ມູນທີ່ໄດ້ຈາກການລວບລວມຢ່າງເປັນລະບົບ ມີຄວາມເຂົ້າໃຈງ່າຍ ສັ້ນກະທັດ ຮັດ ຊັດເຈນ ຜັງກຣາຟິກໄດ້ຈາກການນຳຂໍ້ມູນດິບ ຫລືຄວາມຮູ້ຈາກແຫລ່ງຕ່າງ ໆ ມາກໍ່ການຈັດ ສ້າງຂໍ້ມູນ ໃນການຈັດກະທຳຂໍ້ມູນຕ້ອງໃຊ້ທັກສະການຄິດ ເຊັ່ນ ການສັງເກດ ການປຽບທຽບ ການ ຈຳແນກການຈັດປະເພດ ການລຽງລຳດັບ ການໃຊ້ຕົວເລກ ເຊັ່ນ ຄ່າຄວາມຖີ່ ຄ່າສະເລ່ຍ ແລະການ ສະຫລຸບ ເປັນຕົ້ນຈາກນັ້ນຈຶ່ງມີການເລືອກແບບຜັງກຣາຟິກ ເພື່ອນຳສະເໜີຂໍ້ມູນທີ່ຈັດກະທຳແລ້ວ ຕາມເປົ້າໝາຍຫລືວັດຖຸປະສົງທີ່ຜູ້ນຳສະເໜີຕ້ອງການ

ນັດດາວຸດ ກັດຊຸ່ງເຮືອງ ແລະຄະນະ (2545 ໜ້າ 35-36) ໃຫ້ນິຍາມການສອນໂດຍໃຊ້ຜັງກຣາ ຟິກເປັນການສອນທີ່ໃຊ້ແຜນຜັງຄວາມຄິດເປັນເຄື່ອງມືໃນການຈັດລວບລວມ ແລະ ສະຫລຸບຄວາມ ຄິດຫລືຂໍ້ມູນສຳຄັນໃຫ້ເຊື່ອມໂຍງກັນໃນຮູບແບບຕ່າງ ໆ ເຊັ່ນ ແຜນພູມ ຫລືພາບ ເຮັດໃຫ້ເຫັນໂຄງ ສ້າງຂອງຄວາມຮູ້ຫລືເນື້ອຫາສາລະນັ້ນໆ

ທິດສະນາ ແຂມມະນີ (2545 ໜ້າ 47) ກ່າວວ່າ ຜັງກຣາຟິກ ເປັນແຜນຜັງທາງຄວາມຄິດຊຶ່ງ ປະກອບດ້ວຍຄວາມຄິດຫລືຂໍ້ມູນສຳຄັນໆ ທີ່ເຊື່ອມໂຍງກັນຢູ່ໃນຮູບແບບຕ່າງ ໆຊຶ່ງເຮັດໃຫ້ເຫັນ ໂຄງສ້າງຂອງຄວາມຮູ້ຫລືເນື້ອຫາສາລະນັ້ນໆ.

Barron and Stone (ສະຖຸນການ ສັງທອງ. 2548 ໜ້າ 27; ອ້າງອີງມາຈາກ Barron and Stone. 1974: 4-5) ໄດ້ໃຫ້ຄວາມໝາຍຂອງຜັງກາຟິກວ່າເປັນການສະແດງໃຫ້ເຫັນອົງຄ໌ ປະກອບທີ່ສຳຄັນຂອງເນື້ອຫາ ສະແດງຄວາມສຳພັນລະຫວ່າງເນື້ອໃນ ໂດຍການນຳສະເໜີເປັນລຳດັບ ຂັ້ນ ສາມາດອ່ານຫລືເຮັດຄວາມເຂົ້າໃຈຈາກເທິງລົງລຸ່ມ ຊ້າຍໄປຂວາ ເປັນການບັນລະຍາຍຄວາມ ສຳພັນລະຫວ່າງມະໂນທັດທີ່ມີຄວາມເຊື່ອມໂຍງກັນຢ່າງເປັນລຳດັບ ແລະສາມາດນຳມາໃຊ້ໃນທຸກ ຊ່ວງຂອງການອ່ານທັງກ່ອນອ່ານຂະນະອ່ານ ແລະ ຫລັງອ່ານ

### 2. ຮູບແບບຜັງກຣາຟິກ

ຜັງກາຟິກມີຫລາກຫລາຍຮູບແບບ ຊຶ່ງແຕ່ລະຮູບແບບອາດຈະມີລັກສະນະຮູບຮ່າງທີ່ຄ້າຍຄື ກັນຫລືແຕກຕ່າງກັນອອກໄປ ທັງນີ້ຂຶ້ນຢູ່ກັບຜູ້ໃຊ້ຫລືຜູ້ສ້າງເອງວ່າຈະນຳສະເໜີດ້ວຍຜັງກາຟິກຮູບ ແບບໃດທິດສະນາ ແຂມມະນີ (2551 ຂ ໜ້າ 389-400) ໄດ້ຍົກຕົວຢ່າງຮູບແບບຕ່າງ ໆ ຂອງຜັງ ກາຟິກໄວ້ດັ່ງນີ້

1. ຜັງຄວາມຄິດ (A Mind Map)

ຜັງຄວາມຄິດເປັນຜັງທີ່ສະແດງຄວາມສຳພັນຂອງສາລະຫລືຄວາມຄິດຕ່າງ ໆ ໃຫ້ເຫັນເປັນ ໂຄງສ້າງໃນພາບລວມ ໂດຍໃຊ້ ເສັ້ນ ຄຳ ລະຍະຫ່າງຈາກຈຸດສູນກາງ ສີ ເຄື່ອງໝາຍ ຮູບຊົງເລຂາ



CamScanner
CamScanner

ຄະນິດ ແລະພາບ ສະແດງຄວາມຫມາຍແລະຄວາມເຊື່ອມໂຍງຂອງຄວາມຄິດຫລືສາລະນັ້ນໆໂດຍມີຂັ້ນຕອນ

1.1. ຂຽນຄວາມຄິດລວບຍອດຫລັກໄວ້ສູນກາງ ແລ້ວແຕກສາຂາອອກໄປເປັນຄວາມຄິດລວບຍອດຍ່ອຍ ໆ ດັ່ງພາບປະກອບ 1 (ທິດນາ ແຂມມະນີ. 2551 ຂ ໜ້າ 389)




**ພາບປະກອບ 1 ຜັງຄວາມຄິດ ເລື່ອງການໃຊ້ Mind Map**

2. ຜັງມະໂນທັດ (A Concept Map)

ຜັງມະໂນທັດ ເປັນຜັງທີ່ສະແດງໂນທັດຫລືຄວາມຄິດລວມຍອດໃຫຍ່ໄວ້ສູນກາງແລະສະແດງຄວາມສຳພັນລະ ຫວ່າງມະໂນທັດນ໌ໃຫຍ່ແລະມະໂນທັດນ໌ຍ່ອຍ ໆ ເປັນລຳດັບຂັ້ນດ້ວຍເສັ້ນເຊື່ອມໂຍງດັ່ງສະແດງໃນພາບປະກອບ 2 (ທິດນາ ແຂມມະນີ. 2551 ຂ ໜ້າ 393)




ພາບປະກອບ 2 ຜັງມະໂນທັດເລື່ອງສັດ



CamScanner

CamScanner

3. ຜັງແມງມຸມ (A Spider Map)

ຜັງແມງມຸມ ເປັນຜັງແສດງງົມໃນທັດນ໌ ຊຶ່ງມີລັກສະນະຄ້າຍໃຍແມງມຸມດັ່ງພາບປະກອບ 3 (ທິດນາ ແຂມມະນີ. 2551 ຂ: 394))




ພາບປະກອບ 3 ຜັງແມງມຸມເລື່ອງການວັດ

4. ຜັງກ້າງປາ (A Fishbone Map)

ຜັງກ້າງປາ ເປັນຜັງທີ່ສະແດງສາເຫດຂອງບັນຫາຊຶ່ງມີຄວາມຊັບຊ້ອນ ຜັງກ້າງປາຈະຊ່ວຍເຮັດໃຫ້ເຫັນສາເຫດຫລັກແລະສາເຫດຍ່ອຍທີ່ຊັດເຈນ ດັ່ງພາບປະກອບ 4 (ທິດສະນາ ແຂມມະນີ. 2551 ຂ ໜ້າ395)



ພາບປະກອບ 4 ຜັງກ້າງປາຫາສາເຫດຂອງການປະພຶດຜິດລະບຽບວິໄນຂອງນັກຮຽນ



CamScanner
CamScanner

5. ຜັງລຳດັບຂັ້ນຕອນ (A Sequential Map)

ຜັງລຳດັບຂັ້ນຕອນເປັນຜັງທີ່ສະແດງລຳດັບຂັ້ນຕອນຂອງສິ່ງຕ່າງ ໆຫລືກະບວນການຕ່າງ ໆ ດັ່ງພາບປະກອບ 5 (ທິດນາ ແຂມມະນີ. 2551 ຂ ໜ້າ 394)




ພາບປະກອບ 5 ຜັງລຳດັບຂັ້ນຕອນການສອນແບບຈຸນພາກ

6. ຜັງວົງຈອນ (A Circle or Cyclical Map)

ຜັງວົງຈອນ ເປັນຜັງທີ່ສະແດງລຳດັບຂັ້ນຕອນທີ່ຕໍ່ເນື່ອງກັນເປັນວົງກົມ ຫລືເປັນວົງຈອນທີ່ບໍ່ສະແດງຈຸດສິ້ນສຸດ ຫລືຈຸດເລີ່ມຕົ້ນ ທີ່ແນ່ນອນ ດັ່ງພາບປະກອບ 6 (ທິດນາ ແຂມມະນີ.2551 ຂ: 396)




ພາບປະກອບ 6 ຜັງສະແດງຂະບວນການວາງແຜນການສອນຂອງແຈກກາອົດ

7. ຜັງວົງກົມຊ້ອນຫລືເວັນໄດອະແກມ (Venn diagram)

ຜັງເວັນໄດອະແກມ ເປັນຜັງວົງກົມ 2 ວົງຫລືຫລາຍກວ່າທີ່ມີສ່ວນໜຶ່ງຊ້ອນກັນຢູ່ເປັນຜັງທີ່ເໝາະສຳລັບການນຳສະເໜີສິ່ງ 2 ສິ່ງຫລືຫລາຍກວ່າ ຊຶ່ງມີທັງຄວາມເໝືອນແລະຄວາມຕ່າງກັນດັ່ງພາບປະກອບ 7-8 (ທິດນາ ແຂມມະນີ. 2551 ຂ ໜ້າ 397; ອ້າງອີງມາຈາກ Barry and King. 1992:15)



CS CamScanner
CS CamScanner




ພາບປະກອບ 7 ຜັງສະແດງຄວາມສຳພັນຂອງວັດຖຸປະສົງ 3 ດ້ານ ຂອງແບລີ ແລະ ຄິງ




ພາບປະກອບ 8 ຜັງສະແດງເວລາທີ່ຜູ້ຮຽນໃຊ້ຈິງເພື່ອການຮຽນຮູ້ ຂອງແບລີ ແລະ ຄິງ

8. ຜັງພ໊ອດໄດອະແກມ (Plot Diagram)

ຜັງພ໊ອດໄດອະແກມແມ່ນຜັງທີ່ຊ່ວຍໃນການອ່ານເລື່ອງລາວທີ່ມີເຫດການຕໍ່ເນື່ອງກັນຍືດຍາວ ເໝາະສຳລັບການສອນອ່ານ ຜູ້ຮຽນສາມາດໃຊ້ຜັງນີ້ຊ່ວຍໃນການຫາເຄົ້າໂຄງຂອງເລື່ອງ ຊຶ່ງກໍຄືເຫດການທີ່ສຳຄັນທີ່ນຳໄປສູ່ຈຸດຍອດຂອງເລື່ອງ ແລະ ເມື່ອເລື່ອງດຳເນີນໄປສູ່ຈຸດຍອດຄືຈຸດສຳຄັນທີ່



CamScanner

ສຸດຂອງເລື່ອງແລ້ວເຫດການກໍຈະຜ່ອນຄາຍໄປສູ່ບົດສະຫລຸບຂອງເລື່ອງ ດັ່ງພາບປະກອບ 9 (ທິດສະນາ ແຂມມະນີ. 2551 ຂ: 399)




ພາບປະກອບ 9 ຜັງພ໊ອດໄດອະແກມ (Plot Diagram)

ຈາກການສຶກສາເອກະສານກ່ຽວກັບຮູບແບບຂອງຜັງກາຟິກຂອງຫລາຍ ໆທ່ານ ຜູ້ວິໄຈສາມາດຈັດຮູບແບບຜັງກາຟິກຕ່າງ ໆອອກເປັນປະເພດດັ່ງນີ້

1. ຜັງກາຟິກທີ່ມີການນຳສະເໜີຂໍ້ມູນທີ່ເປັນເຫດເປັນຜົນໄດ້ ເຊັ່ນ ຜັງກ້າງປາ (Fishbone Map) ຜັງໃຍແມງມຸມ (Spider Web)

2. ຜັງກາຟິກທີ່ມີການນຳສະເໜີຂໍ້ມູນລຽງລຳດັບເຫດການ ຫລືຂັ້ນຕອນ ເຊັ່ນ ຜັງລຳດັບຂັ້ນຕອນ (A Sequential Map) ຜັງວັດຈັກລ (Circle Map)

3. ຜັງກາຟິກທີ່ມີການນຳສະເໜີຂໍ້ມູນທີ່ເປັນການປຽບທຽບ ເຊັ່ນ ຜັງວົງກົມຊ້ອນ (Venn Diagram) ຜັງຕາລາງ ຫລືທີ-ຊາ່ດທ (T-Chart) ແຜນພູມີແທ່ງ

4. ຜັງກາຟິກທີ່ມີການນຳສະເໜີຂໍ້ມູນເປັນມະໂນທັດນ໌ຫລືຄວາມຄິດລວບຍອດ ເຊັ່ນ ຜັງຄວາມຄິດ (Mind Map) ຜັງມະໂນທັດນ໌ (Concept Map)

5. ຜັງກາຟິກທີ່ນຳສະເໜີຂໍ້ມູນເປັນໝວດໝູ່ ແລະ ການແບ່ງປະເພດ ເຊັ່ນ ແຜນພູມເປັນຮູບກົງ (Pie Chart)





CamScanner
CamScanner

## 3. ການຈັດກິດຈະກຳການຮຽນການສອນໂດຍໃຊ້ເທັກນິກຜັງກຣາຟິກ

### 3.1 ວັດຖຸປະສົງຂອງເທັກນິກການຮຽນການສອນໂດຍໃຊ້ຜັງກຣາຟິກ

ທິດນາ ແຂມມະນີ (2551 ໜ້າ 21-23) ເພື່ອຊ່ວຍໃຫ້ຜູ້ຮຽນໄດ້ເຊື່ອມໂຍງຄວາມຮູ້ໃໝ່ກັບຄວາມຮູ້ເດີມແລະສ້າງຄວາມໝາຍແລະຄວາມເຂົ້າໃຈໃນເນື້ອຫາສາລະຫລືຂໍ້ມູນທີ່ຮຽນຮູ້ ແລະ ຈັດລະບຽບຂໍ້ມູນທີ່ຮຽນຮູ້ດ້ວຍຜັງກາຟິກ ເຊິ່ງຈະຊ່ວຍໃຫ້ງ່າຍຕໍ່ການຈົດຈຳ.

ນັດວຸດ ກິດຮຸ່ງເຮືອງ ແລະຄະນະ (2545 ໜ້າ 36) ເພື່ອຊ່ວຍໃຫ້ເກີດຄວາມເຂົ້າໃຈໃນເນື້ອໃນໄດ້ງ່າຍຂຶ້ນ ແລະຊ່ວຍໃຫ້ຜູ້ຮຽນສາມາດຈັດລະບົບໂຄງສ້າງຂອງຄວາມຮູ້ທີ່ຮຽນ ເຮັດໃຫ້ເຂົ້າໃຈຄວາມສຳພັນຂອງຄວາມຄິດລວມຍອດຂອງເນື້ອຫາສາລະໄດ້ດີຂຶ້ນ

### 1.1 ຂັ້ນຕອນການຈັດກິດຈະກຳການຮຽນ- ການສອນໂດຍໃຊ້ເທັກນິກຜັງກຣາຟິກ

ຂັ້ນຕອນການຈັດກິດຈະກຳການຮຽນການສອນໂດຍໃຊ້ຜັງກາຟິກ ມີຫລາຍຮູບແບບ ໃນທີ່ນີ້ຈະນຳສະເໜີໄວ້ 2ຮູບແບບ ດັ່ງນີ້

1) ຮູບແບບການຮຽນການສອນໂດຍໃຊ້ຜັງກາຟິກຂອງ ໂຈນສ໌ແລະຄະນະ (ທິດນາ ແຂມມະນີ. 2551 ໜ້າ 21-22; ອ້າງອີງມາຈາກ Jones and others. 1989 ໜ້າ 20-25) ປະກອບດ້ວຍຂັ້ນຕອນການຮຽນການສອນທີ່ສຳຄັນ 5 ຂັ້ນຕອນດັ່ງນີ້

   1. ຜູ້ສອນສະເໜີຕົວຢ່າງການຈັດຂໍ້ມູນດ້ວຍຜັງກຣາຟິກທີ່ເໝາະສົມກັບເນື້ອຫາແລະວັດຖຸປະສົງ
   2. ຜູ້ສອນສະແດງວິທີການສ້າງຜັງກາຟິກ
   3. ຜູ້ສອນຊີ້ແຈງເຫດຜົນຂອງການໃຊ້ຜັງກຣາຟິກ  ແລະ ອະທິບາຍວິທີການໃຊ້
   4. ຜູ້ຮຽນຝຶກການສ້າງແລະໃຊ້ຜັງກຣາຟິກໃນການທຳຄວາມເຂົ້າໃຈເນື້ອຫາເປັນລາຍບຸກຄົນ
   5. ຜູ້ຮຽນເຂົ້າກຸ່ມແລະນຳສະເໜີຜັງກາຟິກຂອງຕົນເອງແລກປ່ຽນກັນ

2) ຮູບແບບການຮຽນການສອນໂດຍໃຊ້ຜັງກຣາຟິກຂອງຄ້າກ(ທິດນາ ແຂມມນີ.2551ກ ໜ້າ 22-23; ອ້າງອີງມາຈາກ Clark. 1991 ໜ້າ 526-534) ປະກອບດ້ວຍຂັ້ນຕອນການຮຽນການສອນທີ່ສຳຄັນ ດັ່ງນີ້

   **1) ຂັ້ນກ່ອນສອນ**

   1. ຜູ້ສອນພິຈາລະນາລັກສະນະຂອງເນື້ອຫາທີ່ຈະສອນ ແລະ ວັດຖຸປະສົງຂອງການສອນເນື້ອໃນນັ້ນ
   2. ຜູ້ສອນພິຈາລະນາແລະຄົດຫາຜັງກຣາຟິກ ຫລືວິທີຫລືລະບົບໃນການຈັດລະບຽບເນື້ອໃນນັ້ນ ໆ
   3. ຜູ້ສອນເລືອກຜັງກຣາຟິກ ຫລືວິທີການຈັດລະບຽບເນື້ອຫາທີ່ເໝາະສົມທີ່ສຸດ



CamScanner
CamScanner

4. ຜູ້ສອນຄາດຄະເນບັນຫາທີ່ອາດຈະເກີດຂຶ້ນແກ່ຜູ້ຮຽນໃນການໃຊ້ຜັງກຣາຟິກ

**2) ຂັ້ນສອນ**

1. ຜູ້ສອນສະເໜີຜັງກາຟິກທີ່ເໝາະສົມກັບລັກສະນະຂອງເນື້ອຫາສາລະແກ່ຜູ້ຮຽນ
2. ຜູ້ຮຽນທຳຄວາມເຂົ້າໃຈເນື້ອຫາສາລະແລະນຳເນື້ອຫາສາລະໃສ່ລົງໃນຜັງກາຟິກຕາມຄວາມເຂົ້າໃຈຂອງຕົນ
3. ຜູ້ສອນຊັກຖາມ ແກ້ໄຂຄວາມເຂົ້າໃຈຜິດຂອງຜູ້ຮຽນຫລືຂະຫຍາຍຄວາມເພີ່ມເຕີມ
4. ຜູ້ສອນກະຕຸ້ນໃຫ້ຜູ້ຮຽນຄິດເພີ່ມເຕີມ ໂດຍນຳສະເໜີບັນຫາທີ່ກ່ຽວຂ້ອງກັບເນື້ອຫາແລ້ວໃຫ້ຜູ້ຮຽນໃຊ້ຜັງກຣາຟິກເປັນກອບໃນການຄິດແກ້ບັນຫາ
5. ຜູ້ສອນໃຫ້ຂໍ້ມູນຍ້ອນກັບແກ່ຜູ້ຮຽນ

**ສະຫລຸບແລ້ວຮູບແບບການຮຽນການສອນໂດຍໃຊ້ຜັງກຣາຟິກປະກອບດ້ວຍຂັ້ນຕອນສຳຄັນ 8 ຂັ້ນຕອນດັ່ງນີ້**

1. ການທົບທວນຄວາມຮູ້ເດີມ
2. ການຊີ້ແຈງຈຸດມຸ່ງໝາຍ ລັກສະນະຂອງບົດຮຽນ ແລະຜົນການຮຽນຮູ້ທີ່ຄາດຫວັງ
3. ການກະຕຸ້ນເຖິງຄວາມຮູ້ເດີມຂອງນັກຮຽນເພື່ອຕຽມສ້າງຄວາມສຳພັນກັບສິ່ງທີ່ຮຽນແລະການຈັດເນື້ອຫາສາລະດ້ວຍຜັງກຣາຟິກ
4. ການອະທິບາຍນຳສະເໜີແຜນຜັງສະແດງຂັ້ນຕອນການໃຊ້ຜັງກາຟິກຮູບແບບຕ່າງ ໆ ເຊັ່ນ ຮູບແບບ WEB ຫລືຜັງແມງມຸມ (A Spider Map) ມີ (1) ຂັ້ນສ້າງ (2) ຂັ້ນສະເໜີ (3) ຂັ້ນສັງເຄາະ/ວິເຄາະ (4) ຂັ້ນສະຫລຸບເພື່ອສະແຫວງຫາ
5. ຜູ້ຮຽນລາຍບຸກຄົນທຳຄວາມເຂົ້າໃຈເນື້ອຫາ
6. ຜູ້ຮຽນສະຫລຸບຄວາມຄິດຫລືຂໍ້ມູນສຳຄັນໃຫ້ເຊື່ອມໂຍງເປັນຜັງກາຟິກຮູບແບບຕ່າງ ໆ
7. ການນຳສະເໜີຜົນງານແລະການອະພິປາຍ
8. ການທຳຄວາມເຂົ້າໃຈໃຫ້ກະຈ່າງແຈ້ງແລະສະຫລຸບ

**1.2 ການໃຊ້ເທັກນິກຜັງກຣາຟິກ (Graphic Organizer)**

ທິດນາ ແຂມມະນີ (2551 : 388) ສະເໜີວ່າຜັງກຣາຟິກ ເປັນແຜນຜັງທາງຄວາມຄິດເຊິ່ງປະກອບໄປດ້ວຍຄວາມຄິດຫລືຂໍ້ມູນສຳຄັນ ທີ່ເຊື່ອມໂຍງກັນຢູ່ໃນຮູບແບບຕ່າງ ໆ ເຊິ່ງເຮັດໃຫ້ເຫັນໂຄງສ້າງຂອງຄວາມຮູ້ຫລືເນື້ອໃນນັ້ນ ໆ ການໃຊ້ຜັງກຣາຟິກເປັນເທັກນິກທີ່ຜູ້ຮຽນສາມາດນຳໄປໃຊ້ໃນການຮຽນຮູ້ເນື້ອຫາສາລະຕ່າງ ໆ ຈຳນວນຫລາຍ ເພື່ອຊ່ວຍໃຫ້ເກີດຄວາມເຂົ້າໃຈໃນເນື້ອຫາສາລະນັ້ນໄດ້ງ່າຍຂຶ້ນໄວຂຶ້ນແລະຈົດຈຳໄດ້ດົນ ໂດຍສະເພາະຢ່າງຍິ່ງຫາກເນື້ອຫາສາລະຫລືຂໍ້ມູນຕ່າງ ໆ ທີ່ຜູ້ຮຽນປະມວນມານັ້ນຢູ່ໃນລັກສະນະກະຈັດກະຈາຍ ຜັງກາຟິກເປັນເຄື່ອງມືທີ່ຊ່ວຍໃຫ້ຜູ້ຮຽນຈັດຂໍ້



CS CamScanner
CS CamScanner

ມູນເຫລົ່ານັ້ນໃຫ້ເປັນລະບຽບຢູ່ໃນຮູບແບບທີ່ອະທິບາຍໃຫ້ເຂົ້າໃຈ ແລະ ຈົດຈຳໄດ້ງ່າຍການໃຊ້ຜັງກາຟິກເປັນເຄື່ອງມືໃນການຮຽນຮູ້ມີພື້ນຖານມາຈາກທິດສະດີການຮຽນຮູ້ 4ປະການນຳກັນຄື

1.2.1 ການແຍກແຍະຂໍ້ມູນເພື່ອໃຫ້ເຫັນອົງຄ໌ປະກອບຫລັກທີ່ເຊື່ອມໂຍງກັນຢູ່ຢ່າງຊັດເຈນ ສາມາດຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ມະໂນທັດໄດ້ງ່າຍຂຶ້ນ

1.2.2 ຫາກສະໝອງມີການຈັດໂຄງສ້າງຄວາມຮູ້ໄວ້ຢ່າງເປັນລະບົບລະບຽບ ຈະຊ່ວຍຮຽກຄວາມຮູ້ເດີມທີ່ຢູ່ໃນໂຄງສ້າງທາງປັນຍາອອກມາໃຊ້ເຊື່ອມໂຍງກັບຄວາມຮູ້ໃໝ່ໄດ້ງ່າຍຂຶ້ນ

1.2.3 ຜັງກາຟິກທີ່ສະແດງໃຫ້ເຫັນເຖິງອົງຄ໌ປະກອບຫລັກຂອງເລື່ອງ ມີລັກສະນະປັນພາບຊຶ່ງງ່າຍຕໍ່ການທີ່ສະໝອງຈະຈົດຈຳຫລາຍກວ່າຂໍ້ຄວາມທີ່ຕິດຕໍ່ກັນຍືດຍາວ

1.2.4 ການໃຊ້ຜັງກາຟິກ ຊຶ່ງມີລັກສະນະເປັນທັງພາບແລະຂໍ້ຄວາມ ສາມາດຊ່ວຍໃຫ້ຜູ້ຮຽນໄດ້ຮຽນຮູ້ຢ່າງຕື່ນຕົວ (Active Learning) ເນື່ອງຈາກຜູ້ຮຽນຈະຕ້ອງມີທັງການຟັງ ເວົ້າ ອ່ານ ຂຽນ ຄິດ ຈຶ່ງຈະສາມາດສ້າງຜັງກຣາຟິກອອກມາໄດ້ ເປັນການຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ຢ່າງມີຄວາມໝາຍ

**ກິດຈະກຳ 1**

ຄຳຊີ້ແຈງ ໃຫ້ຂຽນຄຳຕອບໃສ່ຊ່ອງຂອງຕາລາງຕໍ່ໄປນີ້

| ຮູບແບບຜັງກາຟິກ | ຈຸດປະສົງ | ເນື້ອຫາທີ່ເໝາະສົມກັບຜັງກາຟິກ | ການນຳໄປໃຊ້ |
|---|---|---|---|
| ຜັງຄວາມຄິດ ( Mind Map) | | | |
| ຜັງມະໂນທັດ (Concept Map) | | | |
| ຜັງແມງມຸມ ( Spider Map) | | | |
| ຜັງກ້າງປາ (Fishbone Map) | | | |
| ຜັງລຳດັບຂັ້ນຕອນ (Sequential Map) | | | |
| ຜັງວົງຈອນ (Circleor Cyclical Map) | | | |
| ຜັງວົງກົມຊ້ອນ ຫລືເວັນໄດອະແກມ (Venn diagram) | | | |



CamScanner

CamScanner

# ບົດທີ4

# ວິທີສອນ

**1. ການສອນແມ່ນຫຍັງ ?**

ສຸມິດ ຄຸນະນຸກອນ ໄດ້ໃຫ້ຄວາມໝາຍຂອງການສອນວ່າ: ການສອນບໍ່ໄດ້ໝາຍເຖິງການໃຫ້ວິຊາຄວາມຮູ້ຫລື ເນື້ອໃນເທົ່ານັ້ນແຕ່ຍັງລວມເຖິງການຊ່ວຍໃຫ້ເດັກໄດ້ຄິດ ໂດຍການຖາມຄຳຖາມເດັກ, ການແນະນຳ ເພື່ອຊ່ວຍເດັກແກ້ບັນຫາການໃຫ້ຄວາມຊ່ວຍເຫລືອ ແກ່ເດັກດ້ານຕ່າງ ໆ

ໃຣມົນ ເຄີຍກ່າວໄວ້ວ່າ: ການສອນຄື ການທີ່ບຸກຄົນຜູ້ໜຶ່ງ (ຄູ) ນຳເອົາຄວາມຮູ້ສຶກນຶກຄິດ ແລະ ຊີວິດຂອງຕົນເອງມາເຜີຍແຜ່ໃຫ້ອີກບຸກຄົນໜຶ່ງ (ຜູ້ຮຽນ) ຮູ້ເພື່ອໃຫ້ຜູ້ຮຽນໄດ້ ພິຈາລະນາ ແລະ ຄັດເລືອກເອົາຄຸນສົມບັດ ທັດສະນະຄະຕິ ແລະຄ່ານິຍົມທີ່ຖືກໃຈມາຍຶດຖືເປັນຂອງຕົນເອງ ແລະ ປະຕິບັດຕາມ.

*****ດັ່ງນັ້ນ ອາດສະຫລຸບໄດ້ວ່າ: ການສອນຄື ການກະທຳຂອງຄູ ເພື່ອໃຫ້ນັກຮຽນເກີດຜົນຕາມຄວາມມຸ້ງ ໝາຍຂອງການສຶກສາທີ່ວາງໄວ້**

ວິທີການສອນ (Teaching Method) ຄື ຂັ້ນຕອນທີ່ຜູ້ສອນດຳເນີນການໃຫ້ຜູ້ຮຽນເກີດການຮຽນຮູ້ຕາມວັດຖຸປະສົງ ດ້ວຍວິທີການຕ່າງໆ ທີ່ແຕກຕ່າງກັນໄປຕາມອົງປະກອບ ແລະ ຂັ້ນຕອນສຳຄັນອັນເປັນລັກສະນະເດັ່ນຫລືລັກສະ ນະສະເພາະທີ່ຂາດບໍ່ໄດ້ຂອງວິທີນັ້ນ **(ທິດສະນາ ເຂມມະນີ, 2551: ໜ້າ3)**

**2. ວິທີສິດສອນ**

ແມ່ນວິທີການຕ່າງໆ ທີ່ນຳມາໃຊ້ໃນການສອນ ເພື່ອຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ ວິທີແຕ່ລະວິທີມີວັດຖຸປະສົງ ແລະ ລັກສະນະເດັ່ນເປັນເອກະລັກແຕກຕ່າງກັນ. ລັກສະນະເດັ່ນຂອງແຕ່ລະວິທີກໍ່ຄືລັກສະນະທີ່ຂາດບໍ່ໄດ້ຂອງວິທີນັ້ນ ຫາກຂາດໄປກໍ່ຈະເຮັດໃຫ້ບໍ່ໃຊ້ວິທີນັ້ນອີກຕໍ່ໄປເຊັ່ນ: ລັກສະນະສະເພາະຂອງວິທີສອນແບບສາທິດກໍ່ຄື ການສະແດງ/ການເຮັດໃຫ້ເບິ່ງ ຫາກບໍ່ມີການເຮັດໃຫ້ເບິ່ງ ກໍ່ຈະບໍ່ແມ່ນວິທີສອນແບບສາທິດ.

ດ້ວຍເຫດຜົນຕ່າງໆ ຜູ້ຂຽນຈຶ່ງໄດ້ວິເຄາະວິທີສອນຕ່າງໆເຊິ່ງເປັນວິທີ ທີ່ມີໂອກາດໃຊ້ຫຼາຍໃນການສອນເນື້ອໃນຕ່າງໆ ໃນຂອບເຂດດັ່ງນີ້:

**ກ. ຄວາມໝາຍຂອງວິທີສອນນັ້ນ.**

ຄຳນິຍາມເປັນຄວາມຄິດຂອງວິທີສອນນັ້ນເຊິ່ງປະກອບມີອົງປະກອບ ແລະ ຂັ້ນຕອນສຳຄັນອັນເປັນລັກສະນະເດັ່ນທີ່ຂາດບໍ່ໄດ້ຂອງວິທີນັ້ນ.

**ຂ. ວັດຖຸປະສົງຂອງວິທີສອນນັ້ນ.**

ວິທີສອນແຕ່ລະວິທີຈະມີລັກສະນະເດັ່ນທີ່ຊ່ວຍໃຫ້ການສອນບາງຈຸດ ຫຼື ບາງດ້ານບັນລຸຜົນໄດ້ດີເປັນພິເສດ ເມື່ອຜູ້ອ່ານສຶກສາຄວາມໝາຍຂອງວິທີສອນ ແລະ ຈຸດປະສົງຂອງວິທີສອນນັ້ນ



CS CamScanner

CS CamScanner

ແລ້ວ ຈະສາມາດຕັດສິນໃຈໃນເບື້ອງຕົ້ນໄດ້ວ່າວິທີນັ້ນເປັນວິທີທີ່ມີສ່ວນສອດຄ່ອງກັບຄວາມຕ້ອງການ ຫຼື ບໍ່.

**ຄ. ອົງປະກອບສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງວິທີສອນ**

ສ່ວນນີ້ເປັນການລະບຸໃຫ້ເຫັນຊັດເຈນວ່າສິ່ງສຳຄັນຊຶ່ງວິທີນັ້ນຈະຂາດບໍ່ໄດ້ມີຫຍັງແດ່ເປັນອົງປະກອບທີ່ຂອງວິທີນັ້ນ.

**ງ. ຂັ້ນຕອນສຳຄັນ (ທີ່ຂາດບໍ່ໄດ້) ຂອງການສອນ**

ເປັນການລະບຸໃຫ້ເຫັນຊັດເຈນວ່າຂັ້ນຕອນຫຼັກໆໃນການດຳເນີນການ ທີ່ຂາດບໍ່ໄດ້ຂອງວິທີນັ້ນມີຫຍັງແດ່ເປັນຂັ້ນຕອນທີ່ເປັນແກນຂອງວິທີນັ້ນ.

**ຈ. ເທັກນິກ ແລະ ຂໍ້ສະເໜີແນະຕ່າງໆໃນການໃຊ້ວິທີສອນນັ້ນໃຫ້ມີຄຸນນະພາບສູງ**

ສ່ວນນີ້ເປັນຂໍ້ມູນເສີມກ່ຽວກັບເທັກນິກ ແລະ ຂໍ້ສະເໜີແນະຕ່າງໆທີ່ຈະຊ່ວຍໃຫ້ວິທີແຕ່ລະວິທີໄດ້ຜົນສູງສຸດ  ເພາະລຳພັງພຽງມີອົງປະກອບສຳຄັນ ແລະ ດຳເນີນການຕາມຂັ້ນຕອນສຳຄັນທີ່ຂາດບໍ່ໄດ້ເທົ່ານັ້ນອາດບໍ່ໄດ້ຜົນສູງສຸດ ເພາະເປັນອົງປະກອບ ແລະ ຂັ້ນຕອນໃນລະດັບທີ່ຕ່ຳສຸດ ຫຼື ຈຳເປັນທີ່ສຸດຕໍ່ການທີ່ຈະເຮັດໃຫ້ວິທີນັ້ນເປັນວິທີການໃຊ້ເຕັກນິກເສີມ ຈະຊ່ວຍໃຫ້ໄດ້ຜົນເພີ່ມຂຶ້ນແຕ່ໃນຂະນະດຽວກັນ ຖ້າຫວັງໃຊ້ເທັກນິກເສີມໂດຍຂາດຂັ້ນຕອນ ຫຼື ອົງປະກອບທີ່ເປັນແກນສຳຄັນກໍ່ເທົ່າກັບວ່າບໍ່ໄດ້ໃຊ້ວິທີນັ້ນ ເພາະຂາດແກນສຳຄັນຂອງວິທີນັ້ນເຊິ່ງຈະມີຜົນເຮັດໃຫ້ການໃຊ້ວິທີນັ້ນບໍ່ເກີດຜົນສົມບູນຕາມວັດຖຸປະສົງຂອງວິທີນັ້ນ.

**ສ. ຂໍ້ດີ ແລະ ຂໍ້ເສຍຂອງວິທີນັ້ນ**

ສ່ວນນີ້ເປັນສ່ວນທີ່ວິເຄາະໃຫ້ເຫັນເປັນຂໍ້ດີ ຂໍ້ເສຍຂອງວິທີສອນນັ້ນໆເຊິ່ງຈະເປັນປະໂຫຍດແກ່ຜູ້ສອນໃນການຕັດສິນໃຈໃຊ້ວິທີສອນນັ້ນໆໃຫ້ເໝາະສົມກັບວັດຖຸປະສົງ ແລະ ສະຖານະການຂອງຕົນ.

**ນິຍາມວິທີສອນ**

- ວິທີການຕ່າງໆ ທີ່ນຳມາໃຊ້ໃນການສອນ ເພື່ອຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ ວິທີແຕ່ລະວິທີມີວັດຖຸປະສົງ ແລະ ລັກສະນະທີ່ເປັນເອກະລັກແຕກຕ່າງກັນ
- ລັກສະນະເດັ່ນຂອງແຕ່ລະວິທີກໍ່ຄືລັກສະນະທີ່ຂາດບໍ່ໄດ້ຂອງວິທີນັ້ນ ຫາກຂາດໄປກໍ່ຈະເຮັດໃຫ້ບໍ່ໃຊ້ວິທີນັ້ນອີກຕໍ່ໄປເຊັ່ນ: ລັກສະນະສະເພາະຂອງວິທີສອນແບບສາທິດກໍ່ຄືການສະແດງ/ການເຮັດໃຫ້ເບິ່ງ ຫາກບໍ່ມີການເຮັດໃຫ້ເບິ່ງ ກໍ່ຈະບໍ່ແມ່ນວິທີສອນແບບສາທິດ
- ວິທີແຕ່ລະວິທີ ມີຈຸດປະສົງສະເພາະຄື: ເປັນວິທີທີ່ຈະຊ່ວຍໃຫ້ເກີດຜົນສະເພາະບາງປະການຈາກການໃຊ້ວິທີນັ້ນເຊັ່ນ: ຈຸດປະສົງຂອງວິທີສອນແບບສາທິດ ກໍ່ຄືຊ່ວຍໃຫ້ນັກຮຽນໄດ້ປະຕິບັດຕົວຈິງ ເຮັດໃຫ້ຕາມພາບ ເຮັດໃຫ້ເຫັນພາບ ເຮັດໃຫ້ເກີດ ຄວາມເຂົ້າໃຈ ແລະ ຈຳເລື່ອງທີ່ເຫັນຈາກການສາທິດໄດ້ດີ.
- ການເລືອກໃຊ້ວິທີສອນຈຶ່ງຕ້ອງພິຈາລະນາວ່າ ວິທີນັ້ນມີຈຸດປະສົງ ຄືຈະຊ່ວຍໃຫ້ເກີດຜົນອັນໃດ ສອດຄ່ອງກັບຈຸດປະສົງໃນການສອນບົດຮຽນທີ່ຕ້ອງການຫຼືບໍ່.



CS CamScanner

CS CamScanner

ວິທີສອນແບບຕ່າງໆ

1. ບັນຍາຍ(Lecture)
2. ສາທິດ (Demonstration)
3. ທັດສະນະສຶກສາ(Field trip)
4. ສົນທະນາແບບກຸ່ມຍ່ອຍ (Small Group Discussion)
5. ລະຄອນ (Dramatization)
6. ບົດບາດສົມມຸດ (Role Playing)
7. ກໍລະນີຕົວຢ່າງ (Case)
8. ເກມ (Game)
9. ສ້າງສະຖານະການຈຳລອງ (Simulation)
10. ອີໄນ(Deduction)
11. ອຸປະໄນ(Induction)
12. ສູນການຮຽນ (Learning Center)
13. ບົດຮຽນແບບໂປຼແກມ (Programmed Instruction)
14. ແລະ ອື່ນໆ

ການສອນມີຫຼາຍວິທີທີ່ແຕກຕ່າງກັນໂດຍເຮັດໃຫ້ຜູ້ຮຽນໄດ້ຮັບຄວາມຮູ້ດ້ວຍສອງຮູບແບບຄືຄູເປັນ ໃຈກາງ ແລະ ນັກຮຽນເປັນໃຈກາງ.

**ກ. ການສອນແບບຄູເປັນໃຈກາງ**

ການສອນແບບຄູເປັນໃຈກາງປະກອບມີບັນລະຍາຍ, ສາທິດ ແລະ ທົບທວນ

1. **ວິທີສອນໂດຍໃຊ້ການບັນຍາຍ ( Lecture)**

ເປັນວິທີການສອນທີ່ອາໄສຄວາມສາມາດຂອງຜູ້ສອນໃນການຮຽນຮຽງເນື້ອໃນບົດຮຽນ ແລະ ການໃຊ້ເທັກນິກໃນການຖ່າຍທອດເນື້ອຫາສາລະເພື່ອໃຫ້ມີຄວາມສົນໃຈ.

**1.1ຄວາມໝາຍຂອງວິທີການບັນຍາຍ**

ວິທີການສອນໂດຍໃຊ້ການບັນຍາຍແມ່ນຂະບວນການທີ່ຜູ້ໃຊ້ໆໃນການຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ດ້ານຈຸດປະສົງທີ່ກຳນົດໂດຍການເວົ້າ, ບອກ, ເລົ່າ ອະທິບາຍ ສິ່ງທີ່ຕ້ອງການສອນແກ່ຜູ້ຮຽນໃຫ້ຜູ້ຮຽນໄດ້ຖາມ ແລ້ວ ປະເມີນການຮຽນຮູ້ຂອງຜູ້ຮຽນດ້ວຍວິທີໃດໜຶ່ງ.

**1.2ຈຸດປະສົງຂອງວິທີສອນແບບບັນຍາຍ**

ວິທີສອນໂດຍໃຊ້ການບັນຍາຍ ເປັນວິທີການທີ່ຊ່ວຍໃຫ້ຜູ້ຮຽນຈຳນວນຫຼາຍໄດ້ຮຽນຮູ້ເນື້ອໃນບົດຮຽນພ້ອມໆກັນໄດ້ໃນເວລາທີ່ຈຳກັດ.

**1.3ອົງປະກອບທີ່ສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງວິທີສອນແບບບັນຍາຍ**

- ມີເນື້ອຫາສາລະ ຫຼື ເນື້ອໃນຄວາມຮູ້ ທີ່ຕ້ອງການໃຫ້ຜູ້ຮຽນໄດ້ຮຽນຮູ້
- ມີການບັນຍາຍ ( ເວົ້າ , ບອກ , ເລົ່າ , ອະທິບາຍ )
- ມີຜົນການຮຽນຂອງຜູ້ຮຽນທີ່ເກີດຈາກການບັນຍາຍ



CS CamScanner
CS CamScanner

**1.4 ຂັ້ນຕອນສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງການສອນ**

- ຜູ້ສອນກຽມເນື້ອໃນບົດຮຽນທີ່ຈະບັນຍາຍ
- ຜູ້ສອນບັນຍາຍ ( ເວົ້າ , ບອກ , ເລົ່າ , ອະທິບາຍ ) ເນື້ອໃນບົດຮຽນທີ່ຕ້ອງການໃຫ້ຜູ້ຮຽນໄດ້ຮຽນຮູ້
- ຜູ້ສອນເປີດໂອກາດໃຫ້ຜູ້ຮຽນຖາມ ແລະ ປະເມີນຜົນການຮຽນຂອງຜູ້ຮຽນ

**1.5 ເທັກນິກ ແລະ ຂໍ້ສະເໜີແນະຕ່າງໆໃນການໃຊ້ວິທີສອນໂດຍການໃຊ້ການບັນຍາຍໃຫ້ມີປະສິດທິພາບ**

**ກ. ການກຽມການບັນຍາຍ**

ການບັນຍາຍທີ່ດີຕ້ອງອາໄສການກະກຽມທີ່ດີ ຜູ້ສອນຈຳເປັນຕ້ອງສຶກສາເນື້ອໃນບົດຮຽນທີ່ຈະບັນຍາຍໃຫ້ຈະແຈ້ງຫາກເຫັນວ່າມີຈຸດໃດຈຸດໜຶ່ງທີ່ຕົນເອງຍັງບໍ່ທັນເຂົ້າໃຈ ຫຼື ມີຂໍ້ສົງໄສ ຄວນສຶກສາຄົ້ນຄວ້າໃຫ້ເຂົ້າໃຈກ່ອນ  ຈາກນັ້ນໃຫ້ຄັດເລືອກວ່າເນື້ອໃນບົດຮຽນໃດມີຄວາມຈຳເປັນ ຫຼື ມີປະໂຫຍດຕໍ່ຜູ້ຮຽນຂອງຕົນເອງຫຼາຍປານໃດເນື້ອໃນໃດບໍ່ຈຳເປັນອາດຈະຫັດອອກ ຕໍ່ໄປຄວນຈັດລຳດັບເນື້ອໃນບົດຮຽນວ່າສິ່ງໃດຄວນເວົ້າກ່ອນ, ເວົ້າຫຼັງ ແລະ ຈະເຊື່ອມໂຍງກັບແນວໃດໃນເນື້ອໃນບົດຮຽນແຕ່ລະສ່ວນ. ມີສ່ວນໃດທີ່ຍັງຂັດຂ້ອງ ຄວນຫາຕົວຢ່າງມາປະກອບໃສ່ ຫຼື ຄວນໃຊ້ສື່ໃດຊ່ວຍ ແລະ ຄວນຫາເທັກນິກໃນການນຳສະເໜີບົດຮຽນແຕ່ລະສ່ວນໃຫ້ໜ້າສົນໃຈ, ທ້າທາຍຄວາມຄິດ ແລະ ເຂົ້າໃຈໄດ້ງ່າຍ ເຊິ່ງອາດຈະເປັນການໃຊ້ຄຳຖາມທີ່ກະຕຸ້ນ ຫຼື ກ່ອນເລົ່າປະສົບການແບບໃໝ່ ຫຼື ນຳສະເໜີບັນຫາທີ່ທ້າທາຍຄວາມຄິດ. ກ່ອນການບັນຍາຍຜູ້ສອນຄວນມີໂຄງຮ່າງ (outline) ສຳລັບການບັນຍາຍ ແລະ ມີເອກະສານປະກອບບັນຍາຍໃຫ້ແກ່ຜູ້ຮຽນ.

**ຂ. ການບັນຍາຍ**

ເມື່ອເລີ່ມການບັນຍາຍຜູ້ບັນຍາຍຄວນເບິ່ງຄວາມສົນໃຈຂອງຜູ້ຮຽນ ແລະ ພະຍາຍາມຮັກສາຄວາມສົນໃຈນັ້ນໃຫ້ຄົງທີ່ຕະຫຼອດການບັນຍາຍ ດ້ວຍເທັກນິກຕ່າງໆເຊັ່ນ:

- ການໃຊ້ບັນຫາເປັນສິ່ງໃຫ້ນັກຮຽນເບິ່ງເຊັ່ນ: ໃຊ້ຂ່າວເຫດການສຳຄັນ ແລະ ກໍລະນີຕົວຢ່າງຕ່າງໆ.
- ການໃຊ້ການທົດລອງກ່ອນການຮຽນ ແລະ ຫຼັງຮຽນເພື່ອຊ່ວຍໃຫ້ຜູ້ຮຽນໄດ້ເຫັນຄວາມສາມາດຂອງໂຕເອງໃນເລື່ອງນັ້ນ
- ການໃຊ້ສື່ປະກອບເຊັ່ນ: ການໃຊ້ແຜ່ນໃສ, ຮູບພາບສະໄລ, ເທັບສຽງ, ວີດີໂອ, ສາທະຄະດີ ແລະ ຄອມພີວເຕີເປັນຕົ້ນ.
- ການໃຊ້ການຖາມປະກອບການບັນຍາຍ
- ການໃຊ້ກິດຈະກຳປະກອບການບັນຍາຍເຊັ່ນ: ການອະພິປາຍແບບກຸ່ມຍ່ອຍ, ການສາທິດ, ການສະແດງບົດບາດສົມມຸດ, ການຫຼິ້ນເກມ ແລະ ການທົດລອງປະຕິບັດເປັນຕົ້ນ.
- ການຍົກຕົວຢ່າງປະກອບການອະທິບາຍ
- ການໃຊ້ອາລົມຂັນ/ອາລົມສົນທະນີ



CamScanner
CamScanner

- ການເປີດໂອກາດໃຫ້ຜູ້ຟັງຖາມ ແລະ ສະແດງຄວາມຄິດເຫັນ

**ຄ. ການອະພິປາຍຖາມ ແລະ ການປະເມີນຜົນການຮຽນຮູ້ຂອງຜູ້ຮຽນ**

ກ່ອນຢຸດການບັນຍາຍຜູ້ບັນຍາຍຄວນສະຫຼຸບເນື້ອໃນສຳຄັນຂອງການບັນຍາຍ ແລະ ຄວນເປີດໂອກາດໃຫ້ຜູ້ຮຽນຖາມ ຫຼື ອະທິບາຍແລກປ່ຽນຄວາມຄິດເຫັນຕໍ່ຈາກນັ້ນຄວນມີການທົດສອບການຮຽນຂອງຜູ້ຮຽນໃນເລື່ອງທີ່ບັນຍາຍດ້ວຍວິທີການຕ່າງໆເຊັ່ນ: ການຖາມຜູ້ຮຽນ ຫຼື ການໃຫ້ເຮັດແບບທົດສອບເປັນຕົ້ນ.

### 1.6 ຂໍ້ດີ ແລະ ຂໍ້ຈຳກັດຂອງວິທີສອນໂດຍໃຊ້ການບັນຍາຍ

**ກ. ຂໍ້ດີ**

- ເປັນວິທີການທີ່ໃຊ້ເວລາໜ້ອຍເມື່ອທຽບກັບວິທີສອນແບບອື່ນໆ
- ເປັນວິທີສອນທີ່ໃຊ້ກັບຜູ້ຮຽນຈຳນວນຫຼາຍໄດ້
- ເປັນວິທີສອນທີ່ສະດວກບໍ່ຫຍຸ້ງຍາກ
- ເປັນວິທີສອນທີ່ຖ່າຍທອດເນື້ອບົດຮຽນໄດ້ຫຼາຍ

**ຂ. ຂໍ້ຈຳກັດ/ຂໍ້ເສຍ**

- ເປັນວິທີສອນທີ່ຜູ້ຮຽນມີບົດບາດນ້ອຍ ຈຶ່ງເຮັດໃຫ້ຜູ້ຮຽນຂາດຄວາມສົນໃຈໃນການບັນຍາຍ
- ເປັນວິທີສອນທີ່ອາໄສຄວາມສາມາດຂອງຜູ້ບັນຍາຍ ຖ້າຜູ້ບັນຍາຍບໍ່ມີສີລະປະໃນການບັນຍາຍທີ່ດຶງດູດໃຈຜູ້ຮຽນ ຜູ້ຮຽນອາດຂາດຄວາມສົນໃຈ ແລະ ຖ້າຜູ້ສອນຂາດການຮຽບຮຽງເນື້ອໃນບົດຮຽນຢ່າງເໝາະສົມ ຜູ້ຮຽນອາດເກີດຄວາມບໍ່ພໍໃຈ ແລະ ບໍ່ສາມາດຖາມໄດ້ ( ຖ້າຜູ້ບັນຍາຍບໍ່ເປີດໂອກາດ )
- ເປັນວິທີສອນທີ່ບໍ່ສາມາດຕອບສະໜອງຄວາມຕ້ອງການ ແລະ ຄວາມແຕກຕ່າງລະຫວ່າງບຸກຄົນໄດ້

## 2. ທີສອນໂດຍການສາທິດ (Demonstration)

ເປັນວິທີສອນທີ່ຊ່ວຍໃຫ້ຜູ້ຮຽນໄດ້ຮັບປະສົບການໂດຍຕົງເຫັນສິ່ງທີ່ຮຽນຮູ້ເປັນຮູບປະທຳເຮັດໃຫ້ເກີດຄວາມເຂົ້າໃຈ ແລະ ຈົດຈຳໃນເລື່ອງທີ່ສາທິດໄດ້ດີ ແລະ ດົນ

### 2.1. ຄວາມໝາຍ

ວິທີສອນໂດຍໃຊ້ການສາທິດຄື ຂະບວນການທີ່ຜູ້ສອນໃຊ້ໃນການຊ່ວຍໃຫ້ຜູ້ຮຽນເກີດການຮູ້ດ້ານວັດຖຸປະສົງທີ່ກຳນົດໂດຍການສະແດງ ຫລື ເຮັດສິ່ງທີ່ຕ້ອງການໃຫ້ຜູ້ຮຽນໄດ້ຮຽນຮູ້, ໃຫ້ຜູ້ຮຽນສັງເກດເບິ່ງ ແລ້ວໃຫ້ຜູ້ຮຽນຖາມ,ອະທິບາຍ ແລະ ສະຫຼຸບການຮຽນຮູ້ທີ່ໄດ້ຈາກການສັງເກດການສາທິດ

### 2.2. ຈຸດປະສົງ

ວິທີສອນໂດຍໃຊ້ການສາທິດເປັນວິທີການທີ່ຊ່ວຍໃຫ້ຜູ້ຮຽນໝົດຊຶ້ນໄດ້ເຫັນການປະຕິບັດຕົວຈິງດ້ວຍຕົນເອງ ເຮັດໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໃນເລື່ອງ ຫລື ປະກົດການນັ້ນຊັດ



CamScanner

CamScanner

ເຈນຂຶ້ນ.

**2.3. ອົງປະກອບສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງວິທີສອນ**

- ມີເລື່ອງ ຫຼື ສິ່ງທີ່ຈະສາທິດ
- ມີການສະແດງ, ການກະທຳໃຫ້ຜູ້ຮຽນສັງເກດເບິ່ງ
- ມີຜົນການຮຽນຂອງຜູ້ຮຽນຄື: ການອະທິບາຍ ແລະ ສະຫຼຸບການຮຽນທີ່ໄດ້ຈາກການສາທິດ

**2.4. ຂັ້ນຕອນສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງການສອນແບບສາທິດ**

- ຜູ້ສອນສະແດງການສາທິດ ແລະ ໃຫ້ຜູ້ຮຽນສັງເກດການສາທິດ
- ຜູ້ສອນ ແລະ ຜູ້ຮຽນອະທິບາຍ ແລະ ສະຫຼຸບການຮຽນຮູ້ທີ່ໄດ້ຈາກການສາທິດ

**2.5. ເທັກນິກຕ່າງໆໃນການໃຊ້ວິທີສອນໂດຍການສາທິດໃຫ້ມີປະສິດທິພາບ**

**1. ການກະກຽມ**

ຜູ້ສອນຈຳເປັນຕ້ອງມີການກະກຽມພ້ອມຄວນ ເພື່ອໃຫ້ການຮຽນຮູ້ເປັນໄປຢ່າງສະດວກ ແລະ ສະບາຍ ການກະກຽມທີ່ສຳຄັນຄື: ຜູ້ສອນຄວນມີການຊ້ອມການສາທິດກ່ອນ ເພື່ອຈະໄດ້ເຫັນບັນຫາ ແລະ ກຽມແກ້ໄຂ ຫຼື ປ້ອງກັນ ບັນຫາທີ່ຈະເກີດຂຶ້ນຕໍ່ໄປຈຶ່ງຈັດກຽມວັດຖຸປະກອບເຄື່ອງມື ແລະ ສະຖານທີ່ໆຈະໃຊ້ໃນການສາທິດ ແລະ ຈັດວາງໄວ້.

**2. ກ່ອນການສາທິດ**

ຜູ້ສອນຄວນໃຫ້ຄວາມຮູ້ກ່ຽວກັບເລື່ອງທີ່ສາທິດແກ່ຜູ້ຮຽນຢ່າງພຽງພໍ ທີ່ຈະໃຫ້ຜູ້ຮຽນເກີດມີຄວາມເຂົ້າໃຈໃນສິ່ງທີ່ສາທິດໄດ້ດີ ໂດຍອາດໃຊ້ວິທີການບັນຍາຍ ຫຼື ກຽມເອກະສານທີ່ໃຫ້ລາຍລະອຽດກ່ຽວກັບລຳດັບ ຂັ້ນຕອນ ໃຫ້ຜູ້ຮຽນ ຫຼື ໃຊ້ສື່ເຊັ່ນ: ວິດີໂອ ຫຼື ຜູ້ສອນອາດມອບໝາຍໃຫ້ຜູ້ຮຽນໄປສຶກສາເນື້ອຫາສາລະທີ່ຈະສາທິດມາກ່ອນລ່ວງໜ້າ ແລະ ຄວນໃຫ້ຄຳແນະນຳແກ່ຜູ້ຮຽນໃນການສັງເກດ ຫຼື ຈັດເຮັດແບບສັງເກດການສາທິດໃຫ້ຜູ້ຮຽນໃຊ້ໃນການສັງເກດ. ນອກຈາກນັ້ນຜູ້ສອນອາດໃຊ້ເທັກນິກການມອບໝາຍໃຫ້ນັກຮຽນລາຍບຸກຄົນສັງເກດເປັນພິເສດ ສະເພາະຈຸດສະເພາະປະເດັນ ເພື່ອຊ່ວຍໃຫ້ຜູ້ຮຽນຕັ້ງໃຈສັງເກດ ແລະ ມີສ່ວນຮ່ວມຢ່າງທົ່ວເຖິງ.

**3. ການສາທິດ**

ຜູ້ສອນອາດໃຊ້ວິທີການບັນຍາຍປະກອບການສາທິດ ການສາທິດຄວນດຳເນີນໄປໄດ້ຢ່າງມີລະດັບ ມີຂັ້ນຕອນ ໃຊ້ເວລາຢ່າງເໝາະສົມ ບໍ່ໄວເກີນໄປ ຕອນທີ່ສາທິດອາດໃຊ້ແຜ່ນພູມ, ກະດານດຳ ຫຼື ແຜ່ນໃສປະກອບ ແລະ ຄວນເປີດໂອກາດໃຫ້ຜູ້ຮຽນຖາມ ຫຼື ຖາມຜູ້ຮຽນເປັນໄລຍະເພື່ອກະຕຸ້ນຄວາມຄິດ ແລະຄວາມສົນໃຈຂອງຜູ້ຮຽນ ແລະໃນບາງກໍລະນີອາດໃຫ້ຜູ້ຮຽນບາງຄົນມາຊ່ວຍໃນການສາທິດນຳ. ເທັກນິກການສອນແບບສາທິດອີກເທັກນິກໜຶ່ງຄື: ການໃຊ້ການສາທິດແບບງຽບໆເພື່ອແທນການບັນຍາຍປະກອບການສາທິດ ແລະ ອາດມີການສາທິດຊ້ຳຄືນອີກ ຫາກຜູ້ຮຽນຍັງບໍ່ເກີດຄວາມເຂົ້າໃຈຊັດເຈນ. ນອກຈາກນັ້ນຜູ້ສອນອາດໃຫ້ຜູ້ຮຽນເປັນຝ່າຍສະແດງການສາທິດນຳກໍໄດ້, ໃນກໍລະນີທີ່ການສາທິດຫາກມີສິ່ງທີ່ອາດເປັນອັນຕະລາຍ ຜູ້ສອນຈະຕ້ອງສອນໃຫ້ຜູ້ຮຽນລະມັດລະວັງໃນເລື່ອງຄວາມປອດໄພ ແລະ ຄວນກຽມການປ້ອງກັນ ແລະ ແກ້ໄຂບັນຫາໄວ້ນຳ.



CamScanner

CamScanner

**4. ການອະພິປາຍສະຫຼຸບການຮຽນຮູ້**

ຫຼັງຈາກການສາທິດແລ້ວ ຜູ້ສອນອາດໃຫ້ການລາຍງານສິ່ງທີ່ໄດ້ສັງເກດເຫັນ ແລະ ແລກປ່ຽນກັນ ເປີດໂອກາດໃຫ້ຜູ້ຮຽນຊັກຖາມ ຜູ້ສອນຄວນກຽມຄຳຖາມໄວ້ກະຕຸ້ນເພື່ອໃຫ້ຜູ້ຮຽນໄດ້ຄິດ. ຜູ້ຮຽນອະພິປາຍ, ແລກປ່ຽນຄວາມຮູ້, ຄວາມຄິດ. ແຕ່ລະຄົນໄດ້ຮັບຄວາມຮູ້ຈາກການສາທິດຂອງຜູ້ສອນ ແລະ ຮ່ວມກັນສະຫຼຸບຜົນການຮຽນທີ່ໄດ້.

**2.6 ຂໍ້ດີ ແລະ ຂໍ້ຈຳກັດຂອງວິທີສອນໂດຍໃຊ້ການສາທິດ**

**ຂໍ້ດີ**

- ເປັນວິທີສອນທີ່ໃຫ້ຜູ້ຮຽນໄດ້ຮັບປະສົບການໂດຍກົງ, ສາມາດເຫັນສິ່ງທີ່ຮຽນ ຢ່າງເປັນຮູບປະທຳໃຫ້ເກີດຄວາມເຂົ້າໃຈ ແລະ ຈົດຈຳໃນເລື່ອງທີ່ໄດ້ສາທິດດີ ແລະ ດົນ.
- ເປັນວິທີສອນທີ່ຊ່ວຍປະຢັດເວລາ, ອຸປະກອນ ແລະ ຄ່າໃຊ້ຈ່າຍຫາກໃຊ້ທົດແທນການທົດລອງ
- ເປັນວິທີທີ່ສາມາດສອນຜູ້ຮຽນໄດ້ຈຳນວນຫຼາຍ

**ຂໍ້ຈຳກັດ/ຂໍ້ເສຍ**

- ເປັນວິທີທີ່ຜູ້ຮຽນອາດບໍ່ສັງເກດເຫັນການສາທິດຢ່າງຊັດເຈນ ແລະ ທົ່ວເຖິງ ຫາກເປັນກຸ່ມໃຫຍ່
- ເປັນວິທີທີ່ຜູ້ສອນເປັນຜູ້ສາທິດ ຈຶ່ງອາດບໍ່ເຫັນພຶດຕິກຳຂອງນັກຮຽນ
- ເປັນວິທີທີ່ຜູ້ຮຽນອາດມີສ່ວນຮ່ວມບໍ່ທົ່ວເຖິງ ແລະ ຫຼາຍພໍ
- ເປັນວິທີທີ່ຜູ້ຮຽນບໍ່ໄດ້ລົງມືເຮັດເອງ ຈຶ່ງອາດບໍ່ເກີດຄວາມຮູ້ທີ່ເລິກເຊິ່ງພຽງພໍ

**ຂ. ການສອນແບບນັກຮຽນເປັນໃຈກາງ**

ການສອນແບບນັກຮຽນເປັນໃຈກາງປະກອບມີຫຼາຍວິທີຄື: ທົດລອງ, ໂຄງການ, ສູນການຮຽນ, ສືບສວນ-ສອບສວນ, ແບ່ງກຸ່ມ, ອະພິປາຍ, ວິເຄາະບັນຫາ, ສັງເຄາະບັນຫາ, ສະແດງບົດບາດ ແລະ ແບບປຽບທຽບ ແລະອື່ນ ແຕ່ຈະຍົກໃຫ້ເຫັນລາຍລະອຽດບາງວິທີສອນຂໍ້ລຸ່ມນີ້.

**3. ວິທີສອນໂດຍໃຊ້ການທົດລອງ (Experiment)**

"ເປັນວິທີທີ່ຜູ້ຮຽນໄດ້ຮັບປະສົບການໂດຍກົງ ໂດຍໄດ້ຜ່ານຂະບວນການຕ່າງໆໄດ້ພິສູດທົດສອບ ແລະ ເຫັນຜົນປະກົດດ້ວຍຕົນເອງ ຈຶ່ງເກີດການຮຽນຮູ້ໄດ້ດີ, ມີຄວາມເຂົ້າໃຈ ແລະ ຈື່ຈຳການຮຽນຮູ້ນັ້ນໄດ້ດົນນານ"

**3.1. ຄວາມໝາຍ:**

ວິທີສອນໂດຍໃຊ້ການທົດລອງຄື: ຂະບວນການທີ່ຜູ້ສອນໃຊ້ໃນການຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ຕາມຈຸດປະສົງທີ່ກຳນົດ ໂດຍການໃຫ້ຜູ້ຮຽນເປັນຜູ້ກຳນົດບັນຫາ ແລະ ສົມມຸດຖານໃນການທົດລອງ ແລະ ລົງມືທົດລອງເຊິ່ງປະຕິບັດຕາມຂັ້ນຕອນທີ່ກຳນົດໂດຍໃຊ້ວັດຖຸອຸປະກອນທີ່ຈຳເປັນ, ແລ້ວເກັບລວບລວມຂໍ້ມູນ, ວິເຄາະຂໍ້ມູນ, ສະຫຼຸບອະທິບາຍຜົນການທົດລອງ ແລະ ສະຫຼຸບການຮຽນຮູ້ທີ່ໄດ້ຮັບຈາກການທົດລອງ.



CamScanner

CamScanner

**3.2. จุดປະສົງ**

ວິທີສອນໂດຍໃຊ້ການທົດລອງເປັນວິທີການທີ່ຊ່ວຍໃຫ້ຜູ້ຮຽນ ຮຽນແບບລາຍງານເປັນບຸກຄົນ ຫຼື ລາຍງານເປັນກຸ່ມເກີດການຮຽນຮູ້ໂດຍການເຫັນຜົນປະກົດຈະແຈ້ງຈາກຄວາມຄິດ ແລະ ການປະຕິບັດຂອງຕົນເອງນີ້ເຮັດໃຫ້ການຮຽນຮູ້ນັ້ນຖືກກັບຄວາມເປັນຈິງ ມີຄວາມໝາຍສຳລັບຜູ້ຮຽນ ແລະ ຈື່ຈຳໄດ້ດົນນານ.

**3.3. ອົງປະກອບ (ທີ່ຂາດບໍ່ໄດ້) ຂອງວິທີສອນ**

- ມີການຕັ້ງບັນຫາ ແລະ ສົມມຸດຖານໃນການທົດລອງ
- ມີວັດຖຸອຸປະກອນສຳລັບການທົດລອງ
- ມີການທົດລອງ

**3.4. ຂັ້ນຕອນສຳຄັນ (ທີ່ຂາດບໍ່ໄດ້) ຂອງການສອນ**

- ຜູ້ສອນ / ຜູ້ຮຽນກຳນົດບັນຫາ ແລະ ສົມມຸດຖານໃນການທົດລອງ
- ຜູ້ສອນໃຫ້ຄວາມຮູ້ທີ່ຈຳເປັນຕໍ່ການທົດລອງໃຫ້ຂັ້ນຕອນ ແລະ ລາຍລະອຽດໃນການທົດລອງແກ່ຜູ້ຮຽນໂດຍໃຊ້ວິທີການຕ່າງໆຕາມຄວາມເໝາະສົມ.
- ຜູ້ຮຽນລົງມືທົດລອງໂດຍໃຊ້ວັດຖຸອຸປະກອນທີ່ຈຳເປັນຕາມຂັ້ນຕອນທີ່ກຳນົດ ແລະ ບັນທຶກຂໍ້ມູນການທົດລອງ.
- ຜູ້ຮຽນວິເຄາະ ແລະ ສະຫຼຸບຜົນການທົດລອງ
- ຜູ້ສອນ ແລະ ຜູ້ຮຽນອະທິບາຍຜົນການທົດລອງ ແລະ ສະຫຼຸບການຮຽນຮູ້

**3.5. ເທັກນິກ ແລະ ຂໍ້ສະເໜີແນະຕ່າງໆໃນການໃຊ້ວິທີສອນການທົດລອງໃຫ້ມີປະສິດທິພາບ**

**1. ການກະກຽມ**

ຜູ້ສອນຈະຕ້ອງກຳນົດຈຸດມຸ່ງໝາຍ ແລະ ກຳນົດບັນຫາທີ່ຈະໃຊ້ໃນການທົດລອງ ແລະ ຂະບວນການ ຫຼື ຂັ້ນຕອນໃນການດຳເນີນການທົດລອງໃຫ້ຊັດເຈນ ລວມທັງຈັດກຽມວັດຖຸອຸປະກອນທີ່ຈະໃຊ້ໃນການທົດລອງໃຫ້ພ້ອມ ແລະ ລອງເຮັດການທົດລອງດ້ວຍຕົນເອງເພື່ອຈະໄດ້ຮຽນຮູ້ປະເດັນບັນຫາຂໍ້ຂັດຂ້ອງ ຫຼື ອຸປະສັກຕ່າງໆເຊິ່ງອາດນຳມາໃຊ້ໃນການປັບປຸງຂັ້ນຕອນການດຳເນີນການ ແລະ ລາຍລະອຽດຕ່າງໆໃຫ້ຮັດກຸມຂຶ້ນ, ຜູ້ສອນອາດຈຳເປັນຕ້ອງສ້າງເອກະສານຄູ່ມືການທົດອງໃຫ້ຜູ້ຮຽນ ແລະ ຄວນຈັດປະເດັນຄຳຖາມທີ່ຈະໃຫ້ຜູ້ຮຽນຫາຄຳຕອບ ຫຼື ແນວທາງທີ່ຈະໃຫ້ຜູ້ຮຽນສັງເກດການທົດລອງ. ນອກຈາກນັ້ນໃນບາງກໍລະນີການທົດລອງຕ້ອງອາໄສຄວາມຮູ້ພື້ນຖານທີ່ຈຳເປັນ ເຊິ່ງຖ້າຫາກຜູ້ຮຽນຂາດຄວາມຮູ້ດັ່ງກ່າວ ຈະບໍ່ສາມາດເຮັດການທົດລອງໄດ້ເຊິ່ງຄວນມີການກວດສອບຄວາມຮູ້ຂອງຜູ້ຮຽນກ່ອນໃຫ້ເຮັດການທົດລອງໂດຍຜູ້ສອນຈະຕ້ອງຈັດກຽມແບບທົດລອງໄວ້ອີກສຳລັບການທົດລອງທີ່ມີອັນຕະລາຍເຊັ່ນ: ການທົດລອງທາງເຄມີ ຜູ້ສອນຈະຕ້ອງກວດສອບຄວາມປອດໄພລວມທັງຕຽມການສະເພາະທາງດ້ານການປ້ອງກັນ ແລະ ແກ້ໄຂບັນຫາທີ່ອາດຈະເກີດຂຶ້ນອີກ.

**2. ການນຳສະເໜີເລື່ອງ/ຕົວບັນຫາທີ່ຈະໃຊ້ໃນການທົດລອງ**

ຜູ້ສອນອາດເປັນຜູ້ນຳສະເໜີບັນຫາທີ່ຈະໃຊ້ໃນການທົດລອງ ແຕ່ຖ້າເຮັດໃຫ້ຜູ້ຮຽນມີຄວາມຮູ້ສຶກວ່າບັນຫາມາຈາກຕົວຜູ້ຮຽນເອງໄດ້ກໍ່ຈະຍິ່ງດີ ຈະເຮັດໃຫ້ການຮຽນຮູ້ ຫຼື ການທົດລອງນັ້ນມີຄວາມໝາຍສຳລັບຜູ້ຮຽນຫຼາຍຂຶ້ນ.

**3. ການໃຫ້ຄວາມຮູ້/ຂັ້ນຕອນ/ລາຍລະອຽດໃນການທົດລອງ**



CamScanner
CamScanner

ຜູ້ສອນອາດເປັນຜູ້ກຳນົດຂັ້ນຕອນ ແລະ ລາຍລະອຽດໃນການທົດລອງ ຫຼື ອາດໃຫ້ຜູ້ຮຽນຮ່ວມກັນວາງແຜນ ແລະ ກຳນົດຂັ້ນຕອນໃນການດຳເນີນການທົດລອງກໍ່ໄດ້ ແລ້ວແຕ່ຄວາມເໝາະສົມກັບຖານະແຕ່ໃນການໃຫ້ຜູ້ຮຽນຮ່ວມກັນດຳເນີນການນັ້ນຈະຊ່ວຍໃຫ້ຜູ້ຮຽນພັດທະນາທັກສະຕ່າງໆໄດ້ເພີ່ມຂຶ້ນອີກ ແລະ ຜູ້ຮຽນຈະກະຕືລືລົ້ນຫຼາຍຂຶ້ນເພາະເປັນຜູ້ຄິດເອງ ແຕ່ເຖິງຢ່າງໃດກໍ່ຕາມຄູຈຳເປັນຕ້ອງຊ່ວຍດູແລໃຫ້ຄຳປຶກສາ ແລະ ໃຫ້ຄວາມຊ່ວຍເຫຼືອຢ່າງໃກ້ຊິດ.

**4. ການທົດລອງ**

ການທົດລອງເຮັດໄດ້ຫຼາຍແບບຜູ້ສອນອາດໃຫ້ຜູ້ຮຽນລົງມືຕາມຂັ້ນຕອນທີ່ໄດ້ກຳນົດໄວ້ທັງໝົດໂດຍຄູເຮັດໜ້າທີ່ສັງເກດ ແລະ ໃຫ້ຄຳແນະນຳ ຫຼື ປ້ອນ ຂໍ້ມູນໃຫ້ແກ່ຜູ້ຮຽນ ຫຼື ຜູ້ສອນອາດລົງມືເຮັດການທົດລອງເອງໃຫ້ຜູ້ຮຽນສັງເກດ ແລະ ເຮັດການທົດລອງຕາມໄປເທື່ອລະຂັ້ນ ຫຼື ຜູ້ສອນອາດລົງມືເຮັດການທົດລອງໃຫ້ຜູ້ຮຽນເບິ່ງຈົບຈົບຂະບວນການ ແລ້ວໃຫ້ຜູ້ຮຽນໄປເຮັດການທົດລອງດ້ວຍຕົນເອງ ຜູ້ສອນຈະໃຊ້ເຕັກນິກໃດນັ້ນຂຶ້ນກັບຄວາມເໝາະສົມຂອງລັກສະນະການທົດລອງເທື່ອນັ້ນ  ຜູ້ສອນຄວນເຝິກຝົນທັກສະດັ່ງກ່າວໃຫ້ຜູ້ຮຽນກ່ອນ ໃຫ້ຜູ້ຮຽນເຮັດການທົດລອງ ຫຼື ບໍ່ຕ້ອງເຝິກໄປພ້ອມໆກັນ ທັກສະຂະບວນການທາງວິທະຍາສາດດັ່ງກ່າວມີ 13 ທັກສະດັ່ງນີ້:

1) ທັກສະການສັງເກດ
2) ທັກສະການລົງຄວາມເຫັນຈາກຂໍ້ມູນ
3) ທັກສະການຈຳແນກປະເພດ
4) ທັກສະການວັດແທກ
5) ທັກສະການໃຊ້ຕົວເລກ
6) ທັກສະການສື່ຄວາມໝາຍ
7) ທັກສະທາງຊັບພະຍາກອນ
8) ທັກສະການຫາຄວາມສຳພັນລະຫວ່າງກາງຫາວ (Space)ກັບເວລາ
9) ທັກສະການກຳນົດ ແລະ ຄວບຄຸມຕົວແປ
10)ທັກສະການຕັ້ງສົມມຸດຖານ
11)ທັກສະການກຳນົດນິຍາມເຊີງປະຕິບັດຕາມຕົວແປ
12)ທັກສະການທົດລອງ
13)ທັກສະການຕີຄວາມໝາຍຂໍ້ມູນ ແລະ ການລົງຂໍ້ສະຫຼຸບ

ຜູ້ສອນຈະສອນດ້ວຍວິທີນີ້ໃຫ້ໄດ້ຜົນດີຈຳເປັນຕ້ອງມີຄວາມຮູ້, ຄວາມເຂົ້າໃຈ ແລະ ທັກສະ 13 ປະການດັ່ງກ່າວຈຶ່ງຈະສາມາດເຝິກຝົນຜູ້ຮຽນຕາມບັນຫາ ແລະ ຄວາມຕ້ອງການຂອງຜູ້ຮຽນໄດ້.

**5. ການລວບລວມຂໍ້ມູນ**

ຜູ້ສອນຄວນໃຫ້ຄຳແນະນຳແກ່ຜູ້ຮຽນໃນການສັງເກດການທົດລອງ, ບັນທຶກຂໍ້ມູນການທົດລອງ ແລະ ເກັບລວບລວມຂໍ້ມູນຢ່າງເປັນລະບົບ ລວມທັງໃຫ້ເອົາໃຈໃສ່ໃນຂະບວນການທົດລອງ ແລະ ຂະບວນການເຮັດວຽກຮ່ວມກັນຂອງນັກຮຽນອີກດ້ວຍ.

**6. ການວິເຄາະສະຫຼຸບຜົນການທົດລອງ ແລະ ສະຫຼຸບຜົນການຮຽນ**

ຜູ້ສອນຄວນໃຫ້ຄຳແນະນຳແກ່ຜູ້ຮຽນກ່ຽວກັບວິທີການວິເຄາະຂໍ້ມູນ ແລະ ສະຫຼຸບຜົນເຊິ່ງຈະຊ່ວຍໃຫ້ຜູ້ຮຽນໄດ້ພັດທະນາຂະບວນການຄິດ ແລະ ທັກສະຂະບວນການທາງວິທະຍາສາດ ເຊິ່ງ



CamScanner
CamScanner

ສາມາດນຳໄປໃຊ້ປະໂຫຍດໃນເລື່ອງອື່ນໆໄດ້ອີກຫຼາຍ. ນອກຈາກນັ້ນຜູ້ສອນຄວນໃຫ້ຜູ້ຮຽນວິເຄາະອະທິບາຍກ່ຽວກັບຂະບວນການໃນການສະແຫວງຫາຄວາມຮູ້, ຂະບວນການເຮັດວຽກ ແລະ ຂະບວນການອື່ນໆ ແລະ ສະຫຼຸບການຮຽນຮູ້ຮ່ວມກັນອີກດ້ວຍ.

**3.6 ຂໍ້ດີ ແລະ ຂໍ້ຈຳກັດຂອງວິທີສອນໂດຍໃຊ້ການທົດລອງ**

**ຂໍ້ດີ:**

- ເປັນວິທີການທີ່ຜູ້ຮຽນໄດ້ຮັບປະສົບການໂດຍກົງ ໄດ້ຜ່ານຂະບວນການຕ່າງໆ ໄດ້ພິສູດ ທົດສອບ ແລະ ເຫັນຜົນປະກົດດ້ວຍຕົນເອງ ຈຶ່ງເກີດການຮຽນຮູ້ໄດ້ດີ ມີຄວາມເຂົ້າໃຈ ແລະ ຈື່ຈຳການຮຽນຮູ້ນັ້ນໄດ້ດົນນານ.
- ເປັນວິທີສອນທີ່ຜູ້ຮຽນມີໂອກາດໄດ້ຮຽນຮູ້ ແລະ ພັດທະນາທັກສະຂະບວນການຕ່າງໆຈຳນວນຫຼາຍເຊັ່ນ: ທັກສະຂະບວນການທາງວິທະຍາສາດ, ທັກສະຂະບວນການສະແຫວງຫາຄວາມຮູ້, ທັກສະຂະບວນການຄິດ ແລະ ທັກສະຂະບວນການກຸ່ມ ລວມທັງໄດ້ພັດທະນາລັກສະນະນິໄສການໃຝ່ຮູ້.
- ເປັນວິທີສອນທີ່ຜູ້ຮຽນຮູ້ມີສ່ວນຮ່ວມໃນກິດຈະກຳຫຼາຍ ຈະຊ່ວຍໃຫ້ເກີດຄວາມກະຕືລືລົ້ນໃນການຮຽນຮູ້.

**ຂໍ້ຈຳກັດ:**

- ເປັນວິທີສອນທີ່ມີຄ່າໃຊ້ຈ່າຍສູງ ເນື່ອງຈາກຕ້ອງມີອຸປະກອນ ວັດຖຸ ສຳລັບຜູ້ຮຽນຈຳນວນຫຼາຍ ຫຼື ໃນກໍລະນີທີ່ຕ້ອງອອກໄປເກັບຂໍ້ມູນນອກສະຖານທີ່ ກໍ່ຕ້ອງມີຄ່າໃຊ້ຈ່າຍ ຄ່າພາຫະນະ ແລະ ວັດຖຸຕ່າງໆອີກດ້ວຍ.
- ເປັນວິທີສອນທີ່ໃຊ້ເວລາຫຼາຍເນື່ອງຈາກການດຳເນີນການແຕ່ລະຂັ້ນຕອນຕ້ອງໃຊ້ເວລາ
- ເປັນວິທີສອນທີ່ຜູ້ສອນຕ້ອງມີຄວາມຮູ້, ຄວາມເຂົ້າໃຈ ແລະ ມີທັກສະຂະບວນການທາງວິທະຍາສາດ ຈຶ່ງຈະສາມາດສອນ ແລະ ເຝິກຝົນໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ດີ.

**4. ວິທີສອນໂດຍໃຊ້ການໄປທັດສະນະສຶກສາ ( Field Trip )**

ວິທີການທີ່ຊ່ວຍໃຫ້ຜູ້ຮຽນໄດ້ຮັບປະສົບການຕົວຈິງໃນເລື່ອງທີ່ຮຽນໄດ້ ຮຽນຮູ້ພາບຄວາມເປັນຈິງໄດ້ ໃຊ້ແຫຼ່ງຊຸມຊົນໃຫ້ໄດ້ປະໂຫຍດຕໍ່ການຮຽນຮູ້.

**4.1ຄວາມໝາຍ**

ວິທີສອນໂດຍໃຊ້ການໄປທັດສະນະສຶກສາຄືຂະບວນການທີ່ຜູ້ສອນໃຊ້ໃນການຊ່ວຍໃຫ້ຜູ້ຮຽນເກີດມີຄວາມຢາກຮຽນຮູ້ຕາມຈຸດປະສົງທີ່ກຳນົດ ໂດຍຜູ້ສອນແລະຜູ້ຮຽນພາກັນວາງແຜນແລະດຳເນີນການໄປສຶກສາ,ຮຽນຮູ້ຕາມສະຖານທີ່ ທີ່ມີຄວາມຮູ້ໃນເລື່ອງນັ້ນ ( ເຊິ່ງຢູ່ນອກສະຖານທີ່ ທີ່ຮຽນຢູ່ປົກກະຕິ ) ໂດຍມີການສຶກສາສິ່ງຕ່າງໆໃນສະຖານທີ່ນັ້ນ.ຕາມຂະບວນການຫຼືວິທີການທີ່ໄດ້ວາງແຜນໄວ້ແລະມີການອະທິບາຍ,ສະຫຼຸບການຮຽນຮູ້ຈາກຂໍ້ມູນທີ່ໄດ້ສຶກສາມາ.

**4.2 ຈຸດປະສົງ**

ວິທີສອນໂດຍໃຊ້ການໄປທັດສະນະສຶກສາເປັນວິທີການທີ່ຊ່ວຍໃຫ້ຜູ້ຮຽນໄດ້ມີປະສົບການກົງໃນເລື່ອງທີ່ຈະຮຽນ.ຮຽນຮູ້ສະພາບຄວາມເປັນຈິງ,ໄດ້ໃຊ້ບ່ອນຊຸມຊົນໃຫ້ເປັນປະໂຫຍດຕໍ່ການຮຽນຮູ້.



CamScanner

CamScanner

**4.3 ອົງປະກອບສຳຄັນ ( ທີ່ຂາດບໍ່ໄດ ) ຂອງວິທີສອນ.**

- ມີການວາງແຜນຮ່ວມກັນລະຫວ່າງຜູ້ສອນ ແລະ ຜູ້ຮຽນໃນເລື່ອງຈຸດປະສົງ, ສະຖານທີ່ການເດີນທາງ,ເລື່ອງທີ່ຈະສຶກສາ, ວິທີສຶກສາ, ຄ່າໃຊ້ຈ່າຍ, ກຳນົດການເດີນທາງ ແລະ ໜ້າທີ່ຮັບຜິດຊອບ.
- ມີການເດີນທາງອອກໄປຕາມສະຖານທີ່ເປົ້າໝາຍ ເຊິ່ງຢູ່ນອກໂຮງຮຽນ ຫຼື ນອກສະຖານທີ່ທີ່ຮຽນຢູ່ເປັນ ປົກະຕິ.
- ມີຂະບວນການໃນການສຶກສາສິ່ງທີ່ຕ້ອງການຮຽນຮູ້ໃນສະຖານທີ່ນັ້ນ.
- ມີການສະຫຼຸບຜົນການຮຽນຮູ້ ທີ່ຜູ້ຮຽນໄດ້ຈາກການໄປທັດສະນະສຶກສາ.

**4.4 ຂັ້ນຕອນສຳຄັນ ( ທີ່ຂາດບໍ່ໄດ້ )ຂອງການສອນ.**

- ຜູ້ສອນແລະຜູ້ຮຽນໄດ້ມີການາງແຜນຮ່ວມກັນໃນເລື່ອງ,ຈຸດປະສົງ,ສະຖານທີ່ທີ່ຈະໄປ,ການເດີນທາງ,ສິ່ງທີ່ຈະໄປສຶກສາ,ວິທີສຶກສາ,ຄ່າໃຊ້ຈ່າຍ,ກຳນົດການເດີນທາງແລະໜ້າທີ່ຮັບຜິດຊອບ.
- ຜູ້ສອນແລະຜູ້ຮຽນເດີນທາງໄປຕາມສະຖານທີ່ແລະເປົ້າໝາຍ
- ຜູ້ຮຽນສຶກສາສິ່ງຕ່າງໆໃນສະຖານທີ່ນັ້ນຕາມຂະບວນການຫຼືວິການສຶກສາໄດ້ວາງແຜນໄວ້.
- ຜູ້ສນແລະຜູ້ຮຽນເດີນທາງເມື່ອສະຫຼຸບຜົນການຮຽນຮູ້ແລະຜູ້ສອນຫຼືຜູ້ຮຽນສະຫຼຸບຜົນການຮຽນແລະເດີນທາງເມືອ.

**4.5.ເທັກນິກ ແລະ ຂໍ້ສະເໜີຕ່າງໆໃນການໃຊ້ວິທີສອນໂດຍໃຊ້ການໄປທັດສະນະສຶກສາໃຫ້ມີຄຸນະພາບຫຼືປະສິດທິພາບ**

**4. 5.1 ການວາງແຜນ.**

ຜູ້ສອນແລະຜູ້ຮຽນຄວນມີການວາງແຜນຮ່ວມກັນກ່ອນມີການເດີນທາງໄປທັດສະນະສຶກສາ.ສິ່ງທີ່ຜູ້ສອນຕ້ອງທຳຄວາມເຂົ້າໃຈກັບຜູ້ຮຽນໃຫ້ຊັດເຈນຄື:ຈຸດປະສົງຂອງການໄປທັດສະນະສຶກສາ ເຊິ່ງຫາກຈຸດປະສົງຊັດເຈນແລ້ວຜູ້ຮຽນອາດຈະມີສ່ວນໃນການເລືອກສະຖານທີ່ທີ່ຈະໄປ ( ໃນກໍລະນີຜູ້ສອນບໍ່ເຈາະຈົງສະຖານທີ່ ) ເມື່ອມີການກຳນົດສະຖານທີ່ແນ່ນອນແລ້ວຈະເປັນການທີ່ດີຫຼາຍຫາກຜູ້ສອນຫຼືຜູ້ຮຽນບາງຄົນມີໂອກາດໄປສຳຫຼວດສະຖານທີ່ນັ້ນກ່ອນຈະຊ່ວຍໃຫ້ໄດ້ຂໍ້ມູນທີ່ດີໃນການວາງແຜນຂັ້ນຕໍ່ໄປແລະຊ່ວຍໃຫ້ບໍ່ມີບັນຫາເມື່ອມີການເດີນທາງຕົວຈິງ ຫຼັງຈາກໄດ້ສະຖານທີ່ແລະໄດ້ຂໍ້ມູນແລ້ວຜູ້ສອນແລະຜູ້ຮຽນຈຶ່ງວາງແຜນໃຫ້ລະອຽດຕໍ່ໄປເລື່ອງສຳຄັນທີ່ຈຳເປັນຕ້ອງຕົກລົງກັນໃຫ້ຊັດເຈນມີຫຼາຍປະການໄດ້ແກ່:

- **ການເດີນທາງຈະຕ້ອງໃຊ້ພາຫະນະຫຍັງ ໄປແນວໃດ.**
- **ເລື່ອງທີ່ຈະສຶກສາມີຫຍັງແນ່**
- **ວິທີການທີ່ຈະສຶກສາໃຊ້ວິທີການແບບໃດ** ເຊັ່ນ: ໃຊ້ການສັງເກດ,ຈົດບັນທຶກ,ອັດເທັບ,ຖ່າຍວີດີໂອສະສົມພາບ ເຂົ້າຮ່ວມກິດຈະກຳລົງມືປະຕິບັດ,ທົດລອງແລະອື່ນໆ.ເຊິ່ງຖ້າໃຊ້ວິທີການດັ່ງກ່າວຈຳເປັນຕ້ອງໃຊ້ເຄື່ອງມືຫຼືວັດຖຸອຸປະກອນແບບໃດກໍ່ຕ້ອງມີການຈັດກຽມໃຫ້ຮຽບຮ້ອຍເຊັ່ນ:ຈັດເປັນແບບສັງເກດ,ແບບສະສົມພາບ,ເຄື່ອງມືຫຼິ້ນສຽງ,ກ້ອງເປັນຕົ້ນ.
- **ກຳນົດການໄດ້ແກ່:** ໂປຣແກມການເດີນທາງທີ່ມີກຳນົດເວລາທີ່ແນ່ນອນ.



CamScanner

CamScanner

- **ຄ່າໃຊ້ຈ່າຍ:** ຈຳນວນຄ່າໃຊ້ຈ່າຍໃນແຕ່ລະເລື່ອງລວມແລ້ວເປັນເທົ່າໃດ. ຖ້າມີຜູ້ຮຽນຈຳເປັນຕ້ອງອອກຄ່າໃຊ້ຈ່າຍສະເລ່ຍກັນຫຼາຍ-ນ້ອຍພຽງໃດ
- **ໜ້າທີ່ຄວນຮັບຜິດຊອບໃຜຈະຊ່ວຍສ່ວນໃດແດ່**

ຕ້ອງກຳນົດໃຫ້ຊັດເຈນ ເລື່ອງຕ່າງໆທີ່ຕົກລົງກັນນີ້ຄວນຈັດການເປັນເອກະສານແຈກໃຫ້ສະມາຊິກທຸກຄົນໄດ້ຮັບຮູ້ຄືກັນໃນເລື່ອງການວາງແຜນນີ້ ຖ້າຜູ້ສອນແບ່ງກຸ່ມຜູ້ຮຽນໃຫ້ຊ່ວຍກັນຄິດໃນແຕ່ລະເລື່ອງໃຫ້ໄດ້ຂໍ້ຕົກລົງຮ່ວມກັນຈະເປັນການດີເພາະຈະຊ່ວຍໃຫ້ຜູ້ຮຽນມີສ່ວນຮ່ວມສູງແລະເກີດຄວາມຮູ້ສຶກຮັບຜິດຊອບຮ່ວມກັນ. ສຳລັບຜູ້ສອນບໍ່ຄວນລືມຕິດຕໍ່ຍືນຍັນເຈົ້າຂອງສະຖານທີ່ຢ່າງເປັນທາງການແລະຂໍອະນຸຍາດບັງຄັບບັນຊາ,ຜູ້ປົກຄອງນັກຮຽນ ( ໃນກໍລະນີຕ້ອງປະຕິບັດຕາມລະບຽບກະຊວງສຶກສາທິການ ວ່າດ້ວຍການພານັກຮຽນໄປສຶກສານອກສະຖານທີ່ )

- **ການເດີນທາງໄປທັດສະນະສຶກສາ:** ຜູ້ສອນຄວນເບິ່ງແຍງດູແລເອົາໃຈໃສ່ໃນເລື່ອງຄວາມປອດໄພ,ສັງເກດພຶດຕິກຳຂອງນັກຮຽນແລະໃຫ້ຄຳປຶກແນະນຳຕາມຄວາມເໝາະສົມ.

**4.5.2 ການສຶກສາໃນສະຖານທີ່ເປົ້າໝາຍ:** ເມື່ອໄປຕາມສະຖານທີ່ເປົ້າໝາຍແລ້ວຜູ້ສອນຄວນປະຊຸມຜູ້ຮຽນທັງໝົດກ່ອນປ່ອຍຜູ້ຮຽນໃຫ້ໄປສຶກສາຕາມຄວາມສົນໃຈຂອງຕົນເອງໂດຍເວົ້າເຖິງຄື:

**4.5.3 ຈຸດປະສົງຂອງການມາສຶກສາ**

1. ການເອົາພາບຕໍ່ສະຖານທີ່,ບໍ່ເຮັດສິ່ງໃດທີ່ເປັນການທຳລາຍຫຼືເຮັດຄວາມເສຍຫາຍຕໍ່ສະຖານທີ່.
2. ຄວາມປອດໄພ
3. ການສຶກສາດ້ວຍວິທີການທີ່ກຽມມາແລ້ວ.
4. ການນັດໝາຍແລະການຕົກລົງເວລາ ເມື່ອມີຄວາມເຂົ້າໃຈແລ້ວຈຶ່ງປ່ອຍໃຫ້ຜູ້ຮຽນໄປສຶກສາດ້ວຍ ຕົນເອງໂດຍຜູ້ສອນສັງເກດການທົ່ວໆໄປ.

**4.5.4. ການເດີນທາງເມືອ ແລະ ສະຫຼຸບຜົນການຮຽນ.**

ໂດຍທົ່ວໄປຫຼັງຈາກທີ່ໄດ້ເບິ່ງ - ຊົມ ແລະ ສຶກສາສະຖານທີ່ແລ້ວ ຜູ້ສອນ ແລະ ຜູ້ຮຽນມັກບໍ່ມີເວລາທີ່ຈະສະຫຼຸບຜົນການຮຽນໃນທັນທີ ເພາະຕ້ອງຟ້າວເດີນທາງເມືອ ແຕ່ຫາກບໍ່ຟ້າວເດີນທາງເມືອ ແລະ ສາມາດຈັດສັນເວລາໄດ້ການສະຫຼຸບປະເມີນຜົນການຮຽນຮູ້ໃນທັນທີ ຈະໃຫ້ຜົນດີຫຼາຍເນື່ອງຈາກຜູ້ຮຽນຍັງຈື່ຄວາມຄິດ, ປະສົບການ ແລະ ຄວາມຮູ້ສຶກຕ່າງໆໄດ້ດີ ແຕ່ຖ້າຍັງສະຫຼຸບບໍ່ໄດ້ທັນທີ ຈຶ່ງຈຳເປັນຕ້ອງຖ້າອີກໄລຍະໜຶ່ງ ຄວາມຮູ້ສຶກ ຄວາມຄິດ ແລະ ປະສົບການບາງສ່ວນອາດຈະລືມໄປແນ່ ການສະຫຼຸບຜົນການຮຽນຮູ້ເຮັດໄດ້ຫຼາຍວິທີເຊັ່ນ: ການໃຫ້ຜູ້ຮຽນແຕ່ລະຄົນສະເໜີປະສົບການ ແລະ ຂໍ້ມູນທີ່ຕົນໄດ້ຈາກການສຶກສາ ແລະ ອະທິບາຍຮ່ວມກັນ ສະຫຼຸບເປັນປະເດັນການຮຽນຮູ້ທີ່ໄດ້ຮັບ ແລະ ອາດປະເມີນຄ່າວ່າ: ການຮຽນຮູ້ທີ່ໄດ້ຮັບເປັນໄປຕາມຈຸດປະສົງທີ່ກຳນົດໄວ້ຫຼາຍໜ້ອຍພຽງໃດ ຫຼື ຜູ້ສອນອາດໃຫ້ຜູ້ຮຽນຂຽນບົດລາຍງານຖ່າຍທອດຄວາມຮູ້ ແລະ ປະສົບການທີ່ໄດ້ຮັບແກ່ຜູ້ອື່ນ ( ເຊັ່ນ: ຜູ້ຮຽນກຸ່ມອື່ນໆ ຫຼືໃນການປະຊຸມຕ່າງໆ ) ແນວໃດກໍ່ຕາມບໍ່ວ່າຜູ້ສອນຈະໃຊ້ວິທີໃດໃນການສະຫຼຸບຜົນການຮຽນຮູ້, ຜູ້ສອນຄວນດູແລເບິ່ງແຍງໃຫ້ມີການສະຫຼຸບ ໃຫ້ຄອບຄຸມປະເດັນການຮຽນຮູ້ທັງ 3 ດ້ານຄື :

1. ການຮຽນຮູ້ໃນດ້ານຄວາມຮູ້ ( ສິ່ງທີ່ສຶກສາ )
2. ການຮຽນຮູ້ໃນດ້ານເຈດຄະຕິ

CamScanner
CamScanner

3. ການຮຽນຮູ້ໃນດ້ານຂະບວນການຕ່າງໆ ( ເຊັ່ນ : ຂະບວນການສະແຫວງຫາຄວາມຮູ້ , ຂະບວນການຄິດ , ຂະບວນການເຮັດວຽກຮ່ວມກັບຜູ້ອື່ນໆ )

**4.5.5 ຂໍ້ດີ ແລະ ຂໍ້ຈຳກັດ/ຂໍ້ເສຍ ຂອງວິທີສອນໂດຍໃຊ້ການໄປທັດສະນະສຶກສາ**

**ຂໍ້ດີ:**

1. ເປັນວິທີສອນທີ່ຊ່ວຍໃຫ້ຜູ້ຮຽນໄດ້ມີປະສົບການໂດຍກົງ ໄດ້ຮຽນຮູ້ສະພາບຄວາມເປັນຈິງ ມີການເຊື່ອມໂຍງລະຫວ່າງການຮຽນຮູ້ໃນຫ້ອງຮຽນ ແລະ ຄວາມເປັນຈິງ.

2. ເປັນວິທີສອນທີ່ສົ່ງເສີມການໃຊ້ລັບພະຍາກອນທ້ອງຖິ່ນ ແລະ ຊຸມຊົນໃຫ້ເປັນປະໂຫຍດຕໍ່ການຮຽນຮູ້ ແລະຊ່ວຍສ້າງຄວາມສຳພັນລະຫວ່າງໂຮງຮຽນກັບຊຸມຊົນ.

3. ເປັນວິທີສອນທີ່ເອື້ອໃຫ້ຜູ້ຮຽນມີໂອກາດໄດ້ເຝິກທັກສະຕ່າງໆຈຳນວນຫຼາຍເຊັ່ນ: ທັກສະການວາງແຜນ,ທັກສະການປະສານງານ,ທັກສະການເຮັດວຽກກຸ່ມ,ທັກສະການສະແຫວງຫາຄວາມຮູ້ ນອກຈາກນັ້ນຍັງສົ່ງເສີມການພັດທະນາຄຸນນະທຳຕ່າງໆເຊັ່ນ: ຄວາມຮັບຜິດຊອບ,ຄວາມສາມັກຄີ ຄວາມເສຍສະຫຼະເປັນຕົ້ນ

4. ເປັນວິທີສອນທີ່ຊ່ວຍໃຫ້ຜູ້ຮຽນໄດ້ປັບສະພາບອາກາດໃນການຮຽນຮູ້ເຮັດໃຫ້ຜູ້ຮຽນມີຄວາມກະຕືລືລົ້ນແລະຄວາມສົນໃຈໃນການຮຽນເພີ່ມຂຶ້ນ

**ຂໍ້ຈຳກັດ**

- ເປັນວິທີສອນທີ່ຍຸ້ງຍາກສຳຫລັບຜູ້ສອນເນື່ອງຈາກຕ້ອງມີການກຽມການຕິດຕໍ່ປະສານງານ ຈັດການ ແລະຮັບຜິດຊອບງານຫຼາຍດ້ານ
- ເປັນວິທີສອນທີ່ມີຄ່າໃຊ້ຈ່າຍສູງ ໃຊ້ເວລາຫລາຍ ແລະ ມີຄວາມສ່ຽງອາດເກີດອັນຕະລາຍລະຫວ່າງການເດີນທາງໄດ້.
- ເປັນວິທີສອນທີ່ອາດເກີດຜົນບໍ່ຄຸ້ມຄ່າ ຫາກການຈັດການ ແລະ ຂະບວນການສຶກສາບໍ່ດີເທົ່າທີ່ຄວນ

**5. ວິທີສອນໂດຍໃຊ້ການສະແດງລະຄອນ**

**5.1 ຄວາມໝາຍ**

ວິທີສອນໂດຍໃຊ້ການສະແດງລະຄອນແມ່ນຂະບວນການທີ່ຜູ້ສອນໃຊ້ໃນການຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ຕາມຈຸດປະສົງໂດຍການໃຫ້ຜູ້ຮຽນສະແດງລະຄອນເຊິ່ງເປັນເລື່ອງທີ່ຕ້ອງການໃຫ້ຜູ້ຮຽນໄດ້ຮຽນຮູ້ຕາມເນື້ອຫາ ແລະ ບົດລະຄອນທີ່ໄດ້ກຳນົດໄວ້ ຕັ້ງແຕ່ຕົ້ນຈົນຈົບ ເຮັດໃຫ້ເລື່ອງລາວນັ້ນມີຊີວິດຂຶ້ນມາ ແລະ ສາມາດເຮັດໃຫ້ທັງຜູ້ສະແດງແລະ ຜູ້ເບິ່ງເກີດຄວາມເຂົ້າໃຈ ແລະ ຈົດຈຳເລື່ອງນັ້ນໄດ້ດີ.

**5.2 ຈຸດປະສົງ**

ວິທີສອນໂດຍໃຊ້ການສະແດງລະຄອນ ເປັນວິທີການທີ່ມຸ້ງຊ່ວຍໃຫ້ຜູ້ຮຽນເຫັນພາບຂອງເລື່ອງລາວທີ່ຕ້ອງການຮຽນຮູ້ຢ່າງຊັດເຈນດ້ວຍຕົນເອງ ເຮັດໃຫ້ເລື່ອງລາວນັ້ນມີຊີວິດຂຶ້ນມາ ຈຶ່ງຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ທີ່ຊັດເຈນແລະ ຈົດຈຳໄດ້ດີ.

**5.3 ອົງປະກອບທີ່ສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງວິທີສອນ.**

- ບົດລະຄອນຄືເລື່ອງທີ່ມີເນື້ອຫາ ແລະ ບົດເວົ້າ ຫຼື ບົດສະແດງກຳນົດໄວ້ຮຽບຮ້ອຍແລ້ວຕັ້ງແຕ່ຕົ້ນຈົນຈົບ.



CamScanner

CamScanner

- ມີການສະແດງຕາມບົດບາດທີ່ກຳນົດ, ມີການເບິ່ງ ແລະ ສັງເກດການສະແດງ
- ມີການອະທິບາຍກ່ຽວກັບເລື່ອງລາວ ຫຼື ເນື້ອຫາການສະແດງຂອງຜູ້ຮັບບົດບາດຕ່າງໆ
- ມີການສະຫຼຸບການຮຽນຂອງຜູ້ຮຽນ ຈາກການສະແດງ ແລະ ເບິ່ງການສະແດງ.

**5.4 ຂັ້ນຕອນສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງການສອນ**

- ຜູ້ສອນ/ຜູ້ຮຽນກຽມບົດລະຄອນ
- ຜູ້ຮຽນສຶກສາບົດລະຄອນ ແລະ ບົດບາດທີ່ຈະສະແດງ.
- ຜູ້ຮຽນສຶກສາບົດທີ່ຈະສະແດງ ແລະ ຊ້ອມການສະແດງ ຜູ້ສອນໃຫ້ຄຳແນະນຳໃນການເບິ່ງການສະແດງແກ່ຜູ້ຮຽນຮູ້ທີ່ເປັນຜູ້ເບິ່ງ
- ຜູ້ສອນ ແລະ ຜູ້ຮຽນຈັດກຽມອຸປະກອນສຳລັບການສະແດງເຊັ່ນ: ເຄື່ອງແຕ່ງກາຍ.
- ຜູ້ຮຽນສະແດງ ຫຼື ການສະແດງ.
- ຜູ້ສອນ ແລະ ຜູ້ຮຽນອະທິບາຍກ່ຽວກັບການສະແດງຂອງຜູ້ຫຼິ້ນເລື່ອງ ຫຼື ເນື້ອຫາການສະແດງ ແລະ ສະຫຼຸບການຮຽນຮູ້ທີ່ໄດ້ຈາກການສະແດງ.

**5.5 ເທັກນິກແລະຂໍ້ສະເໜີຕ່າງໆໃນການໃຊ້ວິທີສອນໂດຍການສະແດງລະຄອນໃຫ້ມີຄຸນະພາບ**

ການສະແດງລະຄອນເພື່ອການຮຽນຮູ້ມີຫຼາຍແບບດັ່ງນີ້ :

**ກ. ການສະແດງລະຄອນແບບເປັນທາງການ ( dramatization )**

ເປັນການສະແດງລະຄອນທີ່ມີການກຽມບົດລະຄອນຕັ້ງແຕ່ຕົ້ນຈົນຈົບໄວ້ ແລະ ຜູ້ສະແດງຈະຕ້ອງມີການເຝິກຊ້ອມກ່ອນການສະແດງສາມາດສະແດງໄດ້ຕາມບົດ ແລະ ມີການຈັດສາກຈັດເວທີໃຫ້ເບິ່ງສົມຈິງ ຕົວຢ່າງ : ການສະແດງທາງການທີ່ນິຍົມກັນຫຼາຍໄດ້ແກ່ການສະແດງເຫດການປະຫວັດສາດ ຫຼື ຊີວະປະຫັວດຂອງບຸກຄົນທີ່ສຳຄັນເປັນຕົ້ນ.

**ຂ. ການສະແດງລະຄອນແບບບໍ່ເປັນທາງການ ຫຼື ເອີ້ນສັ້ນໆໄດ້ວ່າ Acting**

ເປັນການສະແດງເລື່ອງລາວ ຫຼື ເຫດການສັ້ນໆສະເພາະຈຸດສະເພາະປະເດັນເພື່ອຊ່ວຍໃຫ້ເລື່ອງລາວນັ້ນມີຄວາມຊັດເຈນຂຶ້ນ.ການສະແດງແບບນີ້ຜູ້ສອນສາມາດໃຊ້ສອນໃນການສອນເນື້ອຫາສາລະຕ່າງໆໄດ້ຫຼາຍເຊັ່ນ: ການສະແດງວິທີການຈັດໂຕະອາຫານ, ການສະແດງພິທີແຕ່ງງານ.

**ຄ. ການສະແດງລະຄອນໃບ້**

ເປັນການສະແດງທີ່ຜູ້ສະແດງໃຊ້ການສະແດງອອກທາງທ່າທາງ ສື່ຄວາມໝາຍເລື່ອງລາວໃຫ້ຜູ້ເບິ່ງເຂົ້າໃຈໂດຍບໍ່ໃຊ້ພາສາເວົ້າເລີຍ ແຕ່ອາດມີການໃຊ້ການບັນຍາຍປະກອບທ່າທາງໄດ້ ເພື່ອຊ່ວຍໃຫ້ຜູ້ເບິ່ງມີຄວາມເຂົ້າໃຈຫຼາຍຂຶ້ນເຊັ່ນ : ການສະແດງລະຄອນໃບ້ ສື່ຄວາມໝາຍກ່ຽວກັບບັນຫາການດຳລົງຊີວິດ, ຄວາມຂັດຂ້ອງໃຈ , ການແກ້ໄຂບັນຫາຕ່າງໆ.

**ງ. ການສະແດງລະຄອນຮຽນແບບ ( ລອກແບບ )**

ເປັນການສະແດງທີ່ຜູ້ສະແດງພະຍາຍາມສະແດງລັກສະນະທ່າທາງຮຽນແບບບຸກຄົນ ຫຼື ສັດເຊັ່ນ: ການສະແດງຮຽນແບບດາລາ, ນັກຮ້ອງທີ່ມີຊື່ສຽງ, ການສະແດງທ່າທາງສຽງຮ້ອງຮຽນແບບສັດຕ່າງໆເຊັ່ນ: ໝາ, ແມວ,ສິງໂຕ, ນົກຕ່າງໆ ຫຼື ອາດຈະສະແດງຮຽນແບບກົນໄກການເຄື່ອນໄຫວຂອງສິ່ງຕ່າງໆເຊັ່ນ: ຫຸ່ນຍົນ, ຄອມພິວເຕີ ແລະ ອື່ນໆ...

**ຈ. ການສະແດງລະຄອນລໍ້ລຽນ**

ເປັນການສະແດງລະຄອນທີ່ມີເນື້ອຫາສາລະສຽດສີບຸກຄົນ, ສັງຄົມ ເລື່ອງລາວ ຫຼື ເຫດການຕ່າງໆເພື່ອເນັ້ນຄ່ານິຍົມ ຫຼື ພຶດຕິກຳໃດໆທີ່ຕ້ອງການໃຫ້ເກີດຂຶ້ນແກ່ຜູ້ຮຽນ ໂດຍ



CS CamScanner

CS CamScanner

ການສະແດງເຖິງຄວາມບໍ່ຊອບດ້ວຍເຫດແລະຜົນຂອງສິ່ງນັ້ນເຊັ່ນ : ການສະແດງລະຄອນລໍ້ລຽນພຶດຕິກຳທາງການເມືອງຂອງນັກການເມືອງເປັນຕົ້ນ.

**ສ. ການສະແດງການເຊີດຫຸ່ນລະຄອນ**

ເປັນການສະແດງທີ່ຜູ້ສະແດງໃຊ້ຫຸ່ນຫຼື ອຸປະກອນອື່ນເປັນຕົວແທນຕົນໃນການສະແດງອອກ,ຜູ້ສະແດງບໍ່ປະກົດກາຍຫຼືສະແດງພຶດຕິກຳຕ່າງໆ ແຕ່ຈະເຊີດຕົວຫຸ່ນໃຫ້ສະແດງຕາມທີ່ຕົນຕ້ອງການ, ຫຸ່ນທີ່ຈະໃຊ້ໃນການສະແດງມີຫຼາຍແບບຫຼາຍປະເພດເຊັ່ນ: ຫຸ່ນກະບອກ,ຫຸ່ນມືອມື , ຫຸ່ນສາຍໄມ້ , ຫຸ່ນໜັງຕະລຸງແລະອື່ນໆ.

ການສະແດງລະຄອນບໍ່ວ່າຈະເປັນແບບໃດ ຖ້າຢາກໃຫ້ມີປະສິດທິພາບ ຄືຜູ້ຮຽນເກີດການຮຽນຮູ້ຕາມຈຸດປະສົງຜູ້ສອນຄວນມີການຕຽມການແລະດຳເນີນການຢ່າງເໝາະສົມດັ່ງນີ້ :

**1.) ການກຽມບົດລະຄອນ**

ຜູ້ຮຽນແລະຜູ້ຮຽນຄວນມີການອະທິບາຍກັນເຖິງຈຸດປະສົງຈອງການທີ່ຈະໃຊ້ບົດລະຄອນເປັນວິທີການເພື່ອໃຫ້ເກີດການຮຽນຮູ້ຕາມຈຸດປະສົງທີ່ກຳນົດ,ຜູ້ຮຽນຄວນມີບົດບາດນການເລືອກເລື່ອງລາວທີ່ຈະສະແດງ , ຜູ້ສອນອາດກຽມບົດລະຄອນໃຫ້ຜູ້ສະແດງໂດຍຕ້ອງກຽມເນື້ອຫາການສະແດງແຕ່ຕົ້ນຈົນຈົບແລະຕ້ອງກຽມບົດລະຄອນຕືບົດເວົ້າຂອງຕົວລະຄອນຕ່າງໆຫຼືອາດໃຫ້ຜູ້ຮຽນຊ່ວຍກັນຂຽນເຊິ່ງໃນທັງສອງກໍລະນີ ທັງຜູ້ສອນແລະຜູ້ຮຽນຈຳເປັນຕ້ອງສຶກສາເນື້ອຫາຫຼືເລື່ອງລາວຈາກແຫຼ່ງຂໍ້ມູນຕ່າງໆເພື່ອໃຫ້ໄດ້ເນື້ອຫາ , ເລື່ອງລາວທີ່ກົງກັບຄວາມເປັນຈິງໃຫ້ຫຼາຍທີ່ສຸດແລະອາດຈຳເປັນຕ້ອງການສະແຫວງຫາບຸກຄົນທາງປະຫວັດສາດ , ການສະແດງລະຄອນທາງວັນນະຄະດີເປັນຕົ້ນ.

**2.) ການສຶກສາບົດລະຄອນແລະເລືອກບົດບາດທີ່ຈະສະແດງ.**

ຜູ້ສອນແລະຜູ້ຮຽນຄວນຊ່ວຍກັນເລືອກວ່າໃຜຄວນຈະສະແດງບົດຫຍັງ.ໂດຍພິຈາລະນາເຖິງຄວາມເໝາະສົມແລະຄວາມສາມາດຂອງຜູ້ຮຽນກັບບົດທີ່ຈະສະແດງ,ຄວນເລືອກຜູ້ທີ່ມີບຸກຄະລິກລັກສະນະກົງກັບເລື່ອງລາວແລະມີຄວາມສາມາດທີ່ຈະຕີບົດແຕກຫຼືຫຼິ້ນໄດ້ດີ ເນື່ອງຈາກການສະແດງເນັ້ນໃສ່ໃຫ້ຜູ້ຮຽນເຫັນພາບ ຫຼື ເລື່ອງລາວທີ່ກົງກັບເລື່ອງລາວ ແລະ ຄວາມເປັນຈິງຫຼາຍທີ່ສຸດ. ດັ່ງນັ້ນຜູ້ສະແດງຄວນມີຄວາມເຕັມໃຈທີ່ຈະສະແດງເພື່ອໃຫ້ການສະແດງອອກມາດີທີ່ສຸດ.

**3.) ການສຶກສາບົດ, ຊ້ອມການສະແດງ, ກຽມຜູ້ເບິ່ງ ແລະ ກຽມອຸປະກອນສຳລັບການສະແດງ.**

ເມື່ອໄດ້ຜູ້ສະແດງແລ້ວ, ຜູ້ສະແດງແຕ່ລະຄົນຕ້ອງສຶກສາເລື່ອງລາວ ແລະ ບົດຂອງຕົນເປັນພິເສດ ຕ້ອງພະຍາຍາມຈື່ບົດຂອງຕົນໃຫ້ຄ່ອງ ເພື່ອການສະແດງຂອງຕົນຈະບໍ່ຕິດຂັດ ແລະ ຈະຕ້ອງມີການເຝິກຊ້ອມການສະແດງຮ່ວມກັນ, ໃນບາງກໍລະນີ ຫຼັງຈາກເຝິກຊ້ອມອາດຈຳເປັນຕ້ອງມີການປ່ຽນຜູ້ສະແດງ ຖ້າເຫັນວ່າຜູ້ທີ່ເລືອກໄວ້ບໍ່ສາມາດສະແດງໄດ້ດີພໍທີ່ຈະສື່ຄວາມໝາຍໄດ້ກົງກັບເລື່ອງລາວ ຫຼື ເນື້ອຫາອັນເປັນວັດຖຸປະສົງຂອງການສອນໂດຍປົກະຕິການສອນດ້ວຍວິທີນີ້ຜູ້ຮຽນຈະບໍ່ສະແດງທັງໝົດ, ຜູ້ທີ່ບໍ່ໄດ້ສະແດງ ຈະເປັນຜູ້ເບິ່ງການສະແດງ ແລະ ຊ່ວຍຈັດສາກການສະແດງ.

**4.) ການສະແດງລະຄອນ ແລະ ເບິ່ງລະຄອນ.**

ເມື່ອທຸກຢ່າງພ້ອມແລ້ວ ຈຶ່ງເລີ່ມການສະແດງ, ໃນຂະນະສະແດງຜູ້ສອນ ແລະ ຜູ້ເບິ່ງບໍ່ຄວນຂັດການສະແດງ ແລະ ຄວນໃຫ້ກຳລັງໃຈຜູ້ສະແດງໂດຍການຕັ້ງໃຈເບິ່ງການສະແດງ, ຕົບມືໃຫ້ກຳລັງໃຈ ຜູ້ເບິ່ງການສະແດງຄວນຕັ້ງໃຈສັງເກດການສະແດງໃນຈຸດສຳຄັນທີ່ຄູແນະນຳ ແລະ ອາດຈົດບັນທຶກສິ່ງທີ່ສັງເກດໄວ້ເພື່ອບໍ່ໃຫ້ລືມ ຜູ້ສະແດງກໍ່ຄວນສະແດງໃຫ້ສົມບົດບາດທີ່ສຸດ.

**5.) ການອະທິບາຍເພື່ອສະຫຼຸບການຮຽນ**



CamScanner

CamScanner

ເນື່ອງຈາກຈຸດປະສົງຂອງການສະແດງລະຄອນມຸ້ງທີ່ຈະຊ່ວຍໃຫ້ຜູ້ຮຽນຮູ້ກ່ຽວກັບເລື່ອງລາວທີ່ສະແດງ ຜູ້ສອນໃຊ້ການສະແດງເປັນວິທີການທີ່ຈະຊ່ວຍໃຫ້ຜູ້ຮຽນ ຮູ້ເລື່ອງລາວນັ້ນໆ ໂດຍໃຫ້ເຫັນເປັນພາບ ແລະ ການກະທຳຕົວຈິງ ເຊິ່ງຈະເຮັດໃຫ້ຜູ້ຮຽນມີຄວາມເຂົ້າໃຈ ແລະ ຈື່ຈຳເລື່ອງນັ້ນໄດ້ຢ່າງດີ. ດັ່ງນັ້ນລະຄອນທີ່ສະແດງອອກມາຈຶ່ງຄວນສະທ້ອນເລື່ອງລາວຄວາມເປັນຈິງນັ້ນໃຫ້ເຫັນຊັດເຈນ, ການອະທິບາຍເພື່ອການຮຽນຮູ້ຈຶ່ງຕ້ອງມຸ້ງໄປສູ່ເລື່ອງລາວທີ່ສະແດງອອກມາ ແລະ ການສະແດງຂອງຜູ້ສະແດງວ່າສາມາດເຮັດໄດ້ສົມຈິງປານໃດ.

**5.6 ຂໍ້ດີ ແລະ ຂໍ້ຈຳກັດຂອງວິທີສອນໂດຍການໃຊ້ການສະແດງບົດບາດສົມມຸດ**

**ຂໍ້ດີ**

- ເປັນວິສອນທີ່ຊ່ວຍໃຫ້ຜູ້ຮຽນໄດ້ເຫັນສິ່ງທີ່ຮຽນມີຊີວິດຂຶ້ນມາ , ເຮັດໃຫ້ການຮຽນຮູ້ມີຄວາມເປັນຈິງ ແລະ ມີຄວາມໝາຍສຳລັບຜູ້ຮຽນ.
- ເປັນວິທີສອນທີ່ຊ່ວຍໃຫ້ຜູ້ຮຽນໆ ຢ່າງສະໜຸກສະໜານທີ່ມີສ່ວນຮ່ວມໃນການຮຽນຮູ້ສູງ.
- ເປັນວິທີສອນທີ່ເປີດໂອກາດໃຫ້ຜູ້ຮຽນໄດ້ເຝິກທັກສະຕ່າງໆຈຳນວນຫຼາຍເຊັ່ນ: ການເວົ້າ, ການຂຽນ,ການສະແດງອອກ, ການຈັດການ , ການສະແຫວງຫາຂໍ້ມູນຄວາມຮູ້ ແລະ ການເຮັດວຽກຮ່ວມກັນເປັນກຸ່ມ.

**ຂໍ້ຈຳກັດ/ ຂໍ້ເສຍ**

- ເປັນວິທີສອນທີ່ໃຊ້ເວລາຫຼາຍ ຕ້ອງມີການຈັດກຽມບົດລະຄອນ ແລະ ການສະແດງທີ່ຫຍຸ້ງຍາກ.
- ເປັນວິທີສອນທີ່ຕ້ອງໃຊ້ອຸປະກອນ ເຄື່ອງແຕ່ງກາຍປະກອບການສະແດງ ເຊິ່ງອາດຈະເຮັດໃຫ້ມີຄ່າໃຊ້ຈ່າຍຫຼາຍຂຶ້ນ.
- ເປັນວິທີສອນທີ່ຕ້ອງອາໃສການສະແຫວງຫາຂໍ້ມູນທີ່ຖືກຕ້ອງ ມາໃຊ້ໃນການຂຽນບົດ ຖ້າຜູ້ສອນບໍ່ມີຂໍ້ມູນພຽງພໍຈະເຮັດໃຫ້ເລື່ອງລາວ ຫຼື ການສະແດງບໍ່ສົມບູນ.

## 6. ວິທີສອນໂດຍໃຊ້ອະພິປາຍກຸ່ມຍ່ອຍ

ເປັນວິທີການຊ່ວຍໃຫ້ຜູ້ຮຽນມີສ່ວນຮ່ວມໃນກິດຈະກຳການຮຽນຮູ້ຢ່າທົ່ວເຖິງ ມີໂອກາດສະແດງຄວາມຄິດເຫັນແລະແລກປ່ຽນປະສົບການກັບຈະຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ໃນເລື່ອງທີ່ຮຽນກ້ວາງຂຶ້ນ.

### 6.1 ຄວາມໝາຍ

ວິທີສອນໂດຍໃຊ້ການອະພິປາຍກຸ່ມຍ່ອຍຄື ຂະບວນການທີ່ຜູ້ສອນໃຊ້ໃນການຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ຕາມວັດຖຸປະສົງທີ່ກຳນົດໂດຍການຈັດຜູ້ຮຽນເປັນກຸ່ມນ້ອຍໆປະມານ 4-8 ຄົນແລະໃຫ້ຜູ້ຮຽນໃນກຸ່ມສົນທະນາແລກປ່ຽນຂໍ້ມູນຄວາມຄິດເຫັນແລະປະສົບການໃນປະເດັນທີ່ກຳນົດແລະສະຫຼຸບຜົນຜົນການອະພິປາຍອອກມາເປັນຂໍ້ສະຫຼຸບຂອງກຸ່ມ.

### 6.2 ຈຸດປະສົງ

ວິທີສອນໂດຍໃຊ້ການອະພິປາຍກຸ່ມຍ່ອຍເປັນວິທີການເພື່ອຊ່ວຍໃຫ້ຜູ້ຮຽນມີສ່ວຍຮ່ວມໃນກິດຈະກຳການຮຽນຮູ້ຢ່າງທົ່ວເຖິງ,ມີໂອກາດສະແດງຄວາມຄິດເຫັນ ແລະ ແລກປ່ຽນປະສົບການທີ່ຈະຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ໃນເລື່ອງທີ່ຮຽນກ້ວາງຂຶ້ນ.



CamScanner

CamScanner

**6.3 ອົງປະກອບສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງວິທີສອນ.**

- ມີການຈັດຜູ້ຮຽນເປັນກຸ່ມຍ່ອຍໆ ກຸ່ມລະປະມານ 4 – 8 ຄົນ
- ມີປະເດັນໃນການອະພິປາຍ
- ມີການສົນທະນາແລກປ່ຽນຄວາມຄິດເຫັນ,ຄວາມຮູ້ສຶກແລະປະສົບການກັນລະຫ່ວາງສະມາຊິກໃນກຸ່ມຕາມປະເດັນການອະພິປາຍ
- ມີການສະຫຼຸບຂໍ້ມູນເນື້ອໃນໃຈຄວາມທີ່ສະມາຊິກກຸ່ມໄດ້ອະພິປາຍກັນເປັນຂໍ້ສະຫຼຸບຂອງກຸ່ມ
- ມີການນຳຂໍ້ມູນສະຫຼຸບຂອງກຸ່ມມາໃຊ້ໃນການສະຫຼຸບບົດຮຽນ

**6.4 ຂັ້ນຕອນສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງການສອນ**

- ຜູ້ສອນຈັດຜູ້ຮຽນອອກເປັນກຸ່ມຍ່ອຍໆ ກຸ່ມລະປະມານ 4 – 8 ຄົນ
- ຜູ້ສອນ,ຜູ້ຮຽນກຳນົດປະເດັນໃນການອະພິປາຍ
- ຜູ້ຮຽນສົນທະນາແລກປ່ຽນຄວາມຄິດເຫັນກັນຕາມປະເດັນອະພິປາຍ
- ຜູ້ຮຽນສະຫຼຸບເນື້ອໃນທີ່ສະມາຊິກກຸ່ມໄດ້ອະພິປາຍຮ່ວມກັນເປັນຂໍ້ສະຫຼຸບຂອງກຸ່ມ
- ຜູ້ສອນແລະຜູ້ຮຽນນຳຂໍ້ສະຫຼຸບຂອງກຸ່ມຍ່ອຍມາໃຊ້ໃນການສະຫຼຸບບົດຮຽນ

**6.5 ເທັກນິກແລະຂໍ້ສະເໜີແນະຕ່າງໆໃນການສອນໂດຍໃຊ້ການອະພິປາຍກຸ່ມຍ່ອຍໃຫ້ມີປະສິດທິພາບ**

**- ການຈັດຜູ້ຮຽນເປັນກຸ່ມຍ່ອຍ**

ຈຳນວນສະມາຊິກໃນກຸ່ມຍ່ອຍຕ້ອງມີປະມານ4-8ຄົນ ຈຳນວນທີ່ເໝາະສົມທີ່ສຸດຄືລະຫວ່າງ4-6ຄົນເພາະຖ້າກຸ່ມນ້ອຍເກີນໄປກຸ່ມຈະບໍ່ມີຄວາມຄິດທີ່ຫລາກຫລາຍພຽງພໍ ຖ້າກຸ່ມໃຫຍ່ເກີນໄປ.ສະມາຊິກກຸ່ມຈະມີໂອກາດສະແດງຄວາມຄິດເຫັນໄດ້ໜ້ອຍຫລືໄດ້ບໍ່ທົ່ວເຖິງການແບ່ງຜູ້ຮຽນເຂົ້າກຸ່ມອາດເຮັດດ້ວຍການສຸ່ມເພື່ອໃຫ້ຜູ້ຮຽນໄດ້ມີໂອກາດຮ່ວມກຸ່ມກັບໝູ່ບໍ່ຊ້ຳກັນຫລືອາດຈັດຜູ້ຮຽນເຂົ້າກຸ່ມຕາມຄວາມສາມາດເພື່ອໃຫ້ຜູ້ຮຽນທີ່ເກັ່ງຊ່ວຍເຫລືອຄົນທີ່ຮຽນອ່ອນຄວາມສົນໃຈຄວາມສາມາດຫລືເລືອກຢ່າງເຈາະຈົງຕາມບັນຫາທີ່ມີກໍ່ໄດ້ຂຶ້ນກັບຈຸດປະສົງຂອງຜູ້ສອນແລະສິ່ງທີ່ຈະອະພິປາຍ ເທັກນິກທີ່ໃຊ້ໃນການແບ່ງກຸ່ມມີຫລາກຫລາຍເຊັ່ນ ໃຊ້ການນັບໝາຍເລກໃຜນັບໝາຍເລກດຽວໃຫ້ຮ່ວມກຸ່ມກັນຫລືໃຊ້ການຈັບສະຫລາກເຊິ່ງອາດເປັນໝາຍເລກ ຫຼື ເປັນພາບ.

- **ປະເດັນການອະພິປາຍ**

ການອະພິປາຍຈຳເປັນຕ້ອງມີໃນການອະພິປາຍ ມີວັດຖຸປະສົງຂອງການອະພິປາຍຊັດເຈນການອະພິປາຍອາດຈະມາຈາກຜູ້ສອນຫລືຜູ້ຮຽນກໍ່ໄດ້ແລ້ວແຕ່ກໍລະນີການອະພິປາຍແຕ່ລະຄັ້ງບໍ່ຄວນມີປະເດັນຫລາຍຈົນເກີນໄປເພາະຈະເຮັດໃຫ້ຜູ້ຮຽນອະພິປາຍໄດ້ບໍ່ເຕັມທີ່

- **ການອະພິປາຍ**

ການຈັດກຸ່ມອະພິປາຍມີຫຼາຍແບບຜູ້ສອນຄວນເລືອກໃຊ້ໃຫ້ເຫມາະສົມກັບຈຸດປະສົງໃນການອະພິປາຍທີ່ດີໂດຍທົ່ວໄປຄວນມີການກຳນົດບົດບາດໜ້າທີ່ຈຳເປັນໃນການອະພິປາຍເຊັ່ນ: ປະທານຫຼືຜູ້ນຳໃນການອະພິປາຍເລຂານຸການ ຜູ້ຈົດບັນທຶກການປະຊຸມແລະຜູ້ຮັກສາເວລາເປັນຕົ້ນ. ນອກຈາກນັ້ນສະມາຊິກໃນກຸ່ມທຸກຄົນຄວນມີຄວາມເຂົ້າໃຈຕົງກັນວ່າຕົນມີບົດບາດໜ້າທີ່ທີ່ຈະຊ່ວຍໃຫ້ກຸ່ມເຮັດວຽກໃຫ້ສຳເລັດ ປ່ອຍໃຫ້ເປັນຄວາມຮັບຜິດຊອບຂອງສະມາຊິກບາງຄົນຫ້າມສະມາຊິກ



CamScanner

CamScanner

ກຸ່ມມືອໃຫ້ຄຳຕອບ ຄວາມຮູ້ຄວາມເຂົ້າໃຈວ່າສະມາຊິກກຸ່ມເຮັດຫຍັງແນ່ເຊັ່ນ: ໃຫ້ຂໍ້ມູນສະແດງຄວາມຄິດເຫັນຊັກຖາມ,ໂຕ້ແຍ້ງ,ສະໜັບສະໜູນຊ່ວຍບໍ່ໃຫ້ກຸ່ມອອກນອກເລື່ອງ

ບໍ່ໃຫ້ມີການຜູກຂາດການອະທິບາຍໂດຍຜູ້ໃດຜູ້ໜຶ່ງເພາະຈຸດປະສົງຂອງການອະພິປາຍກໍ່ຄືການໃຫ້ຜູ້ຮຽນມີໂອກາດສະແດງຄວາມຄິດເຫັນຢ່າງທົ່ວເຖິງແລະໄດ້ຮັບຟັງຄວາມຄິດເຫັນຫຼາຍຢ່າງທີ່ຈະຊ່ວຍໃຫ້ຜູ້ຮຽນມີຄວາມຄິດທີ່ເລິກເຊິ່ງແລະຮອບຄອບຂຶ້ນກ່ອນການອະພິປາຍ

- **ການສະຫຼຸບຂອງການອະພິປາຍ**

ກ່ອນການອະພິປາຍຈະຊິ້ນສຸດລົງກຸ່ມຈະຕ້ອງມີການສະຫຼຸບກ່ອນການອະພິປາຍເພື່ອໃຫ້ຄຳຕອບ ,ຜູ້ສອນຄວນບອກສັນຍານແກ່ກຸ່ມອະພິປາຍປະມານ 3-5ນາທີກ່ອນໝົດເວລາ

- **ການສະຫຼຸບບົດຮຽນ**

ເມື່ອການອະພິປາຍຊິ້ນສຸດລົງຜູ້ສອນຈຳເປັນຕ້ອງເຊື່ອມຕໍ່ສີ່ທີ່ຜູ້ຮຽນໄດ້ຮ່ວມກັນຄິດກັບບົດຮຽນທີ່ກຳລັງຮຽນຢູ່ໂດຍມີການນຳຂໍ້ສະຫຼຸບຂອງກຸ່ມມາໃຊ້ໃນການສະຫຼຸບບົດຮຽນດ້ວຍມ,

- ຂໍ້ສະເໜີແນະນຳເພີ່ມເຕີມກ່ຽວກັບຈັດກຸ່ມອະພິປາຍແບບຕ່າງໆ ການຈັດກຸ່ມອະພິປາຍມີຫຼາຍແບບໃນນີ້ຈະຂໍຍົກຕົວຢ່າງແບບທີ່ນິຍົມໃຊ້ກັນຫຼາຍທັງໃນການສອນແລະການປະຊຸມຕ່າງໆມານຳສະເໜີຜູ້ສອນຈະໄດ້ເລືອກໃຊ້ວິທີທີ່ເໝາະສົມກັບຈຸດປະສົງ.

**1. ການຈັດກຸ່ມອະພິປາຍກັນເອງ:** ກຸ່ມແບບນີ້ປະກອບດ້ວຍສະມາຊິກທີ່ມີຄວາມສົນໃຈໃນເລື່ອງດຽວກັນຈຳນວນປະມານ 6 – 10 ຄົນມາເວົ້າແລກປ່ຽນຄວາມຄິດຄວາມເຫັນກັນເພື່ອສະແດງຫາຂໍ້ຍຸດຕິຫຼືຂໍ້ຕົກລົງຮ່ວມກັນໃນປະເດັນຕ່າງໆ

**2. ການຈັດກຸ່ມອະພິປາຍພິລສົປ**

ກຸ່ມແບບນີ້ປະກອບດ້ວຍສະມາຊິກ6ຄົນທີ່ນັ່ງໃກ້ກັນ ຫັນໜ້າເຂົ້າຫາກັນເພື່ອແລກປ່ຽນຄວາມຄິດເຫັນໃນປະເດັນໃດປະເດັນໜຶ່ງຈຸດປະສົງຂອງການຈັດກຸ່ມແບບນີ້ກໍ່ເພື່ອເປີດໂອກາດໃຫ້ສະມາຊິກທຸກຄົນມີໂອກາດສະເໜີຄວາມຄິດເຫັນ.

**3. ການຈັດກຸ່ມອະພິປາຍແບບຊິມໂປຊຽມ**

ກຸ່ມແບບນີ້ປະກອບດ້ວຍສະມາຊິກລະຫ່ວາງ 6 – 10 ຄົນທີ່ມີຄວາມຮູ້ແລະປະສົບການຕ່າງກັນຈຸດປະສົງກໍ່ເພື່ອໃຫ້ກຸ່ມຍ່ອຍນີ້ໄດ້ສຶກສາພິຈາລະນາເລື່ອງໃດເລື່ອງໜຶ່ງທີ່ໄດ້ຮັບມອບໝາຍຈາກທີ່ປະຊຸມໃຫ່ຍສະມາຊິກຈະແລກປ່ຽນຄວາມຮູ້ແລະປະສົບການໃນເລື່ອງທີ່ໄດຮັບມອບໝາຍໂດຍສຳພັດກັບທຳໜ້າທີ່ປະທານແລະເລຂານຸການ.

**4.ການຈັດອະພິປາຍແບບລະດົມສະໝອງ**

ກຸ່ມແບບນີ້ປະກອບດ້ວຍສະມາຊິກລະຫ່ວາງ2-6ຄົນທີ່ມີຄວາມຮູແລະປະສົບການພໍສົມຄວນໃນເລື່ອງທີ່ຈະອະພິປາຍຈຸດປະສົງຂອງກຸ່ມນີ້ກໍ່ເພື່ອໃຫ້ຄວາມຄິດຫຼາຍທີ່ສຸດໃນເວລາທີ່ຈັດແລະເພື່ອສະແຫວງຫາຄວາມຄິດສ້າງສັນຈາກກຸ່ມ

**5.ການຈັດກຸ່ມອະພິປາຍແບບໂຕະກຸ່ມ**

ກຸ່ມແບບນີ້ມີລັກສະນະຄືການອະພິປາຍແບບກຸ່ມຊິມໂປຊຽມຄືເປັນການອະພິປາຍໃນປະເດັນທີ່ໄດ້ຮັບມອບໝາຍທີ່ປະຊຸມໃຫ່ຍຫຼືສະມາຊິກເລືອກຕາມໃຈເພື່ອແລກປ່ຽນຄວາມຮູ້ແລະໃຫ້ໄດ້ຂໍ້ສະຫຼຸບຮ່ວມກັນ

**6.ການຈັດກຸ່ມອະພິປາຍເປັນຄະນະ**

ການຈັດກຸ່ມແບບນີ້ມີຈຸດປະສົງເພື່ອໃຫ້ຜູ້ຊ່ຽວຊານທີ່ມີຄວາມຮູ້ແລະປະສົບການທີ່ກ່ຽວຂ້ອງກັບຫົວຂໍ້ໃນການປະຊຸມມາຮ່ວມອະພິປາຍຕໍ່ໜ້າຜູ້ຟັງເພື່ອແລກປ່ຽນຄວາມຄິດເຫັນໂດຍມີຜູ້ດຳເນີນການອະພິປາຍແລະສະຫຼຸບຜົນການອະພິປາຍ



CamScanner

CamScanner

**7.ການຈັດກຸ່ມອະພິປາຍແບບສຳມະນາ**

ການຈັດກຸ່ມແບບນີ້ມີສະມາຊິກກຸ່ມປະມານ20ຄົນຂຶ້ນໄປ ມີຈຸດປະສົງເພື່ອໃຫ້ສະມາຊິກຮ່ວມກັນສຶກສາຫາຄວາມຮູ້ທີ່ຄົ້ນຄິດໃນຫົວຂໍ້ໃດໜຶ່ງໂດຍມີຜູ້ຊ່ຽວຊານໃຫ້ຄຳແນະນຳຊ່ວຍເຫຼືອບັນຫາຂອງການສຳມະນາ

**8.ການຈັດກຸ່ມອະພິປາຍແບບຮັດເດີ**

ກຸ່ມແບບນີ້ເປັນການຈັດກຸ່ມຍ່ອຍແຍກອອກຈາກກຸ່ມໃຫຍ່ໂດຍໃຊ້ວິທີການສຸ່ມເພື່ອໃຫ້ສະມາຊິກລະດົມກັນໄປຈຸດປະສົງດຽວກັນ

**9.ການຈັດກຸ່ມການອະພິປາຍແບບຮອບວົງ**

ກຸ່ມແບບນີ້ປະກອບດ້ວຍສະມາຊິກບໍ່ເກີນ10ຄົນມີຈຸດປະສົງເພື່ອໃຫ້ສະມາຊິກທຸກຄົນມີໂອກາດສະແດງຄວາມຄິດເຫັນ.

**10.ການຈັດກຸ່ມອະພິປາຍແບບກຸ່ມຊ້ອນ**

ກຸ່ມແບບນີ້ມີລັກສະນະເປັນກຸ່ມຊ້ອນກັນເປັນສອງວົງກຸ່ມວົງໃນແລະກຸ່ມວົງນອກ

**11.ການຈັດກຸ່ມອະພິປາຍແບບຕອບຄຳຖາມ**

ກຸ່ມນີ້ປະກອບດ້ວຍສະມາຊິກປະມານ6ຄົນເປັນຜູ້ດຳເນີນການອະພິປາຍ1ຄົນມີຜູ້ຊ່ຽວຊານວິທະຍາກອນຮັບເຊີນມາເຄິ່ງໜຶ່ງອີກເຄິ່ງໜຶ່ງເປັນຕົວແທນກຸ່ມຜູ້ຟັງ.

**6.6. ຂໍ້ດີ ແລະ ຂໍ້ຈຳກັດ**

**ຂໍ້ດີ**

- ເປັນວິທີທີ່ຊ່ວຍໃຫ້ຜູ້ຮຽນກຸ່ມໃຫຍ່ມີໂອກາດສະແດງຄວາມຄິດເຫັນ
- ເປັນວິທີສອນຊ່ວຍໃຫ້ຜູ້ຮຽນແລະຜູ້ສອນໄດ້ຂໍ້ມູນແລະຄວາມຄິດເຫັນທີ່ຫຼາກຫຼາຍ
- ເປັນວິສອນທີ່ສົ່ງເສີມປະຕິສຳພັນທາງສັງຄົມລະຫວ່າງຜູ້ຮຽນຊ່ວຍໃຫ້ຜູ້ຮຽນໄດ້ພັດທະນາທັກສະຕ່າງໆ

**ຂໍ້ຈຳກັດ/ຂໍ້ເສຍ**

- ເປັນວິທີສອນທີ່ໃຊ້ເວລາຫຼາຍ
- ເປັນວິທີສອນທີ່ຕ້ອງອາໃສສະຖານທີ່ທີ່ບໍລິເວນກ້ວາງ
- ຫາກຜູ້ຮຽນບໍ່ຮູ້ຫຼືບໍ່ປະຕິບັດຕົນຕາມບົດບາດໜ້າທີ່ຂອງສະມາຊິກກຸ່ມທີ່ດີການອະພິປາຍອາດບໍ່ໄດ້ຜົນ
- ຫາກສະມາຊິກກຸ່ມແລະຜູ້ສອນບໍ່ສາມາດຄວບຄຸມສະຖານະການໄດ້ກໍອາດເກີດບັນຫາການປະຕິສຳພັນລະຫວ່າງສະມາຊິກໃນກຸ່ມໄດ້.

## 7. ວິທີການສອນໂດຍໃຊ້ການສະແດງບົດບາດສົມມຸດ

ການໃຫ້ຜູ້ຮຽນສະແດງບົດບາດສົມມຸດກໍ່ເພື່ອວັດຖຸປະສົງທີ່ຈະໃຊ້ບົດບາດເປັນເຄື່ອງມືໃນການດຶງດູດຄວາມຮູ້ສຶກນຶກຄິດການຮັບຮູ້ທີ່ນອນຢູ່ໃນສ່ວນເລິກຂອງຜູ້ສະແດງອອກມາເປັນຂໍ້ມູນໃນການຮຽນຮູ້.

### 7.1 ຄວາມໝາຍ

ວິທີສອນໂດຍໃຊ້ການສະແດງບົດບາດສົມມຸດ ຄືຂະບວນການທີ່ຜູ້ສອນໃຊ້ໃນການຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ຕາມວັດຖຸປະສົງທີ່ກຳນົດໂດຍການໃຫ້ຜູ້ຮຽນສວມບົດບາດໃນສະຖານະ



CamScanner

CamScanner

ການເຊິ່ງມີຄວາມໃກ້ຄຽງກັບຄວາມເປັນຈິງ ແລະ ສະແດງອອກຕາມຄວາມຮູ້ສຶກນຶກຄິດຂອງຕົນ ແລະ ນຳເອົາການສະແດງອອກຂອງຜູ້ສະແດງ ທັງທາງດ້ານຄວາມຮູ້ ຄວາມຄິດ ຄວາມຮູ້ສຶກ ແລະ ພຶດຕິກຳທີ່ສັງເກດພົບມາເປັນຂໍ້ມູນໃນການອະພິປາຍເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ຕາມວັດຖຸປະສົງ.

### 7.2 ວັດຖຸປະສົງ

ວິທີສອນໂດຍໃຊ້ການສະແດງບົດບາດສົມມຸດເປັນວິທີການທີ່ເລັ່ງໃສ່ໃຫ້ຜູ້ຮຽນໄດ້ຮຽນຮູ້ການເອົາໃຈເຂົ້າມາໃສ່ໃຈເຮົາເກີດຄວາມເຂົ້າໃຈໃນຄວາມຮູ້ສຶກ ແລະ ພຶດຕິກຳທັງຂອງຕົນເອງ ແລະ ຜູ້ອື່ນ ຫຼື ເກີດຄວາມເຂົ້າໃຈໃນເລື່ອງຕ່າງໆທີ່ກ່ຽວກັບບົດບາດສົມມຸດທີ່ຕົນສະແດງ.

### 7.3 ອົງປະກອບສຳຄັນ (ທີ່ຂາດບໍ່ໄດ້) ຂອງວິທີສອນ

- ມີສະຖານະການສົມມຸດ ແລະ ບົດບາດສົມມຸດ
- ມີການສະແດງບົດບາດສົມມຸດ
- ມີການອະພິປາຍກ່ຽວກັບຄວາມຮູ້,ຄວາມຄິດ,ຄວາມຮູ້ສຶກ ແລະ ພຶດຕິກຳທີ່ສະແດງອອກຂອງຜູ້ສະແດງ ແລະ ສະຫຼຸບການຮຽນທີ່ໄດ້ຮັບ

### 7.4 ຂັ້ນຕອນສຳຄັນ(ຂາດບໍ່ໄດ້)ຂອງການສອນ

- ຜູ້ສອນ/ຜູ້ຮຽນນຳສະເໜີສະຖານະການສົມມຸດ ແລະ ບົດບາດສົມມຸດ
- ຜູ້ສອນຜູ້ຮຽນເລືອກຜູ້ສະແດງບົດບາດ
- ຜູ້ສອນກຽມຜູ້ສັງເກດການ
- ຜູ້ຮຽນສະແດງບົດບາດ ແລະ ສັງເກດພຶດຕິກຳທີ່ສະແດງ
- ຜູ້ສອນ ແລະ ຜູ້ຮຽນອະພິປາຍກ່ຽວກັບຄວາມຮູ້,ຄວາມຄິດ,ຄວາມຮູ້ສຶກ ແລະ ພຶດຕິກຳທີ່ສະແດງອອກຂອງຜູ້ສະແດງ
- ຜູ້ສອນ ແລະ ຜູ້ຮຽນສະຫຼຸບການຮຽນທີ່ໄດ້ຮັບຈາກການສະແດງ ແລະ ການຊົມການສະແດງ

### 7.5 ເຕັກນິກ ແລະ ຂໍ້ຄວນເອົາໃຈໃສ່ໃນການໃຊ້ວິທີສອນໂດຍການໃຊ້ການສະແດງບົດບາດສົມມຸດໃຫ້ມີປະສິດທິພາບ

**1. ການກະກຽມ**

ຜູ້ສອນກຳນົດວັດຖຸປະສົງສະເພາະໃຫ້ຊັດເຈນ ແລະ ສ້າງສະຖານະການ ແລະ ບົດບາດສົມມຸດທີ່ຈະຊ່ວຍສະໜອງວັດຖຸປະສົງນັ້ນສະຖານະການ ການສົມມຸດຂຶ້ນມີຄວາມໃກ້ຄຽງກັບຄວາມຈິງສ່ວນຈະມີລາຍລະອຽດໜ້ອຍຫຼາຍສ່ຳໃດເຊິ່ງຂຶ້ນກັບວັດຖຸປະສົງຜູ້ສອນອາດໃຊ້ບົດບາດສົມມຸດແບບລະຄອນເຊິ່ງຈະກຳນົດເລື່ອງລາວໃຫ້ສະແດງແຕ່ບໍ່ມີບົດບາດໃຫ້ຜູ້ສວມບົດບາດຈະຕ້ອງຄິດສະແດງເອງ ຫຼື ອາດໃຊ້ບົດບາດສົມມຸດແບບແກ້ໄຂບັນຫາເຊິ່ງຈະກຳນົດສະຖານະ ທີ່ມີບັນຫາຫ ຫຼື ຂໍ້ຂັດແຍ່ງ ແລະອາດໃຫ້ຂໍ້ມູນເພີ່ມເຕີມຫຼາຍຄັ້ງ,ໜ້ອຍຄັ້ງ ເຊິ່ງຜູ້ສວມບົດບາດຈະໃຊ້ຂໍ້ມູນເຫຼົ່ານັ້ນໃນການການສະແດງອອກ ແລະ ແກ້ໄຂບັນຫາຕາມຄວາມຄິດຂອງຕົນ

**2. ການເລີ່ມບົດຮຽນ**

ຜູ້ສອນສາມາດກະຕຸ້ນຄວາມສົນໃຈຂອງຜູ້ຮຽນໄດ້ຫຼາຍວິທີເຊັ່ນ:ປະສົບການໃກ້ຕົວຜູ້ຮຽນ ຫຼື ປະສົບທີ່ຜູ້ຮຽນໄດ້ຮັບຈາກປະສົບການຄັ້ງກ່ອນ ໆ ເຂົ້າສູ່ເລື່ອງທີ່ຈະສຶກສາ



CamScanner
CamScanner

ຫຼື ອາດໃຊ້ວິທີເລົ່າເລື່ອງລາວ ຫຼື ສະຖານະການການສົມມຸດທີ່ກຽມມາແລ້ວປະໄວ້ທ້າຍດ້ວຍປັນຫາເປັນການກະຕຸ້ນໃຫ້ຜູ້ຮຽນຢາກຄິດ ຢາກຕິດຕາມ ຫຼື ອາດໃຊ້ວິທີຊີ້ແຈງໃຫ້ຜູ້ຮຽນເຫັນປະໂຫຍດຈາກການເຂົ້າຮ່ວມສະແດງ ແລະ ຊ່ວຍກັນຄິດແກ້ໄຂປັນຫາ

**3. ການເລືອກຜູ້ສະແດງ**

ຄວນເລືອກໃຫ້ສອດຄ່ອງກັບຈຸດປະສົງຂອງການສະແດງເຊັ່ນ:ເລືອກຜູ້ສະແດງທີ່ມີລັກສະນະເໝາະສົມກັບບົດບາດເພື່ອຊ່ວຍໃຫ້ການສະແດງເປັນໄປດ້ວຍດີຕາມວັດຖຸປະສົງໄດ້ຢ່າງໄວວາ ຫຼື ເລືອກຜູ້ສະແດງທີ່ມີລັກສະນະກົງກັນຂ້າມກັບບົດບາດທີ່ກຳນົດໃຫ້ເພື່ອຊ່ວຍໃຫ້ນັກຮຽນຄົນນັ້ນຮັບປະສົບການໃໝ່.ໄດ້ທົດລອງສະແດງພຶດຕິກຳໃໝ່ໆ ແລະ ເກີດຄວາມເຂົ້າໃຈໃນຄວາມຮູ້ສຶກ ແລະ ພຶດຕິກຳຂອງຜູ້ທີ່ມີລັກສະນະຕ່າງໄປຈາກຕົນ ຫຼື ອາດໃຫ້ຜູ້ຮຽນອາສາສະໝັກ ຫຼື ເຈາະຈົງເອົາຄົນໃດຄົນໜຶ່ງດ້ວຍວັດຖຸປະສົງທີ່ຕ້ອງການຊ່ວຍໃຫ້ບຸກຄົນນັ້ນເກີດການຮຽນຮູ້ເມື່ອໄດ້ຜູ້ສະແດງແລ້ວ ຄວນໃຫ້ຜູ້ສະແດງກຽມການສະແດງໂດຍອາດຝຶກຊ້ອມຕາມຄວາມເໝາະສົມ

**5.4 ການກຽມຜູ້ສັງເກດການ ຫຼື ຜູ້ຊົມ**

ຜູ້ສອນຄວນກຽມຜູ້ຊົມ ແລະ ທຳຄວາມເຂົ້າໃຈກັບຜູ້ຊົມວ່າການສະແດງບົດບາດສົມມຸດນີ້ບໍ່ໄດ້ຈັດຂຶ້ນເພື່ອຄວາມສະໜຸກເພີດເພີນເທົ່ານັ້ນ ແຕ່ເພື່ອໃຫ້ເກີດການຮຽນຮູ້ເປັນສິ່ງສຳຄັນ ດັ່ງນັ້ນ ຈຶ່ງຄວນຊົມດ້ວຍການສັງເກດຜູ້ສອນຄວນໃຫ້ຄຳແນະນຳວ່າຄວນສັງເກດແນວໃດ ແລະ ຄວນບັນທຶກຂໍ້ມູນແນວໃດ ແລະ ຜູ້ສອນອາດຮູບແບບສັງເກດການໃຫ້ຜູ້ຊົມໃຊ້ໃນການສັງເກດດ້ວຍກໍ່ໄດ້

**5. ການສະແດງ**

ກ່ອນການສະແດງອາດມີການຈັດສາກການສະແດງໃຫ້ສົມຈິງສາກການສະແດງອາດເປັນສາກງ່າຍໆ ຫຼື ອາດຈະຈັດໃຫ້ເບິ່ງແບບສວຍງາມແຕ່ບໍ່ຄວນໃຊ້ເວລາຫຼາຍ ແລະ ຄວນຄຳນຶງເຖິງຄວາມປະຫຍັດດ້ວຍເມື່ອທຸກຝ່າຍພ້ອມແລ້ວຜູ້ສອນໃຫ້ເລີ່ມການສະແດງ ແລະ ສັງເກດການສະແດງຢ່າງໃກ້ຊິດບໍ່ຄວນມີການຂັດການສະແດງເຄິ່ງກາງນອກຈາກກໍລະນີທີ່ມີປັນຫາເມື່ອການສະແດງອອກນອກທາງຜູ້ສອນອາດຈຳເປັນຕ້ອງໃຫ້ຄຳແນະນຳເມື່ອການສະແດງດຳເນີນໄປພໍສົມຄວນແລ້ວຜູ້ສອນຄວນຕັດບົດ ຢຸດການສະແດງ ບໍ່ຄວນໃຫ້ການສະແດງຍືດຍາວຫຼາຍຈະເຮັດໃຫ້ຜູ້ຊົມເກີດຄວາມເບື່ອໜ່າຍ ການຕັດບົດຄວນເຮັດເມື່ອເຫັນວ່າການສະແດງໄດ້ໃຫ້ຂໍ້ມູນແກ່ກຸ່ມພຽງພໍທີ່ຈະນຳມາວິເຄາະ ແລະ ອະພິປາຍເພື່ອໃຫ້ເກີດການຮຽນຮູ້ຕາມວັດຖຸປະສົງ ຫຼື ຕັດບົດເມື່ອການສະແດງຍືດຍາວ ຫຼື ເມື່ອຜູ້ຊົມພໍຈະເດົາໄດ້ວ່າເລື່ອງລາວພໍຈະດຳເນີນຕໍ່ໄປແນວໃດ ຫຼື ກໍລະນີຜູ້ສະແດງເກີດຄວາມສະເທືອນໃຈຫຼາຍເກີນໄປຈົນສະແດງຕໍ່ໄປບໍ່ໄດ້ຄວນຕັດບົດທັນທີ

**6. ການວິເຄາະ,ອະພິປາຍຜົນການສະແດງ**

ຂັ້ນນີ້ເປັນຂັ້ນສຳຄັນຫຼາຍເພາະເປັນຂັ້ນທີ່ຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ທີ່ຊັດເຈນຕາມວັດຖຸປະສົງເຕັກນິກທີ່ຈຳເປັນສຳລັບການອະພິປາຍໃນຫວ່າງນີ້ມີຫຼາຍປະການທີ່ສຳຄັນຄື:ການສຳພາດຄວາມຮູ້ສຶກ ແລະ ຄວາມຄິດຂອງຜູ້ສະແດງ ແລະ ຈົດບັນທຶກເທິງກະດານຕໍ່ຈາກນັ້ນຈຶ່ງສຳພາດຜູ້ຊົມຫຼືຜູ້ສັງເກດການເຖິງຂໍ້ມູທີ່ສັງເກດໄດ້ຜູ້ສອນຄວນບັນທຶກຂໍ້ມູນເລົ່ານີ້ເທິງກະດານເພື່ອຊ່ວຍໃຫ້ຜູ້ຮຽນເຫັນປະເດັນໃນການອະພິປາຍແລະສະຫຼຸບຕໍ່ຈາກນັ້ນຈຶ່ງໃຫ້ທຸກຝ່າຍຮ່ວມກັນອະພິປາຍສະແດງຄວາມຄິດເຫັນ ແລະ ສະຫຼຸບປະເດັນການຮຽນຮູ້ສິ່ງທີ່ສຳຄັນຫຼາຍທີ່ຜູ້ສອນຄວນຄຳນຶງໃນການອະພິປາຍຄືການໃຫ້ຜູ້



CamScanner
CamScanner

ສະແດງບົດບາດສົມມຸດກໍ່ເພື່ອວັດຖຸປະສົງທີ່ຈະໃຊ້ບົດບາດເປັນເຄື່ອງມືໃນການດຶງຄວາມຮູ້ສຶກນຶກຄິດ ການຮັບຮູ້ເຈດຄະຕິ ແລະລັກສະນະຕ່າງໆທີ່ເຊື່ອງຢູ່ໃນສ່ວນເລິກຂອງຜູ້ສະແດງອອກມາເພື່ອເປັນຂໍ້ມູນໃນການຮຽນຮູ້ດັ່ງນັ້ນການອະພິປາຍຈຶ່ງຕ້ອງເນັ້ນໜັກ ແລະອະພິປາຍໃນເລື່ອງຂອງພຶດຕິກຳທີ່ຜູ້ສວມບົດບາດສະແດງອອກ ແລະ ຄວາມຮູ້ສຶກທີ່ເປັນເຫດຜົນຊຸກຍູ້ໃຫ້ເກີດການສະແດງພຶດຕິກຳນັ້ນອອກມາການສອບຖາມຈຶ່ງຄວນເນັ້ນໜັກໄປທີ່ຜູ້ສະແດງໄດ້ສະແດງພຶດຕິກຳຫຍັງແນ່ ເປັນຫຍັງຈຶ່ງສະແດງພຶດຕິກຳແນວນັ້ນ ແລະພຶດຕິກຳກໍ່ໃຫ້ເກີດຜົນຫຍັງຕາມມາການອະພິປາຍບໍ່ຄວນເນັ້ນໜັກໄປທີ່ການສະແດງຂອງຜູ້ສວມບົດບາດວ່າສະແດງໄດ້ດີ-ບໍ່ໄດ້ດີປານໃດນອກຈາກຈະເປັນການອະພິປາຍທີ່ຜິດວັດຖຸປະສົງ ແລະ ຍັງເຮັດໃຫ້ຜູ້ສະແດງເສຍຄວາມຮູ້ສຶກໄດ້

ໃນກໍລະນີການອະພິປາຍເປັນໄປຢ່າງມີປະສິດທິພາບ ແລະ ຜູ້ຮຽນສະເໜີແນະແນວຄິດ ແລະແນວທາງອື່ນໆເພີ່ມເຕີມແຕກຕ່າງໄປຈາກທີ່ຜູ້ສວມບົດບາດສະແດງຜູ້ສອນອາດໃຫ້ມີການສະແດງ ແລະ ການອະພິປາຍເພີ່ມເຕີມ ແລະ ສຸຫຼຸບບົດຮຽນອີກເທື່ອໜຶ່ງ

## 7.6. ຂໍ້ດີ ແລະ ຂໍ້ຈຳກັດຂອງວິທີສອນໂດຍໃຊ້ບົດບາດສົມມຸດ

**ຂໍ້ດີ**

- ເປັນວິທີທີ່ຊ່ວຍໃຫ້ຜູ້ຮຽນເກີດຄວາມເຂົ້າໃຈຄວາມຮູ້ສຶກແລະພຶດຕິກຳຂອງຜູ້ອື່ນໄດ້ຮຽນຮູ້ການເອົາໃຈເຂົາມາໃສ່ໃຈເຮົາການເກີດການຮຽນຮູ້ທີ່ເລິກເຊິ່ງ
- ເປັນວິທີສອນທີ່ຊ່ວຍໃຫ້ນັກຮຽນມີຄວາມເຂົ້າໃຈແລະເກີດການປ່ຽນແປງເຈດຕະນາຄະຕິແລະພຶດຕິກຳຂອງຕົນ
- ເປັນວິທີສອນຊ່ວຍພັດທະນາທັກສະໃນການຜົບສະຖານະການຕັດສິນໃຈແລະແກ້ໄຂບັນຫາ
- ເປັນວິທີທີ່ຊ່ວຍໃຫ້ການຮຽນການສອນມີຄວາມໃກ້ຄຽງກັບສະພາບຄວາມເປັນຈິງ
- ເປັນວິສອນທີ່ເປີດໂອກາດໃຫ້ຜູ້ຮຽນມີສ່ວນຮ່ວມໃນການຮຽນຫຼາຍຜູ້ຮຽນໄດ້ຮຽນຮູ້ຢ່າງມ່ວນຊື່ນ ແລະ ການຮຽນຮູ້ມີຄວາມໝາຍສຳຄັນຫຼາຍສຳລັບຜູ້ຮຽນເພາະຂໍ້ມູນມາຈາກຜູ້ຮຽນໂດຍກົງ.

**ຂໍ້ຈຳກັດ/ຂໍ້ເສຍ**

- ເປັນວິທີສອນທີ່ໃຊ້ເວລາຫຼາຍພໍສົມຄວນ
- ເປັນວິທີສອນທີ່ຕ້ອງອາໄສການກະກຽມ ແລະ ການຈັດການຢ່າງໜາແໜ້ນ ຫາກຈັດການບໍ່ໜາແໜ້ນອາດເກີດຄວາມສັບສົນຂຶ້ນໄດ້
- ເປັນວິທີທີ່ຕ້ອງອາໄສຄວາມໄວໃນການຮັບຮູ້ ຂອງຜູ້ສອນຫາກຜູ້ສອນຂາດຄຸນສົມບັດນີ້ບໍ່ຮັບຮູ້ບັນຫາທີ່ເກີດຂຶ້ນກັບຜູ້ຮຽນບາງຄົນ ແລະ ບໍ່ໄດ້ແກ້ບັນຫາແຕ່ຕົ້ນອາດເກີດປັນຫາຕໍ່ເນື່ອງໄປໄດ້
- ເປັນວິທີສອນທີ່ຕ້ອງອາໄສຄວາມໄວໃນການຮັບຮູ້ຄວາມສາມາດຂອງຄູໃນການແກ້ໄຂບັນຫາເນື່ອງຈາກການສະແດງຂອງຜູ້ຮຽນອາດບໍ່ເປັນໄປຕາມຄວາມຄາດໝາຍຂອງຜູ້ສອນຈະຕ້ອງສາມາດແກ້ໄຂບັນຫາ ຫຼື ປັບສະຖານະການ ແລະ ປະຄັບໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້.



CS CamScanner

CS CamScanner

**8. ວິທີສອນແບບການຮຽນຮູ້ດ້ວຍຕົນເອງ**

ກ. ຄວາມໝາຍ

ຂ. ຫຼັກການຈັດການຮຽນຮູ້

ຄ. ການຝຶກການຮຽນຮູ້ດ້ວຍຕົນເອງ

ງ. ຕົວຢ່າງການຈັດກິດຈະກຳການຮຽນຮູ້

❖ **ແນວຄິດກ່ຽວກັບການຮຽນຮູ້ດ້ວຍຕົນເອງ**

ການຮຽນຮູ້ທີ່ເກີດຈາກການຟັງຄຳບັນຍາຍ ຫຼື ເຮັດຕາມທີ່ຄູຜູ້ສອນບອກ ສະເໜີໄປ ແຕ່ອາດຈະເກີດສະຖານະການຕ່າງໆດັ່ງໄປນີ້ (ສົມຄິດ ອິດສະລະວັນ, 2532 ໜ້າ 74)

1. ການຮຽນຮູ້ (self-directed learning) ເປັນການຮຽນທີ່ເກີດຈາກຄວາມຢາກຮູ້ ອາດຈະເຫັນ ຜູ້ຮຽນຈະມີການວາງແຜນດ້ວຍຕົນເອງ
2. ການຮຽນຮູ້ຈັດໂດຍສະຖາບັນການສຶກສາ (provide sponsored) ໂດຍມີກຸ່ມບຸກຄົນຈັດກຳກັບເບິ່ງແຍງ ມີການໃຫ້ຄະແນນ ໃຫ້ປະລິນຍາ ຫຼື ປະກາດສະນີຍະບັດ
3. ການຮຽນຮູ້ຈາກກຸ່ມການຮຽນຮູ້ແບບບໍ່ເປັນທາງການຄື ຊ່ວຍເຫຼືອເຊິ່ງກັນ ແລະ ກັນ (collaborative learning)
4. ການຮຽນຮູ້ໂດຍບັງເອີນ (random or incidental learning) ອາດເປັນຜົນພອຍໄດ້ຂາກເຫດການຢ່າງໃດຢ່າງໜຶ່ງທີ່ຜູ້ຮຽນບໍ່ໄດ້ເຈດຕະນາ.

ຈະເຫັນໄດ້ວ່າ ການຮຽນຮູ້ດ້ວຍຕົນເອງເປັນວິທີການຮຽນຮູ້ວິທີໜຶ່ງທີ່ນັກສຶກສາໃຫ້ຄວາມສຳຄັນ ແລະ ເປັນສິ່ງທີ່ຄວນສົ່ງເສີມໃຫ້ມີຂຶ້ນໃນຕົວຜູ້ຮຽນ ເພາະເມື່ອໃດກໍ່ຕາມທີ່ຜູ້ຮຽນມີໃຈຮັກທີ່ຈະສຶກສາຄົ້ນຄ້ວາຕາມ ຄວາມຕ້ອງການກໍ່ຈະເກີດການສຶກສາຕໍ່ເນື່ອງ ໂດຍບໍ່ຕ້ອງບອກ ແລະ ມີແຮງກະຕຸ້ນໃຫ້ເກີດຄວາມຢາກຮູ້ ຢາກເຫັນບໍ່ສິ້ນສຸດ ຊຶ່ງຈະນຳໄປສູ່ການເປັນຜູ້ຮຽນຕະຫຼອດຊີວິດ (life long learner) ຫຼື ບຸກຄົນແຫ່ງການຮຽນຮູ້ທີ່ຍັ້ງຢືນ (learning person) ອັນເປັນເປົ້າໝາຍສູງສຸດຂອງການສຶກສາ.

❖ **ອົງປະກອບຂອງການຮຽນຮູ້ດ້ວຍຕົນເອງ Knowles (1975, pp. 40-47) ໄດ້ອະທິບາຍເຖິງອົງປະກອບທີ່ສຳຄັນໃນການຮຽນຮູ້ດ້ວຍຕົນເອງໄວ້ດັ່ງນີ້.**

1. ການວິເຄາະຄວາມຕ້ອງການຂອງຕົນເອງ ຈະເລີ່ມຕົ້ນຈາກການໃຫ້ຜູ້ຮຽນແຕ່ລະຄົນບອກຄວາມຕ້ອງການ ແລະ ຄວາມສົນໃຈພິເສດຂອງຕົນເອງ ໃນການຮຽນໃຫ້ເພື່ອນອີກຄົນໜຶ່ງເຮັດໜ້າທີ່ເປັນຜູ້ໃຫ້ຄຳປຶກສາແນະນຳ ແລະ ເພື່ອນອີກຄົນໜຶ່ງເຮັດໜ້າທີ່ໃນການຈົດບັນທຶກ ເຮັດແບບນີ້ໝູນວຽນໄປຈົນຄົບທັງ3ຄົນ ໄດ້ສະແດງບົດບາດຄົບ3 ດ້ານຄື: ຜູ້ສະເໜີຄວາມຕ້ອງການ ຜູ້ໃຫ້ຄຳປຶກສາ ແລະ ຜູ້ຄອຍຈົດບັນທຶກສັງເກດການ ການຮຽນຮູ້ບົດບາດດັ່ງກ່າວໃຫ້ປະໂຫຍດຢ່າງຍິ່ງໃນການຮຽນຮ່ວມກັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ຊ່ວຍເຫຼືອເຊຊຶ່ງກັນ ແລະ ກັນໃນທຸກໆດ້ານ.



CamScanner

CamScanner

2. ກຳນົດຈຸດມຸ່ງໝາຍໃນການຮຽນ ໂດຍເລີ່ມຕົ້ນຈາກບົດບາດຂອງຜູ້ຮຽນເປັນສຳຄັນດັ່ງນີ້.

2.1 ຜູ້ຮຽນຄວນສຶກສາຈຸດມຸ່ງໝາຍຂອງວິຊາ ແລ້ວຈຶ່ງເລີ່ມຂຽນຈຸດມຸ່ງໝາຍໃນການຮຽນ

2.2 ຜູ້ຮຽນຄວນຂຽນຈຸດມຸ່ງໝາຍໃຫ້ແຈ່ມແຈ້ງຊັດເຈນ ເຂົ້າໃຈໄດ້ ບໍ່ຄຸມເຄືອ ຄົນອື່ນອ່ານແລ້ວເຂົ້າໃຈ

2.3 ຜູ້ຮຽນຄວນຂຽນເນັ້ນເຖິງພຶດຕິກຳທີ່ຜູ້ຮຽນຄາດຫວັງໄວ້

2.4 ຜູ້ຮຽນຄວນກຳນົດຈຸດມຸ່ງໝາຍທີ່ສາມາດວັດໄດ້

2.5 ການກຳນົດຈຸດມຸ່ງໝາຍຂອງຜູ້ຮຽນໃນແຕ່ລະລະດັບ ຄວນມີຄວາມແຕກຕ່າງກັນຢ່າງເຫັນໄດ້ຊັດເຈນ.

3. ການວາງແຜນການຮຽນ ໂດຍເນັ້ນຜູ້ຮຽນກຳນົດວັດຖຸປະສົງຂອງວິຊາ ຜູ້ຮຽນຄວນວາງແຜນການຈັດກິດຈະກຳການຮຽນຕາມລຳດັບດັ່ງນີ້.

3.1 ຜູ້ຮຽນຈະຕ້ອງເປັນຜູ້ກຳນົດກ່ຽວກັບການວາງແຜນການຮຽນຂອງຕົນເອງ

3.2 ການວາງແຜນການຮຽນຂອງຜູ້ຮຽນ ຄວນເລີ່ມຕົ້ນຈາກຜູ້ຮຽນກຳໜົດຈຸດມຸ່ງໝາຍໃນການຮຽນຮູ້ດ້ວຍຕົນເອງ.

3.3 ຜູ້ຮຽນເປັນຜູ້ຈັດເນື້ອຫາໃຫ້ເໝາະສົມກັບສະພາບຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນ.

3.4 ຜູ້ຮຽນເປັນຜູ້ລະບຸວິທີຮຽນ ເພື່ອໃຫ້ເໝາະສົມກັບຕົນເອງຫຼາຍທີ່ສຸດ.

4. ການສະແຫວງຫາແຫຼ່ງວິທະຍາການ ເປັນຂະບວນການສຶກສາຄົ້ນຄວ້າທີ່ມີຄວາມສຳຄັນຕໍ່ການສຶກສາໃນປັດຈຸບັນເປັນຢ່າງຫຼາຍ ດັ່ງນີ້.

4.1 ປະສົບການການຮຽນແຕ່ລະດ້ານທີ່ຈັດໃຫ້ຜູ້ຮຽນສາມາດສະແດງໃຫ້ເຫັນເຖິງຄວາມມຸ່ງໝາຍຄວາມໝາຍ ແລະ ຄວາມສຳເລັດຂອງອີງປະສົບການນັ້ນໆ.

4.2 ແຫຼ່ງວິຊາການເຊັ່ນ: ຫ້ອງສະໝຸດ, ສະຖານນີອະນາໄມ ສາມາດນຳມາໃຊ້ໄດ້ຢ່າງເໝາະສົມ.

4.3 ເລືອກແຫຼ່ງວິທະຍາການໃຫ້ເໝາະສົມກັບຜູ້ຮຽນແຕ່ລະຄົນ.

4.4 ມີການຈັດສອນຢ່າງດີ ເໝາະສົມ ກິດຈະກຳບາງສ່ວນຜູ້ຮຽນຈະເປັນຜູ້ຈັດການເອງຕາມລຳພັງ ແລະ ບາງສ່ວນເປັນກິດຈະກຳທີ່ຈັດຮ່ວມກັນລະຫວ່າງຄູກັບຜູ້ຮຽນ.



CamScanner
CamScanner

5. ການປະເມີນຜົນ ເປັນຂັ້ນຕອນສຳຄັນໃນຂະບວນການຮຽນດ້ວຍຕົນເອງ ຊ່ວຍໃຫ້ຜູ້ຮຽນຮູ້ເຖິງຄວາມກ້າວໜ້າໃນການຮຽນຂອງຕົນເອງເປັນຢ່າງດີ ການປະເມີນຜົນຈະຕ້ອງສອດຄ່ອງກັບວັດຖຸປະສົງ ທັງນີ້ຈະກ່ຽວຂ້ອງກັບສິ່ງຕໍ່ໄປນີ້: ຄວາມຮູ້ ຄວາມເຂົ້າໃຈ ທັກສະ ທັດສະນະຄະຕິ ແລະ ຄ່ານິຍົມ ຊຶ່ງຂັ້ນຕອນໃນການປະເມີນຜົນດັ່ງນີ້.

5.1 ກຳນົດເປົ້າໝາຍ ວັດຖຸປະສົງໃຫ້ແນ່ນອນ

5.2 ດຳເນີນການທຸກຢ່າງ ເພື່ອໃຫ້ບັນລຸຕາມວັດຖຸປະສົງທີ່ວາງໄວ້ ຂັ້ນຕອນນີ້ສຳຄັນໃນການປະເມີນຜົນການຮຽນ-ການສອນ.

5.3 ລວບລວມຫຼັກຖານ ການຕັດສິນໃຈຈາກການປະເມີນຜົນຈະຕ້ອງຢູ່ບົນພື້ນຖານຂອງຂໍ້ມູນທີ່ສົມບູນ ແລະ ເຊື່ອຖືໄດ້.

5.4 ລວບລວມຂໍ້ມູນກ່ອນຮຽນ ເພື່ອປຽບທຽບຫຼັງຮຽນວ່າ ຜູ້ຮຽນກ້າວໜ້າໄປພຽງໃດ.

**3.5** ແຫຼ່ງຂອງຂໍ້ມູນ ຈະຫາຂໍ້ມູນຈາກຄູ ແລະ ຜູ້ຮຽນເປັນຫຼັກໃນການປະເມີນ.

- **ຄວາມສຳຄັນຂອງການຮຽນຮູ້ດ້ວຍຕົນເອງ Knowles (1975, pp. 14-17) ກ່າວເຖິງການຮຽນຮູ້ດ້ວຍຕົນເອງວ່າມີຄວາມສຳຄັນ 4 ປະການຄື:**

1. ບຸກຄົນທີ່ຮຽນຮູ້ດ້ວຍການລິເລີ່ມຂອງຕົນຈະຮຽນໄດ້ຫຼາຍກ່ວາ ດີກວ່າບຸກຄົນທີ່ເປັນພຽງຜູ້ຮັບ ຫຼືລໍໃຫ້ຜູ້ສອນຖ່າຍທອດວິຊາຄວາມຮູ້ໃຫ້ ບຸກຄົນທີ່ຮຽນຮູ້ດ້ວຍຕົນເອງ ຈະຮຽນຢ່າງຕັ້ງໃຈ ມີຈຸດມຸ່ງໝາຍ ແລະ ມີແຮງຈູງໃຈສູງ ສາມາດໃຊ້ປະໂຫຍດຈາກການຮຽນຮູ້ໄດ້ດີກວ່າ ແລະ ຍາວນານກ່ວາບຸກຄົນທີ່ລໍຮັບການສອນແຕ່ຢ່າງດຽວ.
2. ການຮຽນຮູ້ດ້ວຍຕົນເອງມີຄວາມສອດຄ່ອງກັບຂະບວນການທາງທຳມະຊາດຂອງຈິດວິທະຍາ ພັດທະນາການ ເມື່ອເລີ່ມເກີດອອກມາບຸກຄົນຕ້ອງເພິ່ງຜູ້ອື່ນ ຈຳເປັນຕ້ອງມີພໍ່-ແມ່ປົກປ້ອງ ແລະ ຕັດສິນໃຈແທນ ແຕ່ເມື່ອບຸກຄົນເຕີບໂຕໃຫຍ່ຂຶ້ນ ມີຄວາມເປັນຜູ້ໃຫຍ່ຫຼາຍຂຶ້ນຈະຄ່ອຍໆພັດທະນາຕົນເອງໄປສູ່ຄວາມອິດສະຫຼະ ບໍ່ຕ້ອງເພິ່ງຜູ້ອື່ນ ຜູ້ຕ້ອງຢູ່ພາຍໃຕ້ການຄວບຄຸມຂອງຜູ້ອື່ນ ຫຼື ກຳກັບຂອງຜູ້ອື່ນ ຈະມີຄວາມເປັນຕົວຂອງຕົວເອງຫຼາຍຂຶ້ນສາມາດດຳເນີນຊີວິດໄດ້ດ້ວຍຕົນເອງ ແລະ ຊີ້ນຳຕົນເອງໄດ້.
3. ມີນະວັດຕະກຳທາງການສຶກສາເພີ່ມຂຶ້ນຫຼາຍເຊັ່ນ: ມີຫຼັກສູດໃໝ່ ຫ້ອງຮຽນແບບເປີດ ສູນບໍລິການການສຶກສາຢ່າງອິດສະຫຼະ ໂປຼແກມການຮຽນ ທີ່ຈັດສຳລັບບຸກຄົນພາຍນອກ ການສຶກສາລະບົບມະຫາວິທະຍາໄລເປີດເປັນຕົ້ນ ຮູບແບບຂອງນະວັດຕະກຳ ເຫຼົ່ານີ້ລ້ວນແຕ່ເປັນຄວາມຮັບຜິດຊອບຂອງຜູ້ຮຽນທີ່ຈະຕ້ອງເລີ່ມຈາກການລິເລີ່ມການຮຽນຮູ້ດ້ວຍຕົນເອງ.
4. ຄວາມປ່ຽນແປງຂອງໂລກຫຼາຍໆດ້ານຢ່າງວ່ອງໄວ ເຮັດໃຫ້ເກີດແນວຄວາມຄິດໃໝ່ໃນການສຶກສາໄດ້ແກ່:

4.1 ຄວາມຮູ້ຕ່າງໆທີ່ມະນຸດຮຽນຮູ້ ແລະ ສະສົມໄວ້ຈະຄ່ອຍໆລ້າສະໄໝ ແລະ ໝົດໄປພາຍໃນເວລາ 10 ປີ ຫຼື ໜ້ອຍ ດັ່ງນັ້ນຈຶ່ງຕ້ອງພັດທະນາທັກສະດັ່ງກ່າວ ເມື່ອບຸກຄົນຈົບການສຶກສາໄປແລ້ວກໍ່ຍັງສາມາດ ສະແຫວງຫາຄວາມຮູ້ເພີ່ມເຕີມໄດ້ ເພື່ອພັດທະນາຕົນເອງໃຫ້ມີຄວາມຮູ້ໃໝ່ເທົ່າທັນໂລກ.

4.2 ຄວາມໝາຍຂອງ (ການຮຽນຮູ້) ໝາຍເຖິງການທີ່ຜູ້ຮຽນເລີ່ມຮຽນຮູ້ສິ່ງຕ່າງໆຈາກສິ່ງແວດລ້ອມຮອບຕົວຜູ້ຮຽນເຊັ່ນ ຮຽນຮູ້ຈາກພໍ່-ແມ່, ເພື່ອນ, ຕຄ, ສະຖາບັນຕ່າງໆ ຫຼື ຈາກສື່ມວນຊົນເປັນຕົ້ນ ນັ້ນກໍ່ຄືການຮຽນຮູ້ຈະເປັນສ່ວນໜຶ່ງຂອງການດຳເນີນຊີວິດ ແລະ ບຸກຄົນ ສາມາດຮນຮູ້ໄດ້ຕະຫຼອດຊີວິດ.

4.3 ການຮຽນຮູ້ດ້ວຍຕົນເອງ ຈະບໍ່ຈຳກັດອາຍຸຜູ້ຮຽນຜູ້ຮຽນມີໂອກາດທີ່ຈະຕັດສິນໃຈເລືອກຮຽນ ຕາມຄວາມສົນໃຈ ແລະ ຄວາມຕ້ອງການທີ່ຈະຮຽນຮູ້ ຜູ້ຮຽນທີ່ຢູ່ໃນໄວເດັກ ຄວນເນັ້ນທັກ ສະການ ຮຽນຮູ້ດ້ວຍຕົນເອງ ເພື່ອຈະໄດ້ໃຊ້ທັກສະນີ້ໃນການສະແຫວງຫາຄວາມຮູ້ໃຫ້ທັນຕໍ່ເຫດການ ການປ່ຽນແປງຂອງໂລກ.

❖ **ລັກສະນະຂອງການຮຽນຮູ້ດ້ວຍຕົນເອງ**

ການຮຽນຮູ້ດ້ວຍຕົນເອງມີລັກສະນະດັ່ງນີ້ (ພົນຊີ ພາລາວົງ, 236໓ ໜ້າ 84-85)

1. Availability ວິທີຮຽນຊະນິດນີ້ຈະຮຽນເມື່ອເມື່ອໃດ ສະຖານທີ່ໃດ ກໍ່ໄດ້ຕາມຄວາມພໍໃຈໂດຍເລືອກຮຽນຕາມເວລາທີ່ຜູ້ຮຽນວ່າງ ເຮັດໃຫ້ຜູ້ຮຽນຮຽນໄດ້ຢ່າງມີປະສິດທິພາບແຕກຕ່າງຈາກຜູ້ຮຽນບາງຄົນ ເຮັດໃຫ້ເກີດການຮຽນຫຼົ້ມເຫຼວໄດ້.

2. Self-paced ເມື່ອຜູ້ຮຽນເລືອກສະຖານທີ່ໄດ້ຕາມຄວາມພໍໃຈແລ້ວຜູ້ຮຽນຈະໃຊ້ເວລາໃນການທຳຄວາມເຂົ້າໃຈບົດຮຽນໄດ້ເຕັມທີ່ ບາງຄົນອາດຈະໃຊ້ເວລາ1 ຊົ່ວໂມງ ຕໍ່ໜຶ່ງບົດຮຽນໄດ້ເຕັມທີ່ ບາງຄົນອາດຈະໃຊ້ເວລາ 5 ຊົ່ວໂມງກໍ່ໄດ້ ແຕ່ປະສິດທິພາບເທົ່າກັນຄື: ເຂົ້າໃຈບົດຮຽນເນື່ອງຈາກຄວາມສາມາດໃນການຮັບຮູ້ຂອງຜູ້ຮຽນຂອງງແຕ່ລະຄົນຍ່ອມບໍ່ເທົ່າກັນ.

3. Objectives ແບບຮຽນທີ່ຜູ້ຮຽນໆດ້ວຍຕົນເອງ ຕ້ອງບອກຈຸດປະສົງໃນແຕ່ລະບົດໄວ້ໃຫ້ຊັດເຈນ ເພາະຖ້າຜູ້ຮຽນສາມາດຕອບຄຳຖາມຂອງວັດຖຸປະສົງໄດ້ທັງໝົດສະແດງວ່າຜູ້ຮຽນເຂົ້!ໃຈບົດຮຽນນັ້ນໆ.

4. Interaction ການມີປະຕິສຳພັນກັນໃນຄະນະຮຽນ ຊ່ວຍໃຫ້ຜູ້ຮຽນມ່ວນກັບການຮຽນ ໂດຍຜູ້ສອນອາດຈະຊີ້ແນະ ຫື ໃຫ້ການປຶກສາກ່ຽວກັບການວາງແຜນກິດຈະກຳການຮຽນ.

5. Tutor Help ຜູ້ສອນມີໜ້າທີ່ໃຫ້ຄວາມຊ່ວຍເຫຼືອໃນການຮຽນຮູ້ແກ່ຜູ້ຮຽນ



CamScanner

CamScanner

6. Test as Learning Situation ໃນບົດຮຽນໜຶ່ງໆຈະມີແບບທົດສອບຊຶ່ງເປັນເຄື່ອງມືວັດຕາມວັດຖຸປະສົງ ບໍ່ແມ່ນການປະເມີນຜົນການຮຽນ ເພື່ອໃຫ້ນັກຮຽນສອບໄດ້ ຫຼື ຕົກ ຫຼື ໃນພາກປະຕິບັດອາດໃຊ້ວິທີທົດສອບເປັນລາຍບຸກຄົນ.

7. ການເລືອກວິທີຮຽນ ຜູ້ຮຽນແຕ່ລະຄົນຍ່ອມມີວິທີຮຽນແບບທີ່ຕົນມັກ ສະນັ້ນຜູ້ຮຽນສາມາດເລືອກວິທີຮຽນທີ່ເໝາະກັບຕົນເອງ ຄະນະດຽວກັນຜູ້ຮຽນກໍ່ມີອິດສະຫຼະໃນການເລືອກຮຽນບົດຮຽນກ່ອນ ຫຼັງໄດ້.

ການຮຽນຮູ້ດ້ວຍຕົນເອງ (self-directed learning) ເປັນວິທີການຮຽນຮູ້ທີ່ເຮັດໃຫ້ຜູ້ຮຽນມີຄວາມຖະໜັດ ແລະ ມີຄວາມຮັບຜິດຊອບຕໍ່ແຜນການຮຽນຂອງຕົນເອງ ຜູ້ຮຽນຈະເຮັດການວາງແຜນ ແລະ ກຳນົດກິດຈະກຳການຮຽນຮູ້ ເລືອກແຫຼ່ງຂໍ້ມູນ ເລືອກວິທີການຮຽນຮູ້ ແລະ ການປະເມີນຜົນດ້ວຍຕົນເອງ ໂດຍຈະມີຜູ້ຊ່ວຍເຫຼືອ ຫຼື ບໍ່ມີຜູ້ຊ່ວຍເຫຼືອກໍ່ໄດ້.

❖ **ຂັ້ນຕອນການຮຽນຮູ້ດ້ວຍຕົນເອງ**

**ຮຽນຮູ້ທຸກວິທີຈະມີຂັ້ນຕອນເພື່ອເປັນແນວທາງການຮຽນຮູ້ ສຳລັບຂັ້ນຕອນການຮຽນຮູ້ດ້ວຍຕົນເອງ Gross (ປ່ອນອີງ ໃນ ສົມບູນ ຄານະຍາຊີວິນ, 2526, ໜ້າ267) ອະທິບາຍວ່າຂັ້ນຕອນການຮຽນຮູ້ຂອງບຸກຄົນປະກອບດ້ວຍ 3 ຂັ້ນຕອນດັ່ງນີ້**

ຂັ້ນຕອນທີ1: ການຮັບຮູ້ສິ່ງແປກໃໝ່ ເປັນການຮຽນຮູ້ໃນຮູບຂອງຄວາມຮູ້ສຶກກັບຄວາມແປກໃໝ່ທີ່ໄດ້ພົບເຫັນ ກັບຄວາມຮູ້ຕ່າງໆທີ່ໜ້າສົນໃຈ ໜ້າທ້າທາຍສະຕິປັນຍາ.

ຂັ້ນຕອນທີ2: ການຄົ້ນຄິດຕຶກຕອງ ເປັນການຮຽນຮູ້ຢ່າງມີລະບົບ ມີການວິເຄາະຫົວຂໍ້ເທັດຈິງ ພະຍາຍາມໃຫ້ໄດ້ມາເຊິ່ງເຊິ່ງຄວາມຮູ້ ຄວາມຈິງຢ່າງມີລະບົບແບບແຜນ.

ຂັ້ນຕອນທີ3: ການຊາບຊຶ້ງ ແລະ ການສ້າງສາລະ ເປັນຄວາມພ້ອມທີ່ຈະລົງມືປະຕິບັດໄດ້ດ້ວຍຕົນເອງ.

**Tough (ອ້າງອີງໃນ ວິໄລພອນ ມະນີພັນ, 2539,ໜ້າ27-29)ອະທິບາຍຂັ້ນຕອນການວາງແຜນການຮຽນຮູ້ດ້ວຍຕົນເອງດັ່ງນີ້.**

1. ການຕັດສິນໃຈວ່າ: ໃນຂະບວນການຮຽນຮູ້ນັ້ນ ອັນໃດເປັນຄວາມຮູ້ ທັກສະທີ່ຈະຮຽນຮູ້ ຜູ້ຮຽນອາດຈະແນມຫາຂໍ້ຜິດພາດ ແລະ ຈຸດອ່ອນຂອງຄວາມຮູ້ທີ່ມີຢູ່ໃນປັດຈຸບັນ ໂດຍພິຈາລະນາທາງດ້ານທັກສະ ແລະ ຮູບແບບການຮຽນຮູ້ໃນປັດຈຸບັນ.

2. ການຕັດສິນໃຈວ່າຈະຮຽນຮູ້ກິດຈະກຳສະເພາະແນວໃດ ວິທີການ ແຫຼ່ງວິຊາການ ຫຼື ອຸປະກອນທີ່ໃຊ້ປະກອບການຮຽນມີອັນໃດແດ່ ໃນຂໍ້ນີ້ຜູ້ຮຽນຄວນສຶກສາວ່າຕົນເອງມີຄວາມຕ້ອງການສະເພາະດ້ານໃດ ເກນທີ່ໃຊ້ເລືອກແຫຼ່ງຊັບພະຍາກອນ ການຮຽນຮູ້ສະເພາະຢ່າງ ການລວບລວມຄວາມຮູ້ ຂໍ້ເທັດຈິງ ການເຂົ້າເຖິງລະດັບ ແລະ ຄວາມໝາຍຂອງແຫຼ່ງຊັບພະຍາກອນ ການຮຽນຮູ້ ຫຼື ກິດຈະກຳສະເພາະດ້ານ ຜູ້ຮຽນອາດເບິ່ງຈາກໜັງສື ບົດຄວາມ ກ່ອນການເລືອກສິ່ງທີ່ເໝາະສົມທີ່ສຸດ ໃນ



CS CamScanner

CS CamScanner

ກໍລະນີທີ່ເປັນແຫຼ່ງຊັບພະຍາກອນບຸກຄົນ ອາດຕັດສິນໃຈວ່າ ບຸກຄົນປະເພດໃດທີ່ຈະໃຫ້ເນື້ອຫາວິຊາທີ່ຕ້ອງການໄດ້ ແລະ ພະຍາຍາມຫາບຸກຄົນເຫຼົ່ານັ້ນ ເຊິ່ງເລືອກບໍ່ລາລະແລ້ວວ່າເໝາະສົມທີ່ສຸດ.

3. ຕັດສິນໃຈວ່າ ຈະຮຽນຢູ່ໃສ ຜູ້ຮຽນອາດຈະເລືອກບໍລິເວນທີ່ງຽບ ສະດວກ ສະບາຍ ແລະ ບໍ່ມີຜູ້ໃດມາລົບກວນ ຫຼື ອາດຈະຕ້ອງການສະຖານທີ່ຊຶ່ງມີອຸປະກອນອຳນວຍຄວາມສະດວກ.
4. ວາງເປົ້າໝາຍ ຫຼື ກຳນົດໄລຍະເວລາການເຮັດວຽກທີ່ແນ່ນອນ
5. ຕັດສິນໃຈວ່າຈະເລີ່ມຮຽນເລື່ອງໃດ ເມື່ອໃດ
6. ຕັດສິນໃຈວ່າຊ່ວງໄລຍະເວລາໃດ ເນື້ອຫາຄວນຈະກ້າວໄປແນວໃດ
7. ພະຍາຍາມຫາມູນເຫດທີ່ເປັນອຸປະສັກ ທີ່ເຮັດໃຫ້ການຮຽນຮູ້ບໍ່ປະສົບຄວາມສຳເລັດ ຫຼື ຫາຂັ້ນຕອນ ສ່ວນທີ່ທີ່ເຮັດໃຫ້ຂະບວນການຮຽນຮູ້ບໍ່ປະສົບຄວາມສຳເລັດ ຫຼື ຫາຂັ້ນຕອນສ່ວນທີ່ເຮັດໃຫ້ຂະບວນການຮຽນຮູ້ບໍ່ມີປະສິດທິພາບ.
8. ການຫາເວລາສຳລັບການຮຽນຮູ້ຂັ້ນຕອນນີ້ຈະກ່ຽວຂ້ອງກັບການລົດເວລາ ຫຼື ຈັດເວລາໃຫ້ເໝາະສົມກັບການເຮັດວຽກ ກິດຈະກຳໃນຄອບຄົວ ຫຼື ການພັກຜ່ອນ ຫຼື ອາດຈະຂໍບໍ່ໃຫ້ບຸກຄົນອື່ນມາລົບກວນໃນເວລາທີ່ກຳລັງສຶກສາ ຫຼື ຂໍໃຫ້ຄົນອື່ນເຮັດວຽກແທນບາງຄັ້ງຄາວ.
9. ປະເມີນຄວາມຮູ້ ແລະ ທັກສະ ຫຼື ຄວາມກ້າວໜ້າຂອງຕົນ.
10. ການເຂົ້າເຖິງແຫຼ່ງຊັບພະຍາກອນການຮຽນຮູ້ ຫຼື ອຸປະກອນທີ່ເໝາະສົມໃນຖານະທີ່ເປັນສ່ວນໜຶ່ງຂອງຂັ້ນຕອນນີ້ ຜູ້ຮຽນອາດຈະຫາເວລາທ່ອງໄປໃນທີ່ຕ່າງໆ ຄົ້ນຄ້ວາຈາກໜັງສືໃນຫ້ອງສະໝຸດ ຕະຫຼອດຈົນການພົບບຸກຄົນທີ່ເອື້ອຕໍ່ການຮຽນຮູ້.
11. ການສະສົມ ຫຼື ຫາເງິນທີ່ຈຳເປັນສຳລັບປະໂຫຍດໃນການຫາແຫຼ່ງວິທະຍາການ ການຊື້ປຶ້ມການເຊົ່າອຸປະກອນບາງຢ່າງ ຕະຫຼອດຈົນຄ່າໃຊ້ຈ່າຍໃນການສຶກສາ.
12. ກຽມສະຖານທີ່ ຫຼື ຈັດຫ້ອງຮຽນໃຫ້ເໝາະສົມສຳລັບການຮຽນໂດຍຄຳນຶງເຖິງສະພາບອາກາດ ແສງສະຫວ່າງເປັນຕົ້ນ.
13. ເພີ່ມຂັ້ນຕອນທີ່ຈະເພີ່ມແຮງຈູງໃຈໃນການຮຽນຮູ້ ຜູ້ຮຽນອາດຈະຫາວິທີເພີ່ມແຮງຈູງໃຈເພື່ອທີ່ຈະເພີ່ມຄວາມກ້າວໜ້າໃນການຮຽນ ຫຼື ເພີ່ມຄວາມພໍໃຈ ພະຍາຍາມເນັ້ນຄວາມສຳຄັນຂອງການຮຽນ ຊຶ່ງສິ່ງທີ່ຈະເຮັດໄດ້ມີດັ່ງນີ້:
    1) ສາເຫດຂອງການຂາດແຮງຈູງໃຈ
    2) ພະຍາຍາມເພີ່ມຄວາມສຸກ ຄວາມຍິນດີໃນການຮຽນຮູ້ ຫຼື ເພີ່ມຄວາມສົນໃຈໃນກິດຈະກຳການຮຽນຮູ້
    3) ຈັດການກັບການຂາດຄວາມເຊື່ອໝັ້ນໃນຄວາມສາມາດຂອງຕົນທີ່ຈະຮຽນຮູ້ ຫຼື ຈັດການກັບຄວາມສົງໃສໃນຄວາມສຳເລັດຂອງໂຄງການທີ່ຮຽນຮູ້.
    4) ເອົາຊະນະຄວາມຮູ້ສຶກຜິດຫວັງ ທໍ້ແທ້ ທີ່ມີສາເຫດຈາກຄວາມລຳບາກ
    5) ບອກກ່າວຜູ້ອື່ນເຖິງຄວາມສຳເລັດຂອງຕົນເອງ



CamScanner

CamScanner

ຂັ້ນຕອນການວາງແຜນການຮຽນຮູ້ດ້ວຍຕົນເອງ ເປັນຂະບວນການສຶກສາຄົ້ນຄ້ວາຢ່າງເປັນລະບົບ ຊຶ່ງຜູ້ຮຽນເປັນຜູ້ຈັດລະບົບການຮຽນຂອງຕົນເອງ ດ້ວຍການຈັດການດ້ານເວລາທີ່ໃຊ້ໃນການສຶກສາ ເພື່ອໃຫ້ບັນລຸຕາມເປົ້າໝາຍທີ່ຕ້ອງການ ແລະ ເພີ່ມປະສິດທິພາບຂອງການຮຽນດ້ວຍການກຽມຄວາມພ້ອມໃຫ້ກັບຕົນເອງໃນດ້ານຕ່າງໆ ຮູ້ຈັກວິທີຮຽນໃນຊັ້ນຮຽນ ແລະ ຮຽນດ້ວຍຕົນເອງຕະຫຼອດຈົນຮູ້ຈັກໃຊ້ປະໂຫຍດຈາກປຫຼ່ງຊັບພະຍາກອນການຮຽນຮູ້ ເພື່ອການສຶກສາຄົ້ນຄ້ວາຕໍ່ໄປ.

ສະຫຼຸບວ່າ ການຮຽນຮູ້ດ້ວຍຕົນເອງຈຶ່ງເປັນການຮຽນຮູ້ທີ່ເໝາະສົມກັບການສຶກສາໃນສະຖານະການຂອງສັງຄົມປັດຈຸບັນ ຊຶ່ງຄວາມສຳເລັດຂອງການຮຽນຮູ້ດ້ວຍຕົນເອງນັ້ນມີເງື່ອນໄຂ ແລະ ປັດໃຈຫຼັກຢູ່ທີ່ຕົວຜູ້ຮຽນທີ່ຕ້ອງມີວິໄນ ຄວາມມຸ່ງໝັ້ນ ແລະ ນິໄສໃຝ່ຮຽນ ໃຝ່ຮູ້ ດັ່ງນັ້ນ ການຮຽນຮູ້ດ້ວຍຕົນເອງ ແລະ ການຮຽນຮູ້ຕະຫຼອດຊີວິດ ຈະເກີດຂຶ້ນໄດ້ຕ້ອງອາໄສທາງສະຖາບັນ ສັງຄົມທຸກພາກສ່ວນ ໂດຍສະເພາະຢ່າງຍິ່ງສະຖາບັນ ຄອບຄົວ ແລະ ສະຖານສຶກສາ ທີ່ມີໜ້າທີ່ບົ່ມເພາະ ແລະ ຂັດເກົາໃນໄວເຍົາ ຕ້ອງປູກຝັງນິໄສແຫ່ງການຮຽນຮູ້ ລວມເຖິງ ສະຖາບັນອື່ນໆ ທີ່ຈະຊ່ວຍກັນສ້າງລັກກະນະ ທີ

ສົ່ງເສີມ ຫຼື ຈູງໃຈໃຫ້ເກີດການຮຽນຮູ້.

## 8. ວິທີສອນໂດຍໃຊ້ການນິລະໄນ

### 1. ຄວາມໝາຍ

ວິທີສອນໂດຍໃຊ້ນິລະໄນ ແມ່ນຂະບວນການທີ່ຄູສາມາດໃຊ້ໃນການຊ່ວຍໃຫ້ແກ່ນັກຮຽນເກີດການການຮຽນຮູ້ຕາມວັດຖຸປະສົງທີ່ກຳນົດ ໂດຍການໃຫ້ຊ່ວຍໃຫ້ຜູ້ຮຽນມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບທິດສະດີຫຼັກການ ຫຼື ຂໍ້ສະຫຼຸບໃນເລື່ອງທີ່ຮຽນ ແລ້ວຈຶ່ງໃຫ້ຕົວຢ່າງຫຼາຍໆຕົວຢ່າງກ່ຽວກັບໃຊ້ທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບນັ້ນໄປໃນສະຖານະການໃໝ່ໆທີ່ຫຼາກຫຼາຍ ເພື່ອຊ່ວຍໃຫ້ນັກຮຽນມີຄວາມເຂົ້າໃນທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບນັ້ນໆ ຢ່າງລຶກຊຶ້ງຂຶ້ນ ຫຼື ເວົ້າສັ້ນໆໄດ້ວ່າເປັນການສອນຈາກຫຼັກການໄປສູ່ຕົວຢ່າງຍ່ອຍໆ.

### 2. ວັດຖຸປະສົງ

ວິທີສອນໂດຍໃຊ້ນິລະໄນເປັນວິທີການທີ່ມຸ່ງຫວັງຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ເປັນຫຼັກການ ແລະ ສາມາດນຳຫຼັກການດັ່ງກ່າວໄປໃຊ້ໄດ້.

### 3. ອົງປະກອບທີ່ສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງວິທີສອນ

1) ມີທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບຕ່າງໆ
2) ມີຕົວຢ່າງທີ່ຫຼາກຫຼາຍ ທີ່ສາມາດນຳທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບນັ້ນໄປໃຊ້ໄດ້
3) ມີການເຝິກທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບໄປໃຊ້ໃນສະຖານະການທີ່ຫຼາກຫຼາຍ
4) ມີຜົນການຮຽນຂອງນັກຮຽນທີ່ເກີດຂຶ້ນຈາກການນຳຫລັກການໄປໃຊ້

### 4. ຂັ້ນຕອນສຳຄັນ ( ທີ່ຂາດບໍ່ໄດ້) ຂອງການສອນ



CamScanner
CamScanner

1) ຄູທີ່ຖ່າຍທອດຄວາມຮູ້ທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບທີ່ຕ້ອງການໃຫ້ນັກຮຽນໄດ້ຮຽນຮູ້ດ້ວຍວິທີການຕ່າງໆຕາມຄວາມເໝາະສົມ
2) ຄູໃຫ້ຕົວຢ່າງສະຖານະການໃໝ່ທີ່ຫຼາກຫຼາຍທີ່ສາມາດນຳຄວາມຮູ້ທີ່ໄດ້ຮຽນມາໄປໃຊ້ໄດ້.
3) ຄູໃຫ້ນັກຮຽນເຝິກປະຕິບັດນຳຄວາມຮູ້ຄວາມເຂົ້າໃຈທີ່ເກີດຂຶ້ນໄປໃຊ້ໃນສະຖານະການໃໝ່
4) ຄູໃຫ້ນັກຮຽນວິເຄາະ ແລະ ອະພິປາຍການຮຽນຮູ້ທີ່ເກີດຂຶ້ນ
5) ຄູວັດ ແລະ ປະເມີນຜົນການຮຽນຮູ້ຂອງຜູ້ຮຽນ

**5. ເຕັກນິກ ແລະ ຂໍ້ສະເໜີແນະຕ່າງໆໃນການໃຊ້ວິທີສອນໂດຍໃຊ້ນິລະໄນໃຫ້ມີປະສິດທິພາບ**

1) **ກະກຽມ**

ຄູຈຳເປັນຕ້ອງທຳຄວາມເຂົ້າໃຈໃນທິດສະດີ ຫຼັກການ, ເນື້ອໃນ, ຂໍ້ສະຫຼຸບທີ່ຕ້ອງການສອນໃຫ້ແກ່ນັກຮຽນ ແລະ ຫາວິທີທີ່ເໝາະສົມໃນການຖ່າຍທອດ ຫຼື ນຳສະເໜີເນື້ອໃນເຫຼົ່ານັ້ນໃຫ້ແກ່ນັກຮຽນ ນອກຈາກນັ້ນ ຄູຈຳເປັນຕ້ອງກຽມຕົວຢ່າງທີ່ນັກຮຽນສາມາດນຳເນື້ອໃນເລົ່ານັ້ນໄປໃຊ້ໃຫ້ເກີດຜົນສຳເລັດ ຕົວຢ່າງຄວນເປັນສະຖານະການທີ່ມີຄວາມຫຼາກຫຼາຍ ເພື່ອໃຫ້ນັກຮຽນເກີດຄວາມຄິດລວມຍອດ ແລະ ຄວາມເຂົ້າໃຈທີ່ຈະແຈ້ງ.

2) **ການນຳສະເໜີເນື້ອໃນຄວາມຮູ້, ທິດສະດີ, ຫຼັກການ ແລະ ຂໍ້ສະຫຼຸບ**

ຄູຈຳເປັນຕ້ອງທຳຄວາມເຂົ້າໃຈໃນສິ່ງທີ່ຈະສອນເປັນຢ່າງດີ ລວມທັງວິທີການທີ່ເໝາະສົມໃນການນຳສະເໜີເນື້ອໃນໃຫ້ແກ່ນັກຮຽນ ຈົນນັກຮຽນເກີດຄວາມເຂົ້າໃຈ ເພື່ອໃຫ້ແນ່ໃຈວ່ານັກຮຽນມີຄວາມເຂົ້າໃຈຊໍ່າໃດ ຄູຄວນທົດສອບຄວາມຮູ້ຄວາມເຂົ້າໃຈຂອງນັກຮຽນກ່ອນຈະເຝິກໃຊ້ຄວາມຮູ້.

3) **ການນຳສະເໜີສະຖານະການໃໝ່ໃຫ້ນັກຮຽນເຝິກໃຊ້ຄວາມຮູ້**

ເມື່ອເຫັນວ່ານັກຮຽນເກີດຄວາມເຂົ້າໃຈໃນທິດສະດີ, ຫຼັກການ ແລະ ຂໍ້ສະຫຼຸບທີ່ໃຊ້ພໍສົມຄວນ ຄູຄວນໃຫ້ນັກຮຍນເຝິກການນຳຄວາມຮູ້ໄປປະຍຸກໃຊ້ໃນສະຖານະການໃໝ່ໆ ຊຶ່ງມີຄວາມຫຼາກຫຼາຍພໍສົມຄວນ ເພື່ອຊ່ວຍໃຫ້ນັກຮຽນເກີດຄວາມເຂົ້າໃຈທີ່ລຶກຊຶ້ງຂຶ້ນ.

**6. ຂໍ້ດີ ແລະ ຂໍ້ເສຍ**

**ຂໍ້ດີ**

- ເປັນວິທີສອນທີ່ຊ່ວຍຖ່າຍທອດເນື້ອໃນໄດ້ໄວ ແລະ ບໍ່ຫຍຸ້ງຍາກ
- ເປັນວິທີສອນທີ່ນັກຮຽນມີໂອກາດໄດ້ເຝິກຝົນການນຳທິດສະດີ, ຫຼັກການໄປໃຊ້ໃນສະຖານະການໃໝ່ໆ
- ເປັນວິທີສອນທີ່ອຳນວຍສະດວກໃຫ້ແກ່ນັກຮຽນທີ່ມີຄວາມສາມາດ ຫຼື ຮຽນຮູ້ໄດ້ໄວສາມາດພັດທະນາໂດຍບໍ່ຕ້ອງຖ້ານັກຮຽນທີ່ຊ້າກວ່າ.



CamScanner

CamScanner

**ຂໍ້ເສຍ**

- ເປັນວິທີສອນທີ່ຄູຕ້ອງກຽມຕົວຢ່າງ, ສະຖານະການ, ບັນຫາທີ່ຫຼາກຫຼາຍມາໃຫ້ນັກຮຽນໄດ້ຝຶກເຮັດ.
- ເປັນວິທີສອນທີ່ຂຶ້ນກັບຄວາມເຂົ້າໃຈ ແລະ ຄວາມສາມາດຂອງຄູໃນການນຳສະເໜີທິດສະດີ ແລະ ຫຼັກການ
- ເປັນວິທີສອນທີ່ນັກຮຽນທີ່ຮຽນຮູ້ໄດ້ຊ້າ ທີ່ບໍ່ສາມາດຕາມທັນໝູ່ ແລະ ເກີດບັນຫາໃນການຮຽນຮູ້.

## 9. ວິທີການສອນແບບໂຄງການ (Project Method)

ແນວຄິດ ເປັນວິທີການຈັດການຮຽນຮູ້ທີ່ໃຫ້ຜູ້ຮຽນໄດ້ສຶກສາຄົ້ນຄວ້າ ຫລື ປະຕິບັດງານຕາມຫົວຂໍ້ທີ່ຜູ້ຮຽນສົນໃຈ ເຊິ່ງຜູ້ຮຽນຈະຕ້ອງຝຶກຂະບວນການເຮັດວຽກງານຢ່າງມີຂັ້ນຕອນ ມີການວາງແຜນໃນການເຮັດວຽກງານ ຫລືການແກ້ບັນຫາຢ່າງເປັນລະບົບ ຈົນການດຳເນີນງານສຳເລັດລຸລ່ວງຕາມວັດຖຸປະສົງ ສິ່ງຜົນໃຫ້ຜູ້ຮຽນມີທັກສະການຮຽນຮູ້ຢ່າງຫລາກຫລາຍ ອັນເປັນປະສົບການກົງທີ່ມີຄຸນຄ່າ ສາມາດນຳໄປປະຍຸກໃຊ້ໃນການດຳເນີນງານຕ່າງໆ ໄດ້ ວິທີການສອນໂຄງງານສາມາດສອນຕໍ່ເນື່ອງກັບວິທີສອນແບບບູລະນາການໄດ້ ທັງໃນຮູບແບບບູລະນາການພາຍໃນກຸ່ມການຮຽນຮູ້ ແລະ ບູລະນາການລະຫວ່າງກຸ່ມການຮຽນຮູ້ ເພື່ອໃຫ້ຜູ້ຮຽນໄດ້ນຳຄວາມຮູ້ ແລະປະ ສົບການທີ່ໄດ້ມາບູນລະນາການເພື່ອເຮັດໂຄງງານ

**ການຈັດກິດຈະກຳການຮຽນຮູ້**

1. ຂັ້ນກຳນົດບັນຫາ ຫລືສຳຫຼວດຄວາມສົນໃຈ ຜູ້ສອນສະເໜີສະຖານະການ ຫລືຕົວຢ່າງທີ່ເປັນບັນຫາແລະ ກະຕຸ້ນໃຫ້ຜູ້ຮຽນຫາວິທີການແກ້ບັນຫາ ຫລືຍົວະໃຫ້ຜູ້ຮຽນມີຄວາມຕ້ອງການຢາກຮຽນຢາກຮູ້ ໃນເລື່ອງໃດເລື່ອງໜຶ່ງ

2. ຂັ້ນກຳນົດຈຸດປະສົງໃນການຮຽນ ຜູ້ສອນແນະນຳໃຫ້ຜູ້ຮຽນກຳນົດຈຸດປະສົງໃຫ້ຊັດເຈນວ່າຮຽນເພື່ອຫຍັງ ຈະເຮັດໂຄງງານນັ້ນເພື່ອແກ້ບັນຫາຫຍັງ ຊຶ່ງເຮັດໃຫ້ຜູ້ຮຽນກຳນົດໂຄງງານແນວທາງໃນການດຳເນີນງານໄດ້ກົງຕາມຈຸດປະ ສົງ

3. ຂັ້ນວາງແຜນ ແລະ ວິເຄາະໂຄງງານ ໃຫ້ຜູ້ຮຽນວາງແຜນແກ້ບັນຫາ ຊຶ່ງເປັນໂຄງງານດ່ຽວຫລືກຸ່ມກໍໄດ້ ແລ້ວສະເໜີແຜນການດຳເນີນງານໃຫ້ຜູ້ສອນພິຈາລະນາ ໃຫ້ຄຳແນະນຳຊ່ວຍເຫລືອ ແລະ ຂໍ້ສະເໜີແນະການວາງແຜນໂຄງງານຂອງຜູ້ຮຽນ ຜູ້ຮຽນຂຽນໂຄງງານຕາມຫົວຂໍ້ເຊິ່ງມີຫົວຂໍ້ສຳຄັນ (ຊື່ໂຄງງານ ຫລັກການ ແລະ ເຫດຜົນວັດຖຸປະສົງຫລືຈຸດມຸ່ງໝາຍ ເຈົ້າຂອງໂຄງການ ທີ່ປຶກສາໂຄງການ ແຫລ່ງຄວາມຮູ້ ສະຖານທີ່ດຳເນີນການ ໄລຍະເວລາດຳເນີນການ ງົບປະມານ ວິທີດຳເນີນການ ເຄື່ອງມືທີ່ໃຊ້ ຜົນທີ່ຄາດວ່າຈະໄດ້ຮັບ)

4. ຂັ້ນລົງມືປະຕິບັດຫລືແກ້ບັນຫາ ໃຫ້ຜູ້ຮຽນລົງມືປະຕິບັດຫລືແກ້ບັນຫາຕາມແຜນການທີ່ກຳນົດໄວ້ໂດຍມີຜູ້ສອນເປັນທີ່ປຶກສາ ຄອຍຖ້າສັງເກດ ຕິດຕາມ ແນະນຳໃຫ້ຜູ້ຮຽນຮູ້ຈັກສັງເກດ



CamScanner

CamScanner

ເກັບລວບລວມຂໍ້ມູນ ບັນທຶກຜົນດຳເນີນການດ້ວຍຄວາມມານະອົດທົນ ມີການປະຊຸມອະພິປາຍປຶກສາຫາລືກັນເປັນໄລຍະໆ ຜູ້ສອນຈະເຂົ້າໄປກ່ຽວຂ້ອງເທົ່າທີ່ຈຳເປັນ ຜູ້ຮຽນເປັນຜູ້ໃຊ້ຄວາມຄິດຄວາມຮູ້ ໃນການວາງແຜນ ແລະ ຕັດສິນໃຈເຮັດດ້ວຍຕົນເອງ

5. ຂັ້ນປະເມີນຜົນລະຫວ່າງປະຕິບັດງານ ຜູ້ສອນແນະນຳໃຫ້ຜູ້ຮຽນຮູ້ຈັກປະເມີນຜົນກ່ອນດຳເນີນການລະຫວ່າງດຳເນີນການ ແລະ ຫລັງດຳເນີນການ ຄືຮູ້ຈັກພິຈາລະນາວ່າກ່ອນທີ່ຈະດຳເນີນການມີສະພາບເປັນຢ່າງໃດ ມີບັນຫາຢ່າງໃດລະຫວ່າງທີ່ດຳເນີນງານຕາມໂຄງງານນັ້ນ ຍັງມີສິ່ງໃດທີ່ຜິດພາດຫລືເປັນຂໍ້ບົກຜ່ອງຢູ່ ຕ້ອງແກ້ໄຂຫຍັງອີກບໍ່ ມີວິທີແກ້ໄຂແນວໃດ ເມື່ອດຳເນີນການໄປແລ້ວຜູ້ຮຽນມີແນວຄິດແນວໃດ ມີຄວາມເພິ່ງພໍໃຈຫລືບໍ່ ຜົນຂອງການດຳເນີນການຕາມໂຄງງານ ຜູ້ຮຽນໄດ້ຄວາມຮູ້ຫຍັງ ໄດ້ປະໂຫຍດແນວໃດ ແລະ ສາມາດນຳຄວາມຮູ້ນັ້ນໄປພັດທະນາປັບປຸງງານໄດ້ຢ່າງດີຍິ່ງຂຶ້ນ ຫລືເອົາຄວາມຮູ້ນັ້ນໄປໃຊ້ໃນຊີວິດໄດ້ແນວໃດ ໂດຍຜູ້ຮຽນປະເມີນໂຄງງານຂອງຕົນເອງຫລືເພື່ອນຮ່ວມປະເມີນ ຈາກນັ້ນຜູ້ສອນຈຶ່ງປະເມີນຜົນໂຄງງານຕາມແບບປະເມີນ ເຊິ່ງຜູ້ປົກຄອງອາດຈະມີສ່ວນຮ່ວມໃນການປະເມີນດ້ວຍກໍ່ໄດ້.

6. ຂັ້ນສະຫລຸບ ລາຍງານຜົນ ແລະ ສະເໜີຜົນງານ ເມື່ອຜູ້ຮຽນເຮັດວຽກຕາມແຜນ ແລະ ເກັບຂໍ້ມູນແລ້ວຕ້ອງກໍ່ການວິເຄາະຂໍ້ມູນ ສະຫລຸບແລະຂຽນລາຍງານເພື່ອນຳສະເໜີຜົນງານ ຊຶ່ງນອກເໜືອຈາກລາຍງານເອກະສານແລ້ວ ອາດມີແຜນພູມ, ແຜນພາບ, ການ, ແບບຈຳລອງ ຫລືຂອງຈິງປະກອບການນຳສະເໜີ ອາດຈັດໄດ້ຫລາຍຮູບແບບ ເຊັ່ນ: ຈັດເທສະການ ການສະແດງລະຄອນ ແລະ ອື່ນໆ

**ປະໂຫຍດ**

1. ເປັນການສອນທີ່ມຸ່ງໃຫ້ຜູ້ຮຽນມີບົດບາດ ມີສ່ວນຮ່ວມໃນການຈັດຂະບວນການຮຽນຮູ້ໄດ້ປະຕິບັດຈິງຄິດເອງ ເຮັດເອງ ຢ່າງລະອຽດຮອບຄອບ ຢ່າງເປັນລະບົບ
2. ຜູ້ຮຽນຮູ້ຈັກວິທີສະແຫວງຫາຂໍ້ມູນ ສ້າງຄວາມຮູ້ ແລະ ສະຫລຸບຄວາມຮູ້ໄດ້ດ້ວຍຕົນເອງ
3. ຜູ້ຮຽນມີທັກສະໃນການແກ້ບັນຫາ ມີທັກສະຂະບວນການໃນການເຮັດວຽກງານ ມີທັກສະການເຄື່ອນໄຫວທາງກາຍ
4. ຜູ້ຮຽນໄດ້ເຝິກຂະບວນການກຸ່ມສຳພັນ ເຮັດວຽກຮ່ວມກັນກັບຜູ້ອື່ນໄດ້
5. ເຝິກຄວາມເປັນປະຊາທິປໄຕ ຄືການຮັບຟັງຄວາມຄິດເຫັນຊຶ່ງກັນ ແລະ ກັນ ມີເຫດຜົນ ມີການຍອມຮັບໃນຄວາມຮູ້ ຄວາມສາມາດຊຶ່ງກັນ ແລະ ກັນ
6. ຜູ້ຮຽນໄດ້ເຝິກລັກສະນະນິໄສທີ່ດີໃນການເຮັດວຽກງານ ເຊັ່ນ: ການຈົດບັນທຶກຂໍ້ມູນ ການເກັບຂໍ້ມູນຢ່າງເປັນລະບົບ ຄວາມຮັບຜິດຊອບ ຄວາມຊື່ກົງ ຄວາມເອົາໃຈໃສ່ ຄວາມຂະຫຍັນໝັ່ນພຽນໃນການເຮັດວຽກງານ ຮູ້ຈັກເຮັດວຽກຢ່າງເປັນລະບົບ ເຮັດວຽກຢ່າງມີແຜນ ໃຊ້ເວລາວ່າງໃຫ້ເປັນປະໂຫຍດ
7. ຜູ້ຮຽນເກີດຄວາມຄິດລິເລີ່ມສ້າງສັນ ແລະ ສາມາດນຳຄວາມຮູ້ ຄວາມຄິດ ຫລືແນວທາງທີ່ໄດ້ໄປໃຊ້ໃນການແກ້ບັນຫາໃນຊີວິດ ຫລືໃນສະຖານະການອື່ນໆໄດ້



CamScanner
CamScanner

ຂະຫຍັນໝັ່ນພຽນໃນການເຮັດວຽກງານ ຮູ້ຈັກເຮັດວຽກຢ່າງເປັນລະບົບ ເຮັດວຽກຢ່າງມີແຜນ ໃຊ້ເວລາວ່າງໃຫ້ເປັນປະໂຫຍດ

7. ຜູ້ຮຽນເກີດຄວາມຄິດລິເລີ່ມສ້າງສັນ ແລະ ສາມາດນຳຄວາມຮູ້ ຄວາມຄິດ ຫລືແນວທາງທີ່ໄດ້ໄປໃຊ້ໃນການແກ້ບັນຫາໃນຊີວິດ ຫລືໃນສະຖານະການອື່ນໆໄດ້

**10. ວິທີສອນແບບການຮຽນຮູ້ດ້ວຍຕົນເອງ**

ກ. ຄວາມໝາຍ

ຂ. ຫຼັກການຈັດການຮຽນຮູ້

ຄ. ການຝຶກການຮຽນຮູ້ດ້ວຍຕົນເອງ

ງ. ຕົວຢ່າງການຈັດກິດຈະກຳການຮຽນຮູ້

**ກ. ແນວຄິດກ່ຽວກັບການຮຽນຮູ້ດ້ວຍຕົນເອງ:** ການຮຽນຮູ້ທີ່ເກີດຈາກການຟັງຄຳບັນຍາຍ ຫຼື ເຮັດຕາມທີ່ຄູຜູ້ສອນບອກ ສະເໝີໄປ ແຕ່ອາດຈະເກີດສະຖານະການຕ່າງໆດັ່ງໄປນີ້ (ສົມຄິດ ອິດສະລະວັນ, 2532 ໜ້າ 74)

1. ການຮຽນຮູ້ (self-directed learning) ເປັນການຮຽນທີ່ເກີດຈາກຄວາມຢາກຮູ້ ອາດຈະເຫັນ ຜູ້ຮຽນຈະມີການວາງແຜນດ້ວຍຕົນເອງ
2. ການຮຽນຮູ້ຈັດໂດຍສະຖາບັນການສຶກສາ (provide sponsored) ໂດຍມີກຸ່ມບຸກຄົນຈັດກຳກັບເບິ່ງແຍງ ມີການໃຫ້ຄະແນນ ໃຫ້ປິດສະໝາ ຫຼື ປະກາດສະນີຍະບັດ
3. ການຮຽນຮູ້ຈາກກຸ່ມການຮຽນຮູ້ແບບບໍ່ເປັນທາງການຄື ຊ່ວຍເຫຼືອເຊິ່ງກັນ ແລະ ກັນ (collaborative learning)
4. ການຮຽນຮູ້ໂດຍບັງເອີນ (random or incidental learning) ອາດເປັນຜົນພອຍໄດ້ຈາກເຫດການຢ່າງໃດຢ່າງໜຶ່ງທີ່ຜູ້ຮຽນບໍ່ໄດ້ເຈດຕະນາ.

ຈະເຫັນໄດ້ວ່າ ການຮຽນຮູ້ດ້ວຍຕົນເອງເປັນວິທີການຮຽນຮູ້ວິທີໜຶ່ງທີ່ນັກສຶກສາໃຫ້ຄວາມສຳຄັນ ແລະ ເປັນສິ່ງທີ່ຄວນສົ່ງເສີມໃຫ້ມີຂຶ້ນໃນຕົວຜູ້ຮຽນ ເພາະເມື່ອໃດກໍ່ຕາມທີ່ຜູ້ຮຽນມີໃຈຮັກທີ່ຈະສຶກສາຄົ້ນຄ້ວາຕາມ ຄວາມຕ້ອງການກໍ່ຈະເກີດການສຶກສາຕໍ່ເນື່ອງ ໂດຍບໍ່ຕ້ອງບອກ ແລະ ມີແຮງກະຕຸ້ນໃຫ້ເກີດຄວາມຢາກຮູ້ ຢາກເຫັນບໍ່ສິ້ນສຸດ ຊຶ່ງຈະນຳໄປສູ່ການເປັນຜູ້ຮຽນຕະຫຼອດຊີວິດ (life long learner) ຫຼື ບຸກຄົນແຫ່ງການຮຽນຮູ້ທີ່ຍັ່ງຢືນ (learning person) ອັນເປັນເປົ້າໝາຍສູງສຸດຂອງການສຶກສາ.

**ອົງປະກອບຂອງການຮຽນຮູ້ດ້ວຍຕົນເອງ Knowles (1975, pp. 40-47) ໄດ້ອະທິບາຍເຖິງ ອົງປະກອບທີ່ສຳຄັນໃນການຮຽນຮູ້ດ້ວຍຕົນເອງໄວ້ດັ່ງນີ້.**

4. ການວິເຄາະຄວາມຕ້ອງການຂອງຕົນເອງ ຈະເລີ່ມຕົ້ນຈາກການໃຫ້ຜູ້ຮຽນແຕ່ລະຄົນບອກຄວາມຕ້ອງການ ແລະ ຄວາມສົນໃຈພິເສດຂອງຕົນເອງ ໃນການຮຽນໃຫ້ເພື່ອນອີກຄົນໜຶ່ງ ເຮັດໜ້າທີ່ເປັນຜູ້ໃຫ້ຄຳປຶກສາແນະນຳ ແລະ ເພື່ອນອີກຄົນໜຶ່ງເຮັດໜ້າທີ່ໃນການຈົດບັນທຶກ ເຮັດແບບ



CamScanner
CamScanner

ນີ້ໝູນວຽນໄປຈົນຄົບທັງ3ຄົນ ໄດ້ສະແດງບົດບາດຄົບ3 ດ້ານຄື: ຜູ້ສະເໜີຄວາມຕ້ອງການ ຜູ້ໃຫ້ຄໍາປຶກສາ ແລະ ຜູ້ຄອຍຈົດບັນທຶກສັງເກດການ ການຮຽນຮູ້ບົດບາດດັ່ງກ່າວໃຫ້ປະໂຫຍດຢ່າງຍິ່ງໃນການຮຽນຮ່ວມກັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນທຸກໆດ້ານ.

5. ກໍານົດຈຸດມຸ້ງໝາຍໃນການຮຽນ ໂດຍເລີ່ມຕົ້ນຈາກບົດບາດຂອງຜູ້ຮຽນເປັນລໍາດັບດັ່ງນີ້.

   5.1 ຜູ້ຮຽນຄວນສຶກສາຈຸດມຸ້ງໝາຍຂອງວິຊາ ແລ້ວຈຶ່ງເລີ່ມຂຽນຈຸດມຸ້ງໝາຍໃນການຮຽນ

   5.2 ຜູ້ຮຽນຄວນຂຽນຈຸດມຸ້ງໝາຍໃຫ້ແຈ່ມແຈ້ງຊັດເຈນ ເຂົ້າໃຈໄດ້ ບໍ່ຄຸມເຄືອ ຄົນອື່ນອ່ານແລ້ວເຂົ້າໃຈ

   5.3 ຜູ້ຮຽນຄວນຂຽນເນັ້ນເຖິງພຶດຕິກໍາທີ່ຜູ້ຮຽນຄາດຫວັງໄວ້

   5.4 ຜູ້ຮຽນຄວນກໍານົດຈຸດມຸ້ງໝາຍທີ່ສາມາດວັດໄດ້

   5.5 ການກໍານົດຈຸດມຸ້ງໝາຍຂອງຜູ້ຮຽນໃນແຕ່ລະລະດັບ ຄວນມີຄວາມແຕກຕ່າງກັນຢ່າງເຫັນໄດ້ຊັດເຈນ.

6. ການວາງແຜນການຮຽນ ໂດຍເນັ້ນຜູ້ຮຽນກໍານົດວັດຖຸປະສົງຂອງວິຊາ ຜູ້ຮຽນຄວນວາງແຜນການຈັດກິດຈະກໍາການຮຽນຕາມລໍາດັບດັ່ງນີ້.

   6.1 ຜູ້ຮຽນຈະຕ້ອງເປັນຜູ້ກໍານົດກ່ຽວກັບການວາງແຜນການຮຽນຂອງຕົນເອງ

   6.2 ການວາງແຜນການຮຽນຂອງຜູ້ຮຽນ ຄວນເລີ່ມຕົ້ນຈາກຜູ້ຮຽນກໍານົດຈຸດມຸ້ງໝາຍໃນການຮຽນຮູ້ດ້ວຍຕົນເອງ.

   6.3 ຜູ້ຮຽນເປັນຜູ້ຈັດເນື້ອຫາໃຫ້ເໝາະສົມກັບສະພາບຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນ.

   6.4 ຜູ້ຮຽນເປັນຜູ້ລະບຸວິທີຮຽນ ເພື່ອໃຫ້ເໝາະສົມກັບຕົນເອງຫຼາຍທີ່ສຸດ.

7. ການສະແຫວງຫາແຫຼ່ງວິທະຍາການ ເປັນຂະບວນການສຶກສາຄົ້ນຄວ້າທີ່ມີຄວາມສໍາຄັນຕໍ່ການສຶກສາໃນປັດຈຸບັນເປັນຢ່າງຫຼາຍ ດັ່ງນີ້.

   7.1 ປະສົບການການຮຽນແຕ່ລະດ້ານທີ່ຈັດໃຫ້ຜູ້ຮຽນສາມາດສະແດງໃຫ້ເຫັນເຖິງຄວາມມຸ້ງໝາຍຄວາມໝາຍ ແລະ ຄວາມສໍາເລັດຂອງອີງປະສົບການນັ້ນໆ.

   7.2 ແຫຼ່ງວິຊາການເຊັ່ນ: ຫ້ອງສະໝຸດ, ສະຖານນີອະນາໄມ ສາມາດນໍາມາໃຊ້ໄດ້ຢ່າງເໝາະສົມ.

   7.3 ເລືອກແຫຼ່ງວິທະຍາການໃຫ້ເໝາະສົມກັບຜູ້ຮຽນແຕ່ລະຄົນ.

   7.4 ມີການຈັດສອນຢ່າງດີ ເໝາະສົມ ກິດຈະກໍາບາງສ່ວນຜູ້ຮຽນຈະເປັນຜູ້ຈັດການເອງຕາມລໍາພັງ ແລະ ບາງສ່ວນເປັນກິດຈະກໍາທີ່ຈັດຮ່ວມກັນລະຫວ່າງຄູກັບຜູ້ຮຽນ.



CamScanner
CamScanner

8. ການປະເມີນຜົນ ເປັນຂັ້ນຕອນສຳຄັນໃນຂະບວນການຮຽນດ້ວຍຕົນເອງ ຊ່ວຍໃຫ້ຜູ້ຮຽນຮູ້ເຖິງຄວາມກ້າວໜ້າໃນການຮຽນຂອງຕົນເອງເປັນຢ່າງດີ ການປະເມີນຜົນຈະຕ້ອງສອດຄ່ອງກັບວັດຖຸປະສົງ ທັງນີ້ຈະກ່ຽວຂ້ອງກັບສິ່ງຕໍ່ໄປນີ້: ຄວາມຮູ້ ຄວາມເຂົ້າໃຈ ທັກສະ ທັດສະນະຄະຕິ ແລະ ຄ່ານິຍົມ ຊຶ່ງຂັ້ນຕອນໃນການປະເມີນຜົນດັ່ງນີ້.

8.1 ກຳນົດເປົ້າໝາຍ ວັດຖຸປະສົງໃຫ້ແນ່ນອນ

8.2 ດຳເນີນການທຸກຢ່າງ ເພື່ອໃຫ້ບັນລຸຕາມວັດຖຸປະສົງທີ່ວາງໄວ້ ຂັ້ນຕອນນີ້ສຳຄັນໃນການປະເມີນຜົນການຮຽນ-ການສອນ.

8.3 ລວບລວມຫຼັກຖານ ການຕັດສິນໃຈຈາກການປະເມີນຜົນຈະຕ້ອງຢູ່ເທິງພື້ນຖານຂອງຂໍ້ມູນທີ່ສົມບູນ ແລະ ເຊື່ອຖືໄດ້.

8.4 ລວບລວມຂໍ້ມູນກ່ອນຮຽນ ເພື່ອປຽບທຽບຫຼັງຮຽນວ່າ ຜູ້ຮຽນກ້າວໜ້າໄປພຽງໃດ.

8.5 ແຫຼ່ງຂອງຂໍ້ມູນ ຈະຫາຂໍ້ມູນຈາກຄູ ແລະ ຜູ້ຮຽນເປັນຫຼັກໃນການປະເມີນ.

**ຂ. ຄວາມສຳຄັນຂອງການຮຽນຮູ້ດ້ວຍຕົນເອງ: Knowles (1975, pp. 14-17) ກ່າວເຖິງການຮຽນຮູ້ດ້ວຍຕົນເອງວ່າມີຄວາມສຳຄັນ 4 ປະການຄື:**

1. ບຸກຄົນທີ່ຮຽນຮູ້ດ້ວຍການລິເລີ່ມຂອງຕົນຈະຮຽນໄດ້ຫຼາຍກ່ວາ ດີກວ່າບຸກຄົນທີ່ເປັນພຽງຜູ້ຮັບ ຫຼືລໍໃຫ້ຜູ້ສອນຖ່າຍທອດວິຊາຄວາມຮູ້ໃຫ້ ບຸກຄົນທີ່ຮຽນຮູ້ດ້ວຍຕົນເອງ ຈະຮຽນຢ່າງຕັ້ງໃຈ ມີຈຸດມຸ້ງໝາຍ ແລະ ມີແຮງຈູງໃຈສູງ ສາມາດໃຊ້ປະໂຫຍດຈາກການຮຽນຮູ້ໄດ້ດີກວ່າ ແລະ ຍາວນານກ່ວາບຸກຄົນທີ່ລໍຮັບການສອນແຕ່ຢ່າງດຽວ.
2. ການຮຽນຮູ້ດ້ວຍຕົນເອງມີຄວາມສອດຄ່ອງກັບຂະບວນການທາງທຳມະຊາດຂອງຈິດວິທະຍາ ພັດທະນາການ ເມື່ອເລີ່ມເກີດອອກມາບຸກຄົນຕ້ອງເພິ່ງຜູ້ອື່ນ ຈຳເປັນຕ້ອງມີພໍ່-ແມ່ປົກປ້ອງ ແລະ ຕັດສິນໃຈແທນ ແຕ່ເມື່ອບຸກຄົນເຕີບໃຫຍ່ຂຶ້ນ ມີຄວາມເປັນຜູ້ໃຫຍ່ຫຼາຍຂຶ້ນຈະຄ່ອຍໆພັດທະນາຕົນເອງໄປສູ່ຄວາມອິດສະຫຼະ ບໍ່ຕ້ອງເພິ່ງຜູ້ອື່ນ ຜູ້ຕ້ອງຢູ່ພາຍໃຕ້ການຄວບຄຸມຂອງຜູ້ອື່ນ ຫຼື ກຳກັບຂອງຜູ້ອື່ນ ຈະມີຄວາມເປັນຕົວຂອງຕົວເອງຫຼາຍຂຶ້ນສາມາດດຳເນີນຊີວິດໄດ້ດ້ວຍຕົນເອງ ແລະ ຊີ້ນຳຕົນເອງໄດ້.
3. ມີນະວັດຕະກຳທາງການສຶກສາເພີ່ມຂຶ້ນຫຼາຍເຊັ່ນ: ມີຫຼັກສູດໃໝ່ ຫ້ອງຮຽນແບບເປີດ ສູນບໍລິການການສຶກສາຢ່າງອິດສະຫຼະ ໂປແກມການຮຽນ ທີ່ຈັດສຳລັບບຸກຄົນພາຍນອກ ການສຶກສາລະບົບມະຫາວິທະຍາໄລເປີດເປັນຕົ້ນ ຮູບແບບຂອງນະວັດຕະກຳ ເຫຼົ່ານີ້ລ້ວນແຕ່ເປັນຄວາມຮັບຜິດຊອບຂອງຜູ້ຮຽນທີ່ຈະຕ້ອງເລີ່ມຈາກການລິເລີ່ມການຮຽນຮູ້ດ້ວຍຕົນເອງ.
4. ຄວາມປ່ຽນແປງຂອງໂລກຫຼາຍໆດ້ານຢ່າງວ່ອງໄວ ເຮັດໃຫ້ເກີດແນວຄວາມຄິດໃໝ່ໃນການສຶກສາໄດ້ແກ່:



CamScanner
CamScanner

3.1 ຄວາມຮູ້ຕ່າງໆທີ່ມະນຸດຮຽນຮູ້ ແລະ ສະສົມໄວ້ຈະຄ່ອຍໆລ້າສະໄໝ ແລະ ໝົດໄປພາຍໃນເວລາ 10 ປີ ຫຼື ໜ້ອຍ ດັ່ງນັ້ນຈຶ່ງຕ້ອງພັດທະນາທັກສະດັ່ງກ່າວ ເມື່ອບຸກຄົນຈົບການສຶກສາໄປແລ້ວກໍ່ຍັງສາມາດ ສະແຫວງຫາຄວາມຮູ້ເພີ່ມເຕີມໄດ້ ເພື່ອພັດທະນາຕົນເອງໃຫ້ມີຄວາມຮູ້ໃໝ່ເທົ່າທັນໂລກ.

3.2 ຄວາມໝາຍຂອງ (ການຮຽນຮູ້) ໝາຍເຖິງການທີ່ຜູ້ຮຽນເລີ່ມຮຽນຮູ້ສິ່ງຕ່າງໆຈາກສິ່ງແວດລ້ອມຮອບຕົວຜູ້ຮຽນເຊັ່ນ ຮຽນຮູ້ຈາກພໍ່-ແມ່, ເພື່ອນ, ຕຄ, ສະຖາບັນຕ່າງໆ ຫຼື ຈາກສື່ມວນຊົນເປັນຕົ້ນ ນັ້ນກໍ່ຄືການຮຽນຮູ້ຈະເປັນສ່ວນໜຶ່ງຂອງການດຳເນີນຊີວິດ ແລະ ບຸກຄົນ ສາມາດຮຽນຮູ້ໄດ້ຕະຫຼອດຊີວິດ.

3.3 ການຮຽນຮູ້ດ້ວຍຕົນເອງ ຈະບໍ່ຈຳກັດອາຍຸຜູ້ຮຽນຜູ້ຮຽນມີໂອກາດທີ່ຈະຕັດສິນໃຈເລືອກຮຽນ ຕາມຄວາມສົນໃຈ ແລະ ຄວາມຕ້ອງການທີ່ຈະຮຽນຮູ້ ຜູ້ຮຽນທີ່ຢູ່ໃນໄວເດັກຄວນເນັ້ນທັກສະການຮຽນຮູ້ດ້ວຍຕົນເອງເພື່ອຈະໄດ້ໃຊ້ທັກສະນີ້ໃນການສະແຫວງຫາຄວາມຮູ້ໃຫ້ທັນຕໍ່ ເຫດການ ການປ່ຽນແປງຂອງໂລກ.

**ຄ. ລັກສະນະຂອງການຮຽນຮູ້ດ້ວຍຕົນເອງ**

ການຮຽນຮູ້ດ້ວຍຕົນເອງມີລັກສະນະດັ່ງນີ້ (ພັນຊີ ພາລາວົງ, 236໓ ໜ້າ 84-85)

1. Availability ວິທີຮຽນຊະນິດນີ້ຈະຮຽນເມື່ອເມື່ອໃດ ສະຖານທີ່ໃດ ກໍ່ໄດ້ຕາມຄວາມພໍໃຈ ໂດຍເລືອກຮຽນຕາມເວລາທີ່ຜູ້ຮຽນວ່າງ ເຮັດໃຫ້ຜູ້ຮຽນຮຽນໄດ້ຢ່າງມີປະສິດທິພາບແຕກຕ່າງຈາກຜູ້ຮຽນບາງຄົນ ເຮັດໃຫ້ເກີດການຮຽນຫຼົ້ມເຫຼວໄດ້.

2. Self-paced ເມື່ອຜູ້ຮຽນເລືອກສະຖານທີ່ໄດ້ຕາມຄວາມພໍໃຈແລ້ວຜູ້ຮຽນຈະໃຊ້ເວລາໃນການທຳຄວາມເຂົ້າໃຈບົດຮຽນໄດ້ເຕັມທີ່ ບາງຄົນອາດຈະໃຊ້ເວລາ1 ຊົ່ວໂມງຕໍ່ໜຶ່ງບົດຮຽນໄດ້ເຕັມທີ່ ບາງຄົນອາດຈະໃຊ້ເວລາ 5 ຊົ່ວໂມງກໍ່ໄດ້ ແຕ່ປະສິດທິພາບເທົ່າກັນຄື: ເຂົ້າໃຈບົດຮຽນ ເນື່ອງຈາກຄວາມສາມາດໃນການຮັບຮູ້ຂອງຜູ້ຮຽນຂອງງແຕ່ລະຄົນຍ່ອມບໍ່ເທົ່າກັນ.

3. Objectives ແບບຮຽນທີ່ຜູ້ຮຽນໆດ້ວຍຕົນເອງ ຕ້ອງບອກຈຸດປະສົງໃນແຕ່ລະບົດໄວ້ໃຫ້ຊັດເຈນ ເພາະຖ້າຜູ້ຮຽນສາມາດຕອບຄຳຖາມຂອງວັດຖຸປະສົງໄດ້ທັງໝົດສະແດງວ່າຜູ້ຮຽນເຂົ້າໃຈບົດຮຽນນັ້ນໆ.

4. Interaction ການມີປະຕິສຳພັນກັນໃນຄະນະຮຽນ ຊ່ວຍໃຫ້ຜູ້ຮຽນມ່ວນກັບການຮຽນ ໂດຍຜູ້ສອນອາດຈະຊີ້ແນະ ທີ ໃຫ້ການປຶກສາກ່ຽວກັບການວາງແຜນກິດຈະກຳການຮຽນ.



CamScanner
CamScanner

5. Tutor Help ຜູ້ສອນມີໜ້າທີ່ໃຫ້ຄວາມຊ່ວຍເຫຼືອໃນການຮຽນຮູ້ແກ່ຜູ້ຮຽນ

6. Test as Learning Situation ໃນບົດຮຽນໜຶ່ງໆຈະມີແບບທົດສອບຊຶ່ງເປັນເຄື່ອງມືວັດຕາມວັດຖຸປະສົງ ບໍ່ແມ່ນການປະເມີນຜົນການຮຽນ ເພື່ອໃຫ້ນັກຮຽນສອບໄດ້ ຫຼື ຕົກ ຫຼື ໃນພາກປະຕິບັດອາດໃຊ້ວິທີທົດສອບເປັນລາຍບຸກຄົນ.

7. ການເລືອກວິທີຮຽນ ຜູ້ຮຽນແຕ່ລະຄົນຍ່ອມມີວິທີຮຽນແບບທີ່ຕົນມັກ ສະນັ້ນຜູ້ຮຽນສາມາດເລືອກວິທີຮຽນທີ່ເໝາະກັບຕົນເອງ ຄະນະດຽວກັນຜູ້ຮຽນກໍ່ມີອິດສະຫຼະໃນການເລືອກຮຽນບົດຮຽນກ່ອນ ຫຼັງໄດ້.

ການຮຽນຮູ້ດ້ວຍຕົນເອງ (self-directed learning) ເປັນວິທີການຮຽນຮູ້ທີ່ເຮັດໃຫ້ຜູ້ຮຽນມີຄວາມຖະໜັດ ແລະ ມີຄວາມຮັບຜິດຊອບຕໍ່ແຜນການຮຽນຂອງຕົນເອງ ຜູ້ຮຽນຈະຮັດການວາງແຜນ ແລະ ກຳນົດກິດຈະກຳການຮຽນຮູ້ ເລືອກແຫຼ່ງຂໍ້ມູນ ເລືອກວິທີການຮຽນຮູ້ ແລະ ການປະເມີນຜົນດ້ວຍຕົນເອງ ໂດຍຈະມີຜູ້ຊ່ວຍເຫຼືອ ຫຼື ບໍ່ມີຜູ້ຊ່ວຍເຫຼືອກໍ່ໄດ້.

**ງ. ຂັ້ນຕອນການຮຽນຮູ້ດ້ວຍຕົນເອງ**

**ຮຽນຮູ້ທຸກວິທີຈະມີຂັ້ນຕອນເພື່ອເປັນແນວທາງການຮຽນຮູ້ ສຳລັບຂັ້ນຕອນການຮຽນຮູ້ດ້ວຍຕົນເອງ Gross (ປ່ອນອີງ ໃນ ສົມບູນ ຄາລະຍາຊີວິນ, 2526, ໜ້າ267) ອະທິບາຍວ່າຂັ້ນຕອນການຮຽນຮູ້ຂອງບຸກຄົນປະກອບດ້ວຍ 3 ຂັ້ນຕອນດັ່ງນີ້**

ຂັ້ນຕອນທີ1: ການຮັບຮູ້ສິ່ງແປກໃໝ່ ເປັນການຮຽນຮູ້ໃນຮູບຂອງຄວາມຮູ້ສຶກກັບຄວາມແປກໃໝ່ທີ່ໄດ້ພົບເຫັນ ກັບຄວາມຮູ້ຕ່າງໆທີ່ໜ້າສົນໃຈ ໜ້າທ້າທາຍສະຕິປັນຍາ.

ຂັ້ນຕອນທີ2: ການຄົ້ນຄິດຕຶກຕອງ ເປັນການຮຽນຮູ້ຢ່າງມີລະບົບ ມີການວິເຄາະຫາຂໍ້ເທັດຈິງ ພະຍາຍາມໃຫ້ໄດ້ມາເຊິ່ງເຊິ່ງຄວາມຮູ້ ຄວາມຈິງຢ່າງມີລະບົບແບບແຜນ.

ຂັ້ນຕອນທີ3: ການຊາບຊຶ້ງ ແລະ ການສ້າງສາລະ ເປັນຄວາມພ້ອມທີ່ຈະລົງມືປະຕິບັດໄດ້ດ້ວຍຕົນເອງ.

**Tough (ອ້າງອີງໃນ ວິໄລພອນ ມະນີພົນ, 2539,ໜ້າ27-29)ອະທິບາຍຂັ້ນຕອນການວາງແຜນການຮຽນຮູ້ດ້ວຍຕົນເອງດັ່ງນີ້.**

1. ການຕັດສິນໃຈວ່າ: ໃນຂະບວນການຮຽນຮູ້ນັ້ນ ອັນໃດເປັນຄວາມຮູ້ ທັກສະທີ່ຈະຮຽນຮູ້ ຜູ້ຮຽນອາດຈະແນມຫາຂໍ້ຜິດພາດ ແລະ ຈຸດອ່ອນຂອງຄວາມຮູ້ທີ່ມີຢູ່ໃນປັດຈຸບັນ ໂດຍພິຈາລະນາທາງດ້ານທັກສະ ແລະ ຮູບແບບການຮຽນຮູ້ໃນປັດຈຸບັນ.
2. ການຕັດສິນໃຈວ່າຈະຮຽນຮູ້ກິດຈະກຳສະເພາະແນວໃດ ວິທີການ ແຫຼ່ງວິຊາການ ຫຼື ອຸປະກອນທີ່ໃຊ້ປະກອບການຮຽນມີອັນໃດແດ່ ໃນຂໍ້ນີ້ຜູ້ຮຽນຄວນສຶກສາວ່າຕົນເອງມີຄວາມຕ້ອງການສະເພາະດ້ານໃດ ເງິນທີ່ໃຊ້ເລືອກແຫຼ່ງຊັບພະຍາກອນ ການຮຽນຮູ້ສະເພາະຢ່າງ ການລວບລວມ



CamScanner

CamScanner

ຄວາມຮູ້ ຂໍ້ເທັດຈິງ ການເຂົ້າເຖິງລະຫັບ ແລະ ຄວາມໝາຍຂອງແຫຼ່ງຊັບພະຍາກອນ ການຮຽນຮູ້ ຫຼື ກິດຈະກຳສະເພາະດ້ານ ຜູ້ຮຽນອາດເບິ່ງຈາກໜັງສື ບົດຄວາມ ກ່ອນການເລືອກສິ່ງທີ່ເໝາະສົມທີ່ສຸດ ໃນກໍລະນີທີ່ເປັນແຫຼ່ງຊັບພະຍາກອນບຸກຄົນ ອາດຕັດສິນໃຈວ່າ ບຸກຄົນປະເພດໃດທີ່ຈະໃຫ້ເນື້ອຫາວິຊາທີ່ຕ້ອງການໄດ້ ແລະ ພະຍາຍາມຫາບຸກຄົນເຫຼົ່ານັ້ນ ເຊິ່ງເລືອກບໍລິສາລະແລ້ວວ່າເໝາະສົມທີ່ສຸດ.

3. ຕັດສິນໃຈວ່າ ຈະຮຽນຢູ່ໃສ ຜູ້ຮຽນອາດຈະເລືອກບໍລິເວນທີ່ງຽບ ສະດວກ ສະບາຍ ແລະ ບໍ່ມີຜູ້ໃດມາລົບກວນ ຫຼື ອາດຈະຕ້ອງການສະຖານທີ່ຊຶ່ງມີອຸປະກອນອຳນວຍຄວາມສະດວກ.
4. ວາງເປົ້າໝາຍ ຫຼື ກຳນົດໄລຍະເວລາການເຮັດວຽກທີ່ແນ່ນອນ
5. ຕັດສິນໃຈວ່າຈະເລີ່ມຮຽນເລື່ອງໃດ ເມື່ອໃດ
6. ຕັດສິນໃຈວ່າຊ່ວງໄລຍະເວລາໃດ ເນື້ອຫາຄວນຈະກ້າວໄປແນວໃດ
7. ພະຍາຍາມຫາມູນເຫດທີ່ເປັນອຸປະສັກ ທີ່ເຮັດໃຫ້ການຮຽນຮູ້ບໍ່ປະສົບຄວາມສຳເລັດ ຫຼື ຫາຂັ້ນຕອນ ສ່ວນທີ່ທີ່ເຮັດໃຫ້ຂະບວນການຮຽນຮູ້ບໍ່ປະສົບຄວາມສຳເລັດ ຫຼື ຫາຂັ້ນຕອນສ່ວນທີ່ເຮັດໃຫ້ຂະບວນການຮຽນຮູ້ບໍ່ມີປະສິດທິພາບ.
8. ການຫາເວລາສຳລັບການຮຽນຮູ້ຂັ້ນຕອນນີ້ຈະກ່ຽວຂ້ອງກັບການລົດເວລາ ຫຼື ຈັດເວລາໃຫ້ເໝາະສົມກັບການເຮັດວຽກ ກິດຈະກຳໃນຄອບຄົວ ຫຼື ການພັກຜ່ອນ ຫຼື ອາດຈະຂໍບໍ່ໃຫ້ບຸກຄົນອື່ນມາລົບກວນໃນເວລາທີ່ກຳລັງສຶກສາ ຫຼື ຂໍໃຫ້ຄົນອື່ນເຮັດວຽກແທນບາງຄັ້ງຄາວ.
9. ປະເມີນຄວາມຮູ້ ແລະ ທັກສະ ຫຼື ຄວາມກ້າວໜ້າຂອງຕົນ.
10. ການເຂົ້າເຖິງແຫຼ່ງຊັບພະຍາກອນການຮຽນຮູ້ ຫຼື ອຸປະກອນທີ່ເໝາະສົມໃນຖານະທີ່ເປັນສ່ວນໜຶ່ງຂອງຂັ້ນຕອນນີ້ ຜູ້ຮຽນອາດຈະຫາເວລາຫ່ວາງໄປໃນທີ່ຕ່າງໆ ຄົ້ນຄ້ວາຈາກໜັງສືໃນຫ້ອງສະໝຸດ ຕະຫຼອດຈົນການພົບບຸກຄົນທີ່ເອື້ອຕໍ່ການຮຽນຮູ້.
11. ການສະສົມ ຫຼື ຫາເງິນທີ່ຈຳເປັນສຳລັບປະໂຫຍດໃນການຫາແຫຼ່ງວິທະຍາການ ການຊື້ປຶ້ມການເຊົ່າອຸປະກອນບາງຢ່າງ ຕະຫຼອດຈົນຄ່າໃຊ້ຈ່າຍໃນການສຶກສາ.
12. ກຽມສະຖານທີ່ ຫຼື ຈັດຫ້ອງຮຽນໃຫ້ເໝາະສົມສຳລັບການຮຽນໂດຍຄຳນຶງເຖິງສະພາບອາກາດ ແສງສະຫວ່າງເປັນຕົ້ນ.
13. ເພີ່ມຂັ້ນຕອນທີ່ຈະເພີ່ມແຮງຈູງໃຈໃນການຮຽນຮູ້ ຜູ້ຮຽນອາດຈະຫາວິທີເພີ່ມແຮງຈູງໃຈເພື່ອທີ່ຈະເພີ່ມຄວາມກ້າວໜ້າໃນການຮຽນ ຫຼື ເພີ່ມຄວາມພໍໃຈ ພະຍາຍາມເນັ້ນຄວາມສຳຄັນຂອງການຮຽນ ຊຶ່ງສິ່ງທີ່ຈະເຮັດໄດ້ມີດັ່ງນີ້:
    - ສາເຫດຂອງການຂາດແຮງຈູງໃຈ
    - ພະຍາຍາມເພີ່ມຄວາມສຸກ ຄວາມຍິນດີໃນການຮຽນຮູ້ ຫຼື ເພີ່ມຄວາມສົນໃຈໃນກິດຈະກຳການຮຽນຮູ້



CamScanner
CamScanner

- ຈັດການກັບບການຂາດຄວາມເຊື່ອໝັ້ນໃນຄວາມສາມາດຂອງຕົນທີ່ຈະຮຽນຮູ້ ຫຼື ຈັດການກັບຄວາມສິ່ງໃສໃນຄວາມສຳເລັດຂອງໂຄງການທີ່ຮຽນຮູ້.
- ເອົາຊະນະຄວາມຮູ້ສຶກຜິດຫ້ວງ ທໍ້ແທ້ ທີ່ມີສາເຫດຈາກຄວາມລຳບາກ
- ບອກກ່າວຜູ້ອື່ນເຖິງຄວາມສຳເລັດຂອງຕົນເອງ

ຂັ້ນຕອນການວາງແຜນການຮຽນຮູ້ດ້ວຍຕົນເອງ ເປັນຂະບວນການສຶກສາຄົ້ນຄ້ວາຢ່າງເປັນລະບົບ ຊຶ່ງຜູ້ຮຽນເປັນຜູ້ຈັດລະບົບການຮຽນຂອງຕົນເອງ ດ້ວຍການຈັດການດ້ານເວລາທີ່ໃຊ້ໃນການສຶກສາ ເພື່ອໃຫ້ບັນລຸຕາມເປົ້າໝາຍທີ່ຕ້ອງການ ແລະ ເພີ່ມປະສິດທິພາບຂອງການຮຽນດ້ວຍການກຽມຄວາມພ້ອມໃຫ້ກັບຕົນເອງໃນດ້ານຕ່າງໆ ຮູ້ຈັກວິທີຮຽນໃນຊັ້ນຮຽນ ແລະ ຮຽນດ້ວຍຕົນເອງຕະຫຼອດຈົນຮູ້ຈັກໃຊ້ປະໂຫຍດຈາກປຶ້ງຊັບພະຍາກອນການຮຽນຮູ້ ເພື່ອການສຶກສາຄົ້ນຄ້ວາຕໍ່ໄປ.

ສະຫຼຸບວ່າ ການຮຽນຮູ້ດ້ວຍຕົນເອງຈຶ່ງເປັນການຮຽນຮູ້ທີ່ເໝາະສົມກັບການສຶກສາໃນສະຖານະການຂອງສັງຄົມປັດຈຸບັນ ຊຶ່ງຄວາມສຳເລັດຂອງການຮຽນຮູ້ດ້ວຍຕົນເອງນັ້ນມີເງື່ອນໄຂ ແລະ ປັດໃຈຫຼັກຢູ່ທີ່ຕົວຜູ້ຮຽນທີ່ຕ້ອງມີວິໄນ ຄວາມມຸ້ງໝັ້ນ ແລະ ນິໄສໃຝ່ຮຽນ ໃຝ່ຮູ້ ດັ່ງນັ້ນ ການຮຽນຮູ້ດ້ວຍຕົນເອງ ແລະ ການຮຽນຮູ້ຕະຫຼອດຊີວິດ ຈະເກີດຂຶ້ນໄດ້ຕ້ອງອາໄສທາງສະຖາບັນ ສັງຄົມທຸກພາກສ່ວນ ໂດຍສະເພາະຢ່າງຍິ່ງສະຖາບັນ ຄອບຄົວ ແລະ ສະຖານສຶກສາ ທີ່ມີໜ້າທີ່ບົ່ມເພາະ ແລະ ຂັດເກົາໃນໄວເຍົາ ຕ້ອງປູກຝັງນິໄສແຫ່ງການຮຽນຮູ້ ລວມເຖິງ ສະຖາບັນອື່ນໆ ທີ່ຈະຊ່ວຍກັນສ້າງລັກສະນະນິໄສທີ່ສົ່ງເສີມ ຫຼື ຈູງໃຈໃຫ້ເກີດການຮຽນຮູ້.

## 11. ວິທີສອນໂດຍໃຊ້ການນິລະໄນ

### 1. ຄວາມໝາຍ

ວິທີສອນໂດຍໃຊ້ນິລະໄນ ແມ່ນຂະບວນການທີ່ຄູສາມາດໃຊ້ໃນການຊ່ວຍໃຫ້ແກ່ນັກຮຽນເກີດການການຮຽນຮູ້ຕາມວັດຖຸປະສົງທີ່ກຳນົດ ໂດຍການໃຫ້ຊ່ວຍໃຫ້ຜູ້ຮຽນມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບທິດສະດີຫຼັກການ ຫຼື ຂໍ້ສະຫຼຸບໃນເລື່ອງທີ່ຮຽນ ແລ້ວຈຶ່ງໃຫ້ຕົວຢ່າງຫຼາຍໆຕົວຢ່າງກ່ຽວກັບໃຊ້ທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບນັ້ນໄປໃນສະຖານະການໃໝ່ໆທີ່ຫຼາກຫຼາຍ ເພື່ອຊ່ວຍໃຫ້ນັກຮຽນມີຄວາມເຂົ້າໃນທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບນັ້ນໆ ຢ່າງລຶກຊຶ້ງຂຶ້ນ ຫຼື ເວົ້າສັ້ນໆໄດ້ວ່າເປັນການສອນຈາກຫຼັກການໄປສູ່ຕົວຢ່າງຍ່ອຍໆ.

### 2. ວັດຖຸປະສົງ

ວິທີສອນໂດຍໃຊ້ນິລະໄນເປັນວິທີການທີ່ມຸ່ງຫວັງຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ເປັນຫຼັກການ ແລະ ສາມາດນຳຫຼັກການດັ່ງກ່າວໄປໃຊ້ໄດ້.

### 3. ອົງປະກອບທີ່ສຳຄັນ ( ທີ່ຂາດບໍ່ໄດ້ ) ຂອງວິທີສອນ

5) ມີທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບຕ່າງໆ



CS CamScanner

CS CamScanner

6) ມີຕົວຢ່າງທີ່ຫຼາກຫຼາຍ ທີ່ສາມາດນຳທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບນັ້ນໄປໃຊ້ໄດ້

7) ມີການເຝິກທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບໄປໃຊ້ໃນສະຖານະການທີ່ຫຼາກຫຼາຍ

8) ມີຜົນການຮຽນຂອງນັກຮຽນທີ່ເກີດຂຶ້ນຈາກການນຳຫລັກການໄປໃຊ້

**4. ຂັ້ນຕອນສຳຄັນ ( ທີ່ຂາດບໍ່ໄດ້) ຂອງການສອນ**

6) ຄູທີ່ຖ່າຍທອດຄວາມຮູ້ທິດສະດີ, ຫຼັກການ ຫຼື ຂໍ້ສະຫຼຸບທີ່ຕ້ອງການໃຫ້ນັກຮຽນໄດ້ຮຽນຮູ້ດ້ວຍວິທີການຕ່າງໆຕາມຄວາມເໝາະສົມ

7) ຄູໃຫ້ຕົວຢ່າງສະຖານະການໃໝ່ທີ່ຫຼາກຫຼາຍທີ່ສາມາດນຳຄວາມຮູ້ທີ່ໄດ້ຮຽນມາໄປໃຊ້ໄດ້.

8) ຄູໃຫ້ນັກຮຽນເຝິກປະຕິບັດນຳຄວາມຮູ້ຄວາມເຂົ້າໃຈທີ່ເກີດຂຶ້ນໄປໃຊ້ໃນສະຖານະການໃໝ່

9) ຄູໃຫ້ນັກຮຽນວິເຄາະ ແລະ ອະພິປາຍການຮຽນຮູ້ທີ່ເກີດຂຶ້ນ

10) ຄູວັດ ແລະ ປະເມີນຜົນການຮຽນຮູ້ຂອງຜູ້ຮຽນ

**5. ເຕັກນິກ ແລະ ຂໍ້ສະເໜີແນະຕ່າງໆໃນການໃຊ້ວິທີສອນໂດຍໃຊ້ນິລະນັບໃຫ້ມີປະສິດທິພາບ**

4) **ກະກຽມ**

ຄູຈຳເປັນຕ້ອງທຳຄວາມເຂົ້າໃຈໃນທິດສະດີ ຫຼັກການ, ເນື້ອໃນ, ຂໍ້ສະຫຼຸບທີ່ຕ້ອງການສອນໃຫ້ແກ່ນັກຮຽນ ແລະ ຫາວິທີທີ່ເໝາະສົມໃນການຖ່າຍທອດ ຫຼື ນຳສະເໜີເນື້ອໃນເຫຼົ່ານັ້ນໃຫ້ແກ່ນັກຮຽນ ນອກຈາກນັ້ນ ຄູຈຳເປັນຕ້ອງກຽມຕົວຢ່າງທີ່ນັກຮຽນສາມາດນຳເນື້ອໃນເລົ່ານັ້ນໄປໃຊ້ໃຫ້ເກີດຜົນສຳເລັດ ຕົວຢ່າງຄວນເປັນສະຖານະການທີ່ມີຄວາມຫຼາກຫຼາຍ ເພື່ອໃຫ້ນັກຮຽນເກີດຄວາມຄິດລວມຍອດ ແລະ ຄວາມເຂົ້າໃຈທີ່ຈະແຈ້ງ.

5) **ການນຳສະເໜີເນື້ອໃນຄວາມຮູ້, ທິດສະດີ, ຫຼັກການ ແລະ ຂໍ້ສະຫຼຸບ**

ຄູຈຳເປັນຕ້ອງທຳຄວາມເຂົ້າໃຈໃນສິ່ງທີ່ຈະສອນເປັນຢ່າງດີ ລວມທັງວິທີການທີ່ເໝາະສົມໃນການນຳສະເໜີເນື້ອໃນໃຫ້ແກ່ນັກຮຽນ ຈົນນັກຮຽນເກີດຄວາມເຂົ້າໃຈ ເພື່ອໃຫ້ແນ່ໃຈວ່ານັກຮຽນມີຄວາມເຂົ້າໃຈຊໍ່າໃດ ຄູຄວນທົດສອບຄວາມຮູ້ຄວາມເຂົ້າໃຈຂອງນັກຮຽນກ່ອນຈະເຝິກໃຊ້ຄວາມຮູ້.

6) **ການນຳສະເໜີສະຖານະການໃໝ່ໃຫ້ນັກຮຽນເຝິກໃຊ້ຄວາມຮູ້**

ເມື່ອເຫັນວ່ານັກຮຽນເກີດຄວາມເຂົ້າໃຈໃນທິດສະດີ, ຫຼັກການ ແລະ ຂໍ້ສະຫຼຸບທີ່ໃຊ້ພໍສົມຄວນ ຄູຄວນໃຫ້ນັກຮຍນເຝິກການນຳຄວາມຮູ້ໄປປະຍຸກໃຊ້ໃນສະຖານະການໃຫມ່ໆ ຊຶ່ງມີຄວາມຫຼາກຫຼາຍພໍສົມຄວນ ເພື່ອຊ່ວຍໃຫ້ນັກຮຽນເກີດຄວາມເຂົ້າໃຈທີ່ລຶກຊຶ້ງຂຶ້ນ.

**6. ຂໍ້ດີ ແລະ ຂໍ້ເສຍ**



CamScanner

CamScanner

**ຂໍ້ດີ**

- ເປັນວິທີສອນທີ່ຊ່ວຍຖ່າຍທອດເນື້ອໃນໄດ້ໄວ ແລະ ບໍ່ຫຍຸ້ງຍາກ
- ເປັນວິທີສອນທີ່ນັກຮຽນມີໂອກາດໄດ້ເຝິກຝົນການນຳທິດສະດີ, ຫຼັກການໄປໃຊ້ໃນສະຖານະການໃໝ່ໆ
- ເປັນວິທີສອນທີ່ອຳນວຍສະດວກໃຫ້ແກ່ນັກຮຽນທີ່ມີຄວາມສາມາດ ຫຼື ຮຽນຮູ້ໄດ້ໄວສາມາດພັດທະນາໂດຍບໍ່ຕ້ອງຖ້ານັກຮຽນທີ່ຊ້າກວ່າ.

**ຂໍ້ເສຍ**

- ເປັນວິທີສອນທີ່ຄູຕ້ອງກຽມຕົວຢ່າງ, ສະຖານະການ, ບັນຫາທີ່ຫຼາກຫຼາຍມາໃຫ້ນັກຮຽນໄດ້ເຝິກເຮັດ.
- ເປັນວິທີສອນທີ່ຂຶ້ນກັບຄວາມເຂົ້າໃຈ ແລະ ຄວາມສາມາດຂອງຄູໃນການນຳສະເໜີທິດສະດີ ແລະ ຫຼັກການ
- ເປັນວິທີສອນທີ່ນັກຮຽນທີ່ຮຽນຮູ້ໄດ້ຊ້າ ທີ່ບໍ່ສາມາດຕາມທັນໝູ່ ແລະ ເກີດບັນຫາໃນການຮຽນຮູ້.

**12. ວິທີການສອນແບບໂຄງການ/ໂຄງງານ (Project Method)**

ແນວຄິດ ເປັນວິທີການຈັດການຮຽນຮູ້ທີ່ໃຫ້ຜູ້ຮຽນໄດ້ສຶກສາຄົ້ນຄວ້າ ຫລື ປະຕິບັດງານຕາມຫົວຂໍ້ທີ່ຜູ້ຮຽນສົນໃຈ ເຊິ່ງຜູ້ຮຽນຈະຕ້ອງເຝິກຂະບວນການເຮັດວຽກງານຢ່າງມີຂັ້ນຕອນ ມີການວາງແຜນໃນການເຮັດວຽກງານ ຫລືການແກ້ບັນຫາຢ່າງເປັນລະບົບ ຈົນການດຳເນີນງານສຳເລັດລຸລ່ວງຕາມວັດຖຸປະສົງ ສິ່ງຜົນໃຫ້ຜູ້ຮຽນມີທັກສະການຮຽນຮູ້ຢ່າງຫລາກຫລາຍ ອັນເປັນປະສົບການກົງທີ່ມີຄຸນຄ່າ ສາມາດນຳໄປປະຍຸກໃຊ້ໃນການດຳເນີນງານຕ່າງໆ ໄດ້ ວິທີການສອນໂຄງງານສາມາດສອນຕໍ່ເນື່ອງກັບວິທີສອນແບບບູລະນາການໄດ້ ທັງໃນຮູບແບບບູລະນາການພາຍໃນກຸ່ມການຮຽນຮູ້ ແລະ ບູລະນາການລະຫວ່າງກຸ່ມການຮຽນຮູ້ ເພື່ອໃຫ້ຜູ້ຮຽນໄດ້ນຳຄວາມຮູ້ ແລະປະ ສົບການທີ່ໄດ້ມາບູນລະນາການເພື່ອເຮັດໂຄງງານ

**ການຈັດກິດຈະກຳການຮຽນຮູ້**

1. ຂັ້ນກຳນົດບັນຫາ ຫລືສຳຫຼວດຄວາມສົນໃຈ ຜູ້ສອນສະເໜີສະຖານະການ ຫລືຕົວຢ່າງທີ່ເປັນບັນຫາ ແລະ ກະຕຸ້ນໃຫ້ຜູ້ຮຽນຫາວິທີການແກ້ບັນຫາ ຫລືຍົວະໃຫ້ຜູ້ຮຽນມີຄວາມຕ້ອງການຢາກຮຽນຢາກຮູ້ ໃນເລື່ອງໃດເລື່ອງໜຶ່ງ.
2. ຂັ້ນກຳນົດຈຸດປະສົງໃນການຮຽນ ຜູ້ສອນແນະນຳໃຫ້ຜູ້ຮຽນກຳນົດຈຸດປະສົງໃຫ້ຊັດເຈນວ່າຮຽນເພື່ອຫຍັງ ຈະເຮັດໂຄງງານນັ້ນເພື່ອແກ້ບັນຫາຫຍັງ ຊຶ່ງເຮັດໃຫ້ຜູ້ຮຽນກຳນົດໂຄງງານແນວທາງໃນການດຳເນີນງານໄດ້ກົງຕາມຈຸດປະສົງ
3. ຂັ້ນວາງແຜນ ແລະ ວິເຄາະໂຄງງານ ໃຫ້ຜູ້ຮຽນວາງແຜນແກ້ບັນຫາ ຊຶ່ງເປັນໂຄງງານ



CamScanner
CamScanner

ດ່ຽວ ຫລື ກຸ່ມກໍໄດ້ ແລ້ວສະເໜີແຜນການດໍາເນີນງານໃຫ້ຜູ້ສອນພິຈາລະນາ ໃຫ້ຄໍາແນະນໍາ ຊ່ວຍເຫລືອ ແລະ ຂໍ້ສະເໜີແນະການວາງແຜນໂຄງງານຂອງຜູ້ຮຽນ ຜູ້ຮຽນຂຽນໂຄງງານຕາມຫົວຂໍ້ ຊຶ່ງມີຫົວຂໍ້ສໍາຄັນ (ຊື່ໂຄງງານ ຫລັກການ ແລະ ເຫດຜົນວັດຖຸປະສົງຫລືຈຸດມຸ້ງໝາຍ ເຈົ້າຂອງໂຄງການ ທີ່ປຶກສາໂຄງການ ແຫລ່ງຄວາມຮູ້ ສະຖານທີ່ດໍາເນີນການ ໄລຍະເວລາດໍາເນີນການ ງົບປະມານ ວິທີດໍາເນີນການ ເຄື່ອງມືທີ່ໃຊ້ ຜົນທີ່ຄາດວ່າຈະໄດ້ຮັບ)

4. ຂັ້ນລົງມືປະຕິບັດຫລືແກ້ບັນຫາ ໃຫ້ຜູ້ຮຽນລົງມືປະຕິບັດຫລືແກ້ບັນຫາຕາມແຜນການທີ່ກໍານົດໄວ້ໂດຍມີຜູ້ສອນເປັນທີ່ປຶກສາ ຄອຍຖ້າສັງເກດ ຕິດຕາມ ແນະນໍາໃຫ້ຜູ້ຮຽນຮູ້ຈັກສັງເກດ ເກັບລວບລວມຂໍ້ມູນ ບັນທຶກຜົນດໍາເນີນການດ້ວຍຄວາມມານະອົດທົນ ມີການປະຊຸມອະພິປາຍ ປຶກສາຫາລືກັນເປັນໄລຍະໆ ຜູ້ສອນຈະເຂົ້າໄປກ່ຽວຂ້ອງເທົ່າທີ່ຈໍາເປັນ ຜູ້ຮຽນເປັນຜູ້ໃຊ້ຄວາມຄິດ ຄວາມຮູ້ ໃນການວາງແຜນ ແລະ ຕັດສິນໃຈເຮັດດ້ວຍຕົນເອງ

5. ຂັ້ນປະເມີນຜົນລະຫວ່າງປະຕິບັດງານ ຜູ້ສອນແນະນໍາໃຫ້ຜູ້ຮຽນຮູ້ຈັກປະເມີນຜົນກ່ອນດໍາເນີນການລະຫວ່າງດໍາເນີນການ ແລະ ຫລັງດໍາເນີນການ ຄືຮູ້ຈັກພິຈາລະນາວ່າກ່ອນທີ່ຈະດໍາເນີນການມີສະພາບເປັນຢ່າງໃດ ມີບັນຫາຢ່າງໃດລະຫວ່າງທີ່ດໍາເນີນງານຕາມໂຄງງານນັ້ນ ຍັງມີສິ່ງໃດທີ່ຜິດພາດຫລືເປັນຂໍ້ບົກພ່ອງຢູ່ ຕ້ອງແກ້ໄຂຫຍັງອີກບໍ່ ມີວິທີແກ້ໄຂແບບໃດ ເມື່ອດໍາເນີນການໄປແລ້ວຜູ້ຮຽນມີແນວຄິດແບບໃດ ມີຄວາມເພິ່ງພໍໃຈຫລືບໍ່ ຜົນຂອງການດໍາເນີນການຕາມໂຄງງານ ຜູ້ຮຽນໄດ້ຄວາມຮູ້ຫຍັງ ໄດ້ປະໂຫຍດແບບໃດ ແລະ ສາມາດນໍາຄວາມຮູ້ນັ້ນໄປພັດທະນາປັບປຸງງານໄດ້ຢ່າງດີຍິ່ງຂຶ້ນ ຫລືເອົາຄວາມຮູ້ນັ້ນໄປໃຊ້ໃນຊີວິດໄດ້ແບບໃດ ໂດຍຜູ້ຮຽນປະເມີນໂຄງງານຂອງຕົນເອງຫລືເພື່ອນຮ່ວມປະເມີນ ຈາກນັ້ນຜູ້ສອນຈຶ່ງປະເມີນຜົນໂຄງງານຕາມແບບປະເມີນ ເຊິ່ງຜູ້ປົກຄອງອາດຈະມີສ່ວນຮ່ວມໃນການປະເມີນດ້ວຍກໍໄດ້.

6. ຂັ້ນສະຫລຸບ ລາຍງານຜົນ ແລະ ສະເໜີຜົນງານ ເມື່ອຜູ້ຮຽນເຮັດວຽກຕາມແຜນ ແລະ ເກັບຂໍ້ມູນແລ້ວຕ້ອງກໍການວິເຄາະຂໍ້ມູນ ສະຫລຸບແລະຂຽນລາຍງານເພື່ອນໍາສະເໜີຜົນງານ ຊຶ່ງນອກເໜືອຈາກລາຍງານເອກະສານແລ້ວ ອາດມີແຜນຜູມ, ແຜນພາບ, ກາຟ, ແບບຈໍາລອງ ຫລືຂອງຈິງ ປະກອບການນໍາສະເໜີ ອາດຈັດໄດ້ຫລາຍຮູບແບບ ເຊັ່ນ: ຈັດເທສະການ ການສະແດງລະຄອນ ແລະ ອື່ນໆ.

**ປະໂຫຍດ**

1. ເປັນການສອນທີ່ມຸ້ງໃຫ້ຜູ້ຮຽນມີບົດບາດ ມີສ່ວນຮ່ວມໃນການຈັດຂະບວນການຮຽນຮູ້ໄດ້ ປະຕິບັດຈິງຄິດເອງ ເຮັດເອງ ຢ່າງລະອຽດຮອບຄອບ ຢ່າງເປັນລະບົບ
2. ຜູ້ຮຽນຮູ້ຈັກວິທີສະແຫວງຫາຂໍ້ມູນ ສ້າງຄວາມຮູ້ ແລະ ສະຫລຸບຄວາມຮູ້ໄດ້ດ້ວຍຕົນເອງ
3. ຜູ້ຮຽນມີທັກສະໃນການແກ້ບັນຫາ ມີທັກສະຂະບວນການໃນການເຮັດວຽກງານ ມີທັກສະການເຄື່ອນໄຫວທາງກາຍ
4. ຜູ້ຮຽນໄດ້ເຝິກຂະບວນການກຸ່ມສໍາພັນ ເຮັດວຽກຮ່ວມກັນກັບຜູ້ອື່ນໄດ້
5. ເຝິກຄວາມເປັນປະຊາທິປະໄຕ ຄືການຮັບຟັງຄວາມຄິດເຫັນຊຶ່ງກັນ ແລະ ກັນ ມີເຫດຜົນ ມີ

ການຍອມຮັບໃນຄວາມຮູ້ ຄວາມສາມາດຊຶ່ງກັນ ແລະ ກັນ

6. ຜູ້ຮຽນໄດ້ເຝິກລັກສະນະນິໄສທີ່ດີໃນການເຮັດວຽກງານ ເຊັ່ນ: ການຈົດບັນທຶກຂໍ້ມູນ ການເກັບຂໍ້ມູນຢ່າງເປັນລະບົບ ຄວາມຮັບຜິດຊອບ ຄວາມຊື່ກົງ ຄວາມເອົາໃຈໃສ່ ຄວາມຂະຫຍັນໝັ່ນພຽນໃນການເຮັດວຽກງານ ຮູ້ຈັກເຮັດວຽກຢ່າງເປັນລະບົບ ເຮັດວຽກຢ່າງມີແຜນ ໃຊ້ເວລາວ່າງໃຫ້ເປັນປະໂຫຍດ

7. ຜູ້ຮຽນເກີດຄວາມຄິດລິເລີ່ມສ້າງສັນ ແລະ ສາມາດນຳຄວາມຮູ້ ຄວາມຄິດ ຫລືແນວທາງທີ່ໄດ້ໄປໃຊ້ໃນການແກ້ບັນຫາໃນຊີວິດ ຫລືໃນສະຖານະການອື່ນໆໄດ້



CS CamScanner

CS CamScanner

# ບົດທີ5
# ການຂຽນແຜນການສອນຊັ້ນມັດທະຍົມ

ວຽກສິດສອນເປັນວຽກທີ່ມີຄວາມຫຍຸ້ງຍາກ ເພາະວ່າຄູຈະຕ້ອງໄດ້ເຮັດວຽກກັບນັກຮຽນເປັນຈຳນວນຫຼວງຫຼາຍທີ່ມີແນວຄິດແຕກຕ່າງກັນ. ດັ່ງນັ້ນ ເພື່ອເຮັດໃຫ້ການສອນມີປະສິດທິພາບ ຄູຈະຕ້ອງໄດ້ມີຄວາມຮູ້ຫຼາຍດ້ານເຊັ່ນ: ຫຼັກວິຊາການ, ຫຼັກການສິດສອນ, ອຸປະກອນການຮຽນ-ການສອນ, ເປົ້າໝາຍຜູ້ທີ່ຈະຮຽນ ແລະ ສະພາບແວດລ້ອມຕ່າງໆ. ການສອນເປັນວຽກທີ່ພົວພັນລະຫວ່າງຄູ ກັບ ນັກຮຽນ ເພື່ອຊ່ວຍໃຫ້ນັກຮຽນສາມາດຮັບເອົາຄວາມຮູ້ທີ່ສົ່ງອອກຈາກຄູ ໃຫ້ບັນລຸຕາມຈຸດປະສົງທີ່ວາງໄວ້, ການວາງແຜນການສອນກໍ່ຄືການແຕ່ງບົດສອນ ແມ່ນມີຄວາມສຳຄັນ ແລະ ມີຄວາມຈຳເປັນ ເພື່ອຊ່ວຍໃຫ້ຜູ້ສອນສາມາດດຳເນີນການສອນໄດ້ຕາມເປົ້າໝາຍ.

## I. ຄວາມໝາຍ-ຄວາມສຳຄັນຂອງແຜນການສອນ

### 1.1 ຄວາມໝາຍຂອງແຜນການສອນ

ເພື່ອເຮັດໃຫ້ການຮຽນ-ການສອນດຳເນີນໄປຢ່າງມີປະສິດທິຜົນນັ້ນ ກໍ່ຕ້ອງໄດ້ມີການກະກຽມ ຫຼື ວາງແຜນການສອນ ຫຼື ບົດສອນ. ການສ້າງແຜນການສອນແມ່ນໄດ້ມີການກຳນົດຢູ່ໃນໂຄງການຫຼັກສູດການສອນຂອງວິຊາຄູ. ການຂຽນແຜນການສອນນີ້ມີຈຸດປະສົງເປົ້າໝາຍ ຊ່ວຍໃຫ້ຄູນຳເອົາຄວາມຮູ້, ເນື້ອໃນຂອງໝວດວິຊາຕ່າງໆສົ່ງໃຫ້ນັກຮຽນຢ່າງມີປະສິດທິພາບ ໂດຍໃຫ້ຜູ້ຮຽນເກີດມີທັດສະນະຄະຕິກ່ຳການຮຽນຮູ້ ແລະ ປະສົບການຕາມຈຸດປະສົງທີ່ກຳນົດໄວ້.

ການວາງແຜນການສອນປະກອບດ້ວຍ: ການກຳນົດຈຸດປະສົງ, ການຄັດເລືອກເນື້ອໃນ, ກິດຈະກຳ, ສື່ການຮຽນ-ການສອນ ແລະ ການປະເມີນ. ເວົ້າເຖິງຄວາມໝາຍຂອງແຜນການສອນແມ່ນການກະກຽມການສອນລ່ວງໜ້າໂດຍອາໄສຂໍ້ມູນຕ່າງໆທີ່ເກັບກຳລວບລວມມາໄດ້ເພື່ອດຳເນີນການຈັດວາງຢ່າງເປັນລະບົບ ໂດຍເຮັດໃຫ້ການຮຽນ-ການສອນເປັນໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້.

### 1.2 ຄວາມສຳຄັນຂອງການວາງແຜນການສອນ

ການວາງແຜນເປັນກິດຈະກຳທີ່ສຳຄັນ ຄົນເຮົາຈະເຮັດຫຍັງບໍ່ວ່າວຽກຈະນ້ອຍຫຼືໃຫຍ່ກໍ່ຕ້ອງມີແຜນການໄວ້ລ່ວງໜ້າ ເຊັ່ນວຽກງານຕ່າງໆໃນຄອບຄົວ, ວຽກງານຕ່າງໆທີ່ໄດ້ຮັບມອບໝາຍຈາກພາກສ່ວນຕ່າງໆ. ການຮຽນ-ການສອນຂອງຄົນ, ແຜນປະຈຳອາທິດ, ແຜນການສອນໄລຍະຍາວ ແລະ ແຜນການສອນໄລຍະສັ້ນ...ແຜນການດັ່ງກ່າວຈະມີການກຳນົດໄວ້ລ່ວງໜ້າວ່າຈະເຮັດຫຍັງ? ເວລາໃດ? ແລະ ວິທີດຳເນີນແຜນຂອງຄົນແນວໃດແດ່?

ຢູ່ໃນຂະບວນການສິດສອນຂອງຄູ, ການວາງແຜນກໍ່ເປັນສິ່ງທີ່ສຳຄັນທີ່ສຸດ ກໍ່ເພາະວ່າກ່ອນຈະສອນໃນລາຍວິຊານີ້ ເປັນພາກຮຽນຫຼືສົກຮຽນ, ເປັນເດືອນ, ອາທິດຫຼືບົດສອນໃນແຕ່ລະຊົ່ວໂມງເປັນສິ່ງຈຳເປັນຕ້ອງມີການວາງແຜນການສອນລະອຽດ, ໂດຍມີການກຳນົດຈຸດປະສົງ, ເນື້ອໃນ, ວິທີສອນ ແລະ ການປະເມີນໄດ້ ເພື່ອເປັນແນວທາງກ່ຽວກັບການດຳເນີນການສອນຂອງຄົນເອງ. ຈາກປະສົບການຕົວຈິງແລ້ວ ເຫັນວ່າຄູຜູ້ໃດໄດ້ວາງແຜນການສອນຢ່າງລະອຽດ ກໍ່ຈະປະຕິບັດການສອນ



CamScanner
CamScanner

ໄດ້ດີ ແລະ ຄ່ອງແຄ້ວ ນັກຮຽນພໍໃຈ ກົງກັນຂ້າມ ຖ້າຄູຄົນໃດຫາກບໍ່ມີແຜນການສອນໄວ້ຢ່າງລະອຽດ ເມື່ອສອນຕົວຈິງກໍ່ເປັນການສັບສົນ ບໍ່ແນ່ນອນ ແລະບໍ່ສຳເລັດການສອນ ແລະ ບໍ່ໄປຕາມຂັ້ນຕອນ ດັ່ງນັ້ນ, ການວາງແຜນ ຈຶ່ງເປັນກກິດຈະກຳຢ່າງໜຶ່ງທີ່ຈຳເປັນ ແລະ ສຳຄັນໂດຍສະເພາະໃນການຮຽນ-ການສອນຂອງຄູ.

**ແຜນການຮຽນ-ການສອນມີຄວາມສຳຄັນດັ່ງນີ້:**

- ຊ່ວຍໃຫ້ຜູ້ສອນຈັດການຮຽນ-ການສອນໄດ້ຢ່າງເໝາະສົມກັບສະພາບແວດລ້ອມ ໂດຍໃຊ້ຊັບພະຍາກອນທີ່ມີຢູ່ໃນທ້ອງຖິ່ນໃຫ້ເປັນປະໂຫຍດ.
- ຊ່ວຍໃຫ້ຜູ້ສອນມີເປົ້າໝາຍຊັດເຈນ, ມີທິດນຳແກ່ຜູ້ຮຽນໃນການຮຽນ-ການສອນ ເພາະໄດ້ສຶກສາ ແລະ ເຂົ້າໃຈເນື້ອໃນເປັນຢ່າງດີແລ້ວ.
- ຊ່ວຍໃຫ້ການວາງແຜນໃນການເຮັດກິດຈະກຳໄດ້ຢ່າງເໝາະສົມກັບສະພາບຂອງຜູ້ຮຽນໃນດ້ານຄວາມສາມາດ, ຄວາມສົນໃຈ, ຄວາມຮູ້ພື້ນຖານ, ຄວາມສຳນານ ແລະ ອື່ນໆ.
- ຊ່ວຍໃຫ້ຜູ້ສອນມີຄວາມເຂົ້າໃຈເນື້ອໃນຫຼັກການຕ່າງໆ ທີ່ຈະນຳມາສອນ ເພື່ອບໍ່ໃຫ້ເກີດຄວາມສັບສົນ ແລະ ຂາດເນື້ອໃນບາງຕອນ.
- ຊ່ວຍໃຫ້ກິດຈະກຳການຮຽນ-ການສອນໃນຫ້ອງຮຽນດຳເນີນໄປໂດຍດີ, ສາມາດແກ້ໄຂບັນຫາສະເພາະໜ້າ, ມີຄວາມເຊື່ອໝັ້ນໃນໂຕເອງ ແລະ ໃຫ້ຜູ້ຮຽນມີຄວາມສົນໃຈຕໍ່ບົດຮຽນຢ່າງຕໍ່ເນື່ອງ.
- ຊ່ວຍໃຫ້ຜູ້ສອນມີໂອກາດກຽມສື່ການຮຽນ-ການສອນ ແລະ ທົດລອງໃຊ້ກ່ອນຂຶ້ນຫ້ອງສອນຕົວຈິງ.
- ຊ່ວຍໃຫ້ຜູ້ສອນປະເມີນຜົນການຮຽນ-ການສອນໄດ້ຢ່າງເໝາະສົມກັບບົດຮຽນ ແລະ ສອດຄ່ອງກັບຈຸດປະສົງຕະຫຼອດເຖິງຄວາມສາມາດຂອງນັກຮຽນ.
- ຊ່ວຍໃຫ້ຜູ້ສອນສາມາດວິເຄາະການສອນທີ່ຜ່ານມາວ່າປະສົບຜົນສຳເລັດ ຫຼື ມີຈຸດບົກພ່ອງຢ່າງໃດ ໂດຍການວິເຄາະຈາກແຜນການຮຽນ-ການສອນທີ່ໄດ້ບັນທຶກໄວ້ ແລະ ຜູ້ສອນອາດຫາທາງປັບປຸງແກ້ໄຂແຜນການຮຽນ-ການສອນໃຫ້ດີຂຶ້ນເພື່ອໃຊ້ໃນຂັ້ນຕໍ່ໜ້າ.

**1.3 ສິ່ງທີ່ຄວນຄຳນຶງເຖິງຢູ່ໃນລັກສະນະຂອງແຜນການຮຽນ-ການສອນ**

ຢູ່ໃນແຜນການຮຽນ-ການສອນສິ່ງທີ່ຄວນຄຳນຶງເຖິງມີດັ່ງນີ້.

- ແຜນການຮຽນ-ການສອນມີລັກສະນະປັບສົມມຸດຖານ ມີການກຳນົດສະຖານະການໄວ້, ຖ້າສະຖານະການນັ້ນປ່ຽນໄປກິດຈະກຳການຮຽນ-ການສອນກໍ່ຈະປ່ຽນໄປ ເພື່ອໃຫ້ສອດຄ່ອງກັບຈຸດປະສົງທີ່ກຳນົດໄວ້, ຖ້າສະພາບການນັ້ນປ່ຽນໄປ ກິດຈະກຳການຮຽນ-ການສອນກໍ່ຈະປ່ຽນໄປ ເພື່ອໃຫ້ສອດຄ່ອງກັບຈຸດປະສົງທີ່ກຳນົດໄວ້.
- ມີຈຸດປະສົງເປົ້າໝາຍທີ່ຊັດເຈນ ແລະ ສາມາດປະຕິບັດໄດ້ ພ້ອມກັນນັ້ນການວາງແຜນຕ້ອງກະຕຸ້ນໃຫ້ຜູ້ຮຽນສົນໃຈ ຈຶ່ງຈະມີສ່ວນຮ່ວມໃນກິດຈະກຳ
- ການວາງແຜນຕ້ອງຄຳນຶງເຖິງເວລາທີ່ດຳເນີນກິດຈະກຳການຮຽນ-ການສອນ



CS CamScanner

CS CamScanner

- ວາງແຜນຕ້ອງມີການສະຫຼຸບເປັນຂັ້ນຕອນ ແລະ ມີການສະຫຼຸບໃນບົດທ້າຍຂອງບົດຮຽນ ມີການມອບໝາຍວຽກຢ່າງຊັດເຈນສຳລັບກິດຈະກຳຕໍ່ໄປ.
- ຕ້ອງມີການຄາດຄະເນໄວ້ລ່ວງໜ້າກ່ຽວກັບຄຳຖາມ ແລະ ບັນຫາຂອງຜູ້ຮຽນຕ້ອງສະແດງໃຫ້ເຫັນເຖິງຄວາມຕໍ່ເນື່ອງລະຫວ່າງບົດຮຽນຜ່ານມາ ແລະ ບົດຮຽນໃໝ່.
- ເວລາໃຊ້ຄຳຖາມ ເພື່ອກະຕຸ້ນຜູ້ຮຽນຕ້ອງມີຢູ່ໃນໃນກິດຈະກຳການຮຽນ-ການສອນ ປະສານສົມທົບລະຫວ່າງຄວາມຮູ້ ແລະ ປະສົບການຂອງຄູ ເພື່ອໃຫ້ຜູ້ຮຽນຮັບເອົາໄດ້ງ່າຍ.
- ໃນການວາງແຜນກ່ຽວກັບບົດສອນ, ສື່ການສອນຕ້ອງໃຫ້ຄົບຖ້ວນພຽງພໍ ແລະ ເໝາະສົມເພື່ອສະດວກໃນການສອນ ອີກດ້ານໜຶ່ງຜູ້ທີ່ມາສອນແທນ ໂດຍບໍ່ໄດ້ກະກຽມລ່ວງໜ້າກໍ່ສາມາດດຳເນີນການສອນໄດ້ຕາມຂັ້ນຕອນຂອງເນື້ອໃນຄວາມຮູ້ຢ່າງລະອຽດຕາມແຜນທີ່ວາງໄວ້.

**1.4 ຫຼັກການກະກຽມການຮຽນ-ການສອນ**

ຫຼັກການກະກຽມການຮຽນ-ການສອນມີດັ່ງລຸ່ມນີ້.

- ຕ້ອງຂຽນແຜນການຮຽນ-ການສອນເຊິ່ງລວມທັງເລື່ອງທີ່ຈະສອນ, ຫົວເລື່ອງຕ່າງໆ ກຳນົດຈຸດປະສົງ ຄາດໝາຍ, ສື່ການຮຽນ-ການສອນ ແລະ ແຜນການປະເມີນຜົນ
- ຕ້ອງມີແຜນການລວບລວມຂໍ້ມູນ ແລະ ເນື້ອໃນທີ່ຈະສອນຕາມຫົວເລື່ອງ, ມີຈຸດສຸມຕາມຈຸດປະສົງທີ່ກຳນົດໄວ້ໃນແຜນການສອນ.
- ຕ້ອງກະກຽມແບບທົດສອບສຳລັບນັກຮຽນ ເຮັດບົດທົດສອບກ່ອນການຮຽນ ຫຼື ຫຼັງການຮຽນ.
- ຕ້ອງຊ້ອມ (ຝຶກ)ການສອນ ເພື່ອຈັດລະດັບຊັ້ນການສອນໃຫ້ແກ່ຕົນເອງ, ໃຫ້ຕົນເອງແນ່ໃຈວ່າຈະສອນໃຫ້ນັກຮຽນໄດ້ດີ ແລະ ມີປະສິດທິພາບສູງ.

**II. ປະເພດຂອງແຜນການສອນ**

**ກ. ແຜນການສອນໄລຍະຍາວ**

ແຜນການສອນໄລຍະຍາວ ແມ່ນແຜນການສອນຂອງຄູໃຊ້ເວລາເປັນພາກຮຽນ, ເປັນເດືອນ ຫຼື ເປັນອາທິດໃນລັກສະນະແບບໂຄງການສອນ ເຊິ່ງປະກອບບາງພາກສ່ວນດັ່ງຕໍ່ລຸ່ມນີ້

- **ຈຸດປະສົງໃນລາຍວິຊານັ້ນ**
  - ຄູຕ້ອງເຂົ້າໃຈວ່າ ຈະສອນວິຊານີ້ໃຫ້ນັກຮຽນຮູ້ຫຍັງແດ່? ມັນຮັບໃຊ້ຫຍັງແດ່ຕໍ່ການດຳລົງຊີວິດຂອງຄົນເຮົາ
  - ເມື່ອຮຽນຈົບແລ້ວນັກຮຽນຈະເກີດພຶດຕິກຳອັນໃດແດ່?
- **ໂຄງຮ່າງຂອງເນື້ອໃນທີ່ຈະສອນ**

ຄູຈະຕ້ອງໄດ້ລົງເລິກວິເຄາະເນື້ອໃນໃຫ້ລະອຽດແຕ່ລະເລື່ອງ ທີ່ຈະສອນໃນລາຍວິຊານອກຈາກຕຳລາແລ້ວ ຄູຍັງຕ້ອງຊອກຫາເອກະສານທີ່ພົວພັນກັບເລື່ອງຢູ່ທາງອື່ນມາເພີ່ມເຕີມ. ຜູ້ສອນຕ້ອງໄດ້



CamScanner

CamScanner

ແບ່ງເວລາໄວ້ເປັນແຕ່ລະໄລຍະ ເຊັ່ນວ່າ ຈະສອນຈັກຊົ່ວໂມງຕໍ່ປີ, ຕໍ່ພາກນອກຈາກນີ້ແລ້ວ ຍັງກໍານົດຊົ່ວໂມງໄວ້ເພື່ອທວດການສອບເສັງແລະອື່ນໆອີກ.

**ຮ່າງແຜນການສອນໄລຍະຍາວ (ແຜນພາກຮຽນ)**

| ເດືອນ | ອາທິດທີ | ເວລາຮຽນ/ອາທິດ | ເນື້ອໃນທີ່ຈະສອນ | ອຸປະກອນທີ່ໃຊ້ |
|---|---|---|---|---|
| | | | | |

**໒. ແຜນການສອນລະດັບບົດ(ແຜນການສອນໄລຍະສັ້ນ)**

ແຜນການສອນໄລຍະສັ້ນເປັນການວາງແຜນການສອນ ທີ່ແນໃສ່ເພື່ອປະຕິບັດໃຫ້ສໍາເລັດເປັນແຕ່ລະຄັ້ງໄປ ການສອນທີ່ຮຽນຂຶ້ນຈາກແຜນການສອນໄລຍະສັ້ນນີ້ ຮຽກວ່າແຜນການສອນລະດັບບົດ. ແຜນການສອນຄືການວາງແຜນກໍານົດຮູບແບບພຶດການຮຽນແຕ່ລະເລື່ອງ ເຊິ່ງເປັນແນວທາງກ່ຽວກັບການດໍາເນີນຈັດການຮຽນ-ການສອນ ໃຫ້ເປັນໄປຕາມຈຸດປະສົງແນວຄວາມຄິດລວບຍອດ, ເນື້ອໃນແລະການຕີລາຄາຜົນໄດ້ຮັບຕາມທີ່ໄດ້ກໍານົດໄວ້ໃນຫຼັກສູດ.

**ຮູບແບບແຜນການສອນມີ2 ຮູບແບບຄື ແບບລຽງຫົວຂໍ້ແລະແບບຕາຕະລາງ**

**1. ຮູບແບບລຽງຫົວຂໍ້**

ແຜນການສອນກຸ່ມວິຊາ...............................................ຊັ້ນ.......................................

ພາກ.......................................ເລື່ອງ..................................................

ໃຊ້ເວລາສອນ...........................................ວັນທີສອນ.............................

ແນວຄວາມຄິດລວບຍອດ.......................................................................

ຈຸດປະສົງ..........................................................................................

1. .......................................................................................................

2. .......................................................................................................

3. .......................................................................................................

**ເນື້ອໃນກິດຈະກໍາການຮຽນ-ການສອນ**

1. ຂັ້ນນໍາເຂົ້າສູ່ບົດຮຽນ

   ..........................................................................................

2. ຂັ້ນດໍາເນີນການສອນ

   ......................................................................................



CamScanner

CamScanner

3. ຂັ້ນສະຫຼຸບ

.............................................................................................................

4. ຂັ້ນປະເມີນ

.............................................................................................................

ສື່ການຮຽນ

.............................................................................................................

........ ............................................................ ....................................

ຕົວຊີ້ວັດຜົນໄດ້ຮັບ

.............................................................................................................

**2. ຮູບແບບຕາຕະລາງ**

ແຜນການສອນກຸ່ມວິຊາ...................................ຂັ້ນ/ຊັ້ນ...........................................

ແນວຄວາມຄິດລວມຍອດ..............................................................................................

| ຈຸດປະສົງແງ່ພຶດຕິກຳ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ຕົວຊີ້ວັດຜົນໄດ້ຮັບ | ເວລາ | ເອກະສານອ້າງອີງ |
|---|---|---|---|---|---|---|
| | | ຂັ້ນນຳ | | | | |
| | | ຂັ້ນສອນ | | | | |
| | | ຂັ້ນສະຫຼຸບ | | | | |
| | | ຂັ້ນວັດຜົນ | | | | |

- **ວິທີຂຽນແຜນການສອນໄລຍະສັ້ນ**

**1. ການຂຽນຈຸດປະສົງບົດຮຽນ**

ຈຸດປະສົງການຮຽນຮູ້ບົດຮຽນ ແມ່ນແນໃສ່ເພື່ອເຮັດໃຫ້ຜູ້ຮຽນສາມາດປ່ຽນແປງພຶດຕິກຳດ້ານໃດໜຶ່ງ ເຊັ່ນວ່າດ້ານແນວຄວາມຄິດ, ດ້ານສະຕິປັນຍາ ແລະ ດ້ານຄວາມສຳນຶກສຳນານ ແຕ່ບັນດາດ້ານທີ່ດັ່ງກ່າວມານີ້ ຄູພວກເຮົາຈະໄດ້ກ່າວເຖິງວິທີບາງດ້ານເປັນຕົ້ນຕໍ



CamScanner

CamScanner

**3. ຈຸດປະສົງທາງດ້ານແນວຄິດ**

ເພື່ອໃຫ້ນັກຮຽນມີຄວາມມັກ, ຄວາມກະຕືລືລົ້ນຕໍ່ເລື່ອງທີ່ຮຽນ, ກະຕຸ້ນດ້ານທັດສະນະຂອງຜູ້ຮຽນຕໍ່ຄວາມຮັບຮູ້ທາງດ້ານວິທະຍາສາດ ຕົວຢ່າງ ໃນເລື່ອງການຮັກສາແຂ້ວ, ຈຸດປະສົງຂອງດ້ານແນວຄິດຄື ເພື່ອໃຫ້ນັກຮຽນຄິດເຖິງຜົນຮ້າຍທີ່ກະທົບຕໍ່ແຂ້ວຂອງຄົນເຮົາ ແລະ ຮູ້ຮັກ, ພາກພຽນຕໍ່ແຂ້ວຂອງຕົນ.

**4. ຈຸດປະສົງທາງດ້ານສະຕິປັນຍາ(ຄວາມຮູ້ຄວາມສາມາດ)**

**1. ດ້ານຄວາມຮູ້ຄວາມຈຳ**

ແມ່ນການລະນຶກເຖິງສິ່ງທີ່ເຄີຍຮຽນຮູ້ມາແລ້ວ, ສິ່ງດັ່ງກ່າວອາດກ່ຽວກັບການລະນຶກໃນຄຳຫຼັກການພື້ນຖານ ເຊັ່ນເຫດການຂອງບຸກຄົນ, ສະຖານທີ່, ຂໍ້ຄວາມຫຼັກ ຫຼື ຄືລາຄາຄວາມໝາຍຕໍ່ສິ່ງທີ່ໄດ້ຮຽນຮູ້ຜ່ານມາ.

**ຕົວຢ່າງ ການຮັກສາແຂ້ວ**

ເມື່ອຮຽນຈົບຫົວເລື່ອງນີ້ແລ້ວ ນັກຮຽນສາມາດຈື່ຄວາມໝາຍຕ່າງໆຂອງວິທີຮັກສາແຂ້ວ

**2. ດ້ານຄວາມເຂົ້າໃຈ**

ເປັນລະດັບຂັ້ນສູງກວ່າຄວາມຮູ້ຄວາມຈຳ ແລະ ກ່ຽວກັບການປ່ຽນແປງໃນຮູບແບບຂອງສິ່ງທີ່ຮຽນມາແລ້ວ ຫຼື ຕີຄວາມໝາຍແປຄວາມໝາຍ ແລະ ຂະຫຍາຍຄວາມໝາຍສິ່ງທີ່ຮຽນຮູ້ໄປສູ່ອັນໃໝ່ທີ່ເກີດຂຶ້ນ ໂດຍໃຊ້ຄຳກຳນະທຳໄປນີ້ແປ, ແຍກປະເພດ, ຖອດຄວາມໝາຍຂຽນໃໝ່, ລົງຄວາມເຫັນ, ອະທິບາຍ ແລະ ຈຳແນກ

ຕົວຢ່າງ: ໃຫ້ຫົວເລື່ອງການຮັກສາແຂ້ວ

- ເພື່ອໃຫ້ຜູ້ຮຽນບອກໄດ້ຄວາມໝາຍຂອງການຮັກສາແຂ້ວ
- ເພື່ອໃຫ້ນັຮຽນຈຳແນກວິທີຮັກສາແຂ້ວທີ່ດີ ແລະ ເປັນປະໂຫຍດຕໍ່ຕົນເອງ

**3. ຈຸດປະສົງດ້ານການນຳໃຊ້**

ເພື່ອເຮັດໃຫ້ມີຄວາມສາມາດໃຊ້ຂໍ້ມູນທີ່ໄດ້ຮຽນຮູ້ໄປສູ່ສະຖານະການໃໝ່ ແລະ ສິ່ງທີ່ເປັນຮູບປະທຳ ເຊິ່ງອາດຈະກ່ຽວຂ້ອງກັບການນຳເອົາຂໍ້ມູນ, ກົດເກນ.. ໄປໃຊ້ໃນຈຸດປະສົງໃດໜຶ່ງທີ່ສະແດງດ້ວຍຄຳກຳນະທັ່ງນີ້ປະຕິບັດການດ ແກ້ບັນຫາ,ສະແດງ, ຜະລິດ, ຖ່າຍທອດ, ລົບໝຸດຖານ, ເລືອກເຟັ້ນ.. ຕົວຢ່າງເລື່ອງການຮັກສາແຂ້ວ

- ເມື່ອຮຽນຈົບເລື່ອງນີ້ແລ້ວນັກຮຽນຈະສາມາດເລືອກ ວິທີຮັກສາແຂ້ວທີ່ດີຕໍ່ຕົນເອງ
- ເພື່ອໃຫ້ນັກຮຽນສາມາດຮູ້ແກ້ໄຂບັນຫາໃນກໍລະນີເກີດເຈັບແຂ້ວແມງຂອງຕົນ

**2. ການຂຽນກິດຈະກຳການຮຽນ-ການສອນ**

ກິດຈະກຳການຮຽນ-ການສອນ ແມ່ນວິທີການສອນຂອງຄູຕໍ່ການປະຕິບັດການສອນເປັນຂັ້ນຕອນ. ການກຳນົດກິດຈະກຳການຮຽນ-ການສອນນີ້ ເປັນຂັ້ນຕອນລາຍລະອຽດວ່າຄູຈະສອນແນວໃດ ເພື່ອໃຫ້ນັກຮຽນໄດ້ປະຕິບັດກິດຈະກຳໃຫ້ຕອບສະໜອງກັບຈຸດປະສົງຄາດໝາຍຂອງຄູ.



CamScanner

CamScanner

ຫນີ້ເປັນສິ່ງທີ່ສຳຄັນທີ່ສຸດຕໍ່ການຂຽນກິດຈະກຳການຮຽນ-ການສອນ ໝາຍຄວາມວ່າຈະເຮັດແນວໃດເພື່ອໃຫ້ນັກຮຽນໄດ້ຮຽນຮູ້ ແລະ ເກີດພຶດຕິກຳໄປຕາມຈຸດປະສົງທີ່ໄດ້ວາງໄວ້

***ກິດຈະກຳ ການຮຽນ-ການສອນມີ 4 ຂັ້ນຕອນຄື***

- ຂັ້ນນຳເຂົ້າສູ່ບົດຮຽນ
- ຂັ້ນສອນບົດໃໝ່
- ຂັ້ນສະຫຼຸບບົດຮຽນ
- ຂັ້ນວັດຜົນ
- ຂັ້ນຕັກເຕືອນ ແລະ ມອບວຽກບ້ານ

▪ **ນຳເຂົ້າສູ່ບົດຮຽນ**

- ຄູເຂົ້າຫ້ອງເຄົາລົບນັກຮຽນ
- ຄູກວດການັກຮຽນຈຳນວນຂາດໃນຊົ່ວໂມງຮຽນນັ້ນ
- ຄູຕັ້ງຄຳຖາມ ຖາມນັກຮຽນລວມໃນຫ້ອງວ່າໃນປາກຂອງຄົນເຮົາແມ່ນອັນໃດເຮັດໜ້າທີ່ຫຍ້ຳອາຫານ?
- ໃຫ້ນັກຮຽນຕອບ1-2ຄົນ
- ຄູຖາມຕໍ່ອີກວ່າ ຖ້າວ່າແຂ້ວບໍ່ດີ ການຫຍ້ຳອາຫານຈະປັນແນວໃດ?
- ນັກຮຽນຕອບ
- ເພື່ອຢາກໃຫ້ແຂ້ວເຮົາທົນທານ ເຮົາຄວນເຮັດແນວໃດ?
- ນັກຮຽນຕອບ
- ສະນັ້ນ ບົດຮຽນຕໍ່ໄປຄູຈະພາພວກນ້ອງໄປເຂົ້າໃຈວິທີຮັກສາແຂ້ວ

▪ **ຂັ້ນສອນບົດໃໝ່**

- ຄູຂຽນຫົວບົດໃສ່ກະດານ
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນລວມໃນຫ້ອງວ່າ ຜ່ານມານີ້ພວກນ້ອງເຄີຍອະນາໄມແຂ້ວຂອງຕົນເອງແນວໃດ?
- ໃຫ້ນັກຮຽນຄິດແລ້ວ ນັກຮຽນສະໝັກຕອບ 2-4 ຄົນ
- ຄູຂຽນຄຳຕອບນັກຮຽນໃສ່ກະດານ
- ຄູຖາມນັກຮຽນຕໍ່ໄປອີກວ່າ ຄວນອະນາໄມແຂ້ວແນວໃດຈຶ່ງຈະດີທີ່ສຸດ?
- ນັກຮຽນຄິດ ແລະ ຕອບຄຳຖາມ
- ຄູແນະນຳນັກຮຽນແຕ່ລະຄົນອ່ານເນື້ອໃນທີ່ຮັກສາແຂ້ວໃນປຶ້ມແບບຮຽນ



CamScanner
CamScanner

- ຫຼັງຈາກນັ້ນຄູແບ່ງນັກຮຽນອອກເປັນກຸ່ມນ້ອຍ 4-5 ຄົນຕໍ່ກຸ່ມ ແນະນຳໃຫ້ນັກຮຽນແຕ້ມຮູບປາກຄົນເຫັນແຂ້ວ, ແຕ້ມຮູບຢາຖູແຂ້ວ ແລະ ແຕ້ມຮູບໄມ້ຖູແຂ້ວກຸ່ມລະ 1 ຢ່າງ
- ແຕ່ລະກຸ່ມແຕ້ມຮູບ
- ແຕ່ລະກຸ່ມເລືອກ1ຮູບທີ່ງາມ ເພື່ອເອົາໄປສະແດງ ແລະ ເວົ້າວິທີນຳໃຊ້ອຸປະກອນຮູບແຕ້ມ ນັ້ນເຮັດຫຍັງ?
- ຄູຍົກຢາຖູແຂ້ວ, ໄມ້ຖູແຂ້ວທີ່ຄູກຽມມາສາທິດວິທີຖູໃຫ້ນັກຮຽນເບິ່ງ ແລະ ໃຫ້ນັກຮຽນ1ຄົນມາລອງຖູແບບສາທິດ

- **ຂັ້ນສະຫຼຸບບົດຮຽນ**
  - ຄູຕັ້ງຄຳຖາມ ຖາມນັກຮຽນວ່າ ນ້ອງຄິດວ່າຈະນຳໃຊ້ອຸປະກອນທີ່ໄດ້ແຕ້ມມານັ້ນເມື່ອໃດຈຶ່ງເປັນການຮັກສາແຂ້ວທີ່ດີສຳລັບຕົນເອງ?
  - ນັກຮຽນຕອບຄຳຖາມ1-3ຄົນ
  - ຄູສົນທະນາໃນຫ້ອງກ່ຽວກັບການນຳໃຊ້ອຸປະກອນຮູບແຕ້ມ ອະທິບາຍ

i. **ຂັ້ນວັດຜົນ**

- ຄູຕັ້ງຄຳຖາມວ່າ ຖ້ານ້ອງເຈັບແຂ້ວນ້ອງຈະເຮັດແນວໃດຈຶ່ງຈະດີທີ່ສຸດ?
- ຄູໃຫ້ນັກຮຽນຍົກມືສຳລັບຜູ້ຕອບໄດ້
- ຄູເລືອກ1-2ຄົນຕອບຄຳຖາມ

**5. ຄຸນປະໂຫຍດຂອງແຜນການສອນ**

ຄູທີ່ປະສົບຜົນສຳເລັດໃນການສອນສ່ວນຫຼາຍແມ່ນມີການວາງແຜນການສອນກ່ອນຈະດຳເນີນການສອນຕົວຈິງ ເພື່ອເປັນການເພີ່ມຄວາມຊຳນິຊຳນານ ແລະ ຂະຫຍາຍການຄົ້ນຄິດໃຫ້ແກ່ນັກຮຽນນັ້ນໃນໂຄງການຫຼັກສູດ ຈຶ່ງໄດ້ກຳນົດໃຫ້ຄູ ກ່ອນຈະຂຶ້ນຫ້ອງສອນ ຄູຕ້ອງມີແຜນການສອນ.

ການສ້າງແຜນການສອນມີຄຸນປະໂຫຍດຢ່າງຫຼວງຫຼາຍຕໍ່ກັບຄູທີ່ດຳເນີນການສອນຕົວຈິງ. ເພື່ອເປັນການເພີ່ມຄວາມຊຳນິຊຳນານ ແລະ ຂະຫຍາຍການຄົ້ນຄິດໃຫ້ແກ່ນັກຮຽນນັ້ນໃນໂຄງການຫຼັກສູດ ຈຶ່ງໄດ້ກຳນົດໃຫ້ຄູກ່ອນຈະຂຶ້ນຫ້ອງສອນຄູຕ້ອງມີແຜນການສອນ.

ການສ້າງແຜນການສອນມີຄຸນປະໂຫຍດຢ່າງຫຼວງຫຼາຍຕໍ່ກັບຄູທີ່ດຳເນີນການສິ່ງຄວາມຮູ້ນັກວິຊາການ, ການສຶກສາໄດ້ກຳນົດຄຸນປະໂຫຍດຂອງການວາງແຜນການສອນໄວ້ດັ່ງນີ້:

- ສ້າງຄວາມໝັ້ນໃຈໃຫ້ກັບຄູທັງເປັນການປັບປຸງການຮຽນ-ການສອນ ເພາະວ່າສາມາດວິເຄາະຂໍ້ບົກຜ່ອງ ຫຼື ບັນຫາຕ່າງໆທີ່ຜ່ານມາໄດ້.
- ຊ່ວຍໃຫ້ຄູມີຄວາມຮອບຄອບໃນການດຳເນີນການສອນ
- ຊ່ວຍໃຫ້ຄູກະກຽມການສະໜອງຄວາມຕ້ອງການ ແລະ ຄວາມສົນໃຈຂອງນັກຮຽນ



CamScanner
CamScanner

- ຊ່ວຍໃຫ້ຄູມີປະສົບການໃນການຮຽນ-ການສອນ, ມີຄວາມສຳພັນຕໍ່ເນື່ອງ ແລະ ເຮັດໃຫ້ຄູມີເວລາ ເພື່ອກະກຽມອຸປະກອນການສອນກ່ອນການດຳເນີນການສອນຕົວຈິງ.

**ໃຈຄວາມ**

ການວາງແຜນການສອນນີ້ມັນໄດ້ກວມເອົາຄວາມໝາຍຄວາມສຳຄັນຂອງການວາງແຜນ, ການວາງແຜນການສອນໄລຍະຍາວ ແລະ ການວາງແຜນໄລຍະສັ້ນ ການວາງແຜນການສອນແມ່ນການກຳນົດເປັນແນວທາງການສອນໄວ້ລ່ວງໜ້າແກ່ການປະຕິບັດການສອນ ຈຶ່ງຈຳເປັນທີ່ຄູສອນຕ້ອງໄດ້ວາງແຜນການສອນໃຫ້ເປັນລາຍລະອຽດຈຶ່ງເຮັດໃຫ້ແຜນການສອນຂອງຕົນບັນລຸຈຸດປະສົງ ແລະເປົ້າໝາຍຢ່າງສູງ.

ບົດນີ້ໄດ້ກວມລວມທັງວິທີຂຽນຈຸດປະສົງ ແລະ ການຂຽນກິດຈະກຳການຮຽນ-ການສອນ ສະເພາະຂອງຮູບແບບຕ່າງໆຂອງແຜນການສອນໄລຍະສັ້ນ ເພື່ອສາມາດຂຽນເປັນແຜນການສອນປະຈຳບົດຢ່າງມີປະສິດທິຜົນ.

**ວຽກບ້ານ**

1. ຄູແບ່ງນັກຮຽນເປັນ5 ກຸ່ມຂຽນແຜນການສອນຄື

- ກຸ່ມທີ 1 ແຕ່ລະຄົນໄດ້ນຳໃຊ້ປຶ້ມແບບຮຽນຊັ້ນມັດທະຍົມມ1 ຂຽນແຜນການສອນໄລຍະຍາວຕາມຮ່າງໄລຍະຍາວ
- ກຸ່ມທີ2 ແຕ່ລະຄົນໄດ້ນຳໃຊ້ປຶ້ມແບບຮຽນຊັ້ນມັດທະຍົມມ2 ຂຽນແຜນການສອນໄລຍະຍາວຕາມຮ່າງໄລຍະຍາວ
- ກຸ່ມທີ3 ແຕ່ລະຄົນໄດ້ນຳໃຊ້ປຶ້ມແບບຮຽນຊັ້ນມັດທະຍົມມ3 ຂຽນແຜນການສອນໄລຍະຍາວຕາມຮ່າງໄລຍະຍາວ
- ກຸ່ມທີ4 ແຕ່ລະຄົນໄດ້ນຳໃຊ້ປຶ້ມແບບຮຽນຊັ້ນມັດທະຍົມມ4 ຂຽນແຜນການສອນໄລຍະຍາວຕາມຮ່າງໄລຍະຍາວ
- ກຸ່ມທີ5 ແຕ່ລະຄົນໄດ້ນຳໃຊ້ປຶ້ມແບບຮຽນຊັ້ນມັດທະຍົມມ2 ຂຽນແຜນການສອນໄລຍະຍາວຕາມຮ່າງໄລຍະຍາວ

2. ໃຫ້ນັກຮຽນແຕ່ລະຄົນ ຂຽນແຜນການສອນໄລຍະສັ້ນຕາມຮູບແບບຕາຕະລາງ ໂດຍນຳໃຊ້ປຶ້ມແບບຮຽນຊັ້ນມັດທະຍົມ ເພື່ອເລືອກເປັນຫົວຂໍ້ຂຽນ, ໃຊ້ເວລາສອນ 50 ນາທີ



CamScanner
CamScanner

# ພາກເພີ່ມເຕີມ



CamScanner

CamScanner

# ຮ່າງສັງເກດການສອນແບບປະເມີນຄ່າ

ວິຊາ..........................................ຫົວບົດ..........................................................
ຊັ້ນຮຽນ ....................................ໂຮງຮຽນ...................................................

- ຄຳຊີ້ແຈງ

ໃນການປັບປຸງພັດທະນາການຮຽນ-ການສອນ, ຄວາມຄິດເຫັນຂອງຜູ້ສັງເກດເປັນຂໍ້ມູນທີ່ມີປະໂຫຍດຫຼາຍ ເພື່ອນຳ ໄປເປັນແນວທາງໃນການປັບປຸງຄຸນນະພາບການຮຽນ-ການສອນໃຫ້ມີປະສິດທິພາບສູງຂຶ້ນ, ຈຶ່ງຂໍສະເໜີໃຫ້ທ່ານສະແດງຄວາມຄິດເຫັນຕາມຄວາມເປັນຈິງຂອງວິຊານີ້, ໂດຍໃຊ້ເຄື່ອງໝາຍ (✓) ລົງໃສ່ຫ້ອງທີ່ກົງກັບຄວາມຄິດເຫັນຂອງທ່ານໃນ ແຕ່ລະຂໍ້.

| | ສິ່ງທີ່ປະເມີນ | ລະດັບຄວາມຄິດເຫັນ | | | | |
|---|---|---|---|---|---|---|
| | | 5 | 4 | 3 | 2 | 1 |
| 1 | ຜູ້ສອນກະຕຸ້ນໃຫ້ຜູ້ຮຽນເກີດຄວາມຢາກຮູ້ | | | | | |
| 2 | ຄູສອນຊີ້ແຈງຂັ້ນຕອນຕ່າງໆທີ່ຕ້ອງປະຕິບັດຢ່າງຊັດເຈນ | | | | | |
| 3 | ກິດຈະກຳການຮຽນມີຄວາມເໝາະສົມ | | | | | |
| 4 | ກິດຈະກຳການຮຽນຊ່ວຍໃຫ້ບັນລຸຕາມຈຸດປະສົງທີ່ກຳນົດໄວ້ | | | | | |
| 5 | ຄວາມສອດຄ່ອງຂອງກິດຈະກຳການຮຽນກັບຄວາມສາມາດນັກຮຽນ | | | | | |
| 6 | ຜູ້ຮຽນມີໂອກາດໃນການຖາມ-ຕອບເລື້ອຍໆ | | | | | |
| 7 | ຜູ້ຮຽນໄດ້ເຮັດກິດຈະກຳຢ່າງເໝາະສົມ | | | | | |
| 8 | ຄູໃຊ້ຄຳຖາມຫຼາຍຊະນິດໃຫ້ນັກຮຽນໄດ້ຄິດ-ຕອບ | | | | | |
| 9 | ຄວາມສົນໃຈຂອງນັກຮຽນໃນການຮຽນວິຊານີ້ | | | | | |
| 10 | ນັກຮຽນຮັບຮູ້ຜົນຄວາມກ້າວໜ້າຂອງຕົນເອງໃນເວລາຮຽນ | | | | | |
| 11 | ຜູ້ຮຽນໄດ້ຮັບການກະຕຸ້ນ ແລະ ເສີມແຮງຢ່າງເໝາະສົມ | | | | | |
| 12 | ຄູສອນໄດ້ເນັ້ນຈຸດສຳຄັນຂອງບົດຮຽນ | | | | | |
| 13 | ມີການຍົກຕົວຢ່າງທີ່ຊ່ວຍໃຫ້ນັກຮຽນເຂົ້າໃຈດີ | | | | | |
| 14 | ການສະຫຼຸບບົດຮຽນແຕ່ລະຄັ້ງຂອງຄູຈະແຈ້ງດີ | | | | | |
| 15 | ສາມາດປັບແປງວິທີການສອນເພື່ອຊ່ວຍໃຫ້ນັກຮຽນໄດ້ຜົນດີຂຶ້ນ | | | | | |
| 16 | ວຽກທີ່ໄດ້ຮັບມອບໝາຍຊ່ວຍເສີມສ້າງຄວາມຮູ້ ແລະ ແກ້ບັນຫາຕໍ່ຜູ້ຮຽນໄດ້ດີ | | | | | |
| 17 | ວຽກທີ່ໄດ້ມອບໃຫ້ນັກຮຽນມີການພິຈາລະນາຢ່າງດີ | | | | | |
| 18 | ຜູ້ສອນມີການອະທິບາຍເນື້ອໃນບົດຮຽນ-ກິດຈະກຳຈະແຈ້ງດີ | | | | | |
| 19 | ການສິດສອນເນື້ອໃນບົດຮຽນເປັນໜ້າສົນໃຈ | | | | | |
| 20 | ບັນຍາກາດໃນຫ້ອງດີຜູ້ຮຽນມີການຮຽນດ້ວຍຄວາມມ່ວນຊື່ນ | | | | | |
| 21 | ຄວາມໝັ້ນໃຈ, ຄວາມກະຕືລືລົ້ນຂອງຄູຕໍ່ການສອນ | | | | | |
| 22 | ຄູສອນກຳໄດ້ຄວາມຮູ້ເນື້ອໃນບົດຮຽນ ຂອງວິຊາທີ່ສອນເລິກເຊິ່ງ | | | | | |
| 23 | ສາມາດແບ່ງເວລາເຂົ້າໃນການສອນແຕ່ລະຫົວຂໍ້ເໝາະສົມ | | | | | |
| 24 | ການສອນໃນຄັ້ງນີ້ສາມາດດຳເນີນຄົບຕາມຈຸດປະສົງ ແລະເນື້ອໃນ | | | | | |
| 25 | ການສອນສາມາດດຳເນີນໄດ້ຕາມການວາງແຜນແລະກະກຽມ | | | | | |



CamScanner
CamScanner

| | | | | | | |
|---|---|---|---|---|---|---|
| 26 | ຄວາມຮັບຜິດຊອບ, ສົນໃຈ ແລະ ເອົາໃຈໃສ່ຂອງຄູຕໍ່ນັກຮຽນ | | | | | |
| 27 | ຄວາມຮູ້ຄວາມເຂົ້າໃຈທີ່ນັກຮຽນໄດ້ຮັບຈາກການຮຽນວິຊານີ້ | | | | | |
| 28 | ການປະເມີນມີຄວາມເໝາະສົມ | | | | | |
| 29 | ການວັດຜົນກວມລວມຈຸດປະສົງແລະເນື້ອໃນທີ່ສຳຄັນໃນບົດຮຽນ | | | | | |

ສະຫຼຸບແລ້ວການຮຽນວິຊານີ້ມີຄຸນຄ່າສຳລັບນັກຮຽນ

( )ຫຼາຍທີ່ສຸດ ( ) ຫຼາຍ ( ) ປານກາງ ( ) ໜ້ອຍ ( )ໜ້ອຍທີ່ສຸດ

ຈົ່ງວິເຄາະ ແລະ ໃຫ້ຄຳແນະນຳກ່ຽວກັບການສອນວິຊານີ້

1. ກ່ຽວກັບເນື້ອໃນວິຊາ

   ......................................................................................................

   ......................................................................................................

   ..............................................

2. ກ່ຽວກັບການສອນ

   ......................................................................................................

   ......................................................................................................

   ..............................................

   ກ່ຽວກັບຄູສອນ

   ......................................................................................................

   ......................................................................................................

   ..............................................

3. ກ່ຽວກັບກິດຈະກຳການຮຽນ

   ......................................................................................................

   ......................................................................................................

   ..............................................

4. ກ່ຽວກັບການວັດ ແລະ ປະເມີນຜົນ

   ......................................................................................................

   ......................................................................................................

   ..............................................



CamScanner

CamScanner

ຮ່າງສັງເກດການສອນແບບປະເມີນຄ່າ (ແບບທີ2)

# ຮ່າງສັງເກດການສອນແບບປະເມີນຄ່າ

ວັນທີ .................................... ວິຊາ ........................................ ຫ້ອງ..........................

ຊື່ຄູສອນ ........................................ ຄູທີ່ປະເມີນ ........................................................

ຄຳຊີ້ແຈງ: ກະລຸນາໝາຍ (√) ໃສ່ຫ້ອງໃນຕາຕາລາງ ຜົນການປະເມີນ ຕາມການສັງເກດຂອງທ່ານທີ່ເຫັນວ່າມີຄວາມ

ເໝາະສົມ ຂ້າງລຸ່ມນີ້:

| ລ/ດ | ລາຍການປະເມີນ | ຜົນການປະເມີນ | | | | |
|---|---|---|---|---|---|---|
| | | ດີຫຼາຍ | ດີ | ປານກາງ | ອ່ອນ | ອ່ອນຫຼາຍ |
| **ຂັ້ນນຳເຂົ້າສູ່ບົດຮຽນ** | | | | | | |
| 1 | ຄູເຂົ້າຫ້ອງຕາມເວລາ | | | | | |
| 2 | ຄູບັນທຶກຈຳນວນນັກຮຽນຂາດ ແລະ ກວດວຽກບ້ານ | | | | | |
| 3 | ຄູສ້າງຄວາມສົນໃຈໃຫ້ນັກຮຽນຕັ້ງແຕ່ເລີ່ມຕົ້ນ (ບາດລ້ຽວ) | | | | | |
| 4 | ຄູນຳພານັກຮຽນທວນຄືນບົດຮຽນເກົ່າທີ່ສອດຄ່ອງກັບເນື້ອໃນທີ່ຈະສອນ | | | | | |
| **ຂັ້ນສອນ** | | | | | | |
| 5 | ຄູໃຊ້ຄຳຖາມທີ່ເໝາະສົມຈະຊ່ວຍໃຫ້ນັກຮຽນໄດ້ຄົ້ນຄິດ | | | | | |
| 6 | ຄູໄດ້ນຳໃຊ້ສື່ການສອນທີ່ເໝາະສົມກັບລະດັບນັກຮຽນ | | | | | |
| 7 | ຄູອະທິບາຍຖືກ, ຈະແຈ້ງ ແລະ ຍົກຕົວຢ່າງໃຫ້ນັກຮຽນເຂົ້າໃຈງ່າຍ | | | | | |
| 8 | ຄູຊ່ວຍເຫຼືອນັກຮຽນ ດຳເນີນກິດຈະກຳ | | | | | |
| 9 | ການມີສ່ວນຮ່ວມຂອງນັກຮຽນ | | | | | |
| 10 | ການອະທິບາຍ, ການຍົກຕົວຢ່າງຂອງຄູ | | | | | |
| 11 | ເມື່ອນັກຮຽນຕອບຜິດ, ຄູຕ້ອງຊີ້ແຈງ,ໃຫ້ຮູ້ບັນຫາທີ່ຜິດ | | | | | |
| 12 | ຄູຂຽນໃສ່ກະດານໃຫ້ງາມ ແລະ ໃຫ່ຍພໍປະມານໃຫ້ນັກ ຮຽນອ່ານງ່າຍ (ການນຳໃຊ້ກະດານຂອງຄູ) | | | | | |
| 13 | ຄູດຳເນີນການສອນແບບມີບັນຍາກາດດີ (ກວດເບິ່ງຄວາມເຂົ້າໃຈຂອງນັກຮຽນ) | | | | | |
| 14 | ຄູມີຄວາມສົນໃຈຕໍ່ນັກຮຽນໃນຫ້ອງໄດ້ດີ (ກວດກາເບິ່ງຄວາມສົນໃຈຂອງນັກຮຽນ) | | | | | |
| 15 | ຄູໃຊ້ເວລາເໝາະສົມກັບກິດຈະກຳ | | | | | |



CamScanner

CamScanner

| | | | | | | |
|---|---|---|---|---|---|---|
| **ຂັ້ນສະຫຼຸບ** | | | | | | |
| 16 | ຄູສະຫຼຸບບົດຮຽນທີ່ຖືກຕ້ອງ ຕາມຈຸດປະສົງທີ່ກຳນົດ (ຄູຂຽນເນື້ອໃນສຳຄັນຄົບຖ້ວນໃສ່ກະດານ) | | | | | |
| 17 | ຄູວັດຜົນ / ປະເມີນຜົນບົດຮຽນ | | | | | |
| 18 | ຄູມອບວຽກບ້ານທີ່ກ່ຽວຂ້ອງກັບບົດຮຽນໃຫ້ນັກຮຽນ | | | | | |
| 19 | ຄູໃຫ້ສຶກສາແນວຄິດຂອງນັກຮຽນ | | | | | |
| 20 | ຄູເລີກສອນຕາມເວລາ | | | | | |



CamScanner

CamScanner

## ຮ່າງບັນທຶກການຖອດຖອນບົດຮຽນ

## ຮ່າງບັນທຶກການຖອດຖອນບົດຮຽນຈາກການສັງເກດການສອນ

| |
|---|
| ຊື່ຄູ.................................................................ວັນທີ.......................................................<br>ວິຊາ................................................................ ຫົວບົດ.................................................. |
| <u>ຜູ້ສອນຕີລາຄາຜົນການສອນຂອງຕົນເອງ</u><br><br><br><br><br> |
| <u>ຄຳເຫັນຂອງຜູ້ສັງເກດ</u><br><br><br><br><br><br><br> |
| <u>ຄຳເຫັນຂອງຜູ້ນຳພາ</u><br><br><br><br> |

ວັນທີ.......................................................

ລາຍເຊັນຜູ້ນຳພາ....................................



CamScanner

CamScanner

## ໂຄງຮ່າງການຂຽນບົດລາຍງານການສອນ

### ບົດລາຍງານຜົນການສອນ

**I. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ**

- ກ່າວເຖິງສະພາບການຈັດການຮຽນ-ການສອນຂອງຫົວບົດທີ່ນຳມາສຶກສາການສອນ
- ກ່າວເຖິງຄວາມສຳຄັນຂອງການສຶກສາການສອນ
- ກ່າວເຖິງຄວາມຄາດຫວັງທີ່ຈະໄດ້ຮັບຈາກການດຳເນີນການສຶກສາການສອນໃນຫົວບົດທີ່ນຳມາສຶກສາການສອນ

**II. ຈຸດປະສົງການສຶກສາການສອນ**

- ກ່າວເຖິງຄວາມຕ້ອງການປັບປຸງພັດທະນາການຈັດການສອນຂອງຄູ

**III. ຂອບເຂດການສຶກສາການສອນ**

- ບອກຊັ້ນ, ຂັ້ນຮຽນ, ຫ້ອງຮຽນ, ໂຮງຮຽນ ທີ່ໄດ້ດຳເນີນການສຶກສາການສອນ
- ບອກຫົວຂໍ້, ເນື້ອໃນບົດຮຽນທີ່ດຳເນີນການສຶກສາການສອນ

**IV. ວິທີການດຳເນີນການສຶກສາການສອນ**

- ເຄື່ອງມືທີ່ນຳໃຊ້ມີ: ບົດສອນ, ແບບທົດສອບຜົນການຮຽນ, ຮ່າງສັງເກດການສອນ, ຮ່າງບັນທຶກການຖອດຖອນບົດຮຽນ, ຮ່າງຂຽນບົດລາຍງານ ແລະ ເຄື່ອງບັນທຶກສຽງຫຼືວິດີໂອ (ຖ້າມີ)
- ຂັ້ນຕອນ ແລະ ວິທີການດຳເນີນ: ກ່າວເຖິງຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດທຸກຂັ້ນຕອນ
- ການເກັບກຳຂໍ້ມູນ ແລະ ວິທີການວິເຄາະຂໍ້ມູນ

**V. ຜົນການສຶກສາການສອນ**

- ສະຫຼຸບຫຍໍ້ຜົນທີ່ໄດ້ຮັບຈາກການສຶກສາການສອນທຽບໃສ່ຈຸດປະສົງທີ່ວາງໄວ້
- ສິ່ງທີ່ຄົ້ນພົບຈາກການສຶກສາການສອນ
- ຂໍ້ສະເໜີແນະ



CamScanner

CamScanner

# ຄຳຖາມ ແລະ ຂະໜານຕອບ

## ວິຊາ: ວິທີສອນຊີວະສາດ

I. ຄະແນນ ຂໍ້ລະ 1 ຄະແນນ

ຄຳຊີ້ແຈງ: ຈົ່ງໃຊ້ເຄື່ອງໝາຍ (√) ໝາຍເອົາຄຳຕອບທີ່ຖືກຕ້ອງທີ່ສຸດພຽງຂໍ້ດຽວຂ້າງລຸ່ມນີ້

1. ວິຊາວິຊາວິທະຍາສາດທຳມະຊາດ ປະກອບມີ ຈັກພາກໃຫ່ຍ?

   ກ. 3 ພາກໃຫ່ຍ ຂ. 4 ພາກໃຫ່ຍ ຄ. 5 ພາກໃຫ່ຍ ງ. 6 ພາກໃຫ່ຍ

2. ແມ່ນຫຍັງລຸ່ມນີ້ທີ່ເປັນອົງປະກອບພື້ນຖານໜຶ່ງທີ່ສຳຄັນໃນການສະແຫວງຫາຄວາມຮູ້ທາງວິທະຍາສາດ

   ກ. ການຕີລາຄາຄວາມໝາຍຂໍ້ມູ ຂ. ການທົດລອງ ຄ. ທັກສະຂະບວນການທາງວິທະຍາສາດ

   ງ. ຖືກທັງຂໍ້ ກ ແລະ ຂໍ້ ຂ

3. ຫຼັກສູດແມ່ນໝາຍເຖິງຫຍັງ?

   ກ. ໝາຍເຖິງມວນປະສົບການທັງໝົດທີ່ທາງໂຮງຮຽນຈັດສອນ ເພື່ອເຮັດໃຫ້ຜູ້ຮຽນໄດ້ປະສົບການ

   ຂ. ໝາຍເຖິງການປ່ຽນແປງພຶດຕິກຳຢ່າງມີວິທະຍາສາດໃນດ້ານສະຕິປັນຍາ, ແນວຄວາມຄິດ

   ຄ. ໝາຍເຖິງຄວາມຊຳນິຊຳນານດ້ານການປະຕິບັດຕ່າງໆ ໃຫ້ໄປຕາມແນວທາງຍຸດທະສາດການສຶກສາ ແລະ ນະໂຍບາຍຢ່າງຕ່ອງແຄວ.

   ງ. ຖືກໝົດທຸກຂໍ້

4. ແນວໃດເພິ່ນຈຶ່ງເອີ້ນວ່າການວິເຄາະຫຼັກສູດ?

   ກ. ແມ່ນການແຍກຫົວຂໍ້ຂອງລາຍວິຊາຂອງຫຼັກສູດອອກໃຫ້ເປັນອົງປະກອບຍ່ອຍໆໃນດ້ານເນື້ອໃນ ແລະ ຈຸດປະສົງ

   ຂ. ເພື່ອໃຫ້ເກີດພຶດຕິກຳທີ່ຊີ້ໃຫ້ເຫັນຄວາມສຳພັນລະຫວ່າງເນື້ອໃນ ກັບພຶດຕິກຳທີ່ຕ້ອງການຈຳແນກ ຫຼື ແຍກເນື້ອໃນ

   ຄ. ແມ່ນຂໍ້ ກ ແລະ ຂໍ້ ຂ ຖືກ

   ງ. ແມ່ນຜິດ ທັງ ຂໍ້ ກ ແລະ ຂໍ້ ຂ

5. ຖ້າບໍ່ມີໂຄງສ້າງຫຼັກສູດການຮຽນ-ການສອນ ຈະເປັນແນວໃດ?

   ກ. ພົບຄວາມຫຍຸ້ງຍາກໃນການປັບປຸງຄຸນນະພາບການສຶກສາໃນທຸກລະດັບ, ທຸກຊັ້ນຮຽນ, ແລະ ວິຊາຮຽນ

   ຂ. ພົບຄວາມຫຍຸ້ງຍາກໃນການນຳໃຊ້ວິທີສອນຕ່າງໆເຂົ້າໃນການຮຽນ-ການສອນຢ່າງເປັນລະບົບ

   ຄ. ສະດວກ ແລະ ງ່າຍໃນການປັບປຸງຄຸນນະພາບການສຶກສາໃນທຸກລະດັບ, ທຸກຊັ້ນຮຽນ, ແລະ ວິຊາຮຽນ

   ງ. ສະດວກ ແລະ ງ່າຍຂຶ້ນໃນການນຳໃຊ້ວິທີສອນຕ່າງໆເຂົ້າໃນການຮຽນ-ການສອນ

6. ທັກສະຂະບວນການທາງວິທະຍາສາດເປັນທັກສະທີ່ສຳຄັນ ເຊິ່ງເພິ່ນໃຊ້ເປັນ ?

   ກ. ເຄື່ອງມືໃນການສະແຫວງຫາຄວາມຮູ້ທາງດ້ານວິທະຍາສາດໃນລາຍວິຊາຕ່າງໆ

   ຂ. ເຄື່ອງມືໃນການສະແຫວງຫາຄວາມຮູ້ທາງດ້ານການທົດລອງໃນລາຍວິຊາຕ່າງໆ

   ຄ. ເປັນເຄື່ອງມືໃນການສະແຫວງຫາຄວາມຮູ້ທາງດ້ານການຄົ້ນຄ້ວາວິໄຈໃນລາຍວິຊາຕ່າງໆ

   ງ. ເປັນເຄື່ອງມືໃນການສະແຫວງຫາຄວາມຮູ້ທາງດ້ານການສ້າງຂໍ້ມູນພື້ນຖານໃນລາຍວິຊາຕ່າງໆ



CamScanner

CamScanner

7. ການສຶກສາດ້ານວິທະຍາສາດກໍ່ແມ່ນແນໃສ່ຊ່ວຍໃຫ້ນັກຮຽນປ່ຽນແປງ?

ກ. ຄວາມຮູ້ ເພື່ອຮັບເອົາບົດຮຽນ ແລະ ຄວາມສຳນຶກໄດ້ທາງດ້ານວິທະຍາສາດຢ່າງກ້ວາງຂວາງ.

ຂ. ຄວາມຄິດ ເພື່ອຮັບເອົາບົດຮຽນ ແລະ ຄວາມສຳນຶກໄດ້ທາງດ້ານວິທະຍາສາດຢ່າງກ້ວາງຂວາງ.

ຄ. ຄວາມສາມາດ ເພື່ອຮັບເອົາບົດຮຽນ ແລະ ຄວາມສຳນຶກໄດ້ທາງດ້ານວິທະຍາສາດຢ່າງກ້ວາງຂວາງ.

ງ. ວິທີການ ເພື່ອຮັບເອົາບົດຮຽນ ແລະ ຄວາມສຳນຶກໄດ້ທາງດ້ານວິທະຍາສາດຢ່າງກ້ວາງຂວາງ.

8. ການຮຽນ-ການສອນໃນປະຈຸບັນ ແມ່ນນັກຮຽນໄດ້ຮຽນຮູ້ຜ່ານພຶດຕິກຳດ້ວຍຕົນເອງ ບັນຫາດັ່ງກ່າວຈະຊ່ວຍໃຫ້ນັກຮຽນ

ກ. ຄິດເປັນ, ເຮັດເປັນ

ຂ. ແກ້ໄຂບັນຫາດ້ວຍຕົນເອງໄດ້ໂດຍມີເຫດຜົນ

ຄ. ຮູ້ຈັກຄົ້ນຄ້ວາດ້ວຍຕົນເອງ ໂດຍນຳໃຊ້ທັກສະຂະບວນການທາງວິທະຍາສາດ

ງ. ຖືກໝົດທຸກຂໍ້

9. ອີກວິທີໜຶ່ງໃນການສະແຫວງຫາຄວາມຮູ້ທາງວິທະຍາສາດ ກໍ່ຄືການຄົ້ນຄ້ວາທົດລອງ ເຊິ່ງຜູ້ທົດລອງມີໂອກາດຝຶກຝົນດ້ານ?

ກ. ດ້ານຄວາມຮູ້ ແລະ ການພັດທະນາຄວາມຄິດຂອງຕົນ

ຂ. ດ້ານຄວາມສາມາດ ແລະ ການພັດທະນາຄວາມຄິດຂອງຕົນ

ຄ. ດ້ານການປະຕິບັດການ ແລະ ການພັດທະນາຄວາມຄິດຂອງຕົນ

ງ. ດ້ານວິທີການ ແລະ ການພັດທະນາຄວາທຄິດຂອງຕົນ

10. ວິທີສອນແມ່ນຫຍັງ?

ກ. ດ້ານວິທີການ ແລະ ການພັດທະນາຄວາທຄິດຂອງຕົນ

ຂ. ແມ່ນວິທີການຕ່າງໆ ທີ່ນຳມາໃຊ້ໃນການສອນ ເພື່ອຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ ວິທີແຕ່ລະວິທີມີວັດຖຸປະສົງ ແລະ ລັກສະນະເດັ່ນເປັນເອກະລັກແຕກຕ່າງກັນ.

ຄ. ໝາຍເຖິງກົນລະວິທີຕ່າງໆທີ່ໃຊ້ເສີມຂະບວນການສອນ, ຂັ້ນຕອນການສອນ, ວິທີການສອນ ຫຼື ການດຳເນີນການທາງການສອນໃດໜຶ່ງ ເພື່ອຊ່ວຍໃຫ້ການສອນມີຄຸນນະພາບ ແລະ ປະສິດທິພາບຫຼາຍຂຶ້ນ

ງ. ໝາຍເຖິງສະພາບ ຫຼື ລັກສະນະຂອງການຈັດການຮຽນ-ການສອນທີ່ຈັດຂຶ້ນຢ່າງມີລະບົບ ລະບຽບ ມີແບບແຜນຕາມຫຼັກປັດຊະຍາ ທິດສະດີ ຫຼັກການ, ແນວຄິດ ຫຼື ຄວາມເຊື່ອຕ່າງໆ ໂດຍອາໃສວິທີສອນ ແລະ ເຕັກນິກການສອນຕ່າງໆ ເຂົ້າມາຊ່ວຍໃຫ້ສະພາບການຮຽນ-ການສອນນັ້ນເປັນໄປຕາມຫຼັກການທີ່ຍຶດຖື

11. ເຕັກນິກແມ່ນຫຍັງ?

ກ. ດ້ານວິທີການ ແລະ ການພັດທະນາຄວາທຄິດຂອງຕົນ

ຂ. ແມ່ນວິທີການຕ່າງໆ ທີ່ນຳມາໃຊ້ໃນການສອນ ເພື່ອຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ ວິທີແຕ່ລະວິທີມີວັດຖຸປະສົງ ແລະ ລັກສະນະເດັ່ນເປັນເອກະລັກແຕກຕ່າງກັນ.

ຄ. ໝາຍເຖິງກົນລະວິທີຕ່າງໆທີ່ໃຊ້ເສີມຂະບວນການສອນ, ຂັ້ນຕອນການສອນ, ວິທີການສອນ ຫຼື ການດຳເນີນການທາງການສອນໃດໜຶ່ງ ເພື່ອຊ່ວຍໃຫ້ການສອນມີຄຸນນະພາບ ແລະ ປະສິດທິພາບຫຼາຍຂຶ້ນ

ງ. ຖືກໝົດທຸກຂໍ້



CamScanner

CamScanner

12. ວິທີສອນແບບສາທິດແມ່ນວິທີສອນແນວໃດ?

ກ. ແມ່ນວິທີສອນທີ່ຄູເປັນຜູ້ສະແດງວັດຖຸອຸປະກອນໃຫ້ນັກຮຽນເບິ່ງເປັນຕົວຢ່າງເພື່ອໃຫ້ນັກຮຽນເຂົ້າໃຈຈາກການສັງເກດ

ຂ. ແມ່ນວິທີການສອນທີ່ຈະຊ່ວຍໃຫ້ນັກຮຽນເຂົ້າໃຈເນື້ອໃນບົດຮຽນຢ່າງຖືກຕ້ອງ, ສາມາດແກ້ໄຂບັນຫາ ຫຼື ຄົ້ນຫາຄຳຕອບໄດ້ດ້ວຍຕົນເອງ

ຄ.ແມ່ນວິທີສອນທີ່ເຮັດໃຫ້ຜູ້ຮຽນເປັນຜູ້ຄິດແກ້ບັນຫາຕ່າງໆດ້ວຍການຕັ້ງສົມມຸດຖານທີ່ເປັນບັນຫາຂຶ້ນມາແລ້ວຫາວິທີແກ້ດ້ວຍຕົນເອງ

ງ. ແມ່ນການສອນທີ່ມຸ່ງໃຫ້ນັກຮຽນຮຽນຮູ້ດ້ວຍການຊອກຫາຂໍ້ມູນ ເຊິ່ງເລີ່ມຕົ້ນຈາກບັນຫາໃດໜຶ່ງແລ້ວຈຶ່ງຊອກຫາສາເຫດ

13. ການທົດລອງໝາຍເຖິງຫຍັງ?

ກ. ໝາຍເຖິງການໃຊ້ປະສາດສຳພັດຢ່າງໃດຢ່າງໜຶ່ງ ຫຼື ຫຼາຍຢ່າງລວມທັງການໃຊ້ເຄື່ອງມືເຂົ້າຊ່ວຍເພື່ອໃຫ້ໄດ້ຂໍ້ມູນ

ຂ. ໝາຍເຖິງການໃຊ້ເຄື່ອງມື ຫຼື ອຸປະກອນສຳລັບແທກຫາປະລິມານຂອງສິ່ງຕ່າງໆອອກມາເປັນຕົວເລກ ໂດຍມີຫົວໜ່ວຍມາດຕະຖານເປັນໂຕຄວບຄຸມ

ຄ. ໝາຍເຖິງການຂະບວນປະຕິບັດເພື່ອທົດສອບສົມມຸດຖານທີ່ໄດ້ກຳນົດໄວ້

ງ. ໝາຍເຖິງການອະທິບາຍຂໍ້ມູນທີ່ມີຢູ່ດ້ວຍເຫດຜົນໂດຍອາໄສຄວາມຮູ້ ແລະ ປະສົບການເດີມມາຊ່ວຍ

14. ເພື່ອເຮັດໃຫ້ການສອນວິຊາໂລກອ້ອມຕົວທຳມະຊາດມີປະສິດທິພາບສູງນັ້ນ ຄູຈຳເປັນຕ້ອງໄດ້ໃຊ້ເຕັກນິກການສອນຫຼາຍຢ່າງເຂົ້າຊ່ວຍຕາມຄວາມເໝາະສົມ ໂດຍຄຳນຶງເຖິງນັກຮຽນ, ຫົວຂໍ້ທີ່ຈະສອນ, ສະພາບການຮຽນ-ການສອນຂອງຕົວຄູເອງ, ການປະສົມປະສານເຕັກນິກການສອນແບບຕ່າງໆນັ້ນມີຈຸດປະສົງແນວໃດ?

ກ. ເພື່ອໃຫ້ເກີດຄວາມສົນໃຈ, ບໍ່ເບື່ອໜ່າຍຕໍ່ການຮຽນ, ຮຽນຮູ້ໄດ້ງ່າຍ ແລະ ຈື່ໄດ້ດີ

ຂ. ເພື່ອກະຕຸ້ນຄວາມສົນໃຈຂອງນັກຮຽນ

ຄ. ເພື່ອເປັນການພັດທະນາການຮຽນຂອງນັກຮຽນ

ງ. ເພື່ອອາໄສຄວາມຮູ້ເດີມ ຫຼື ປະສົບການເດີມມາຊ່ວຍແກ້ໄຂບັນຫາ

15. ໃນການສອນວິຊາຊີວະສາດແມ່ນມີຄວາມຈຳເປັນຕ້ອງໄດ້ເນັ້ນໜັກວິທີການສອນແບບໃດຫຼາຍ?

ກ. ວິທີການສອນແບບສາທິດ ແລະ ແບບທົດລອງ

ຂ. ວິທີການສອນແບບບັນລະຍາຍ ແລະ ວິທີສອນຮຽນຮູ້ດ້ວຍຕົນເອງ

ຄ. ວິທີສອນແບບອື່ນໆນອກຈາກວິທີສອນທີ່ກ່າວມາຂ້າງເທິງນັ້ນ

ງ. ຖືກທັງຂໍ້ ກ ແລະ ຂໍ້ ຂ

16. ວິທີການສອນແບບທົດລອງມີ 3ຂັ້ນຕອນດັ່ງນີ້:

ກ. ຂັ້ນຕອນສຶກສາສະພາບບັນຫາ, ຂັ້ນຕອນກຳນົດບັນຫາ, ຂັ້ນຕອນທົດລອງ ແລະ ສັງເກດ

ຂ. ຂັ້ນຕອນກຳນົດບັນຫາ, ຂັ້ນຕອນທົດລອງ ແລະ ສັງເກດ, ຂັ້ນຕອນສະຫຼຸບຜົນຂອງການທົດລອງ

ຄ. ຂັ້ນຕອນກຳນົດບັນຫາ, ຂັ້ນຕອນທົດລອງ ແລະ ສັງເກດ, ຂັ້ນຕອນສະຫຼຸບຜົນຂອງການທົດລອງ

ງ. ຂັ້ນຕອນທົດລອງ ແລະ ສັງເກດ, ຂັ້ນຕອນສະຫຼຸບຜົນຂອງການທົດລອງ, ຂັ້ນຕອນການປະເມີນ



CamScanner

CamScanner

17. ເນື້ອໃນຕໍ່ໄປນີ້ " ການເຮັດໃຫ້ຜູ້ຮຽນເປັນຜູ້ຄິດແກ້ບັນຫາຕ່າງໆດ້ວຍການຕັ້ງສົມມຸດທີ່ເປັນບັນຫາຂຶ້ນມາ ແລ້ວຫາວິທີແກ້ດ້ວຍຕົນເອງ, ສ່ວນຄູເປັນພຽງຜູ້ແນະນຳ " ແມ່ນວິທີການສອນແບບໃດ?

ກ. ວິທີການສອນແບບສືບສວນ-ສອບສວນ ຂ. ວິທີການສອນແບບບັນລະຍາຍ

ຄ. ວິທີສອນແບບສາທິດ ງ. ວິທີການສອນແບບແກ້ບັນຫາ

18. ເພື່ອເຮັດໃຫ້ການຮຽນ-ການສອນວິຊາໂລກອ້ອມຕົວທຳມະຊາດມີປະສິດທິພາບສູງຄູຄວນເຮັດແນວໃດ?

ກ. ເຮົາຕ້ອງຮູ້ ແລະ ປະຕິບັດວິທີສອນແບບຕ່າງໆ ໂດຍສາມາດເລືອກເອົາມານຳໃຊ້ໃນການຮຽນ-ການສອນ

ຂ. ເລືອກເຕັກນິກການສອນແບບຕ່າງໆທີ່ເຫັນວ່າເໝາະສົມ ເພື່ອສ້າງຄວາມສົນໃຈໃຫ້ແກ່ນັກຮຽນ ແລະ ເຮັດໃຫ້ບໍ່ເບື່ອໜ່າຍ ຕໍ່ການຮຽນ

ຄ. ຄູຄວນໃຫ້ນັກຮຽນເປັນຜູ້ປະຕິບັດພຽງຢ່າງດຽວເພື່ອຈະໄດ້ເຂົ້າໃຈດີ

ງ. ຖືກທັງຂໍ້ ກ ແລະ ຂໍ້ ຂ

19. ໃນການຈັດກິດຈະກຳການຮຽນ-ການສອນວິຊາໂລກອ້ອມຕົວໃຫ້ມີປະສິດທິພາບສູງ ຄູຜູ້ສອນຕ້ອງສາມາດໃຊ້ ?

ກ. ໃຊ້ວິທີສອນ ແລະ ເຕັກນິກການສອນທີ່ເໝາະສົມ

ຂ. ໃຊ້ເຄື່ອງມືການສອນເຂົ້າໃນການສອນ

ຄ. ໃຊ້ກະດານ ແລະ ຮູບແບບການສອນທີ່ເໝາະສົມ

ງ. ໃຊ້ຄອມພິວເຕີ ແລະ ວິທີການສອນໄດ້ດີ

20. ຄຳເວົ້າທີ່ວ່າ: "ການສອນທີ່ໃຫ້ນັກຮຽນໄດ້ເລືອກເຮັດໃນສິ່ງທີ່ຕົນສົນໃຈ ແລະ ເປັນຜູ້ວາງແຜນໃນການເຮັດວຽກງານນັ້ນເອງ ໂດຍມີຄູເປັນຜູ້ໃຫ້ຂໍ້ຊີ້ນຳໃນການເຮັດວຽກງານນັ້ນ" ແມ່ນມີຄວາມໝາຍສຳຄັນຕໍ່ກັບວິທີການສອນແບບໃດ?

ກ. ວິທີສອນແບບສືບສວນ ສອບສວນ ຂ. ວິທີສອນແບບໂຄງການ

ຄ. ວິທີສອນແບບໜ່ວຍການຮຽນ ງ. ວິທີສອນແບບບັນລະຍາຍ

21. ເຕັກນິກທີ່ເຮັດໃຫ້ຜູ້ຟັງການບັນຍາຍມີຊີວິດ-ຊີວາມີຫຍັງແດ່?

ກ. ຢຸດການບັນຍາຍເປັນໄລຍະ, ຜ່ານຄຳຖາມ ແລະ ຄຳຕອບ

ຂ. ເວົ້າ ຫຼື ຂຽນ, ພົນໄດ້ຮັບຂອງການສ້າງປະໂຫຍກ

ຄ. ບັນດາຄຳຖາມ/ທຸກັບຂຽນ, ການຈັດເປັນຜຽນແລກປ່ຽນບົດຮຽນ

ງ. ຖືກໝົດທຸກຂໍ້

22. ແຜນການຮຽນ-ການສອນໝາຍເຖິງຫຍັງ?

ກ. ການກຳນົດບັນຫາ ຂ. ການທົດລອງ

ຄ. ການວາງແຜນລ່ວງໜ້າໄວ້ ກ່ອນການການກະກຽມ ງ. ການປະຕິບັດການສອນ

23. ແຜນການຮຽນ-ການສອນ ມີຄວາມສຳຄັນແນວໃດ?

ກ. ຈະຊ່ວຍໃຫ້ຄູ ສອນໄດ້ຢ່າງມີປະສິດທິພາບ

ຂ. ຈະຊ່ວຍໃຫ້ຄູສອນເລືອກກິດຈະກຳໄດ້ຢ່າງແທດເໝາະເຂົ້າກັບເນື້ອໃນບົດຮຽນ



CS CamScanner

CS CamScanner

ຄ. ຊ່ວຍໃຫ້ສາມາດແກ້ໄຂບັນຫາສະເພາະໜ້າໄດ້, ເຮັດໃຫ້ເຊື່ອໝັ້ນໃນຕົນເອງຫຼາຍຂຶ້ນ ແລະ ເຮັດໃຫ້ຜູ້ຮຽນມີຄວາມສົນໃຈ

ງ. ຈະຊ່ວຍໃຫ້ຄູ ສອນໄດ້ຢ່າງມີປະສິດທິພາບ, ເລືອກກິດຈະກຳໄດ້ຢ່າງເໝາະສົມເຂົ້າກັບເນື້ອໃນບົດຮຽນ, ແກ້ໄຂບັນຫາ ສະເພາະໜ້າໄດ້, ເຊື່ອໝັ້ນໃນຕົນເອງຫຼາຍຂຶ້ນ ແລະ ເຮັດໃຫ້ຜູ້ຮຽນມີຄວາມສົນໃຈ

24. ຂໍ້ໃດລຸ່ມນີ້ແມ່ນຄຸນປະໂຫຍດຂອງການວາງແຜນການສອນຕໍ່ຄູ?

ກ. ຊ່ວຍສ້າງຄວາມໝັ້ນໃຈໃຫ້ກັບຄູ ທັງເປັນການປັບປຸງການຮຽນ-ການສອນ ເພາະວ່າສາມາດວິເຄາະຂໍ້ບົກພ່ອງ ຫຼື ບັນຫາຕ່າງໆທີ່ຜ່ານມາໄດ້

ຂ. ຊ່ວຍໃຫ້ຄູມີຄວາມຮອບຄອບໃນການດຳເນີນການສອນ ແລະ ຊ່ວຍໃຫ້ຄູກະກຽມການສະໜອງຄວາມຕ້ອງການ ແລະ ຄວາມສົນໃຈຂອງນັກຮຽນ

ຄ. ຊ່ວຍໃຫ້ຄູມີປະສົບການໃນການຮຽນ-ການສອນ, ມີຄວາມສຳພັນຕໍ່ເນື່ອງ ແລະ ເຮັດໃຫ້ຄູມີເວລາເພື່ອກະກຽມອຸປະກອນການສອນກ່ອນດຳເນີນການສອນຕົວຈິງ.

ງ. ຖືກໝົດທຸກຂໍ້

25. ແຜນການຮຽນ-ການສອນມີຈັກປະເພດ?

ກ. ມີ 2 ປະເພດ ຂ. ມີ 3 ປະເພດ ຄ. ມີ 4 ປະເພດ ງ. ມີ 5 ປະເພດ

26. ອົງປະກອບຂອງແຜນການສອນລະດັບບົດຮຽນມີຫຍັງແດ່?

ກ. ວິຊາ ແລະ ເລື່ອງທີ່ຈະສອນ, ຊັ້ນ ວັນທີ ແລະ ເວລາ

ຂ. ຈຸດປະສົງ ແລະ ເນື້ອໃນ

ຄ. ກິດຈະກຳການຮຽນ-ການສອນ

ງ. ວິຊາ ແລະ ເລື່ອງທີ່ຈະສອນ, ຊັ້ນ ວັນທີ ແລະ ເວລາ, ຈຸດປະສົງ, ເນື້ອໃນ,ກິດຈະກຳການຮຽນ-ການສອນ

27. ການປະເມີນການສອນຂອງຄູເປັນຫຍັງຈຶ່ງຕ້ອງຖືເປັນບັນຫາທີ່ຈຳເປັນ?

ກ. ເພື່ອໃຫ້ມີການພັດທະນາປະເທດຊາດ

ຂ. ເພື່ອຢາກຮູ້ວ່າການສອນຂອງຄູມີຜົນສຳເລັດຕາມຈຸດປະສົງທີ່ວາງໄວ້ ຫຼື ບໍ່

ຄ. ເພື່ອໃຫ້ນັກຮຽນເຂົ້າໃຈເລື່ອງທີ່ຄູສອນງ່າຍຂຶ້ນ

ງ. ເພື່ອຈັບຜິດຄູຜູ້ທີ່

28. ການຂຽນແຜນການສອນມີຈັກຮູບແບບຕາຍຕົວ?

ກ. 2 ຮູບແບບ ຂ. 3 ຮູບແບບ ຄ. 4 ຮູບແບບ ງ.ບໍ່ມີຮູບແບບທີ່ຕາຍຕົວ

29. ການຈັດກິດຈະກຳນອກຊັ້ນຮຽນແມ່ນມີຄວາມສຳຄັນ ແລະ ມີຄຸນປະໂຫຍດແນວໃດຕໍ່ກັບການຮຽນຂອງນັກຮຽນ?

ກ. ເພື່ອປຽນບັນຍາກາດໃນການຮຽນຮູ້ໃນຫ້ອງຮຽນ ແລະ ເພື່ອໃຫ້ໄດ້ຮຽນຮູ້ຈາກກິດຈະກຳຕ່າງໆໂດຍຜ່ານການປະຕິບັດຕົວຈິງ



CamScanner

CamScanner

ຂ. ເພື່ອໃຫ້ຄູສອນ ສອນງ່າຍຂຶ້ນ

ຄ. ເພື່ອຫຼຸດຜ່ອນບໍ່ໃຫ້ຄູໄດ້ເວົ້າຫຼາຍ

ງ. ເພື່ອໃຫ້ນັກຮຽນໄດ້ເຮັດເຮັດກິດຈະກຳຫຼາຍຂຶ້ນ

30. ໃນຂະບວນການຮຽນການສອນ ຄູຫຼາຍຄົນອາດສັງເກດເຫັນວ່າບັນຍາກາດໃນຫ້ອງຮຽນມີລັກສະນະງຽບເຫງົາ, ນັກຮຽນບໍ່ສົນໃຈຕໍ່ການຮ່ຳຮຽນ. ສາເຫດຫຼັກຂອງບັນຫານີ້ແມ່ນຫຍັງ?

ກ. ຍ້ອນນັກຮຽນຂີ້ຄ້ານຮຽນ

ຂ. ຍ້ອນເປັນຄູໃໝ່

ຄ. ຍ້ອນຄູບໍ່ໄດ້ຜະລິດ ແລະ ນຳໃຊ້ອຸປະກອນເຂົ້າໃນການຮຽນ-ການສອນ

ງ. ຍ້ອນຄູບໍ່ໄດ້ກະຕຸ້ນຄວາມສົນໃຈຂອງນັກຮຽນ

31. ເວລາສ້າງແລະ ອອກແບບການຜະລິດອຸປະກອນການຮຽນ-ການສອນຕ້ອງຄຳນຶງເຖິງບັນຫາໃດ?

ກ. ການເກັບຮັກສາ ຂ.ການອອກແບບ

ຄ. ຄວາມໝັ້ນຄົງ ງ. ຫຼັກການໃນການກະກຽມອຸປະກອນການທົດລອງ

II. ຄະແນນ (ຂໍ້ລະ 1, 2, 2, 4 ຄະແນນ)

1. ການດຳເນີນກິດຈະກຳການຮຽນ-ການສອນມີຈັກຂັ້ນຕອນ? ຄືຂັ້ນຕອນໃດແດ່ ໃນນັ້ນຂັ້ນຕອນໃດເປັນຂັ້ນຕອນທີ່ສຳຄັນກວ່າໝູ່ ຈົ່ງໃຫ້ເຫດຜົນ
2. ເປັນຫຍັງການຮຽນໃນປັດຈຸບັນຈຶ່ງເນັ້ນເອົານັກຮຽນເປັນໃຈກາງ?
3. ນັກຮຽນຈະມີຫົວຄິດປະດິດສ້າງໃນການຜະລິດສື່ການຮຽນ-ການສອນໄປໃຊ້ໃຫ້ສອດຄ່ອງກັບບົດຮຽນໃນຊັ້ນມັດທະຍົມຕົ້ນແນວໃດ?
4. ຈົ່ງແຕ່ງແຜນການສອນໂດຍອີງໃສ່ຮູບແບບການແຕ່ງຮ່າງລຸ່ມນີ້

ຮ່າງບົດສອນ

ວິຊາ: ..................
ບົດທີ: ..................

ຊັ້ນຮຽນ:
ສອນໂດຍ:
ວັນທີ: .............. ເວລາ:

1. ຈຸດປະສົງສອນ:
2. ເນື້ອໃນສອນ:
3. ວິທີສອນ:
4. ເຕັກນິກການສອນ:
5. ສື່ການສອນທີ່ໃຊ້:

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | | ເວລາ | ສື່ການສອນ | ການປະເມີນ |
|---|---|---|---|---|---|---|
| | | ກິດຈະກຳຄູ | ກິດຈະກຳນັກຮຽນ | | | |
| | | I. ຂັ້ນນຳ<br>- ທວນຄືນບົດຮຽນເກົ່າ<br>- ວົງວຽນເຂົ້າສູ່ບົດຮຽນໃໝ່ | | | | |
| | | II. ຂັ້ນສອນ | | | | |
| | | III. ຂັ້ນສະຫຼຸບ | | | | |
| | | IV. ຂັ້ນທົດ-ປະເມີນຜົນ | | | | |
| | | V. ຂັ້ນກຳນົດ-ມອບວຽກບ້ານ | | | | |

ວັນທີ........

ຜູ້ສອນ



CamScanner

CamScanner

| ວິຊາວິທະຍາສາດທຳມະຊາດ ມ ຕົ້ນ (ພາກຊີວະສາດ) | | | |
|---|---|---|---|
| ມ 1 ລວມ 9 ບົດ 20 h | ມ 2 ລວມ 17 ບົດ 31 h | ມ 3 ລວມ 15 ບົດ 37 h | ມ 4 ລວມ 11 ບົດ 34 h |
| ພາກທີI: ພືດ (20h)<br>ບົດທີ 1 : ຈຸລັງພືດ (2h)<br>- ກ້ອງຈຸລະທັດ<br>- ອົງປະກອບຂອງຈຸລັງພືດ<br>ບົດທີ 2 : ການສ້າງອາຫານຂອງພືດ (2h)<br>- ການສ້າງທາດແປ້ງຂອງພືດ ແລະ ບົດບາດສຳຄັນຂອງທາດສີຂຽວ<br>- ປັດໃຈໃນການສ້າງອາຫານຂອງພືດ<br>ບົດທີ 3 : ການລຳລຽງນ້ຳ, ເກືອແຮ່ຈານ ແລະອາຫານຂອງພືດ (6h)<br>- ການດູດນ້ຳ ແລະ ເກືອແຮ່ຈານ<br>- ການລຳລຽງນ້ຳ ແລະ ເກືອແຮ່ຈານ<br>- ການລຳລຽງອາຫານໃນພືດ<br>ບົດທີ 4 : ການເຕີບໃຫຍ່ຂອງພືດ (2h)<br>- ການອອກຈາວຂອງພືດ<br>- ການເຕີບໃຫຍ່ຂະຫຍາຍຕົວຂອງ | ພາກທີ I : ສັດ (18h)<br>ບົດທີ 1 : ຈຸລັງສັດ (2h)<br>- ໂຄງປະກອບສ້າງຂອງຈຸລັງສັດ<br>- ຈຸລັງຊະນິດຕ່າງໆຂອງສັດ<br>- ຄວາມແຕກຕ່າງລະຫວ່າງຈຸລັງພືດ ແລະ ຈຸລັງສັດ<br>ບົດທີ 2 : ການສືບພັນຂອງສັດ(3h)<br>- ການສືບພັນແບບບໍ່ອາໄສເພດ<br>- ການສືບພັນແບບອາໄສເພດ<br>ບົດທີ 3 : ການເຕີບໃຫຍ່ຂອງສັດ(2h)<br>- ການເຕີບໃຫຍ່ ແລະ ການຂະຫຍາຍຕົວຂອງສັດ<br>- ພຶດທະນາການໄລຍະຕ່າງໆຂອງແມງໄມ້<br>- ວິວັດທະນາການຂອງສັດມີກະດູກສັນຫຼັງ<br>ບົດທີ 4 : ການຈັດແບ່ງຈຳພວກຂອງສັດ (2h) | ບົດທີ 1: ລະບົບຫຸ້ມຫໍ່ຮ່າງກາຍ (3h)<br>- ໂຄງປະກອບສ້າງຂອງໜັງ<br>- ຂົນ ແລະ ເລັບ<br>- ພະຍາດຜິວໜັງ ແລະ ການຮັກສາຜິວໜັງ<br>ບົດທີ 2: ລະບົບກະດູກ (3h)<br>- ໂຄງກະດູກຂອງຄົນເຮົາ<br>- ສ່ວນປະກອບເຄມີຂອງກະດູກ<br>- ກະດູກອ່ອນ<br>- ຂໍ່ຕໍ່ກະດູກ<br>- ພະຍາດທີ່ເກີດຂຶ້ນກັບກະດູກ<br>- ການຮັກສາກະດູກ<br>ບົດທີ 3 ລະບົບກ້າມ (2h)<br>- ກ້າມລາຍ ແລະ ລັກສະນະຂອງມັນ<br>- ກ້າມກ້ຽງ ແລະ ລັກສະນະຂອງມັນ | ບົດທີ 1: ການເຕີບໃຫຍ່ ແລະການປ່ຽນແປງຂອງຮ່າງກາຍ (4h)<br>- ການເຕີບໃຫຍ່ຂອງຮ່າງກາຍ ຍິງ ແລະ ຊາຍ<br>- ການປ່ຽນແປງ ແລະ ການປັບຕົວຂອງຮ່າງກາຍ ຍິງ ແລະ ຊາຍ<br>ບົດທີ 2: ລະບົບສືບພັນ (4h)<br>- ລະບົບສືບພັນເພດຊາຍ<br>- ລະບົບສືບພັນເພດຍິງ<br>- ການມີປະຈຳເດືອນຂອງເພດຍິງ<br>- ການຮັກສາອະນາໄມລະບົບສືບພັນ<br>- ພະຍາດທີ່ມັກເກີດຂຶ້ນໃນລະບົບສືບພັນ<br>- ການສືບພັນຂອງມະນຸດ<br>ບົດທີ 3: ການເກີດລູກ ແລະ ການວາງແຜນຄອບຄົວ (4h) |

CamScanner
CamScanner

| | | | |
|---|---|---|---|
| ພືດ<br>- ປັດໃຈທີ່ມີຜົນຕໍ່ການເຕີບໃຫຍ່ຂອງພືດ<br>ບົດທີ 5 :ການສືບພັນຂອງພືດ (2h)<br>- ການສືບພັນແບບອາໄສເພດ<br>- ສ່ວນປະກອບຂອງເກສອນຜູ້ແລະເກສອນແມ່<br>- ການສືບພັນແບບບໍ່ອາໄສເພດ<br>ບົດທີ 6 :ວິທີການຂະຫຍາຍ ແລະການປັບປຸງພັນພືດ (2h)<br>- ການຂະຫຍາຍແນວພັນພືດ<br>- ການປັບປຸງແນວພັນພືດ<br>ບົດທີ 7 : ການຈັດແບ່ງພືດ (1h)<br>- ເກນໃນການຈັດແບ່ງສິ່ງທີ່ມີຊີວິດ<br>- ພືດໃບລ້ຽງຄູ່ ຫຼື ພືດແກ່ນສອງກີບ<br>- ພືດໃບລ້ຽງດ່ຽວ ຫຼື ພືດແກ່ນກີບດຽວ<br>ບົດທີ 8 : ພະຍາດທີ່ມັກເກີດຂຶ້ນກັບພືດ ແລະການປ້ອງກັນ (2h)<br>- ພະຍາດຕ່າງໆທີ່ມັກເກີດຂຶ້ນກັບພືດ | - ສັດບໍ່ມີກະດູກສັນຫຼັງ<br>- ສັດມີກະດູກສັນຫຼັງ<br>ບົດທີ 5 : ການຂະຫຍາຍພັນສັດ(1h)<br>- ການເລືອກພັນສັດ<br>- ຄວາມໝາຍຂອງພັນສັດ<br>ບົດທີ 6 : ການປັບປຸງພັນສັດ (3h)<br>- ຄວາມໝາຍຂອງການປັບປຸງພັນສັດ<br>- ຈຸດປະສົງຂອງການປັບປຸງພັນສັດ<br>- ວິທີການປັບປຸງພັນສັດ<br>- ການຖ່າຍຝາກຕົວອ່ອນ<br>ບົດທີ 7 : ພະຍາດທີ່ມັກເກີດກັບສັດ, ສາເຫດ ແລະ ການປ້ອງກັນ (2h)<br>- ພະຍາດທີ່ມັກເກີດກັບສັດ<br>- ສາເຫດທີ່ພາໃຫ້ສັດຕິດເຊື້ອພະຍາດ<br>- ການປ້ອງກັນ<br>ບົດທີ 8 : ການອະນຸລັກສັດ(3h)<br>- ຄວາມໝາຍຂອງການອະນຸລັກສັດ<br>- ຈຸດປະສົງ ແລະ ເປົ້າໝາຍຂອງການອະນຸລັກສັດປ່າ<br>- ສາເຫດການສູນເສຍສັດປ່າໃນ | - ກ້າມຫົວໃຈ<br>- ການເຮັດວຽກ ແລະ ການອິດເມື່ອຍຂອງກ້າມ<br>- ພະຍາດທີ່ມັກເກີດຂຶ້ນກັບກ້າມ<br>ບົດທີ 4: ລະບົບລະລາຍອາຫານ(3h)<br>- ລະບົບລະລາຍອາຫານ<br>- ການຍ່ອຍອາຫານ<br>- ລຳໄສ້ແກ່ ແລະ ລຳໄສ້ຊື່<br>ບົດທີ 5: ເລືອດ ແລະ ນ້ຳຢາງເຫຼືອງ (2h)<br>- ເລືອດ ແລະ ລັກສະນະຂອງເລືອດ<br>- ສ່ວນປະກອບຂອງເລືອດ<br>- ນ້ຳຢາງເຫຼືອງ<br>ບົດທີ 6: ລະບົບຈະລະຈອນເລືອດ (3h)<br>- ໂຄງປະກອບສ້າງ ແລະ ລະບົບຈາລະຈອນເລືອດ<br>- ຮອບຈາລະຈອນຂອງເລືອດ<br>ບົດທີ 7: ລະບົບຫາຍໃຈ (3h)<br>- ອົງປະກອບຂອງລະບົບຫາຍໃຈ | - ການຖືພາ ຫຼື ການປະຕິສົນທິ<br>- ການຄອດ<br>- ຄວາມຜິດປົກກະຕິໃນເວລາຖືພາ<br>- ການວາງແຜນຄອບຄົວ ແລະ ການຄຸມກຳເນີດ<br>ບົດທີ 4: ພະຍາດຕິດຕໍ່ທາງເພດສຳພັນ (ພຕພ)4h.<br>- ໂລກເອດ ແລະລະບົບພູມຕ້ານທານ<br>- ສາເຫດການເກີດໂລກເອດ<br>- ເສັ້ນທາງຕິດຕໍ່ ແລະ ບໍ່ຕິດຕໍ່ຂອງເຊື້ອເອຈໄອວີ<br>- ການປ້ອງກັນ<br>- ການໃຫ້ການຊ່ວຍເຫຼືອແກ່ຜູ້ຕິດເຊື້ອເອຈໄອວີ ແລະໂລກເອດ<br>ບົດທີ 5: ການສົ່ງເສີມສຸຂະພາບ ແລະ ທັກສະຊີວິດ (3h)<br>- ການສົ່ງເສີມສຸຂະພາບກາຍ<br>- ການສົ່ງເສີມສຸຂະພາບຈິດ<br>- ທັກສະຊີວິດເພື່ອເສີມສ້າງສຸຂະພາບ |

CS CamScanner
CS CamScanner

| | | | |
|---|---|---|---|
| - ການປ້ອງກັນ ແລະ ກຳຈັດສັດຕູພືດ<br>ບົດທີ 9 : ການອະນຸລັກປ່າໄມ້ (1h)<br>- ປະໂຫຍດ ແລະ ຄວາມສຳຄັນຂອງປ່າໄມ້<br>- ການອະນຸລັກປ່າໄມ້ | ສ.ປ.ປ.ລາວ<br>- ມາດຕະການປົກປັກຮັກສາສັດຫາຍາກໃນ ສ.ປ.ປ.ລາວ<br>ພາກທີ II : ລະບົບນິເວດ (13h)<br>ບົດທີ 9 : ຄວາມຮູ້ພື້ນຖານກ່ຽວກັບລະບົບນິເວດ (1h)<br>- ຄວາມໝາຍຂອງລະບົບນິເວດ<br>- ອົງປະກອບຂອງລະບົບນິເວດ<br>- ປະເພດຂອງລະບົບນິເວດ<br>ບົດທີ 10: ບົດບາດຂອງສິ່ງທີ່ມີຊີວິດໃນລະບົບນິເວດ (2h)<br>- ຜູ້ຜະລິດ<br>- ຜູ້ບໍລິໂພກ<br>- ຜູ້ຍ່ອຍສະຫຼາຍ<br>ບົດທີ 11: ການພົວພັນລະຫວ່າງສິ່ງທີ່ມີຊີວິດທີ່ຢູ່ຮ່ວມກັນ (1h)<br>- ການພົວພັນລະຫວ່າງສິ່ງທີ່ມີຊີວິດຊະນິດດຽວກັນ<br>- ການພົວພັນລະຫວ່າງສິ່ງທີ່ມີຊີວິດຊະນິດຕ່າງກັນ<br>ບົດທີ 12: ປັດໃຈນິເວດມີຜົນສະທ້ອນຕໍ່ຮ່າງກາຍຂອງສິ່ງທີ່ມີຊີວິດ (2h) | - ການຫາຍໃຈ<br>- ສ່ວນປະກອບຂອງອາກາດທີ່ເຮົາຫາຍໃຈ<br>- ພະຍາດທີ່ມັກເກີດກັບລະບົບຫາຍໃຈ ແລະ ວິທີປ້ອງກັນ<br>ບົດທີ 8: ລະບົບຖ່າຍເທ (2h)<br>- ຄວາມຈຳເປັນຂອງການຖ່າຍເທ<br>- ອະໄວຍະວະຖ່າຍເທ<br>- ລະບົບຖ່າຍເທປັດສະວະ<br>- ເສັ້ນທາງຖ່າຍເທ<br>- ການຖ່າຍເທມີບົດບາດສຳຄັນຕໍ່ຄົນເຮົາ<br>ບົດທີ 9: ລະບົບຕ່ອມປ່ອຍໃນ (3h)<br>- ລັກສະນະ ແລະ ໜ້າທີ່ຂອງຕ່ອມປ່ອຍໃນ<br>- ຕ່ອມເທິງສະໝອງ<br>- ຕ່ອມໃຕ້ສະໝອງ<br>- ຕ່ອມຄໍຫອຍ<br>- ຕ່ອມອ່ອນຄໍຫອຍ<br>- ຕ່ອມໄທມັສ<br>- ຕ່ອມເທິງໝາກໄຂ່ຫຼັງ | ບົດທີ 6: ໂຄຣໂມໂຊມ ( 3h )<br>- ໂຄຣໂມໂຊມ<br>- ອົງປະກອບຂອງໂຄຣໂມໂຊມ<br>- ຮູບໂຄຣໂມໂຊມ<br>- ໜ້າທີ່ຂອງໂຄຣໂມໂຊມ<br>ບົດທີ 7: ການແບ່ງຈຸລັງແບບຮັກສາ ( 2h )<br>- ຂະໂຫຍະຕ່າງໆຂອງການແບ່ງຈຸລັງແບບຮັກສາ<br>ບົດທີ 8: ການແບ່ງຈຸລັງໂດຍທາງກິງ<br>- ການແບ່ງຈຸລັງໂດຍທາງກິງ<br>- ການຂະຫຍາຍຕົວຂອງຈຸລັງສືບພັນຂອງຄົນ<br>ບົດທີ 9: ຄວາມຜິດປົກກະຕິຂອງໂຄຣໂມໂຊມ ( 1h )<br>ບົດທີ 10: ກິດຕະກຳການສືບເຊື້ອຂອງ ທ່ານ ມັງແດລ<br>- ປະຫວັດການຄົ້ນຄ້ວາທາງກຳມະພັນທິດຍາຍຂອງທ່ານມັງແດລ<br>- ການປະສົມຂອດ 1 ຄູ່ລັກສະນະ<br>ບົດທີ 11: ແຊມ ແລະ ການຄວບຄຸມການ |

CamScanner
CamScanner

| | | | |
|---|---|---|---|
| | - ນ້ຳ<br>- ແສງສະຫວ່າງ<br>- ອຸນຫະພູມ<br>ບົດທີ 13: ການພົວພັນລະຫວ່າງສິ່ງທີ່ມີຊີວິດກັບສິ່ງເວດລ້ອມທີ່ບໍ່ມີຊີວິດ (1h)<br>- ການພົວພັນລະຫວ່າງພືດກັບສິ່ງເວດລ້ອມທີ່ບໍ່ມີຊີວິດ<br>- ການພົວພັນລະຫວ່າງຄົນກັບສິ່ງເວດລ້ອມທີ່ບໍ່ມີຊີວິດ<br>ບົດທີ 14 : ປະຊາກອນໃນລະບົບນິເວດ (2h)<br>- ຄວາມໝາຍ ແລະ ຂະໜາດຂອງປະຊາກອນ<br>- ປັດໃຈທີ່ພາໃຫ້ເກີດການປ່ຽນແປງຂະໜາດຂອງປະຊາກອນ<br>- ຄວາມໜາແໜ້ນຂອງປະຊາກອນ<br>- ຜົນກະທົບຈາກການເພີ່ມຂອງປະຊາກອນ<br>ບົດທີ 15: ປ່າໄມ້ ແລະ ນ້ຳ (1h)<br>- ປ່າໄມ້<br>- ນ້ຳ<br>ບົດທີ 16: ຂໍ້ເຫຼືອກັບຄຸນນະພາບຊີວິດ | - ຕ່ອມມ້າມ<br>- ຕ່ອມອັນທະ<br>- ຕ່ອມຮວຍໄຂ່<br>ບົດທີ 10: ລະບົບປະສາດ (3h)<br>- ລະບົບປະສາດ<br>- ຈຸລັງປະສາດ<br>- ການສະທ້ອນຄືນ<br>- ບາງປັດໃຈທີ່ເປັນຜົນລົບຕໍ່ການເຮັດວຽກຂອງລະບົບປະສາດ<br>- ສິ່ງເສບຕິດເປັນອັນຕະລາຍຕໍ່ຊີວິດ<br>ບົດທີ 11: ໜັງ (2h)<br>- ຄວາມສາມາດຮັບຄວາມຮູ້ສຶກຂອງໜັງ<br>ບົດທີ 12: ອະໄວຍະວະຮັບສຽງ (2h)<br>- ໂຄງປະກອບສ້າງຂອງອະໄວຍະວະຮັບສຽງ<br>- ລັກສະນະຂອງສຽງ<br>- ສາເຫດທີ່ພາໃຫ້ຫູພິການ ແລະ ບາງວິທີປ້ອງກັນ<br>ບົດທີ 13: ອະໄວຍະວະຮັບພາບ (2h) | ສະແດງອອກຂອງແຮູ່ນ (2h)<br>- ອານີຄູນເກຣຕິກ<br>- ແຮູ່ນ<br>- ການຄວບຄຸມການສະແດງອອກຂອງແຮູ່ນ<br>- ການພົວພັນລະຫວ່າງແຮູ່ນກັບສິ່ງແວດລ້ອມການປ່ຽນແປງການປະກອບສ້າງຂອງແຮູ່ນ |

CamScanner
CamScanner

| | | | |
|---|---|---|---|
| | (1h)<br>- ຄວາມໝາຍຂອງຂີ້ເຫຍື້ອ<br>- ປະເພດຂີ້ເຫຍື້ອ<br>- ຂີ້ເຫຍື້ອເປັນອັນຕະລາຍ ແລະ ເປັນພິດ<br>- ຜົນສະທ້ອນຂອງຂີ້ເຫຍື້ອຕໍ່ການດໍາລົງຊີວິດ<br>ບົດທີ 17: ການນໍາຂີ້ເຫຍື້ອມາໃຊ້ຄືນ(2h)<br>- ວິທີຈັດການຂີ້ເຫຍື້ອ ແລະ ການເກັບມ້ຽນ<br>- ວິທີການກໍາຈັດຂີ້ເຫຍື້ອທີ່ຖືກຕາມຫຼັກອານະໄມ<br>- ການຜະລິດຈາກຂີ້ເຫຍື້ອເພື່ອໃຊ້ຄືນ ໃໝ່ | - ໂຄງປະກອບສ້າງຂອງໜ່ວຍຕາ<br>- ອະໄວຍະວະຊ່ວຍ<br>- ພະຍາດທີ່ມັກເກີດກັບຕາ ແລະ ວິທີປ້ອງກັນ<br>ບົດທີ 14: ອະໄວຍະວະຮັບຮູ້ກິ່ນ (2h)<br>- ດັງ<br>- ການຮັບຮູ້ກິ່ນ<br>- ຜົນສະທ້ອນຂອງກິ່ນ<br>ບົດທີ 15: ອະໄວຍະວະຮັບຮູ້ລົດຊາດ (2h)<br>- ໂຄງປະກອບສ້າງຂອງລີ້ນ<br>- ການຮັບຮູ້ລົດຊາດ | |

ວິທະຍາໄລຄູ ສາລະວັນ

CamScanner

CamScanner